ໂຮງຮຽນວັນອາທິດ

ວັນອາທິດ ທີ 3 ມີນາ 2019 (03- 03 - 2019)

ເມື່ອຊີວິດຮູ້ສຶກວ່າວ່າງເປົ່າ.

ວຽກງານຫຍັງທີ່ໜ້າເບື່ອທີ່ທ່ານຍັງບໍ່ເຄີຍເຮັດ?

ຈຸດສຳຄັນໃນບົດຮຽນນີ້: ຊີວິດທີ່ປາສະຈາກພຣະເຢຊູຄຣິດເປັນຊີວິດທີ່ຂາດຄຸນຄ່າ.

ພຣະຄັມພີຕອບສນອງຕໍ່ຊີວິດ:

ລູກສາວຂອງຂ້າພະເຈົ້າບອກວ່າຍາກໄດ້ໜູແຮມສເຕີ. ຄວາມຄິດອັນດັບແລກຂອງຂ້າພະເຈົ້າແມ່ນ, ພວກເຂົາເຮັດຫັ‍ງ‍ໆ? ຄວາມຄິດອັນຕໍ່ມາຂອງຂ້າພະເຈົ້າແມ່ນ, ລູກຈະເຮັດຫັ‍ງ‍ກັບມັນ? ໂຕໜູແຮມສເຕີອາສັຍຢູ່ໃນກົ‍ງ. ທ່ານຈະໃຫ້ອາຫານແລະນ້ຳແກ່ມັນ. ມັນກໍກິນ. ເຈົ້າເປັນຄົນທຳຄວາມສະອາດກົ‍ງຂອງພວກມັນ. ເຈົ້າກໍເຮັດຢູ່ຢ່າງນັ້ນແຕ່ລະວັນເລື້ອຍ ‍ໆ. ຈຸດປະສົ‍ງຄືອັນໃດ?

ແລະໂຕໜູແຮມສເຕີເປັນສັດທາກິນກາ‍ງ‍ຄືນ, ຊຶ‍ງ‍ໝາຍຄວາມວ່າພວກມັນເຄື່ອນໄຫວໄປມາຫາກິນໃນຍາມຄ່ຳຄືນ. ດັ່ງນັ້ນ, ຂະນະພວກເຮົາພະຍາຍາມທີ່ຈະຫຼັບນອນໃນຍາມຄ່ຳຄືນ, ພວກເຮົາໄດ້ຍິນສຽ‍ງ‍ດັ‍ງ‍ຈາກກົ‍ງ‍ລໍ້ໜູແຮມສເຕີປິ‍ນ‍ຢູ່ເປັນຊົ່ວໂມ‍ງ‍ພຸ້ນລະ. ມັນບໍ່ມີຈຸດໝາຍ!

ໜ້າເສົ້າໃຈ, ຊີວິດກໍຮູ້ສຶກວ່າເປັນແບບນັ້ນແຫຼະບາ‍ງ‍ຄັ‍ງ. ປັດຈຸບັນແລະອະນາຄົດພວກເຮົາອາດຈະມີຄວາມຮູ້ສຶກຄ້າ‍ຍ‍ຄືໜູແຮມສເຕີຢູ່ໃນກົ‍ງ, ກຳ‍ລັ‍ງ‍ແລ່ນຢ່າ‍ງ‍ໜັກແລະກະແລ່ນຢ່າ‍ງ‍ໄວໃນກົ‍ງ‍ລໍ້ຂອງຊີວິດ, ເຮັດສຽ‍ງ‍ດັ‍ງ‍ຟົດສະນັ່ນຢູ່, ແຕ່ໃນທີ່ນີ້ບໍ່ມີຫັ‍ງ‍ເກີດປໂຍດແລະຍັງເຮັດໃຫ້ພວກເຮົາເກີດຄວາມກັ‍ງ‍ວົນໃຈ: ໂດຍແທ້ຈິ‍ງ‍ແລ້ວ ການເຮັດຫັ‍ງ‍ໝົດໃນທຸກສິ‍ງ‍ມັນກໍມີຄວາມໝາຍແທ້ຈິ‍ງ.

ປຶ້ມພຣະທັມປັນຍາຈານໃຫ້ຄຳຕອບຄຳຖາມກ່ຽວກັບຄວາມໝາຍຊີວິດໂດຍເປີດເຜີຍຄວາມໄຮ້ສາຣະຂອງການສັ‍ງ‍ເກດເບິ‍ງ‍ຄວາມໄຮ້ປໂຍດຂອງຊີວິດທີ່ເປັນປັນຍາມາຈາກທາ‍ງ‍ໂລກ. ໃນຖານະທີ່ເປັນຄຣິສຕຽນ, ພວກເຮົາຕ້ອ‍ງ‍ເຂົ້າໃຈ‍ວ່າ, ຖ້າແຍກອອກຈາກພຣະເຢຊູຄຣິດແລ້ວ, ຊີວິດຂອງພວກເຮົາແມ່ນບໍ່ມີຄວາມໝາຍ ຄືກັບໃຊ້ຊີວິດຢູ່ໃນກົ‍ງ‍ແລະກຳ‍ລັ‍ງ‍ແລ່ນໃນກົ‍ງ‍ລໍ້ຂອງໜູແຮມສເຕີ.

ພຣະຄັມພີກ່າວວ່າຢ່າ‍ງ‍ໃດ? (ເບິ‍ງ‍ຕາມຫົວຂໍ້ 1, 2 ແລະ 3)

ສຶກສາພຣະຄັມພີ

1. ປັນຍາຈານ 1: 1-7

1ຖ້ອຍຄຳຂອງປັນຍາຈານ ຜູ້ເປັນລູກຊາຍຂອງດາວິດ ກະສັດໃນເຢຣູຊາເລັມ. 2 ປັນຍາຈານກ່າວວ່າ ບໍ່ເປັນປໂຍດ ບໍ່ໄດ້ຜົນ ສາລະພັດລ້ວນແຕ່ບໍ່ໄດ້ຜົນ. 3 ມະນຸດເຮັດວຽກໜັກຈົນໝົດເຫື່ອແຮງພາຍໃຕ້ດວງຕາເອັນລາວໄດ້ປໂຍດຫຍັງຈາກງານທັ‍ງ‍ໝົດທີ່ລາວເຮັດນັ້ນ? 4 ຊົ່ວອາຍຸໜຶ‍ງ‍ລ່ວ‍ງ‍ໄປ ແລະອີກຊົ່ວອາຍຸໜຶ‍ງ‍ກໍມາ ແຕ່ແຜ່ນດິນໂລກຍັ‍ງ‍ຄົ‍ງ‍ເດີມຢູ່ເປັນນິດ. 5 ດວງຕາເວັນຂຶ້ນ ແລະດວງຕາເວັນຕົກແລ້ວຮີບໄປເຖິ‍ງ‍ບ່ອນ ຊຶ‍ງ‍ມັນຂຶ້ນມານັ້ນ. 6 ລົມພັດໄປທາ‍ງ‍ໃຕ້ ແລ້ວ

ວຽນກັບໄປທາງເໜືອ ລົມພັດວຽນໄປວຽນມາ ແລ້ວລົມກໍພັດກັບຕາມທາງວຽນຂອງມັນ. 7ແມ່ນ້ຳທັງຫລາຍໄຫລໄປສູ່ທະເລ ແຕ່ທະເລກໍບໍ່ເຕັມແມ່ນ້ຳໄຫລໄປສູ່ບ່ອນໃດກໍໄຫລໄປສູ່ບ່ອນນັ້ນອີກ.

" ບໍ່ເປັນປໂຍດຫຍັງ." ແມ່ນແລ້ວ, ອັນນັ້ນອາດຈະເບິ່ງເໝືອນບໍ່ແມ່ນວິທີທາງທີ່ດີທີ່ເລີ້ມຕົ້ນປຶ້ມ, ປັນຍາຈານເປັນປຶ້ມເຫຼັ້ມນຶ່ງໃນພຣະຄັມພີ. ເບິ່ງຄ້າຍຄືວ່າເປັນສຳນຽງທີ່ເຮັດໃຫ້ຈິດໃຈນັກປຣັສະຍາທິດຫງຸ່ເມື່ອຊີວິດມາເຖິງຈຸດສຸດທ້າຍ ແລະທຳໜ້າທີ່ເປັນຜູ້ປະກາດ, " ທັງໝົດບໍ່ມີຈຸດໝາຍ!" ແຕ່ນີ້ບໍ່ແມ່ນທຸກໆປຶ້ມບໍ່ແມ່ນນັກປຣັສະຍາທຸກຄົນ. ພວກເຮົາຢູ່ໃນປຶ້ມປັນຍາຈານ ໃນພຣະຄຳຂອງພຣະເຈົ້າ! ແລະ ຄຳສອນໂຊໂລໂມນ", ເປັນລູກກະສັດດາວິດແລະເປັນກະສັດໃນ ກຸງເຢຊາເລັມ.

ແມ່ນຫັງໆທີ່ເຮັດໃຫ້ໂຊໂລໂມນເຂົ້າໃຈຢືນຢັນປະກາດວ່າ, " ທຸກສິ່ງບໍ່ເປັນປໂຍດ"? ດ້ວຍເຫດໃດທ່ານຈຶ່ງເວົ້າວ່າ, ທຸກຄົນ, ເວົ້າວ່າຊີວິດບໍ່ມີປໂຍດ? ເຖິງແມ່ນວ່າ, ໂຊໂລໂມນຍັງເປັນຄົນສລຽວສລາດໃນໂລກ, ຖ້າໂຊໂລໂມນຍອມ ແພ້ຕໍ່ຄວາມໝາຍຂອງຊີວິດ. ແມ່ນຫັງໆຈະເປັນຄວາມຫວັງໃຫ້ກັບພວກເຮົາທຸກຄົນ?

ໂຊໂລໂມນຂຶ້ນຕົ້ນພຣະທັມປັນຍາຈານດ້ວຍຄຳຖາມທີ່ສຳຄັນ ທີ່ທ່ານພະຍາຍາມໃຫ້ຄຳຕອບເມື່ອປຶ້ມຖືກເປີດ ອອກ. "ແມ່ນຫັງໆທີ່ມະນຸດເຮົາໄດ້ຮັບຫຼັງຈາກເຂົາພະຍາຍາມເຮັດວຽກໜັກພາຍໃຕ້ດວງຕາເວັນ?" ໂຊໂລໂມນຈະພະ ຍາຍາມແລ້ວພະຍາຍາມອີກເພື່ອຊອກຫາຂໍ້ຂ້ອງໃຈຂອງຊີວິດ, ທີ່ບໍ່ເປັນປໂຍດ (2:11, 22; 3:9; 5: 16). ຊີວິດ " ພາຍໃຕ້ດວງຕາເວັນ" ເປັນຊີວິດທີ່ແຍກອອກຈາກພຣະເຈົ້າ ມັນເປັນຊີວິດມອງເຫັນຜ່ານສາຍຕາຂອງບາງຄົນຜູ້ທີ່ເຊື່ອ ວ່າບໍ່ມີຫັງໆຢູ່ເໜືອດວງຕາເວັນ, ໃນຟ້າສວັນ.

ໃນປັນຍາຈານ, ໂຊໂລໂມນເອົາຕົວທ່ານເອງວາງຢູ່ໃນຖານະຂອງຄົນທີ່ເຊື່ອວ່າພຣະເຈົ້າບໍ່ມີຢູ່ຈິງແລະພະຍາ ຍາມທີ່ຈະອະທິບາຍວ່າໂລກນີ້ມາຈາກການຈິນຕະນາການຂຶ້ນ. ໂຊໂລໂມນຕ້ອງການໃຫ້ເຮົາຮູ້ວ່າ, ນອກຈາກພຣະ ເຈົ້າ, ຊີວິດນີ້ບໍ່ມີຄວາມໝາຍ.

ຄຣິສຕຽນ, ພວກເຮົາເຊື່ອວ່າພຣະເຈົ້າໄດ້ເປີດເຜີຍພຣະອົງເອງໃນພຣະເຢຊູຄຣິດ (ເຮັບເຣີ 1:1- 4). ແຕ່ເຖິງ ແມ່ນວ່າຜູ້ເຊື່ອ, ພວກເຮົາຍັງປະເຊີນໜ້າຕໍ່ສູ້ກັບຄວາມໄຮ້ປໂຍດຂອງວັນຕໍ່ວັນໃນຊີວິດຂອງເຮົາ. ພວກເຮົາມີຊີວິດ ແລະພວກເຮົາກໍຕາຍໄປ, ອາຍຸຄົນລຸ້ນຕໍ່ລຸ້ນເກີດມາແລະກໍຕາຍໄປ, ແຕ່ແຜ່ນດິນໂລກຍັງຄົງເດີມຢູ່ເປັນນິດ. ໂຊໂລ ໂມນໄດ້ໃຊ້ສາມຮູບພາບທັມມະຊາດຊີ້ໃຫ້ເຫັນຈຸດໆນີ້

- **ຊີວິດເກີດຂຶ້ນຊ້ຳແລ້ວຊ້ຳອີກເປັນເໝືອນການໝຸນວຽນຂອງດວງຕາເວັນ. (ຂໍ້ 5).** " ດວງຕາເວັນຂຶ້ນ ແລະດວງຕາເວັນຕົກ," ຂຶ້ນແລະຕົກລົງ ແລະມັນກໍຮີບກັບໄປທີ່ເດີມຊຶ່ງມັນຂຶ້ນມານັ້ນ. ທ່ານທຳງານ ໜັກຕລອດເວລາ, ແຕ່ທ່ານກໍຮູ້ສຶກວ່າທ່ານກັບມາບ່ອນເກົ່າບ່ອນທ່ານເລີ້ມຕົ້ນ.
- **ຊີວິດເປັນເໝືອນທິດທາງຂອງລົມພັດໄປ (ຂໍ້ 6).** ລົມພັດວຽນໄປວຽນມາແລະພັດໄປໂດຍບໍ່ມີຈຸດ ໝາຍແລະທິດທາງ. ທ່ານເຄີຍມີຄວາມຮູ້ສຶກຢ່າງນັ້ນບໍ, ບໍ່ວ່າທ່ານຈະໄປໄວຫຼາຍປານໃດ. ທ່ານກໍບໍ່ ຮູ້ທາງທີ່ໄປ.
- **ຊີວິດເປັນເໝືອນແມ່ນ້ຳທັງຫຼາຍທີ່ໄຫຼໄປສູ່ທະເລແຕ່ທະເລກໍບໍ່ເຕັມແມ່ນ້ຳໄຫຼໄປສູ່ບ່ອນໃດກໍໄຫຼ ໄປສູ່ບ່ອນນັ້ນອີກ.(ຂໍ້ 7).** ແມ່ນ້ຳສືບຕໍ່ໄຫຼໄປສູ່ທະເລໂດຍບໍ່ເຕັມ. ທ່ານເຄີຍຮູ້ສຶກຢ່າງນັ້ນບໍ, ງານ ໜັກທີ່ທ່ານເຮັດ, ທ່ານບໍ່ເຄີຍສຳເຣັດແມ່ນບໍ?

ພວກເຮົາບໍ່ເຄີຍປ່ຽນແປງສິ່ງໃດແລະສຳເຣັດສິ່ງໃດແທ້ຈິງ. ການໝຸນວຽນບໍ່ເຄີຍຈົບ! ຖ້າທ່ານເຄີຍມີຄວາມຮູ້ສຶກ ວ່າຊີວິດຂອງທ່ານບໍ່ມີຈຸດໝາຍ, ສູ້ຕໍ່ໄປ. ມັນຈະໄດ້ຮັບຄວາມຫຼົ້ມເຫຼວກ່ອນມັນຈະດີຂຶ້ນ.

2. <u>ປັນຍາຈານ 1</u>: 8–11

8 ສາລະພັດນຳໄປສູ່ຄວາມເບື່ອໜ່າຍ ແມ່ນໃຜກໍເວົ້າບໍ່ອອກຕາກໍເບິ່ງບໍ່ອີ່ມ ຫລືຫູກໍຟັງບໍ່ເຕັມ 9 ສິ່ງທີ່ເປັນຂຶ້ນແລ້ວຄື ສິ່ງທີ່ຈະເປັນຂຶ້ນອີກ ສິ່ງທີ່ເຮັດແລ້ວຄືສິ່ງທີ່ຈະຕ້ອງເຮັດອີກ ແລະບໍ່ມີສິ່ງໃດໃໝ່ພາຍໃຕ້ດວງຕາເວັນ. 10 ມີອັນໃດແດ່ທີ່ ເຂົາຈະເວົ້າໄດ້ວ່າ "ເບິ່ງແມ ສິ່ງນີ້ໃໝ່" ສິ່ງນັ້ນມີຢູ່ແລ້ວໃນສມັຍກ່ອນເຮົາທັງຫລາຍ. 11 ບໍ່ມີການຈື່ຈຳເຖິງສມັຍກ່ອນ ແລະຈະບໍ່ມີການຈົດຈຳສິ່ງພາຍຫລັງ ທີ່ຈະເກີດມາທ່ານກາງບັນດາຜູ້ທີ່ມາພາຍຫລັງ.

ຍັງບໍ່ດີພຽງພໍວ່າພວກເຮົາເຮັດທັງໃຫ້ຊີວິດຈົນມີຄວາມຮູ້ສຶກວ່າບໍ່ເປັນປໂຍດ, ແຕ່ຫຼາຍຄັ້ງເຮົາມັກພົບເຫັນສິ່ງ ເຫຼົ່ານີ້ " ການກະທຳທີ່ບໍ່ເປັນປໂຍດ" ບໍ່ນຳຄວາມພໍອົກພໍໃຈມາໃຫ້ກັບເຮົາ. ສິ່ງສຳຄັນທີ່ສຸດແມ່ນ, ເມື່ອພວກເຮົາພະ ຍະຍາມທີ່ຈະຊອກຫາຄວາມໝາຍແລະຈຸດປະສົງໃນຊີວິດນີ້ທີ່ແຍກຈາກພຣະຄຣິດ. ພວກເຮົາຈະພົບວ່າບໍ່ມີສິ່ງໃດ ເຮັດໃຫ້ພໍໃຈ. ດັ່ງທີ່ໂຊໂລໂມນໄດ້ເວົ້າໄວ້, ສາລະພັດນຳໄປສູ່ຄວາມເບື່ອໜ່າຍ.

ຈົ່ງພິຈາຣະນາເບິ່ງຄວາມບັນເທີງຄ່ານິຍົມແລະການພັດທະນາສັງຄົມ. ຫຼາຍໆບົດເພງແລະຮູບເງົາຂອງພວກເຮົາ ເຫັນວ່າໄດ້ສ້າງຂຶ້ນໃໝ່ໃນຮູບແບບເດີມ. ແລະແຟຊັ່ນການນຸ່ງຖືໃນທຸກວັນນີ້ມີຄ່ານິຍົມແນວໃດ? ສ່ວນຫຼວງຫຼາຍແລ້ວ ໄດ້ຫັນກັບໄປກັບມາຕາມແບບແຟຊັ່ນເກົ່າໆ.ຈົນໃນທີ່ສຸດ, ພວກເຮົາກໍເຫັນດັ່ງນີ້ " ລອກລຽນແບບຂອງເກົ່າ" ໃນທາງທີ່ ຈະເອົາຈິງຈັງຍັງຫ່າງໄກ ມະນຸດບໍ່ຍອມເຄື່ອນຍ້າຍຈາກທີ່ນອກຈາກຄວາມຂັດສົນ, ຄວາມຍຸດຕິທຳ, ສົງຄາມ, ຄວາມ ອຶດຢາກ, ຫຼືໂລກພັຍໄຂ້ເຈັບ.

ເຖິງຢ່າງໃດກໍຕາມ, ພຣະເຢຊູ, ຍັງໃຫ້ສັນຍາທີ່ຈະນຳເຮົາກັບບ້ານໃໝ່: " ບ້ານພຣະບິດາ" ຂອງພຣະອົງ (ໂຢຮັນ 14: 2-3). ເຣື່ອງລາວປະວັດສາດກຳລັງຖືກເປີດເຜີຍແຜ່ອອກໄປທົ່ວທຸກມຸມໂລກ. ພວກເຮົາກຳລັງຊອກຫາວັນນັ້ນ ເມື່ອວັນນັ້ນມາເຖິງຈະບໍ່ມີຄວາມໂສກເສົ້າອີກຕໍ່ໄປ, ບໍ່ມີຄວາມເຈັບປວດອີກຕໍ່ໄປ, ແລະບໍ່ມີຄວາມບາບອີກຕໍ່ໄປ (ພຣະນິມິດ 21: 3- 4).

ທາງນຶ່ງທີ່ຫຼາຍຄົນເຮັດຄືພະຍາຍາມເຮັດຊີວິດໃຫ້ມີຄວາມໝາຍໂດຍການສ້າງຊື່ສຽງໃຫ້ໂດ່ງດັງແລະດຳລົງຊີວິດ ຢູ່ເທິງຊັບສິນເງິນຄຳ. ພວກເຮົາຕ້ອງຈຳຢູ່ສເມີ! ຂໍໂທດ, ແຕ່ມັນບໍ່ໄດ້ຂຶ້ນກັບອັນໃດທີ່ພວກເຮົາເຮັດແລະບໍ່ໄດ້ຂຶ້ນກັບ ວ່າພວກເຮົາເປັນໃຜ: ພວກເຮົາຈະຕ້ອງລືມມັນ.

ນັ້ນເປັນຈຸດທີ່ໂຊໂລໂມນໂສກເສົ້າໃນຂໍ້ 11. ບໍ່ພຽງແຕ່ເຮົາລືມສິ່ງທີ່ມາກ່ອນເຮົາ, ເຮົາຍັງຈະລືມສິ່ງທີ່ຍັງບໍ່ທັນ ມາ ແລະສິ່ງທີ່ຫຼັງຈາກນັ້ນ. ການແຍກຈາກພຣະເຢຊູຄຣິດ, ການທຳງານທັງໝົດໃນຊີວິດນີ້ບໍ່ມີສິ່ງໃດເພີ້ມເຕີມເຂົ້າໃໝ່ ແລະກໍລືມໄປໃນທັນທີ. ຊຶ່ງບໍ່ມີປໂຍດຫຍັງ? ດັ່ງນັ້ນ, ຈາກຈຸດນີ້ພວກເຮົາຈະໄປໃສ?

3. ປັນຍາຈານ 1: 12-14

2ຂ້າພະເຈົ້າ ປັນຍາຈານ ເຄີຍເປັນກະສັດເໜືອອິສຣາເອນໃນກຸງເຢຣູຊາເລັມ. 13 ຂ້າພະເຈົ້າຕັ້ງໃຈຊອກ ແລະສະ ແຫວງຫາໂດຍສະຕິປັນຍາ ເຖິງສິ່ງສາລະພັດທີ່ເຮັດພາຍໃຕ້ຟ້າສະຫວັນ ເປັນເຣື່ອງຍາກລຳບາກຊຶ່ງພຣະເຈົ້າປະທານ ໃຫ້ລູກຂອງມະນຸດເຮັດຢູ່ນັ້ນ. 14ຂ້າພະເຈົ້າເຄີຍເຫັນການທັງປວງ ຊຶ່ງເຂົາເຮັດພາຍໃຕ້ດວງຕາເວັນ ແລະເບິ່ງແມສາ ລະພັດກໍບໍ່ໄດ້ຜົນ ຄືກິນລົມກິນແລ້ງ.

ການຊອກຄົ້ນຫາຄວາມໝາຍຂອງຊີວິດເປັນຄວາມພະຍາຍາມທີ່ສູງສົ່ງ. ຊຶ່ງພຣະເຈົ້າໄດ້ຮູ້ຈັກເຮົາດີສຳລັບເຣື່ອງ ນີ້. ຫຼັງຈາກນັ້ນ, ບໍ່ມີໃຜທີ່ຕ້ອງການດຳລົງຊີວິດຢູ່ໃນຊີວິດທີ່ບໍ່ມີປໂຍດ. ເມື່ອພວກເຮົາຊອກຫາຄຳຕອບຂອງຄຳຖາມທີ່ ເປັນພື້ນຖານອັນສຸດຍອດຂອງຊີວິດໂດຍທີ່ບໍ່ໄດ້ພິຈາຣະນາເບິ່ງມັນໃນພຣະເຢຊູຄຣິດ, ພວກເຮົາຈະພົບວ່າມັນເປັນ " ງານທີ່ໜ້າເບື່ອ." ແຕ່ນີ້ເປັນສິ່ງທີ່ໂຊໂລໂມນນຳອອກມາເປີດເຜີຍຢ່າງຈິງຈັງ. ແລະຖ້າວ່າບຸກຄົນໃດນຶ່ງສາມາດຄົ້ນພົບ ຄຳຕອບ, ອາດຈະເປັນໂຊໂລໂມນ.

- **ໂຊໂລໂມນເປັນຜູ້ທີ່ມີສະຕິປັນຍາລົ້ນຄົນທັ້ງຫຼາຍໃນໂລກ.** ລາວສາມາດເວົ້າແລະຂຽນໄດ້ດ້ວຍຄວາມໝັ້ນໃຈ ຫຼາຍກ່ວາຫຼາຍໆຄົນໃນເຣື່ອງນີ້ (1 ກະສັດ 4:29- 31).
- **ໂຊໂລໂມນເປັນຜູ້ທີ່ປະສົບຜົນສຳເຣັດຫຼາຍກວ່າຄົນທັ້ງຫຼາຍ.** ທ່ານໄດ້ກ່າວໄວ້ໃນພຣະທັມສຸພາສິດສາມພັນ ປໂຍກແລະຂຽນບົດເພງຫຼາຍກ່ວາພັນເພງ (ຂໍ້ 21).
- **ໂຊໂລໂມນເປັນກະສັດທີ່ຮັ່ງມີຫຼາຍກ່ວາກະສັດທັ້ງຫຼາຍໃນໂລກ (10**:14-29). ເປັນຄວາມຈິງ, ລາວບໍ່ເຄີຍ ໄດ້ໃຊ້ຫຼຽນເງິນ, " ນັບຕັ້ງແຕ່ໂຊໂລໂມນຂຶ້ນເປັນກະສັດຕລອດວັນເວລາຂອງລາວບໍ່ມີທັ້ງເກີດຂຶ້ນ (ຂໍ້ 21)

ຈາກປັນຍາທີ່ສລາດຍິ່ງໃຫ່ຍຂອງລາວ, ຄວາມຮູ້, ຄວາມຮັ່ງມີ, ແລະປະສົບການ, ໂຊໂລໂມນໄດ້ນຳອອກມາ ເປີດເຜີຍຄວາມບໍ່ມີປໂຍດທັ້ງຫາໆໂລກທີ່ພະຍາຍາມຊອກຫາຄວາມໝາຍ " ທຸກສິ່ງທີ່ທຳຢູ່ໃຕ້ຟ້າສວັນ" ນັ້ນເປັນ, ການແຍກອອກຈາກພຣະເຈົ້າ, ທີ່ເປັນຄຳສລຸບຂອງລາວ? ທັ້ງໝົດນັ້ນມັນບໍ່ມີປໂຍດ, " ເປັນການແລ່ນໄລ່ຕາມລົມ." ຂ່າວດີແມ່ນວ່າທັສນະແນວຄວາມຄິດຂອງເຮົານັ້ນແມ່ນບໍ່ມີຂອບເຂດຈຳກັດພຽງແຕ່ວ່າມີທັ້ງເກີດຂຶ້ນ " ຢູ່ພາຍໃຕ້ ດວງຕາເວັນ." ພຣະບິດາແຫ່ງຟ້າສວັນຂອງພວກເຮົາໄດ້ສ້າງໂລກນີ້ຜ່ານທາງພຣະເຢຊູຄຣິດແລະເພື່ອພຣະເຢຊູຄຣິດ . (ໂກໂລຊາຍ 1: 15- 17).ດັ່ງນັ້ນ, ພວກເຮົາສາມາດມີຄວາມຊົມຊື່ນຍິນດີຢູ່ໃນໂລກນີ້, ແລະພວກເຮົາມີຄວາມໝັ້ນ ໃຈວ່າເຣື່ອງນີ້ຈະເຄື່ອນໄປຂ້າງໜ້າຂອບເຂດສຸດທ້າຍຂອງພຣະເຈົ້າກຳນົດໄວ້. ການຄົ້ນຫາຄວາມໝາຍຂອງພວກເຮົາ ບໍ່ໄດ້ເປັນຄວາມພະຍາຍາມທີ່ໜ້າເບື່ອໜ່າຍເມື່ອພວກເຮົາພົບເປົ້າປະສົງຂອງພວກເຮົາຢູ່ໃນພຣະເຢຊູຄຣິດ (ມັດທາຍ 6: 33).

ນຳໃຊ້ໃນຊີວິດ

ທ່ານຈະເຮັດທັ້ງໃນອາທິດນີ້ເພື່ອສຳຣວດກວດເບິ່ງສິ່ງທີ່ທ່ານເຫັນແລະເຂົ້າໃຈໃນໂລກນີ້ຈາກຊີວິດຄຣິສຕຽນ, ມອງ ເບິ່ງຈາກຂ້າງເທິງຕາເວັນ. ບ່ອນທີ່ພຣະເຈົ້າຜູ້ຊົງສ້າງຂອງພວກເຮົາດຳລົງຢູ່? ຈົ່ງພິຈາຣະນາເບິ່ງຄຳແນະນຳເຫຼົ່ານີ້.

- **ຈົ່ງອອກໄປເພື່ອເດີນ.** ຈົ່ງອອກໄປຂ້າງນອກບ່ອນສະຖານທີ່ທ່ານມີຄວາມຊົມຊື່ນຊົນດີໃນການຊົງສ້າງຂອງ ພຣະເຈົ້າ. ຂອບຄຸນພຣະເຈົ້າສຳລັບສິ່ງທີ່ທ່ານເຫັນ. ພຣະເຈົ້າຕ້ອງການຄົນຂອງພຣະອົງຊົມຊື່ນຍິນດີກັບສິ່ງ ທີ່ພຣະອົງຊົງສ້າງ.

- **ຕັ້ງເປົ້າປະສົງສ່ວນຕົວ.** ເຫດຜົນນຶ່ງຊີວິດອາດເບິ່ງຄືບໍ່ມີຄວາມໝາຍເພາະພວກເຮົາບໍ່ມີເປົ້າປະສົງ. ຈົ່ງຄິດ ເບິ່ງວ່າທ່ານຕ້ອງການເຮັດສິ່ງໃດໃຫ້ສຳເຣັດພາຍໃນສິບສອງເດືອນແລະຂຽນລົງໃນສມຸດບັນທຶກ.

- **ແບ່ງປັນຂ່າວປະເສີດ.** ຫຼາຍໆຄົນທີ່ຢູ່ອ້ອມຮອບພວກເຮົາ**ທີ່ບໍ່ມີຄວາມໝາຍໃນ**ຊີວິດ. ນຳພາເຂົາໃຫ້ໄປຫາ ພຣະ**ຄຣິດ,** ຜູ້ໃຫ້ໃຫ້ຄວາມໝາຍກັບໂລກນີ້ແລະຊີວິດຂອງເຂົາ.

ຖ້າພວກເຮົາຕົກລົງໄປໃນກົນອຸບາຍຂອງຊີວິດທີ່ກຳລັງເບິ່ງຄືວ່າມີພຽງເທົ່ານັ້ນຈາກທັສນະຄະຕິທາງໂລກ, ຈະມີຄວາມ ຮູ້ສຶກວ່າຊີວິດບໍ່ມີທີ່ສິ້ນສຸດ, ຄືກົ້ງໝຸນທີ່ໜ້າເບື່ອຂອງໜູແຮມສະເຕີ. ຕັ້ງທັສນະແນວຄວາມຄິດໃໝ່ແລະມອງເບິ່ງຊີວິດ ຈາກເທິງຟ້າສວັນ ແທນທີ່ຈະເບິ່ງແຕ່ຢູ່ໃນໂລກນີ້.

ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org ແປໂດຍ VR.

ໂຮງຮຽນວັນອາທິດ

ວັນອາທິດ ທີ 10 ມີນາ 2019 (03-10-2019)

ບັນຫາກ່ຽວກັບການເຮັດໃຫ້ພໍໃຈ

ຖ້າເງິນບໍ່ມີວັດຖຸປະສົງ ທ່ານຈະຊື້ຫຍັງຂໍພຽງແຕ່ໃຫ້ເປັນທີ່ພໍໃຈ?

ຈຸດສຳຄັນຂອງບົດຮຽນນີ້: ຄວາມພໍອົກພໍໃຈແລະຄວາມເປັນເຈົ້າຂອງບໍ່ໄດ້ເປັນຄ່າອັນສຸດທ້າຍຂອງຄວາມຍິນດີ.

ພຣະຄັມພີຕອບສນອງຕໍ່ຊີວິດ:

ໂຣມັນຄັດໂທລິກແລະໂປແທສເຕັນໄດ້ຕັ້ງຂໍ້ສັງເກດໃນເວລາສີ່ສິບວັນກ່ອນວັນຄືນພຣະຊົນ, ເປັນເວລາເມື່ອພວກເຂົາຕັ້ງໃຈອົດອາຫານຈາກບາງສ່ວນຂອງຄວາມປາຖນາໃນສິ່ງທີ່ພໍໃຈ ສຳລັບກຳນົດສີ່ສິບວັນກ່ອນວັນຄືນພຣະຊົນ. ວັນຖືສິນໄດ້ເລີ່ມຕົ້ນຂຶ້ນແຕ່ເຊົ້າວັນພຸດ, ແຕ່ຜູ້ສັງເກດການໄດ້ໃຊ້ວັນອັງຄານກ່ອນວັນສຸດທ້າຍຂອງເຂົາກິນອາຫານທີ່ມີໄຂມັນ. ວັນນັ້ນກາຍມາເປັນທີ່ຮູ້ກັນວ່າ " ວັນອັງຄານໃຫ່ງ" ຫຼືເປັນວັນທັມມະດາຕາມທີ່ເຮົາຮູ້: ວັນສລອງກ່ອນວັນຖືສິນໃນສາສນາຄຣິດ.

ດ້ວຍວິທີດຽວກັນໃນບາງແຫ່ງ, ວັນສລອງກ່ອນວັນຖືສິນປ່ຽນຈາກເວລາໄປຕາມຄວາມຕ້ອງການອາຫານທີ່ມີຣິດມັນ ເພື່ອໃຫ້ຄວາມຕ້ອງການບັນລຸເປົ້າໝາຍຕາມຄວາມຕ້ອງການທາງດ້ານເນື້ອໜັງ ແລະຄວາມພໍໃຈໃນຄວາມບາບ. ຫຼາຍເມືອງແລະຫຼາຍພູມີພາກສເລີມສລອງວັນຖືສິນອົດໃນສາສນາຄຣິດ. ແຕ່ສັງຄົມໂລກນີ້ແລ່ນຕິດຕາມ ບາງທີເກືອບຊາວຫ້າເປີເຊັນທີ່ມີຄວາມຄ້າຍຄືກັບຝຣັ່ງໃນນິວອໍຣ໌ລີນ, ຣັດລຸຍເຊັ່ງນາ.

ແຕ່ຝູງຊົນບໍ່ຈຳເປັນລໍຖ້າວັນສເລີມສລອງກ່ອນວັນຖືສິນຕາມຈຳນວນຄວາມພໍໃຈທາງສັງຄົມໂລກ. ພວກເຮົາດຳລົງຊີວິດຢູ່ໃນວັນເວລາແລະສມັຍທີ່ແລ່ນຕິດຕາມສະຖານທີ່ໆເຮັດໃຫ້ມີຄວາມພໍອົກພໍໃຈແມ່ນເປັນອັນໃຊ້ໄດ້ ພຽງແຕ່ກົດເມ້ົາ (ເຄື່ອງຍ້າຍຕຳແໜ່ງຄອມພິວເຕີ) ຫຼືບໍ່ກໍໂທຣະສັບມືຖື. ໂລກທຸກວັນນີ້ມີຊີວິດຢູ່ໃນຄວາມພໍອົກພໍໃຈ. ຖ້າທ່ານຕ້ອງການມັນ, ຊື້ມັນໂລດ, ຢ່າລໍຖ້າອັນໃດກໍຕາມທີ່ທ່ານຕ້ອງການຊື້ໂລດເພື່ອເຮັດໃຫ້ເຈົ້າຂອງພໍໃຈ.

ຄວາມນິຍົມຊົມຊອບທີ່ທຳໃຫ້ພໍອົກພໍໃຈທາງໂລກເບິ່ງຄືວ່າເປັນໜ້າຊື່ນຊົມຍິນດີ, ແຕ່ເປັນຄວາມນິຍົມຊົມຊອບທີ່ໜ້າພໍອົກພໍໃຈນີ້ມີຢູ່ພຽງຊົ່ວຄາວແລະບໍ່ຄົງຢູ່ຖາວອນ. ຄວາມຊື່ຊົມຍິນດີທາງໂລກຈະນຳເຮົາໄປສູ່ຄວາມວ່າງເປົ່າ.

ພຣະຄັມພີກ່າວວ່າຢ່າງໃດ? (ເບິ່ງຕາມຫົວຂໍ້ 1, 2 ແລະ 3)

ສຶກສາພຣະຄັມພີ

1. <u>ປັນຍາຈານ 2:1-3</u>

1ຂ້າພະເຈົ້າຄິດໃນໃຈວ່າ "ມາແມ ມາລອງຄວາມເບີກບານມ່ວນຊື່ນກັນເບິ່ງ ຈຶ່ງມ່ວນຊື່ນສະບາຍໃຈໄປ" ແຕ່ເບິ່ງແມ ເຣື່ອງນີ້ກໍບໍ່ໄດ້ຜົນເຊ່ັນກັນ. 2ຂ້າພະເຈົ້າເວົ້າກ່ຽວກັບການຫົວຂວັນວ່າ "ເຈົ້າບ້າບໍ" ແລະກ່າວເຖິງຄວາມເບີກບານມ່ວນຊື່ນວ່າ "ມີປໂຍດອັນໃດ?" 3ຂ້າພະເຈົ້າຄິດໃນໃຈວ່າຈະເຮັດຢ່າງໃດ ຮ່າງກາຍຈຶ່ງຈະຄຶກຄັກດ້ວຍເຫລົ້າອະງຸ່ນ ແລະໃຈຍັງຄົງແນະນຳຂ້າພະເຈົ້າດ້ວຍສະຕິປັນຍາ ແລະຈະເກາະຄວາມໂງ່ຈ້າໄວ້ຢ່າງໃດ ຈົນຂ້າພະເຈົ້າຈະເຫັນໄດ້ວ່າ ແມ່ນຫຍັງດີສຳລັບໃຫ້ລູກຊາຍທັງຫລາຍຂອງມະນຸດທີ່ເຮັດ ພາຍໃຕ້ທ້ອງຟ້າຕລອດຊີວິດຂອງພວກເຂົາ.

ຂະນະທີ່ທ່ານອ່ານປັນຍາຈານ, ຈົ່ງຈົດຈຳຂໍ້ຄຳທີ່ໂຊໂລໂມນເວົ້າຢູ່ເລື້ອຍ: “ ພາຍໃຕ້ດວງຕາເອັນ” (ປັນຍາຈານ 1: 3) “ ພາຍໃຕ້ດວງຕາເອັນ” ສະທ້ອນໃຫ້ເຫັນການມີຊີວິດຢູ່ຕາມຄວາມຄິດທາງໂລກພາຍໃຕ້ດວງຕາເອັນ: ບໍ່ມີຟ້າສອັນ, ບໍ່ມີສິ່ງໃດຢູ່ເໜືອທັມະຊາດ, ແລະບໍ່ມີພຣະເຈົ້າ. ດັ່ງນັ້ນ, ການດຳລົງຊີວິດໃຫ້ມີຊີວິດຊີວາຕາມລຳພັງ “ ພາຍໃຕ້ດວງຕາເອັນ” ເປັນການດຳເນີນຊີວິດທີ່ບໍ່ມີພຣະເຈົ້າ. ການພິຈາຣະນາເບິ່ງຊີວິດພຽງແຕ່ “ ພາຍໃຕ້ດວງຕາເອັນ” ທີ່ບໍ່ມີຄວາມຄິດທາງໂລກກ່ຽວພັນຢູ່.

ຖ້າສັງຄົມໂລກເປັນຢູ່ຢ່າງນັ້ນໝົດ, ມີປໂຍດຫັຽງ? ດັ່ງນັ້ນດ້ວຍເຫດໃດຈຶ່ງບໍ່ມີຄວາມປິຕິຍິນດີ? ຖ້າພຣະເຈົ້າບໍ່ມີຢູ່, ແລະຖ້າຊີວິດເປັນຢູ່ຢ່າງນັ້ນ, ຫຼັງຈາກນັ້ນຂ້າພະເຈົ້າຈະໄດ້ປໂຍດອັນໃດທີ່ສາມາດເຮັດໃຫ້ຕົວຂ້າພະເຈົ້າດີໃຈກັບສິ່ງຂອງທີ່ຂ້າພະເຈົ້າສະສົມໄວ້. ເອຊາຢາພາຍຫຼັງທີ່ໄດ້ເຫັນລັກສະນະທ່າທີການກ່ຳກະບົດຂອງຊົນຊາດ: " ໃຫ້ເຮົາກິນ ແລະດື່ມເພາະວ່າມື້ອື່ນນີ້ເຮົາຈະຕາຍ" (ເອຊາຢາ 22: 13) ໂຊໂລໂມນທົດຊອບແນວຄວາມຄິດນີ້ເບິ່ງວ່າຖ້າລາວສາມາດພົບຄວາມຊົມຊື່ນຈິງແລະບັນລຸເປົ້າໝາຍຈິງໃນຄວາມພໍໃຈ.

ເມື່ອໂຊໂລໂມນໄດ້ເວົ້າວ່າ, “ ຂ້າພະເຈົ້າເວົ້າກັບຕົວເອງ,” ລາວເວົ້າແທ້, “ ຂ້າພະເຈົ້າເວົ້າໃນໃຈ.” ນີ້ເປັນການຊອກຄົ້ນຫາຢ່າງແທ້ຈິງ.ໂຊໂລໂມນໄດ້ເອົາຕົວເອງໃສ່ໃນຄວາມຄິດຂອງຄົນທີ່ບໍ່ຮູ້ຈັກພຣະເຈົ້າ. ໂຊໂລໂມນຕ້ອງການ “ທົດສອບເບິ່ງ” ບໍ່ວ່າພໍໃຈຫຼືບໍ່ພໍໃຈທັງສອງນຳໄປສູ່ຄວາມຍິນດີຊົ່ວຄາວ. ນີ້ເປັນບົດຮຽນທີ່ສຳຄັນສຳລັບພວກເຮົາທັງໝົດ. ກ່ອນທີ່ພວກເຮົາຈະຕີຣາຄາຊັ່ງຊາເບິ່ງບຸກຄົນເຫຼົ່ານັ້ນຜູ້ໃດກຳຕາມ ທີ່ເຮົາບໍ່ເຫັນພ້ອມ, ມັນເປັນຄວາມສຳຄັນຍິ່ງທີ່ຈະທຳຄວາມເຂົ້າໃຈວ່າເຂົາມາຈາກທີ່ໃດ. ເພາະວ່າ, ນັ້ນບໍ່ໄດ້ໝາຍຄວາມວ່າພວກເຮົາຈະຕ້ອງຮູ້ທຸກໆສິ່ງກ່ຽວກັບຄວາມເຊື່ອຂອງຄົນອື່ນໆຫຼືວ່າພວກເຮົາຄວນຈະມີປະສົບການຢ່າງລະນ້ອຍກັບການຜິດສິນທັມ ແລະພຶດຕິກັມທີ່ຜິດສິນທັມທາງໂລກເພື່ອຈະເຂົ້າໃຈບຸກຄົນທີ່ມີແນວຄວາມຄິດທາງໂລກ. ຫຼາຍກວ່ານັ້ນ, ພວກເຮົາຄວນພິຈາຣະເບິ່ງເຫດຜົນດ້ວຍເຫດໃດຄົນຈຶ່ງມີແຮງບັນດານໃຈດຳລົງຊີວິດຂອງເຂົາເຈົ້າຕາມວິທີທີ່ເຂົາເຈົ້າເຮັດ.

ໂຊໂລໂມນກ່າວເຖິງຄວາມປິຕິຍິນດີຢູ່ສອງຈຸດທີ່ລາວກວດສອບຊອກຫາຄວາມຈິງ:

- **ການຫົວເລາະ**. ບາງເວລາພວກເຮົາພະຍາຍາມທີ່ຈະເອົາຊະນະສະຖານະການອຶດອັດດ້ວຍການຫົວເລາະ. ພວກເຮົາອາດຫວັງວ່າເອົາຊະນະຄວາມໂສກເສົ້າດ້ວຍການຫົວເລາະ, ແຕ່ "ເຖິງແມ່ນວ່າໃນຄວາມຫົວເລາະໃນໃຈອາດມີຄວາມໂສກເສົ້າ" (ສຸພາສິດ 14: 13) ການຫົວເລາະບໍ່ໄດ້ຊີ້ບອກໃຫ້ເຫັນຄວາມດີໃຈທີ່ແທ້ຈິງ. ໂຊໂລໂມນຄົ້ນພົບວ່າຄວາມພໍໃຈແລະການຫົວເລາະສູນຫາຍໄປໂດຍໄວ.
- **ການດື່ມເຫຼົ້າ**. ໂຊໂລໂມນຄົ້ນພົບວ່າການດື່ມເຫຼົ້າອະງຸ່ນບໍ່ໄດ້ນຳຄວາມມ່ວນຊື່ນມາໃຫ້. ໂຊໂລໂມນບໍ່ໄດ້ກ່າວເຖິງຄວາມມຶນເມົາ. ລາວດື່ມເຫຼົ້າອະງຸ່ນແຕ່ເຫັນໄດ້ຊັດເຈນວ່າຄວາມມຶນເມົາບໍ່ໄດ້ຊ່ວຍໃຫ້ຕົວລາວເອງໄດ້ຮັບຄວາມເບີກບານໃຈເລີຍ. ທີ່ນີ້ລາວໄດ້ລະມັດລະວັງ. “ ຂ້າພະເຈົ້າໄດ້ສຳຣວດດ້ວຍສະຕິປັນຍາຂອງຂ້າພະເຈົ້າ.....ຄວາມສລາດຂອງຂ້າພະເຈົ້າຍັງຊີ້ນຳຂ້າພະເຈົ້າດ້ວຍສະຕິປັນຍາ.” ໂຊໂລໂມນຕ້ອງການທີ່ຈະສັນນະສູດເບິ່ງວ່າຖ້າໃຊ້ເຫຼົ້າແມ່ນ “ ມີຫັຽງດີສຳລັບມະນຸດທີ່ເຮັດການຢູ່ພາຍໃຕ້ຟ້າສອັນ” ລະຫວ່າງການດຳເນີນຊີວິດຊົ່ວຄາວ.

ແມ່ນຫັຽງທີ່ໂຊໂລໂມນອະທິບາຍທີ່ສາມາດຂຽນບັນຍາຍບົດນຶ່ງສຳລັບນັກທຸຣະກິດກ່ຽວກັບເຫຼົ້າຫັຽງຫຼາຍ: ສ່ວນປະສົມຂອງເຫຼົ້າແລະການຫົວເລາະ. ທຸກໆຄົນຖືຈອກເຫຼົ້າຢູ່ໃນມືແລະກຳຫົວເລາະຢ່າງສນຸກເຮຮາ. ນັກໂຄສະນາຕ້ອງການທີ່ຈະໂນ້ມນ້າວຈິດໃຈເຮົານີ້ແມ່ນ " ຊີວິດທີ່ດີ." ແຕ່ໂຊໂລໂມນໄດ້ສະແດງຕໍ່ພວກເຮົາວ່າຄວາມມຶນເມົາທີ່ແທ້ຈິງນັ້ນແມ່ນ "ຄວາມສນຸກສນານ" ເຫຼົ່ານີ້ບໍ່ມີຫັຽງສົມບູນ. " ມັນສິ້ນສຸດໄປກັບຄວາມໄຮ້ປໂຍດ."

2 ປັນຍາຈານ 2:4–8

4ຂ້າພະເຈົ້າໄດ້ເຮັດການອັນຍິ່ງໃຫຍ່ຫລາຍ ຂ້າພະເຈົ້າໄດ້ສ້າງເຮືອນຫລາຍຫລັງ ແລະປູກສວນອະງຸ່ນຫລາຍຕອນ 5 ຂ້າພະເຈົ້າເຮັດສວນພັກຜ່ອນຢ່ອນໃຈ ແລະສວນໝາກໄມ້ຫລາຍແຫ່ງ ປູກຕົ້ນໄມ້ກິນໝາກທຸກຢ່າງໄວ້ໃນສວນເຫລົ່ານັ້ນ 6ຂ້າພະເຈົ້າສ້າງສະນ້ຳຫລາຍສະສຳລັບຕົວເອງ ເພື່ອຈະໃຊ້ນ້ຳໃນສະນັ້ນຫົດຕົ້ນໄມ້ທີ່ກຳລັງງອກງາມ 7ຂ້າພະເຈົ້າຊື້ຂ້າທາດຊາຍຍິງໄວ້ ມີຂ້າທາດເກີດຂຶ້ນໃນເຮືອນ ຂ້າພະເຈົ້າມີຝູງງົວ ຝູງແບ້ ແກະ ເປັນສິນບັດຫລາຍກວ່າຂອງບັນດາຄົນທີ່ຢູ່ໃນກຸງເຢຣູຊາເລັມກ່ອນຂ້າພະເຈົ້າ 8ຂ້າພະເຈົ້າສະສົມເງິນຄຳໄວ້ ແລະຮວບຮວມຊັບສິນບັດອັນຄວນຄູ່ກັບກະສັດ ແລະຄວນຄູ່ກັບເມືອງທັງຫລາຍ ຂ້າພະເຈົ້າມີນັກຮ້ອງຊາຍຍິງສຳລັບຕົວເອງ ແລະເມັຍນ້ອຍ ຊຶ່ງເປັນສິ່ງຖືກໃຈຂອງຜູ້ຊາຍ.

ນັບຕັ້ງແຕ່ຄົ້ນຊອກຫາຜົນປໂຍດຂອງຄວາມສນຸກສນານບໍ່ມີຫັ່ງສຳເຣັດ, ບາງທີການສ້າງອານາເຂດສ່ວນຕົວອາດຈະເຮັດໃຫ້ຊີວິດຂອງພວກເຮົາມີຄວາມໝາຍຕາມທີ່ເຮົາປາຖນາ. ຈົ່ງສັງເກດເບິ່ງຄຳເວົ້າທີ່ໂຊໂລໂມເອງສຸມໃຈໃສ່ “ການບັນລຸຜົນສຳເຣັດຂອງຂ້າພະເຈົ້າ.....ສຳລັບຂ້າພະເຈົ້າເອງ..... ສຳລັບບ້ານເມືອງຂອງພະເຈົ້າ.” ໂຊໂລໂມນຕັ້ງຂໍ້ສຳຮວດຄວາມໝາຍໃນສີ່ຈຸດ:

1. **ສ້າງແຜນງານ.** ໂຊໂລໂມນເປັນຜູ້ຊ່ຽວຊານການກໍ່ສ້າງ. ກະສັດດາວິດເປັນຜູ້ຈັດຕຽມທຸກຢ່າງເພື່ອສ້າງພຣະວິຫານ, ແຕ່ລູກຊາຍຂອງພຣະອົງ, ໂຊໂລໂມນ ເປັນຜູ້ທີ່ໄດ້ສ້າງ (1 ກະສັດ 5:6), ດີເທົ່າກັນກັບພຣະຣາຊວັງຂອງລາວ (1 ກະສັດ 7: 1- 12).
2. **ສະສົມຊັບສິນບັດມາກມາຍ.** ຄວາມຮັ່ງມີໃນໂລກສມັຍບູຮານແມ່ນພິສູດຫຼັກຖານໂດຍທ່ານມີຄົນຮັບໃຊ້ຫຼາຍປານໃດ, ແລະໂຊໂລໂມນມີຄົນຮັບໃຊ້ຢ່າງຫຼວງຫຼາຍ. ຊັບສິນບັດຂອງໂຊໂລໂມນບໍ່ແມ່ນ “ ເງິນໃໝ່”; ລາວມີຄົນຮັບໃຊ້ຢູ່ນຳດິນນານຈົດເຂົາມີລູກແລະລູກຫຼານ ເຂົາຍັງສືບຕໍ່ຮັບໃຊ້ໃນເຮືອນໂຊໂລໂມນ.
3. **ເປັນຜູ້ລ້ຽງດູນັກສິລະປິນ.** ຊາໂລໂມນບໍ່ພຽງແຕ່ມີຂ້າທາດບໍຣິວານຫຼວງຫຼາຍ, ລາວຍັງ “ ຮວບຮວມນັກຮ້ອງຊາຍແລະຍິງໄວ້ສຳລັບຕົວລາວເອງ.” ນີ້ແມ່ນນັກຮ້ອງປະສານສຽງສ່ວນຕົວຂອງໂຊໂລໂມນ. ລາວນຳເຂົາອອກມາສະແດງຖ້າວ່າລາວຕ້ອງການຄວາມມ່ວນຊື່ນ.
4. **ປ່ອຍຕາມໃຈຕົນເອງທາງດ້ານເພດສັມພັນ.** ຄວາມຫາຍະນະຂອງໂຊໂລໂມນແມ່ນການປ່ອຍປະລະເລີຍທາງດ້ານເພດສັມພັນກັບຜູ້ຍິງມາກມາຍຫຼວງຫຼາຍຂອງລາວ. “ ລາວມີເມັຽເຈັດຮ້ອຍຄົນຜູ້ເປັນເຈົ້າຍິງແລະສາມຮ້ອຍຄົນຜູ້ເປັນເມັຽນ້ອຍ, ແລະພວກເຂົາໄດ້ຫັນເຫຈິດໃຈຂອງລາວໜີໄປທາງອື່ນ” (1 ກະສັດ 11:3).

ເມື່ອພວກເຮົາຄົ້ນຫາຄວາມໝາຍໂດຍການສ້າງອານາເຂດ ແລະການຄອບຄອງຊັບສິນບັດຂອງພວກເຮົາ, ມັນອາດຈະປາກົດຕໍ່ໂລກທີ່ວ່າພວກເຮົາມີທັງໝົດ. ແຕ່ " ສິ່ງຂອງ" ບໍ່ໄດ້ຕອບສນອງຄວາມພໍໃຈ. ມັນບໍ່ໄດ້ເຮັດໃຫ້ເຮົາຕື່ນເຕັ້ນດ້ວຍຄວາມຕ້ອງການແລະຄວາມໝາຍ. ຊັບສິນບັດ, ຄວາມຮັ່ງມີ, ແລະການຕື່ນເຕັ້ນທຸກໆສິ່ງກັບເຮົາຍົກເວັ້ນອັນໃດເປັນເຣື່ອງສຳຄັນ.

3 ປັນຍາຈານ 2:9-11

9ຂ້າພະເຈົ້າຈຶ່ງເປັນໃຫຍ່ ແລະຈະເຣີນຫລາຍກວ່າບັນດາຄົນທີ່ເຄີຍຢູ່ມາກ່ອນຂ້າພະເຈົ້າໃນເຢຣູຊາເລັມ ແລະສະຕິປັນຍາຂອງຂ້າພະເຈົ້າຍັງຄົງຢູ່ກັບຂ້າພະເຈົ້າ.10ສິ່ງໃດທີ່ຕາຂອງຂ້າພະເຈົ້າຢາກເຫັນ ຂ້າພະເຈົ້າກໍບໍ່ປິດບັງ ຂ້າພະເຈົ້າບໍ່ໄດ້ຫ້າມໃຈຈາກຄວາມເບີກບານມ່ວນຊື່ນໃດ ເພາະໃຈຂ້າພະເຈົ້າພົບຄວາມສນຸກສນານໃນບັນດາງານຂອງຂ້າພະເຈົ້າ ແລະນີ້ເປັນສ່ວນຈາກງານທັງໝົດຂອງຂ້າພະເຈົ້າ. 11ແລ້ວຂ້າພະເຈົ້າຫັນມາເບິ່ງບັນດາສິ່ງທີ່ມືຂ້າພະເຈົ້າໄດ້ເຮັດ ແລະຄວາມອິດເມື່ອຍທີ່ຂ້າພະເຈົ້າທຸ້ມເທລົງໄປ ແລະເບິ່ງແມ ທຸກຢ່າງກໍບໍ່ໄດ້ຜົນ ຄືກິນລົມກິນແລ້ງ ແລະບໍ່ເປັນປໂຍດຫຍັງພາຍໃຕ້ດວງຕາເອັນ.

ໂຊໂລໂມນສຳເຣັດທາງດ້ານຄວາມຮັ່ງມີຢ່າງຫລວງຫລາຍ, ດັ່ງນັ້ນມັນເປັນການງ່າຍທີ່ລາວຈະອວດອ້າງ, " ຂ້າພະເຈົ້າເປັນຜູ້ຍິ່ງໃຫ່ງແລະຍິ່ງໃຫ່ງກວ່າຜູ້ທີ່ມີຢູ່ກ່ອນໃນກຸງເຢຣູຊາເລັມ."ນັ້ນບໍ່ແມ່ນເປັນສິ່ງບໍ່ດີ, ຈົ່ງພິຈາຣະນາເບິ່ງວ່າກະສັດດາວິດເປັນພໍ່ຂອງລາວ. ການເພີ້ມພູນຊັບສິນ, ໂຊໂລໂມນຍັງເປັນເໝືອນຄົນທີ່ຮັ່ງມີໃນໂລກປັດຈຸບັນ (1 ກະສັດ 10: 14- 29) ຂອບເຂດຈຳກັດໃນການພະຍາຍາມໃຫ້ພໍໃຈແມ່ນບໍ່ເປັນການໃຫ້ລາງວັນ. ພາຍຫຼັງຄວາມສຳເຣັດທັງໝົດຂອງລາວ, ໂຊໂລໂມນອ້າງວ່າເປັນການຖືກຕ້ອງທີ່ລາວໄດ້ຮັບຄວາມມ່ວນຊື່ນຂອງທຸກໆຄວາມສນຸກສນານພາຍໃຕ້ດວງຕາເວັນ. ລາວເຫັນສິ່ງນີ້ເປັນເໝືອນລາງວັນຂອງລາວເອ ງເພື່ອທຸກໆຄວາມພະຍາຍາມຕໍ່ສູ້ຂອງລາວ. ທັງໆທີ່ການແລ່ນໄລ່ຕິດຕາມຄວາມສນຸກສນານຂອງລາວ, ໂຊໂລໂມນຈະບໍ່ສາມາດໜີຈາກການ "ດີ້ນລົນຕໍ່ສູ້" ເພາະພວກເຮົາເປັນຄົນບາບຢູ່ໃນໂລກແຫ່ງຄວາມບາບ, ພວກເຮົາຈະບໍ່ໜີພົ້ນຈາກການທຳງານໜັກຢູ່ໃນຊີວິດປັດຈຸບັນນີ້. ໂຊໂລໂມນອະທິບາຍວ່າການແລ່ນໄລ່ຕິດຕາມຄວາມສນຸກສນານເປັນສິ່ງທີ່ລາວຄວນໄດ້ຮັບ, ແຕ່ "ລາງວັນ" ນີ້ພິສູດໃຫ້ເຫັນວ່າບໍ່ເປັນລາງວັນຈັກດີ.

ການໝົກໝຸ້ນຢູ່ນຳການສຸມໃຈໃສ່ການບັນລຸຜົນສຳເຣັດເຮັດໃຫ້ເຮົາວ່າງເປົ່າ. ໂຊໂລໂມນໄດ້ປະເຊີນໜ້າຕໍ່ໜ້າກັບທຸກໆສິ່ງທີ່ລາວທຳສຳເຣັດແລະທັງໝົດນັ້ນລາວຕ້ອງໃຊ້ຄວາມພະຍາຍາມຢ່າງຫລວງຫລາຍເພື່ອຈະປະສົບຜົນສຳເຣັດ. ຜົນສລຸບຂອງລາວໃນຂໍ້ 11 ແມ່ນເລີ້ມດ້ວຍ " ບໍ່ເປັນປໂຍດ..... ແລ່ນໄລ່ຕິດຕາມລົມ..... ບໍ່ມີປໂຍດຫັງໆ." ມັນເປັນດັ່ງທີ່ຖ້າໂຊໂລໂມນພະຍາຍາມກວດສອບທັງໝົດ ຄຳສັບທີ່ເປັນດ້ານລົບທີ່ລາວໃຊ້ໃນປຶ້ມແຕ່ຕົ້ນຈົນຈົບເພື່ອຮ້ອງຄວນຄາງ " ທຸກຢ່າງບໍ່ໄດ້ເກີດຜົນ!" ຖ້າຊີວິດນີ້ມີທ່ານັ້ນ, ແລະຖ້າພວກເຮົາດຳລົງຊີວິດຄືກັບໂຊໂລໂມນ, ຄິດເບິ່ງວ່າໂລກເປັນໜີ້ເຮົາ, ວຽກງານຂອງເຮົາເປັນໜີ້ເຮົາ, ແລະທຸກໆຄົນເປັນໜີ້ເຮົາສຳລັບທຸກສິ່ງທີ່ພວກເຮົາໄດ້ເຮັດ; ຈາກນັ້ນພວກເຮົາຈະວ່າງເປົ່າຄືກັນ. ຄວາມສນຸກສນານ ແລະການເປັນເຈົ້າຂອງອາດມີຄວາມຮູ້ສຶກຄືກັບລາງວັນສຳລັບງານຂອງເຮົາ, ແຕ່ມັນເປັນລາງວັນທີ່ບໍ່ຄົງຢູ່ຖາວອນ.

ນຳໃຊ້ໃນຊີວິດ

ມີພຽງພຣະເຈົ້າເທົ່ານັ້ນທີ່ໃຫ້ຄວາມສຸກທີ່ຄົງຢູ່ຖາວອນ. ຈົ່ງເລີ້ມຝຶກຝົນຄວາມຊົມຊື່ນຍິນດີນີ້ໃນຊີວິດຂອງທ່ານໃນອາທິດນີ້. ຈົ່ງເລືອກເບິ່ງນຶ່ງຂັ້ນຕອນໃນຄຳແນະນຳຕໍ່ລົງໄປນີ້.

- **ໃຫ້ກຽດຊື່ສຽງແກ່ພຣະເຈົ້າ.** ທ່ານຈະສາມາດຕໍ່ສູ້ກັບການແລ່ນໄລ່ຕິດຕາມຄວາມວ່າງເປົ່າຂອງຄວາມສນຸກສນານ? ສະແດງບາງສິ່ງທີ່ທ່ານຊົມຊື່ນຍິນດີ ແລະເຮັດ. ແຕ່ເຮັດດ້ວຍຄວາມສັດຊື່ຕໍ່ພຣະເຢຊູຄຣິດແລະໃຫ້ກຽດຊື່ສຽງແດ່ພຣະເຈົ້າ.
- **ຈົດຈຳຂໍ້ພຣະຄັມພີ.** ຈົ່ງຈຳຂໍ້ພຣະຄຳເຊັ່ນໃນ ຟີລິບປອຍ 4: 4-7 ແລະທ່ອງຂຶ້ນໃຈເມື່ອທ່ານເກີດມີຄວາມກັງວົນ, ການເຮັດໃຫ້ໝົດກຳລັງໃຈ, ຫຼືການທຳງານໜັກຕໍ່ສູ້ກັບຄວາມວ່າງເປົ່າຂອງຕົວທ່ານເອງເພື່ອຊອກຫາ “ລາງວັນ” ໃນທາງຜິດ.
- **ຍອມຮັບການບັນລຸຜົນສຳເຣັດຂອງຄົນອື່ນ.** ພວກເຮົາໄດ້ຈັບຜິດໃນຜົນສຳເຣັດຂອງພວກເຮົາເອງ. ນັ້ນກໍໃຫ້ເກີດ " ລາງວັນ" ຄວາມສາມາດທາງຄວາມຄິດ. ຕິດຕໍ່ຄົນອື່ນແລະຂອບໃຈລາວທີ່ປະສົບຜົນສຳເຣັດ. ໜູນໃຈລາວ. ພິຈາຣະນາວ່າຈະເຮັດຢ່າງໃດໃນທາງການຢືນຢັນ ໃນການປະພຶດຂອງຄົນອື່ນ.

ພຣະເຈົ້າບໍ່ໄດ້ຂັດແຍ້ງກັບຄວາມຕ້ອງການເຮັດໃຫ້ພໍໃຈ. ຍອມໃຫ້ພຣະອົງເປັນຕົ້ນກຳເນີດຄວາມສຸກອັນຊົມຊື່ຍິນດີຂອງທ່ານ. ຄວາມປິຕິຍິນດີສນຸກສນານຂອງທ່ານແມ່ນພຣະເຈົ້າເອງ.

ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org ແປໂດຍ VR.

ໂຮງຮຽນວັນອາທິດ
ວັນອາທິດ ທີ 17 ມີນາ 2019 (03-17-2019)

ບັນຫາເຣື່ອງສະຕິປັນຍາ

ເມື່ອໃດທີ່ທ່ານເຫັນສາມັນສຳນຶກໃຫ້ຄວາມຮູ້ສຶກດີກວ່າຄວາມຮູ້ສຶກທີ່ຢູ່ໃນປຶ້ມ?

ຈັດສຳຄັນໃນບົດຮຽນນີ້: ສະຕິປັນຍາເປັນພື້ນຖານໃນການເຊື່ອວາງໃຈໃນພຣະເຈົ້າ.

ພຣະຄັມພີຕອບສນອງຕໍ່ຊີວິດ:

ການຕໍ່ສູ້ທາງທະຫານ. ສົງຄາມການເມືອງ. ຣັຖບານທຸຈຣິດ. ຄົນຕິດຢາເສບຕິດ. ການແຈ້ງຂ່າວໄດ້ເຕືອນເຮົາໃຫ້ຮູ້ຢູ່ຕລອດວ່າໂລກຂອງເຮົາກຳລັງຈະຈົບລົງດ້ວຍຄວາມຫຼິ້ມເຫຼວ. ແຕ່ພວກເຮົາສາມາດເຮັດຫັງໆໄດ້ແດ່? " ການສຶກສາເປັນຄຳຕອບ!" ພວກເຮົາໄດ້ຍິນເຣື່ອງນີ້ຢູ່ເລື້ອຍໆ. ຖ້າພວກເຮົາເປັນຄົນມີຄວາມຮູ້ມີການສຶກສາ, ເຮົາຈະຮຽນຮູ້ທີ່ຈະເອົາຊະນະຄວາມເສັງຫາຍຂອງພວກເຮົາ. ການສຶກສາຈະເຮັດໃຫ້ຄວາມຄິດຂອງເຮົາຖືກຕ້ອງ ແລະເອົາຊະນະຄວາມກຽດຊັງເຊື້ອຊາດເຜົ່າພັນ, ຊະນະອາຣົມຮຸນແຮງ ແລະເອົາຊະນະການຕິດຢາເສບຕິດ. ການສຶກສາເຮັດໃຫ້ເຮົາເປັນເພື່ອນກັນກັບຄົນອື່ນໄດ້ ແລະກັບຕົວເຮົາເອງດ້ວຍ.

ຖ້າທັສນະແນວຄວາມຄິດຂອງທ່ານແມ່ນຄົນນັ້ນທີ່ເປັນພື້ນຖານທີ່ດີ. ຈາກນັ້ນການສຶກສາອາດເບິ່ງເໝືອນວ່າເປັນເຫດຜົນທີ່ແກ້ບັນຫາ: ຄົນດີສາມາດໃຊ້ຄວາມຄິດເລືອກອັນໃດເປັນສິ່ງທີ່ດີແລະອັນໃດເປັນສິ່ງທີ່ຖືກຕ້ອງ. ໜ້າເສັງດາຍ, ນັ້ນມັນບໍ່ແມ່ນບັນຫາ; ແນ່ນອນມັນບໍ່ແມ່ນມຸມມອງຂອງພຣະຄັມພີ. ພຣະຄັມພີໄດ້ເຕືອນເຮົາວ່າຄວາມບາບແລະການກະບົດຕໍ່ສູ້ຂອງເຮົານັ້ນເປັນຮາກເຫງົ້າບັນຫາຂອງໂລກ. ການສຶກສານັ້ນມັນເປັນຜົນປໂຍດທີ່ໄວ້ໃຈໄດ້, ແຕ່ມັນສາມາດເຮັດໄດ້ເທົ່າທີ່ເຮັດໄດ້. ອັນທີ່ເຮົາຕ້ອງການແມ່ນປັນຍາທີ່ມາຈາກພຣະເຈົ້າ.

ພຣະຄັມພີກ່າວວ່າຢ່າງໃດ? (ເບິ່ງຕາມຫົວຂໍ້ 1, 2 ແລະ 3)

ສຶກສາພຣະຄັມພີ

1. ປັນຍາຈານ 2:12-17

12ຂ້າພະເຈົ້າຈຶ່ງຫັນມາພິຈາຣະນາສະຕິປັນຍາ ຄວາມບ້າ ແລະຄວາມໂງ່ຈ້າ ເພາະຄົນທີ່ມາພາຍຫລັງກະສັດຈະເຮັດຫຍັງໄດ້ແດ່ ລາວກໍເຮັດສິ່ງທີ່ລາວເຮັດມາດົນແລ້ວນັ້ນໄດ້. 13ຂ້າພະເຈົ້າເຫັນວ່າສະຕິປັນຍາວິເສດກວ່າຄວາມໂງ່ຈ້າ ເໝືອນກັບຄວາມສະຫວ່າງວິເສດກວ່າຄວາມມືດ. 14ຄົນມີສະຕິປັນຍາກໍມີຕາຢູ່ໃນສມອງ ແຕ່ຄົນໂງ່ຍ່າງຢູ່ໃນຄວາມມືດ ເຖິງປານນັ້ນ ຂ້າພະເຈົ້າຍັງເຫັນວ່າ ເຫດການຢ່າງດຽວກັນເກີດຂຶ້ນແກ່ພວກເຂົາທັງປວງ. 15ຂ້າພະເຈົ້າຈຶ່ງຄຶດໃນໃຈວ່າ "ເຫດການອັນເກີດແກ່ຄົນໂງ່ສັນໃດ ກໍຈະເກີດກັບຕົວຂ້າພະເຈົ້າສັນນັ້ນ ຖ້າຢ່າງນັ້ນແລ້ວ ຂ້າພະເຈົ້າຈະມີສະຕິປັນຍາຫລວງຫລາຍໄປເຮັດຫຍັງ? "ຂ້າພະເຈົ້າຈຶ່ງຄຶດໃນໃຈວ່າ "ເຣື່ອງນີ້ກໍບໍ່ໄດ້ຜົນຄືກັນ". 16ເພາະຕລອດໄປ ບໍ່ມີໃຜລະນຶກເຖິງຄົນມີສະຕິປັນຍາຫລາຍກວ່າຄົນໂງ່ ດ້ວຍເຫັນວ່າໃນອະນາຄົດກໍລືມກັນໝົດແລ້ວ ແລ້ວຄົນມີສະຕິປັນຍາກໍຕາຍເໝືອນກັບຄົນໂງ່. 17ຂ້າພະເຈົ້າຈຶ່ງກຽດຊັງຊີວິດ ເພາະວ່າການງານທີ່ເຂົາເຈົ້າເຮັດກັນພາຍໃຕ້ດວງຕາເວັນກໍ່ຄວາມເສົ້າສລົດໃຈໃຫ້ແກ່ຂ້າພະເຈົ້າ ເພາະສິ່ງສາລະພັດກໍລ້ວນແຕ່ບໍ່ໄດ້ຜົນ ຄືກິນລົມກິນແລ້ງ.

ບໍ່ມີໃຜໃນໂລກນີ້ມີຄວາມສລາດຫຼາຍກວ່າໂຊໂລໂມນ, ດັ່ງນັ້ນ, ການສຳຮວດເພື່ອຄົ້ນໃຫ້ພົບຄວາມໝາຍໃນຊີວິດຂອງລາວ, ມັນບໍ່ໄດ້ເຮັດໃຫ້ເປັນເຮື່ອງປລາດໃຈທີ່ໂຊໂລໂມນຍອມຮັບ " ພິຈາຮະນາເບິ່ງປັນຍາ, ຄວາມບ້າ, ແລະຄວາມໂງ່ຈ້າ." ຂໍ້ 12 ແມ່ນຍາກທີ່ຈະອະທິບາຍໃຫ້ເຂົ້າໃຈ. " ກະສັດຈະເຮັດຫຽງແດ່ໃຫ້ສຳເຮັດ? ລາວກໍເຮັດສິ່ງທີ່ລາວເຮັດມາແລ້ວ," ພວກເຮົາສາມາດເຂົ້າໃຈຂໍ້ຄວາມນີ້ໃນສອງວິທີທາງ.

- ບໍ່ວ່າຈະເປັນກະສັດຜູ້ໃດທີ່ມາພາຍຫຼັງໂຊໂລໂມນ, ລາວຈະປະເຊີນກັບບັນຫາອັນດຽວກັນ.
- ນັບຕັ້ງແຕ່ໂຊໂລໂມນເປັນຜູ້ສລຽວສລາດໃນໂລກ, ບໍ່ມີກະສັດອົງໃດທີ່ມາພາຍຫຼັງລາວທີ່ສາມາດເຮັດໄດ້ດີກວ່າ.

ຄຳອະທິບາຍທັງສອງສາມາດເຂົ້າໃຈໄດ້, ແລະເປັນຈຸດປະສົງທີ່ເປັນຈຸດຢືນດ້ວຍຢ່າງໃດຢ່າງນຶ່ງ: ຜູ້ມາກໍຕາມມາພາຍຫຼັງໂຊໂລໂມນຈະເຮັດບໍ່ດີໃນການພະຍາຍາມອະທິບາຍໂລກຜ່ານທາງສະຕິປັນຍາມະນຸດ; ລາວອາດຈະເຮັດດີເໝືອນຢ່າງໂຊໂລໂມນໄດ້ເຮັດ.

ແຕ່ປັນຍາທີ່ຄິດຖືກຕ້ອງກໍນຳພາໃຫ້ດຳລົງຊີວິດຖືກຕ້ອງ. ສະຕິປັນຍາແລະການດຳລົງຊີວິດທີ່ຊອບທັທເປັນເໝືອນລົມຫາຍໃຈຮ່ວມກັນ. ການສົນທະນາ, ຄວາມໂງ່ຈ້າເປັນຜົນສະທ້ອນໃນການດຳລົງຊີວິດບໍ່ຊອບທັມ.ໂຊໂລໂມນຍອມຮັບການກວດສອບຫາຄວາມຈິງທີ່ແຕກຕ່າງລະຫວ່າງປັນຍາແລະຄວາມໂງ່ຈ້າແລະລາວເປີດເຜີຍຄວາມຈິງສາມຢ່າງ.

1. **ແມ່ນໃນຊີວິດນີ້, ໄດ້ຮັບຜົນປໂຍດຈາກປັນຍາຫຼາຍກວ່າຈາກຄວາມໂງ່ຈ້າ.** ຄືກັບແສງສະຫວ່າງໄດ້ປຽບຄວາມມືດ, ດັ່ງນັ້ນ " ຄົນທີ່ສລາດມີຕາໃນຫົວຂອງລາວ" ນັ້ນແມ່ນ, ລາວສາມາດເຫັນ, " ແຕ່ຄົນໂງ່ຢ່າງຢູ່ໃນຄວາມມືດ." ໃນໂລກທີ່ມີປັນຍາມາກມາຍ, ຜົນປໂຍດອື່ນມາຈາກຄົນທີ່ມີປັນຍາ.
2. **ບໍ່ວ່າພວກເຮົາຈະມີການດຳລົງຊີວິດທີ່ດີຫຼືຊີວິດທີ່ຊົ່ວຮ້າຍ, ພວກເຮົາທັງໝົດກໍຍັງຕາຍ ແລະແລ້ວກໍຖືກລືມ.** ໃນຕອນທ້າຍ, ໂຊໂລໂມນໄດ້ເວົ້າວ່າ, ມັນບໍ່ໄດ້ຂຶ້ນຢູ່ກັບວ່າພວກເຮົາດຳລົງຊີວິດຢູ່ໃນໂລກນີ້ດີປານໃດຫຼືຊົ່ວຊ່ຳໃດເພາະຜູ້ມີປັນຍາແລະຄົນໂງ່ຈ້າ, ຄົນຊອບທັມແລະຄົນບໍ່ຊອບທັມ, ທັງໝົດກໍໄດ້ຮັບຊາຕາກັມອັນດຽວກັນ: ຄວາມຕາຍ! ສະຕິປັນຍາອາດໝາຍເຖິງການດຳລົງຊີວິດທີ່ດີ, ແລະອາດມີຊີວິດທີ່ຍືນຍາວຢູ່ຫຼາຍປີ, ແຕ່ກໍຍັງຕາຍ, ໃນວາລະສຸດທ້າຍ, ພວກເຮົາກໍຕາຍ.
3. **ພະຍາຍາມດຳລົງຊີວິດຢູ່ໃນຄວາມຊອບທັມ ຊີວິດທີ່ແຍກຈາກພຣະເຈົ້າກໍນຳເຮົາໄປສູ່ຄວາມບໍ່ພໍໃຈແລະເສົ້າໂສກ.** ເມື່ອທ່ານພິຈາຮະນາເບິ່ງຊາຕາກັມຂອງມະນຸດ, ບໍ່ວ່າທ່ານຈະດຳລົງຊີວິດຢູ່ໃນທາງທີ່ດີຫຼືທາງທີ່ຊົ່ວຮ້າຍ, ແມ່ນຫຽງຄືຈຸດປະສົງ? ບໍ່ມີຈຸດປະສົງ ແລະບໍ່ເກີດຜົນທັງໝົດນີ້ອາດເຮັດໃຫ້ບາງຄົນເປັນເໝືອນໂຊໂລໂມນເບື່ອໜ່າຍຊີວິດ. ຈາກທັສນະແນວຄວາມຄິດທີ່ບໍ່ປົນກັບຄວາມຄິດທາງໂລກ, ຊຶ່ງບໍ່ໄດ້ເຮັດໃຫ້ມີຄວາມແຕກຕ່າງພວກເຮົາຈະໃຊ້ຊີວິດນີ້ຢູ່ໃດ້ຢ່າງໃດຖ້າພວກເຮົາບໍ່ສາມາດໝີພົ້ນຄວາມຕາຍນີ້ໄດ້.

2. <u>ປັນຍາຈານ 7:23-25</u>

23ບັນດາຂໍ້ຄວາມເຫລົ່ານີ້ຂ້າພະເຈົ້າໄດ້ພິຈາຮະນາເບິ່ງດ້ວຍໃຊ້ສະຕິປັນຍາແລ້ວ: ຂ້າພະເຈົ້າກ່າວວ່າ "ຂ້າພະເຈົ້າຈະໄດ້ປັນຍາ" ແຕ່ປັນຍານັ້ນກັບຢູ່ຫ່າງໄກຈາກຂ້າພະເຈົ້າ. 24 ສິ່ງທີ່ຢູ່ໄກ ແລະເລິກເຫລືອເກີນແມ່ນຜູ້ໃດຈະຄົ້ນອອກມາໄດ້? 25ໃຈຂ້າພະເຈົ້າຫວນກັບຄືນມາຮຽນຮູ້ແລະຊອກຫາ ພ້ອມທັງສແວງຫາສະຕິປັນຍາ ແລະມູນເຫດຂອງສິ່ງຕ່າງໆ ເພື່ອໃຫ້ຮູ້ຄວາມຊົ່ວຮ້າຍແຫ່ງຄວາມໂງ່ຈ້າ ຄືຄວາມໂງ່ຈ້າ ແລະຄວາມບ້າບໍ.

ເຖິງຈະໃຫ້ປໂຍດເທົ່າກັນທັງໝົດ, ປັນຍາມະນຸດບໍ່ສາມາດໃຫ້ຄຳຕອບຕໍ່ຄຳຖາມທີ່ເປັນຈຸດສຸດຍອດຂອງຊີວິດ. ຈາກຄວາມຄິດເຫັນທາງໂລກ ສັງເກດເບິ່ງຊີວິດທີ່ດຳລົງຢູ່ " ພາຍໃຕ້ດວງຕາເວັນ" ປັນຍາຂອງມະນຸດບໍ່ສາມາດອະທິ

ບາຍ: ຊຶ່ງມີໄຫວພິກອອກແບບຂອງໂລກແລະມະນຸດ, ຈັດຣະບຽບທີ່ຄັດຄ້ານຕໍ່ຄວາມຫຍຸ້ງຍາກ, ຄວາມຄິດຫຼືກິຈກັມ ທີ່ສລັບຊັບຊ້ອນຂອງການອອກແບບຮ່າງກາຍມະນຸດ, ຫຼືຄວາມຄິດເຊັ່ນ ຮັກຫຼືຊຶມຊື່ນຍິນດີ.

ໂຊໂລໂມນຕັດສິນໃຈໃຊ້ວິທີທິດສອບ " ບັນຫາທັ້ງໝົດນີ້ດ້ວຍປັນຍາ." ໃນຄຳເວົ້າອີກຢ່າງນຶ່ງ, ລາວໃຊ້ສະຕິປັນ ຍາມະນຸດເພື່ອທົດສອບສິ່ງທີ່ລາວເຫັນແລະສິ່ງທີ່ລາວປະສົບຢູ່ອ້ອມຮອບລາວ. ແມ່ນ, ລາວຈຳຕ້ອງຍອມຮັບ, " ມັນຢູ່ ເໜືອຄວາມຄິດຂ້າພະເຈົ້າ." ການດຳລົງຢູ່ໃນໂລກກັບຄວາມສລັບຊັບຊ້ອນທັ້ງໝົດແມ່ນ " ທີ່ຢູ່ເໜືອກວ່າຈະເອື້ອມໄປ ເຖິງແລະຫ່າງໄກທີ່ສຸດ" ເມື່ອລາວພະຍາຍາມອະທິບາຍດ້ວຍປັນຍາມະນຸດເທົ່ານັ້ນ.

ຈົ່ງສັງເກດເບິ່ງວິທີການສື່ສານທີ່ໂຊໂລໂມນໃຊ້ໃນຂໍ້ 25: ລາວພະຍາຍາມທີ່ຈະ " ຮູ້, ສຳຣວດ, ແລະພິຈາຣະ ນາ." ສິ່ງເຫຼົ່ານີ້ເປັນຄຳເວົ້າຢ່າງຮອບຄອບ. ໂຊໂລໂມນລະມັດລະວັງພະຍາຍາມທີ່ຈະເຂົ້າໃຈ ແລະອະທິບາຍທັ້ງໝົດ ດ້ວຍປັນຍາມະນຸດ. ນີ້ບໍ່ແມ່ນພຽງແຕ່ເປັນການດຳເນີນການໃນບາງຄັ້ງບາງຄາວເທົ່ານັ້ນ. ລາວທຸ້ມເທກັບສິ່ງເຫລົ່ານີ້, ແຕ່ພວກມັນກໍຢູ່ເໜືອຄວາມເຂົ້າໃຈຂອງລາວ.

ບໍ່ເປັນພຽງແຕ່ສິ່ງທີ່ດີທີ່ປັນຍາຂອງໂລກບໍ່ສາມາດຈະອະທິບາຍໄດ້. ສະຕິປັນຍາມະນຸດກໍຍັງບໍ່ສາມາດອະທິບາຍ ໄດ້ຄືກັນເຊັ່ນ " ຄວາມໂກດຮ້າຍ." ປັນຍາມະນຸດອາດ " ຮູ້" ໄດ້ພຽງແຕ່ວ່າຄວາມໂກດຮ້າຍເປັນສິ່ງທີ່ໂງ່ຈ້າເປັນຄວາມ ຄິດທີ່ປລາດ," ແຕ່ບໍ່ສາມາດອະທິບາຍໄດ້ວ່າເປັນດ້ວຍເຫດໃດ.

ຊີວິດ " ພາຍໃຕ້ດວງຕາເວັນ" (ປັນຍາຈານ 2: 17) ແລະປັນຍາທີ່ແຍກອອກຈາກພຣະເຈົ້າຕ້ອງຊີ້ບອກວ່າທຸກ ຄົນເປັນຄົນດີ, ແຕ່ສະພາບແວດລ້ອມ, ຂາດການສຶກສາ, ຫຼືອັນນຶ່ງຄືການບໍ່ມີຕົວຕົນຂອງສັງຄົມໄດ້ເພີ້ມຄວາມທາຍະ ນະໃຫ້ເຂົາ. ເຖິງແມ່ນວ່າມີການສຶກສາສູງຄົນກໍຍັງດຳລົງຊີວິດຢູ່ໃນຄວາມຄິດສະພາບແວດລ້ອມສັງຄົມເຮັດສິ່ງທີ່ຊົ່ວ, ແລະສັງຄົມໂລກສ້າງຄວາມວິຕົກກັງວົນໃຈໄວ້ວ່າເປັນດ້ວຍເຫດໃດ.

3 <u>ປັນຍາຈານ 7:26-29</u>

[26]ຂ້າພະເຈົ້າໄດ້ພົບອີກສິ່ງໜຶ່ງ ຊຶ່ງຂົມຂື່ນຫລາຍກວ່າຄວາມຕາຍ ຄືຜູ້ຍິງທີ່ມີໃຈເປັນບ້ວງແຮ້ວ ແລະແຮ້ວມືຂອງນາງ ເປັນໂສ້ເຫລັກ ຄົນໃດເປັນທີ່ພໍພຣະທັຍພຣະເຈົ້າ ຄົນນັ້ນຈະໜີພົ້ນນາງ ແຕ່ຄົນບາບຈະຖືກຜູ້ຍິງຄົນນັ້ນຈັບເອົາໄປ. [27]ປັນຍາຈານກ່າວວ່າ ເບິ່ງແມ ຂ້າພະເຈົ້າພົບດັ່ງຕໍ່ໄປນີ້ ໂດຍເອົາເຣື່ອງໜຶ່ງມາປະດິດຕິດຕໍ່ເຂົ້າກັບອີກເຣື່ອງໜຶ່ງເພື່ອ ຫາມູນເຫດ [28]ຊຶ່ງຈິດໃຈຂອງຂ້າພະເຈົ້າຍັງກຳລັງຫາແລ້ວຫາອີກ ແຕ່ຂ້າພະເຈົ້າຫາບໍ່ພົບ ໃນຜູ້ຊາຍພັນຄົນຈະພົບຜູ້ ຊາຍແທ້ຈັກຄົນໜຶ່ງ ແຕ່ຈະຫາຜູ້ຍິງແທ້ຈັກຄົນໜຶ່ງໃນຈຳນວນຜູ້ຍິງພັນຄົນ ກໍຫາບໍ່ພົບ. [29]ເບິ່ງແມ ຂ້າພະເຈົ້າພົບແຕ່ ຄວາມນີ້ ຄືພຣະເຈົ້າສ້າງມະນຸດໃຫ້ເປັນຄົນທ່ຽງທັມ ແຕ່ມະນຸດທັ້ງຫລາຍໄດ້ຄົ້ນຄວ້າກົນອຸບາຍຕ່າງໆອອກມາ.

ຜ່ານທາງຄຳຖາມຂອງໂຊໂລໂມນເພື່ອຄົ້ນຫາຄວາມໝາຍຊີວິດໂດຍການຕິດຕາມພິສູດສະຕິປັນຍາທີ່ພິສູດໃຫ້ ເຫັນວ່າເປັນໄປບໍ່ໄດ້, ການຊອກຄົ້ນຂອງລາວໄດ້ຂໍ້ສລຸບສາມປະການ.

1. **ຄວາມບາບເປັນຜົນກະທົບສາຍສັມພັນຂອງເຮົາ.** ເມື່ອເບິ່ງຜິວເຜີນ, ໂຊໂລໂມນເບິ່ງເໝືອນວ່າຈິງຈັງຢ່າງສຸດ ຂີດ " ຕໍ່ສູ້- ຜູ້ຍິງ" ໃນຂໍ້ 26-28, ແຕ່ຈາກຄວາມພໍອົກພໍໃຈຜູ້ຊາຍ, ລາວດຳເນີນການຈັດການກັບບັນຫາຂໍ້ຂັດ ແຍ່ງລະຫວ່າງຜູ້ຊາຍແລະຜູ້ຍິງ. ດ້ວຍເຫດຜົນຂອງຄວາມບາບ, ສາຍສັມພັນຂອງການແຕ່ງງານສາມາດເຂົ້າ ມາແທນທີ່ຂໍ້ຂັດແຍ່ງໄດ້.
2. **ປັນຍາເປັນສິ່ງທີ່ມີຄ່າສຳລັບໂລກນີ້.** ໂຊໂລໂມນຍອມຮັບວ່າລາວໄດ້ຫາພົບກໍພຽງ " ຄົນນຶ່ງໃນພັນຄົນ" ເປັນ ຜູ້ທີ່ສລຽວສລາດ. ແລະ " ຄົນເຫຼົ່ານັ້ນບໍ່ມີຜູ້ຍິງ." ອີກເທື່ອນຶ່ງ, ຄຳເວົ້ານີ້ເບິ່ງເໝືອນວ່າລຳອຽງຕໍ່ສູ້ຜູ້ຍິງ, ແຕ່ຈົ່ງ ຄິດເບິ່ງໂຊໂລໂມນບໍ່ໄດ້ມີປະສົບການທີ່ດີກ່ຽວເຣື່ອງຜູ້ຍິງ. ໂຊໂລໂມນບໍ່ເຊື່ອຟັງຄຳສັ່ງຂອງພຣະເຈົ້າໂດຍ ການແຕ່ງງານກັບເມັຽນອກສາສນາຫລາຍຮ້ອຍຄົນ (1 ກະສັດ 11: 1- 6).

3. **ມະນຸດທຸກຄົນຖືກຄວາມບາບຄອບງຳ.** ມີພຽງແຕ່ເມື່ອພວກເຮົາຕິດຕາມພຣະປະສົງພຣະເຈົ້າ ພວກເຮົາຈະພົບສະຕິປັນຍາທີ່ພວກເຮົາຕ້ອງການເພື່ອຕອບຄຳຖາມຂອງຊີວິດແລະຊີວິດຊອບທັມໃນໂລກນີ້. ປັນຍາພຣະເຈົ້າເປັນຂອງພຣະຣາຊທານຈາກພຣະເຈົ້າທີ່ໃຫ້ກັບພວກເຮົາໃຫ້ເຂົ້າໃຈຄຸນລັກສະນະຂອງພຣະອົງ, ຄວາມຕັ້ງໃຈຂອງພຣະອົງ, ແລະວິທີທາງຂອງພຣະອົງ. ເມື່ອພວກເຮົາເປັນສ່ວນນຶ່ງໃນສະຕິປັນຍາຂອງພຣະອົງ, ການສະແດງອອກໃຫ້ເຫັນເຖິງຄວາມຊອບທັມໃນຊີວິດ.

ສະຕິປັນຍາຂອງພຣະເຈົ້າໃຫ້ຄຳຕອບຕໍ່ທຸກບັນຫາຂອງຄວາມຊົ່ວຮ້າຍ. ເມື່ອພຣະເຈົ້າຊົງສ້າງໂລກເຫັນວ່າທຸກຢ່າງດີ, ໂຊໂລໂມນອະທິບາຍ, ພຣະອົງ " ເຮັດໃຫ້ມະນຸດເປັນຄົນທ່ຽງທັມ." ແຕ່ແທນທີ່ຈະດຳລົງຊີວິດຢູ່ໃນຄວາມທ່ຽງທັມແລະຕິດຕາມພຣະເຈົ້າ, ອາດາມແລະເອວາຕິດຕາມຄວາມບາບຂອງເຂົາ ເຂົາວາງແຜນທີ່ຈະເປັນເໝືອນພຣະເຈົ້າ. ແລະໃນທຸກວັນນີ້ພວກເຮົາກໍສືບຕໍ່ເຮັດຕາມຄວາມໂງ່ ແລ່ນໄລ່ຕິດຕາມແຜນການໂງ່ຂອງຕົນເອງ.

ແຕ່ເຣື່ອງນີ້ຍັງບໍ່ຈົບ! ພຣະເຈົ້າເຂົ້າມາໃນໂລກເພື່ອທີ່ຈະເອົາເຮົາກັບຄືນມາຫາພຣະອົງ. ສະຕິປັນຍາທີ່ພວກເຮົາຕ້ອງການມາຈາກການຕິດຕາມພຣະເຈົ້າຜ່ານທາງຄວາມເຊື່ອໃນພຣະເຢຊູ, ແລະສະຕິປັນຍານັ້ນນຳພາເຮົາໃຫ້ດຳເນີນຊີວິດໃນຄວາມຊອບທັມ.

.

ນຳໃຊ້ໃນຊີວິດ.

ເມື່ອເຮົາຕິດຕາມພຣະເຈົ້າ, ພຣະອົງສັນຍາທີ່ຈະປະທານສະຕິປັນຍາທີ່ພວກເຮົາຕ້ອງການນັ້ນໃຫ້ ເພື່ອຈະດຳລົງຊີວິດໃນຄວາມຊອບທັມ. ພວກເຮົາຈະຕິດຕາມພຣະເຈົ້າຢ່າງໃດໃນອາທິດນີ້? ຈົ່ງພິຈາຣະນາເບິ່ງນຶ່ງຂັ້ນຕອນໃນຄຳແນະນຳຂ້າງລຸ່ມນີ້.

- **ຈົ່ງພິຈາຣະນາເບິ່ງການຊົງສ້າງທີ່ດີຂອງພຣະເຈົ້າ.** ໃນຄືນເດືອນແຈ້ງໃນອາທິດນີ້, ອອກໄປນອກບ້ານແລະເບິ່ງດວງດາວໃນທອງຟ້າ. ອ່ານພຣະທັມປະຖົມມະການບົດ 1 ແລະ ເພງສັຣເສີນບົດ 8, ແລະຂອບພຣະຄຸນພຣະເຈົ້າໃນພຣະສະຕິປັນຍາແລະການຊົງສ້າງຂອງພຣະອົງ.

- **ຈົ່ງທ່ອງຈຳຂໍ້ພຣະຄັມພີ.** ຈົ່ງທ່ອງຈຳຂໍ້ພຣະຄັມພີເຊັ່ນພຣະທັມສຸພາສິດບົດ 3: 5- 6 ໃນອາທິດນີ້, ແລ້ວຄິດເບິ່ງວິທີທາງທີ່ທ່ານສາມາດຕິດຕາມພຣະເຈົ້າແລະໄວ້ວາງໃຈໃນພຣະສະຕິປັນຍາຂອງພຣະອົງ, ຫຼາຍກວ່າຄວາມວາງໃຈໃນຕົວເອງ.

- **ຈົ່ງມີການສົນທະນາ.** ໃຊ້ເວລາກັບເພື່ອນທີ່ບໍ່ມີຄວາມເຊື່ອ, ແລະຖາມເຂົາວ່າເຂົາຈະອະທິບາຍບັນຫາຫາງໂລກແລະທັມະຊາດຂອງຄວາມບາບແລະຄວາມຊົ່ວຊ້າຢ່າງໃດ. ໃນຂະນະທີ່ຟັງໂດຍບໍ່ຕັດສິນ ຈົ່ງອະທິຖານຫາໂອກາດທີ່ຈະແບ່ງປັນຂ່າວປະເສີດແລະປັນຍາຂອງພຣະເຈົ້າ.

ດ້ວຍຂໍ້ມູນທັງໝົດເຫັນປໂຍດແກ່ເຮົາ, ມັນເປັນການງ່າຍທີ່ຈະຮຽນດ້ວຍປັນຍາຂອງເຮົາເອງ, ໃຫ້ເຮົາຕິດຕາມພຣະເຈົ້າແລະພຣະສະຕິປັນຍາຂອງພຣະອົງຢູ່ຕລອດ. ທີ່ເປັນສະຕິປັນຍາທີ່ມີຄຸນຄ່າທັງເປັນທີ່ໜ້າພໍໃຈອີກດ້ວຍ.

ອຸປຖັມໂດຍລາວຊາວເຫີນບັບຕິດສັມພັນ www.lsbf.org ແປໂດຍ VR.

ໂຮງຮຽນອັນອາທິດ

ວັນອາທິດ ທີ 24 ມີນາ 2019 (03-24-2019)

ບັນຫາກ່ຽວກັບການງານ

ທ່ານມີຄວາມຊົງຈຳອັນໃດທີ່ກ່ຽວກັບການທຳງານມື້ທຳອິດຂອງທ່ານ?

ຈຸດສຳຄັນໃນບົດຮຽນນີ້:ການງານຂອງເຮົາມີຄວາມໝາຍຂຶ້ນອີກເມື່ອເຮົາເຮັດສຳເຣັດດ້ວຍຄວາມສັດຊື່ຕໍ່ພຣະຄຣິດ.

ພຣະຄັມພີຕອບສນອງຕໍ່ຊີວິດ:

ໃນແຕ່ລະເດືອນ. ມີຄົນປະມານສິບສີ່ລ້ານຄົນໃນທົ່ວໂລກຟັງວິທະຍຸ ສຽງເສຣີລີນິຍົມ (NPR), ຂ້າພະເຈົ້າສ້າງ ກາຍ ເຣສ ໄດ້ຢ່າງໃດ. ແຕ່ລະຂັ້ນຕອນໄດ້ເພງຄວາມສົນໃຈໃສ່ກັບການຮູ້ຈັກຜົນຜະລິດຫຼືທາງທຸຣະກິດ. ກາຍ ເຣສ ໃຫ້ສັມພາດຜູ້ຈັດລະບົບການຜະລິດຫຼືບໍຣິຫານເພື່ອສົນທະນາວ່າ ເຂົາສ້າງຄວາມສຳເຣັດໃຫ້ແກ່ບໍຣິສັດຂອງເຂົາຢ່າງ ໃດ.ນຶ່ງໃນຫຼາຍຂໍ້ໄດ້ປຸງບສິດທິພິເສດທີ່ສຳຄັນໃນການອາສັຍຢູ່ໃນສະຫະຣັດອະເມຣິກາ ແມ່ນຄວາມສາມາດເລີ້ມຕົ້ນ ທຸຣະກິດໃນການາຈອດຣິດຂອງທ່ານໄດ້ (ບໍຣິສັດເອໂປຄອມພິວເຕີ). ບ້ານຂອງທ່ານ (ແອດຊີ), ຫຼື ແມ່ນກະທັ້ງທຳ ການຜະລິດອອກຈາກຣິດບັນທຸກຂອງທ່ານ (ພາຍໃຕ້ສິ່ງປ້ອງກັນ). ຫຼາຍບໍຣິສັດເຫຼົ່ານີ້ແມ່ນປ່ຽນໄປຕາມສະພາບຈາກ ບັນຫາ ບໍ່ມີຫຍັງໝົດມາສູ່ຄວາມສຳເຣັດເປັນບໍຣິສັດທີ່ທຳເງິນໄດ້ມາກກວ່າຫຼາຍລ້ານດອນລາ.

ແມ່ນແລ້ວ, ທີ່ນັ້ນມີຄວາມຫຍຸ້ງຍາກແທ້ ຊຶ່ງບໍ່ໄດ້ສຳຄັນວ່າຈະເປັນຜົນສຳເຣັດຫຼືຜົນການຜະລິດຂອງທ່ານ ທ່ານ ຈະຕ້ອງປ່ອຍປະໆງານໜັກໄວ້ໃນມືຂອງຄົນອື່ນຫຼັງຈາກທີ່ທ່ານອອກໄປ. ໜ້າເສົ້າໃຈ, "70% ຄົນຮັ່ງມີທີ່ເຮົາຮູ້ຈັດສູນ ເສັ້ງຊັບສົມບັດໃຫ້ຄົນລຸ້ນທີສອງ, ແລະໜ້າປລາດໃຈ 90% ສູນເສັ້ງໃນລຸ້ນທີສາມ" ແມ່ນຫຍັງເປັນຈຸດໝຸ້ງໝາຍຂອງ ການເຮັດງານນັ້ນຖ້າຈະຕ້ອງຈາກມັນໄປ ປະທຸກສິ່ງໄວ້ໃນມືຜູ້ທີ່ໃຊ້ຈ່າຍຢ່າງຟຸມເຟືອຍ.

ພຣະຄັມພີກ່າວວ່າຢ່າງໃດ? (ເບິ່ງຕາມຫົວຂໍ້ 1, 2 ແລະ 3)

ສຶກສາພຣະຄັມພີ

1. <u>ປັນຍາຈານ 2:18-23</u>

18 ຂ້າພະເຈົ້າກຽດຊັງວຽກງານທັງໝົດຂອງຂ້າພະເຈົ້າຊຶ່ງຂ້າພະເຈົ້າເຮັດວຽກໜັກຈົນໝົດເຫື່ອແຮງຢູ່ພາຍໃຕ້ດວງຕາ ເອັນ ເພາະຂ້າພະເຈົ້າຈຳຕ້ອງປະວຽກນັ້ນໄວ້ໃຫ້ແກ່ຄົນທີ່ມາພາຍຫລັງຂ້າພະເຈົ້າ. 19 ແລ້ວໃຜຈະໄປຮູ້ວ່າຄົນນັ້ນຈະ ເປັນຄົນມີສະຕິປັນຍາຫລືຄົນໂງ່ ປານນັ້ນລາວກໍຄອບຄອງບັນດາການງານຂອງຂ້າພະເຈົ້າ ທີ່ຂ້າພະເຈົ້າໄດ້ເຮັດຈົນ ໝົດເຫື່ອແຮງມາແລະທີ່ຂ້າພະເຈົ້າໃຊ້ສະຕິປັນຍາເຮັດພາຍໃຕ້ດວງຕາເອັນ. ອັນນີ້ກໍບ່ໄດ້ຜົນ. 20 ຂ້າພະເຈົ້າຈຶ່ງອັດ ອັ້ນຕັນໃຈຫລາຍເຖິງເຣື່ອງການງານທັງໝົດຂອງຂ້າພະເຈົ້າ ຊຶ່ງຂ້າພະເຈົ້າເຮັດຈົນໝົດເຫື່ອແຮງພາຍໃຕ້ດວງຕາເອັນ 21 ດ້ວຍວ່າມີຄົນທີ່ເຮັດວຽກໂດຍໃຊ້ສະຕິປັນຍາຄວາມຮູ້ແລະຄວາມຊຳນານ ແຕ່ແລ້ວກໍປະວຽກນັ້ນໃຫ້ເປັນສ່ວນ ຂອງອີກຄົນໜຶ່ງທີ່ບ່ໄດ້ອອກແຮງເຮັດວຽກນັ້ນ ອັນນີ້ກໍບ່ໄດ້ຜົນ ແລະຊົ່ວຮ້າຍຫລາຍ. 22 ເພາະວ່າລາວໄດ້ຫຍັງຈາກ ບັນດາວຽກງານອັນໜັກໜ່ວງແລະຄວາມທຸກຣະທົມໃນໃຈທີ່ລາວຕ້ອງເຮັດພາຍໃຕ້ດວງຕາເອັນ 23ດ້ວຍວ່າອັນເດືອນ ປີທັງຫລາຍຂອງລາວມີແຕ່ຄວາມເຈັບປວດ ແລະກິດທຸຣະຂອງລາວກໍ່ຄວາມສລົດໃຈ ຕອນກາງຄືນຈິດໃຈຂອງລາວກໍ ບ່ຢຸດພັກສງົບ ອັນນີ້ກໍບ່ໄດ້ຜົນດ້ວຍ.

ແຍກອອກຈາກພຣະເຈົ້າແລະທີ່ຢູ່ຊົ່ວນິຣັນດອນ, ການເບິ່ງເຫັນຮູບພາບແນວຄວາມຄິດຣາຊອາຈັກພຣະເຈົ້າ ແລ້ວ, ໂຊໂລໂມນເກີດເບື່ອໜ່າຍທັງໝົດການງານທີ່ລາວພະຍາຍາມເຮັດແລະທຸກຜົນສຳເຣັດທີ່ໄດ້ຮັບ: ການສ້າງ ພຣະວິຫານ, ການສ້າງສວນ, ແລະຕລອດຮອດການສະສົມຊັບສົມບັດ (ປັນຍາຈານ 2:4-8). ລາວໃຫ້ສອງເຫດຜົນ:

1. **ທ່ານບໍ່ສາມາດເອົາມັນໄປກັບທ່ານໄດ້**. ໂຊໂລໂມນເປັນກະສັດເປັນເວລາສີ່ສິບປີ (1 ກະສັດ 11: 42). ແລະຂະນະບິດາຂອງລາວດາວິດໄດ້ນຳອິສຣາເອນທັງໝົດໃຫ້ພົ້ນຈາກຄວາມຕາຍຈາກມືສັດຕຣູ (1 ກະສັດ 5: 3- 4), ແຕ່ບັດນີ້ໂຊໂລໂມນຜູ້ມີຄວາມສງົບສຸກທ່ວປະເທດ ສ້າງເຢຣູຊາເລັມໃຫ້ເປັນເມືອງທີ່ສຳຄັນຮຸ່ງ ເຮືອງດ້ວຍພຣະວິຫານນະມັສການພຣະເຈົ້າ (6- 7). ແມ່ນແລ້ວ, ທັງໝົດທີ່ລາວເຮັດ, ໂຊໂລໂມນຮູ້ແນ່ໃນ ໃຈວ່າລາວບໍ່ສາມາດເອົາມັນໄປກັບລາວໄດ້.

ເມື່ອທ່ານເບິ່ງເຫັນວ່າວຽກງານບໍ່ຄົງຢູ່ຖາວອນເປັນຂອງທ່ານ, ທ່ານຈະທົດສອບເບິ່ງວ່າມັນເປັນຄວາມກຽດຄ້ານ ຫຼືການຫຼົງໃຫຼຢ່າງບໍ່ມືນຫູມືນຕາ. ເມື່ອວຽກງານຂອງທ່ານບໍ່ມີຈຸດປະສົງເປົ້າໝາຍຢູໃນໂລກນີ້, ທ່ານອາດຈະລອງເຮັດ ຫຼີ້ນເບິ່ງເລັກໆນ້ອຍໆເທົ່າທີ່ເປັນໄປໄດ້ບໍ, ເຮັດໃຫ້ໄດ້ເງິນພຽງພໍຢູ່ໄດ້. ເປັນຫຍັງຈຶ່ງຈະເຮັດງານໜັກຖ້າທ່ານຮູ້ວ່າທ່ານ ເອົາຫຍັງໄປບໍ່ໄດ້? ບຸກຄົນທີ່ດຳລົງຊີວິດຈາກທັສນະຄະຕິແບບນີ້ຈະກຽດຊັງວຽກຂອງລາວ ເພາະລາວຮູ້ສຶກເບື່ອໜ່າຍ ຫຼືເຮັດໄປໂດຍບໍ່ມີຈຸດໝາຍ.

ການມົວເມົານຳວຽກຢ່າງບໍ່ມືນຫູມືນຕາແມ່ນກົງກັນຂາມກັນກັບການຈຳໃຈເຮັດດ້ວຍຄວາມກຽດຄ້ານ; ສິ່ງນີ້ເກີດ ຂຶ້ນເມື່ອທ່ານມົວເມົາຢູ່ນຳວຽກຂອງທ່ານແລະໃຫ້ມັນເປັນພຣະເຈົ້າຂອງທ່ານ. ຖ້າຊີວິດນີ້ມີທ່ານີ້, ການທຳງານຫຼາຍຊົ່ວ ໂມງເພື່ອທ່ານຈະສາມາດສະສົມເງິນໄວ້ໄດ້ເທົ່າທີ່ເຮັດໄດ້ ເພື່ອທ່ານຈະສາມາດດຳລົງຊີວິດຢູ່ໃນຄວາມສຸກສະບາຍ ແລະເຫັນແກ່ຕົນເອງໃນລະຫວ່າງຊີວິດອັນສັ້ນໆຂອງທ່ານ. ບຸດຄົນທີ່ກຳລັງດຳລົງຊີວິດຢູ່ໃນແນວຄວາມຄິດອັນນີ້ຈະ ເບື່ອໜ່າຍຕ່ໍວຽກຂອງລາວເພາະມັນກາຍມາເປັນເຈົ້ານາຍຂອງລາວແລະມັນຄວບຄຸມຊີວິດຂອງລາວ,

2. **ທ່ານບໍ່ສາມາດໄວ້ວາງໃຈລູກເມື່ອທ່ານຈາກໄປ**. ສິ່ງນຶ່ງທີ່ໃຊ້ໃນການທົດສອບໃນການເປັນຜູ້ນຳຄືມີຫຍັງເກີດ ຂຶ້ນເມື່ອທ່ານບໍ່ຢູ່ນັ້ນ. ທຸກສິ່ງຈະດຳເນີນງານເປັນປົກກະຕິດີຂະນະຖ້າພວກເຮົາຍັງຢູ່ທີ່ນັ້ນຫຼືບໍ່ຢູ່ ທຸກສິ່ງດີຂຶ້ນ ຫຼືບໍ່ດີ? ຖ້າພວກເຮົາສຸມໃຈໃສ່ພຽງແຕ່ກໍ່ສ້າງຕົວເອງໃຫ້ປະສົບຜົນສຳເຣັດ, ພວກເຮົາກໍຄືຜູ້ທີ່ບໍ່ຈັດຕຽມຄົນ ອື່ນໃຫ້ພ້ອມທີ່ຈະສືບທອດຕ່ໍ.

ດ້ວຍຄວາມຮູ້ສຶກນັ້ນ, ເຮົາຈຶ່ງບໍ່ເຊື່ອໝັ້ນຄົນອື່ນວ່າຈະເຮັດດີໄດ້ຄືກັນກັບເຮົາ ພາຍຫຼັງລົງທຶນໄປຫຼາຍປີໃນຊີວິດ ການເຮັດງານຂອງພວກເຮົາ, ພວກເຮົາເຝົ້າເບິ່ງນັ້ນ "ລູກຂ້າພະເຈົ້າ." ເຖິງຢ່າງໃດກໍຕາມ ທີ່ຕາມມາທີຫຼັງເຮົາແນ່ນອນ ຈະບໍ່ເຫັນໃນທຳນອງນັ້ນ, ແລະສ່ວນຫຼາຍຮູ້ສຶກວ່າເຂົາເຮັດບໍ່ໄດ້ດີດັ່ງທີ່ຕັ້ງໃຈ ຫຼືມີຄວາມຊ່ຽວຊານດັ່ງພວກເຮົາເຮັດ. ນັ້ນເປັນສິ່ງທີ່ໂຊໂລໂມນພົບເຫັນໃນຕົວລາວເອງ. ລາວຮູ້ວ່າລາວຈະຕ້ອງມອບວຽກທີ່ລາວພະຍາຍາມເຮັດທັງໝົດໃຫ້ ກັບຜູ້ທີ່ມາພາຍຫຼັງລາວ. ແຕ່ລາວໄດ້ຕັ້ງຄຳຖາມວ່າ, "ຜູ້ໃດຈະຮູ້ວ່າລາວເປັນຜູ້ມີຄວາມສລາດຫຼືໂງ່?" ນີ້ແມ່ນຂາດ ຄວາມໝັ້ນໃຈໃນຜູ້ຕິດຕາມມາ ອາດສາມາດເຮັດໃຫ້ເຮົາຜິດຫວັງທີ່ມັນໄດ້ເກີດຂຶ້ນກັບໂຊໂລໂມນ. "ຂ້າພະເຈົ້າເລີ້ມ ຮູ້ສຶກຕົວເອງເໝືອນຜູ້ສິ້ນຫັວງ."

ອີກດ້ານນຶ່ງ, ເມື່ອພວກເຮົາເຮັດເໝືອນກັບວ່າວຽກຂອງເຮົາເປັນສິ່ງຄົງຢູ່ຊົ່ວນິຣັນ, ຄວາມຄິດພຣະເຈົ້າ, ພວກເຮົາ ຈະມີຄວາມຮູ້ສຶກມີຄວາມຮັບຜິດຊອບທີ່ຈະຊ່ວຍບຸກຄົນເຫລ່ານັ້ນທີ່ມາພາຍຫຼັງເຮົາ. ພວກເຮົາຄວນຊອກຫາຜູ້ສືບ ທອດທີ່ດີໃຫ້ບໍຣິຫານພຣະພອນຂອງພຣະພຣະເຈົ້າທີ່ມອບຄວາມໄວ້ວາງໃຈໄວ້ກັບພວກເຮົາ. ອິດທິພົນຄວາມຄິດ ຊ່ວຍພວກເຮົາໃຫ້ຫຼີກລ້ຽງການສົງສັຍລັກສະນະທ່າທາງຕ່ໍຜູ້ທີ່ຮັບຜິດຊອບວຽກຕ່ໍຈາກເຮົາ. ແລະຈົ່ງຈຳໄວ້ວ່າວຽກຂອງ ເຮົາບໍ່ໄດ້ເປັນວຽກທີ່ເຮັດດ້ວຍຄວາມຍາກລຳບາກ " ພາຍໃຕ້ດວງຕາເວັນ." ມີພຽງເມື່ອພວກເຮົາທຳງານດ້ວຍຄວາມ ສັດຊື່ຕ່ໍພຣະຄຣິດໂດຍການເຮັດງານເໝືອນເຮັດຢູ່ພາຍໃຕ້ອົງພຣະຜູ້ເປັນເຈົ້າວຽກຂອງເຮົາຈຶ່ງຈະເກີດຜົນ(ໂກໂລຊາຍ 3: 23-24)

2. ປັນຍາຈານ 3:9-13

9 ຄົນງານໄດ້ກຳໄລຫຍັງຈາກການງານຂອງຕົນ? 10 ຂ້າພະເຈົ້າເຫັນພາຣະຊຶ່ງພຣະເຈົ້າປະທານໃຫ້ມະນຸດເຮັດຢູ່ນັ້ນ. 11 ພຣະອົງກະທຳໃຫ້ສັບພະທຸກສິ່ງງົດງາມຕາມລະດູການຂອງມັນ ພຣະອົງບັນຈຸຄວາມນິຣັນດອນໄວ້ໃນຈິດໃຈຂອງມະນຸດ ແຕ່ມະນຸດຍັງເບິ່ງບໍ່ເຫັນວ່າ ພຣະເຈົ້າກະທຳຫຍັງໄວ້ຕັ້ງແຕ່ຕົ້ນເດີມຈົນວາຣະສຸດປາຍ. 12 ຂ້າພະເຈົ້າຮູ້ແລ້ວວ່າສຳລັບພວກເຂົາບໍ່ມີຫຍັງທີ່ຈະດີໄປກວ່າຄວາມຊົມຊື່ນຍິນດີ ແລະເຮັດການດີຕລອດຊີວິດ. 13 ແລະເປັນຂອງປະທານຈາກພຣະເຈົ້າແກ່ມະນຸດທີ່ຈະໃຫ້ມະນຸດໄດ້ກິນດື່ມ ແລະມ່ວນຊື່ນໃນບັນດາການງານຂອງພວກເຂົາ.

ໂຊໂລໂມນໄດ້ຖາມຄຳຖາມຂໍ້ນຶ່ງບາງທີພວກເຮົາທັງໝົດອາດຖາມຄຳຖາມອັນດຽວກັນຫຼືແຕກຕ່າງກັນ: " ລາວໄດ້ຜົນປໂຍດອັນໃດຈາກການດິ້ນລົນຕໍ່ສູ້ເຮັດງານຂອງລາວ?" ການດິ້ນລົນຕໍ່ສູ້ເປັນພຽງຫຼາຍກ່ວາການເຮັດງານໜັກຂອງປະຣິມານຄົນຫຼືເຄື່ອງຈັກເຮັດງານໄດ້ໃນແຕ່ລະວັນ. ຄຳເວົ້າທີ່ນຳຄວາມໝາຍຂອງຄຳວ່າຍາກ, ເຮັດວຽກທຸກ. ການເຮັດງານບໍ່ໄດ້ເປັນບັນຫາ. ການງານແມ່ນຂອງປະທານຈາກພຣະເຈົ້າ (ປັນຍາຈານ 5: 19). ພຣະເຈົ້າມອບວຽກໃຫ້ອາດາມເຮັດ. ແລະພຣະອົງໄດ້ມອບໜ້າທີ່ວຽກງານໃຫ້ກ່ອນຄຳສາບແຊ່ງຂອງຄວາມບາບທີ່ເຂົ້າມາ (ປະຖົມມະການ 2:15). ແຕ່ຕຳແໜ່ງທີ່ສຳຄັນຂອງຄວາມບາບແມ່ນການເຮັດວຽກຂອງເຮົາກາຍມາເປັນ " ວຽກໜັກ" (ປະຖົມມະການ 3:17). ບັນຫາແມ່ນວຽກຂອງເຮົາກາຍມາເປັນການຕໍ່ສູ້.

ການດິ້ນລົນຕໍ່ສູ້ນີ້ອາດກໍ່ໃຫ້ເກີດຄວາມບໍ່ພໍໃຈແລະແມ່ນກະທັ້ງເຮັດໃຫ້ກຽດຊັງວຽກ.ແຕ່ດຽວນີ້ໂຊໂລໂມນໄດ້ແນະນຳສິ່ງທີ່ຢູ່ຊົ່ວນິຣັນດອນ, ຄວາມຄິດພຣະເຈົ້າ. ຜ່ານທາງຄວາມຈິງຕອນນີ້ແລະແຫຼ່ງທີ່ມາທີ່ສຳຄັນນີ້ໄດ້ຮັບທັດສະນະແນວຄວາມຄິດທີ່ສົມບູນຂອງວຽກຂອງເຮົາເປັນເໝືອນຂອງປະທານຈາກພຣະເຈົ້າ. ຄວາມຈິງເຫຼົ່ານີ້ສາມາດເຮັດໃຫ້ປ່ຽນແປງວຽກໜັກຂອງເຮົາເປັນວຽກທີ່ສັດຊື່ໃນພຣະເຈົ້າ.

- **ການຄວບຄຸມດູແລຢູ່ໃນພຣະເຈົ້າ.** ພວກເຮົາມັກຈະເປັນຜູ້ດູແລຄອບຄຸມຊີວິດຂອງເຮົາເອງ, ມີແຕ່ພຣະເຈົ້າພຽງເທົ່ານັ້ນເປັນຜູ້ປົກຄອງດູແລສູງສຸດ. ຕອນຕົ້ນບົດ 3 ປັນຍາຈານ. ໂຊໂລໂມນເນັ້ນເຖິງລະດູການແລະການໝຸນວຽນຂອງຊີວິດ (ຂໍ້ 1- 8). ພວກເຮົາບໍ່ສາມາດຄອບຄຸມເຫດການເຫຼົ່ານີ້, ເຊັ່ນໃນມື້ທີ່ເຮົາເກີດຫຼືມື້ທີ່ເຮົາຕາຍ.

ແທນທີ່ຂອງທັສນະຄວາມຄິດຂອງທາງໂລກເວລານັ້ນແລະຊີວິດບໍ່ມີຄວາມໝາຍ, ພວກເຮົາເຊື່ອໄວ້ວາງໃຈການຄຸ້ມຄອງຂອງພຣະເຈົ້າຢູ່ເໜືອສາລະພັດສິ່ງທັງໝົດ. ຂະນະທີ່ເຮົາເຊື່ອໄວ້ວາງໃຈໃນພຣະຫັດຂອງພຣະເຈົ້າພວກເຮົາຄວນພະຍາຍາມປຸກຈິດໃຈຂຶ້ນຜ່ານທາງການທົດລອງແລະຄວາມຫຍຸ້ງຍາກ.

ເພາະພວກເຮົາເຊື່ອວາງໃຈພຣະເຈົ້າ, ທີ່ພວກເຮົາສາມາດເຊື່ອນັ້ນ " ງານໜັກນັ້ນພຣະເຈົ້າໄດ້ມອບໃຫ້ກັບລູກຫຼານຂອງອາດາມເພື່ອໃຫ້ເຂົາມີຊີວິດຢູ່" ເປັນຂອງປະທານທີ່ດີ. ແລະເພາະການປົກຄອງເປັນຂອງພຣະເຈົ້າ. ວຽກທີ່ເຮົາເຮັດນັ້ນມາຈາກພຣະເຈົ້າເປັນຂອງຂວັນທີ່ດີ. ໃນໜ້າທີ່ນີ້, ຄົນຂອງພຣະເຈົ້າຈະຕ້ອງເຮັດໃຫ້ດີກັບຂອງພຣະຣາຊທານຂອງພຣະອົງດ້ວຍການຫາລ້ຽງຄອບຄົວຂອງເຮົາ, ໄດ້ຮັບໃນສິ່ງທີ່ເຮົາຕ້ອງການ, ດູແລໃນຄວາມຕ້ອງການ.

- **ພຣະເຈົ້າແຕ່ງຕັ້ງເຮົາໃຫ້ຢູ່ເໜືອໂລກນີ້.** " ພຣະອົງຍັງເອົາຊີວິດນິຣັນໃສ່ໃນຈິດໃຈເຮົາ." ພຣະອົງຊົງຮູ້ຈັກເຮົາດີບໍ່ພຽງແຕ່ໃນໂລກນີ້. ພວກເຮົາບໍ່ມີຄວາມສາມາດຊ່ວຍຕົວເອງເຮັດໜ້ຽງໄດ້ ມີແຕ່ຄວາມກັງວົນ, " ໃນຂໍ້ນີ້ຮູບແບບການດຳລົງຊີວິດຈະຕ້ອງມີດີຫຼາຍກວ່ານີ້!" ທ່ານເຄີຍປ່ອຍວາງການຊ່ວຍຕົວເອງໃນວຽກຂອງທ່ານແລະໃນຊີວິດຂອງທ່ານທີ່ເປັນຄວາມສຳຄັນ, ບາງສິ່ງນັ້ນ ໃນທີ່ສຸດນອກຈາກພຽງແຕ່ຈະສະແດງໃຫ້ເຫັນຊີວິດ? ພຣະເຈົ້າຈັດວາງ " ການກະຕຸ້ນ" ທີ່ຢູ່ໃນຊີວິດນັ້ນ!

ພວກເຮົາຕ້ອງການຮູ້ຖານະຕຳແໜ່ງຂອງພວກເຮົາໃນໂລກແລະໃນແຜນການຂອງພຣະເຈົ້າ, ແຕ່ພຣະອົງບໍ່ໄດ້ຊົງສຳແດງຕໍ່ເຮົາທຸກໆສິ່ງທີ່ພຣະອົງຊົງກະທຳຫຼືສິ່ງທີ່ພຣະອົງໄດ້ກະທຳແຕ່ເລີ້ມຕົ້ນຈົນຈົບ. ພຣະເຈົ້າຊົງສຳແດງໃຫ້ເຮົາຮູ້

ອັນໃດທີ່ພວກເຮົາຕ້ອງການຮູ້; ພວກເຮົາສາມາດໄວ້ວາງໃຈພຣະອົງໃນທຸກສິ່ງ, ພວກເຮົາຈຳຕ້ອງພ້ອມທີ່ຈະຍອມຮັບສິ່ງທີ່ພຣະເຈົ້າຊົງສຳແດງຕໍ່ພວກເຮົາ:

- ຜ່ານທາງອາດາມ, ນຳເອົາຄຳສາບແຊ່ງມາສູ່ພວກເຮົາໃຫ້ເຮັດງານໜັກ ພຣະເຈົ້າຊົງປະທານລູກຊາຍຂອງພຣະອົງຄືພຣະເຢຊູໃຫ້ເພື່ອຄວາມລອດພົ້ນຂອງພວກເຮົາ ແລະເພື່ອການໄຖ່ພວກເຮົາອອກຈາກການສາບແຊ່ງນີ້.
- ຜ່ານທາງການຊົງກະທຳພຣະຣາຊກິດຂອງພຣະເຢຊູ ຊີວິດບໍຣິສຸດຂອງພຣະອົງແລະການວາຍພຣະຊົນເທິງໄມ້ກາງແຂນ ເຮັດໃຫ້ເຮົາສາມາດໄດ້ຮັບຄວາມລອດພົ້ນ ຖ້າພວກເຮົາຍອມກັບໃຈໃໝ່ອອກຈາກຄວາມບາບຂອງເຮົາ ແລະເຊື່ອໃນພຣະເຢຊູເພື່ອຈະໄດ້ຮັບຊີວິດອັນຕລອດໄປເປັນນິດ.
- ດ້ວຍຄວາມສັມພັນຂອງພວກເຮົາກັບພຣະຄຣິດ, ວຽກເຮັດງານທຳຂອງພວກເຮົາຈຶ່ງມີຈຸດປະສົງ ຄວາມຕ້ອງການແລະຊີວິດອັນຕລອດໄປເປັນນິດຂອງພວກເຮົາມີຄວາມໝາຍສຳຄັນ.
- ວຽກງານທີ່ເຮົາກຳລັງເຮັດຢູ່ໃນຂະນະນີ້ແມ່ນຈັດຕຽມເຮົາເພື່ອການພັກຜ່ອນ ວັນນຶ່ງພວກເຮົາຈະມີຄວາມຊົມຊື່ນຍິນດີໃນການຊົງພຣະຊົນຢູ່ຂອງພຣະເຈົ້າ.
- ພວກເຮົາຈຳຕ້ອງເຮັດວຽກງານເຮົາສຳເຣັດໃນພຣະນາມຂອງພຣະເຢຊູແລະຂອບພຣະຄຸນກັບພຣະບິດາ (ໂກໂລຊາຍ 3: 17).
- ພຣະເຈົ້າຊົງສ້າງເຮົາຂຶ້ນມາໃຫ້ມີຄວາມສຸກສົດຊື່ນໃນຊີວິດ ທີ່ພຣະອົງໄດ້ຊົງປະທານແກ່ພວກເຮົາ. ພວກເຮົາຈຳຕ້ອງຊົມຊື່ນຍິນດີໃນຄວາມສຳເຣັດ ທີ່ພຣະເຈົ້າຊົງປະທານໃຫ້ແກ່ເຮົາຜ່ານທາງວຽກງານນັ້ນເພື່ອໃຫ້ເປັນທີ່ຖວາຍກຽດແດ່ພຣະອົງ. !

ນຳໃຊ້ໃນຊີວິດ

ເປັນໜ້າປລາດໃຈທັສນະແນວຄວາມຄິດແບບໃດທີ່ສາມາດປ່ຽນແປງເຮົາ, ຫລືບໍ່? ໃຫ້ພວກເຮົາມາພະຍາຍາມເຮັດແນວຄວາມຄິດທີ່ຖືກຕ້ອງໃນອາທິດນີ້. **ຈົ່ງພິຈາຣະນາເບິ່ງນຶ່ງຂັ້ນຕອນໃນຄຳແນະນຳຂ້າງລຸ່ມນີ້.**

- **ຈົ່ງມີຄວາມຮູ້ສຶກຂອບພຣະຄຸນ**. ຈົ່ງຍອມຮັບຮູ້ວ່າໜ້າທີ່ການງານທີ່ທ່ານມີແລະວຽກທີ່ທ່ານເຮັດນັ້ນມາຈາກພຣະເຈົ້າ. ຈົ່ງຂອບພຣະຄຸນພຣະອົງ.
- **ຢຸດພັກຜ່ອນ**. ສ້າງຄວາມດຸ່ນດ່ຽງລະວ່າງວຽກງານຂອງທ່ານກັບການພັກຜ່ອນ, ວຽກງານຂອງທ່ານແມ່ນສຳຄັນ, ແຕ່ມັນບໍ່ເຄີຍທຳລາຍທ່ານ. ກີດກັ້ນເວລາພັກຜ່ອນແຕ່ລະວັນ, ແລະຈັດວາງມື້ສຳລັບພັກຜ່ອນ.
- **ເຮັດງານເພື່ອພຣະຄຣິດ**. ພິຈາຣະນາເບິ່ງວິທີທາງທີ່ທ່ານສາມາດໃຫ້ກຽດພຣະຄຣິດແລະນຳນິມິດໝາຍຮູບແບບການເຮັດງານຂອງທ່ານ. ຢ່າພິຈາຣະນາພຽງແຕ່ສິ່ງທີ່ທ່ານເຮັດ; ພິຈາຣະນາເບິ່ງກຸ່ມຊົນທີ່ທ່ານພົວພັນນຳ. ຊອກຫາວິທີທາງຊີ້ທາງໃຫ້ເຂົາເຫັນພຣະເຢຊູຄຣິດຜ່ານທາງວຽກງານທີ່ທ່ານເຮັດ.

ຖ້າພວກເຮົາພິຈາຣະນາເບິ່ງວຽກງານຂອງທ່ານຕາມແນວຄວາມຄິດທາງໂລກ, ມັນຈະເຮັດໃຫ້ເຮົາທໍ້ໃຈແລະເກີດຄວາມວ່າງເປົ່າ. ແຕ່ເມື່ອສັງເກດເບິ່ງວຽກຂອງເຮົາກັບຊີວິດນິຣັນ, ສະຕິປັນຍາພຣະເຈົ້າ, ພວກເຮົາເຂົ້າໃຈວ່າເປັນຂອງພຣະຣາຊທານຈາກພຣະເຈົ້າ. ໃຫ້ພວກເຮົາມາຝຶກຝົນເອົາແນວຄວາມຄິດສະຕິປັນຍາພຣະເຈົ້າ.

ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org ແປໂດຍ VR.

ໂຮງຮຽນວັນອາທິດ

ວັນອາທິດ ທີ 31 ມີນາ 2019 (03-31-2019)

ບັນຫາກ່ຽວກັບຄວາມຮັ່ງມີ

ແມ່ນຫຽງທີ່ເປັນຄຳແນະນຳທີ່ດີທີ່ທ່ານໄດ້ຍິນກ່ຽວກັບເຣື່ອງເງິນ.

ຈຸດສຳຄັນຂອງບົດຮຽນນີ້: ຄວາມສຸກມາຈາກພຣະຄຣິດ, ບໍ່ແມ່ນມາຈາກຄວາມຮັ່ງມີຂອງເຮົາ.

ພຣະຄັມພີຕອບສນອງຕໍ່ຊີວິດ:

ໃນປີ 1997, ບຽວລີ ບອບ ຮາດຣຽວ, ຈູເຢີ., ຖືກຫວຍ 31 ລ້ານດອນລາໃນຣັດເທັກຊັດ. ຫຼັງຈາກລາວຖືກຫວຍ, ລາວໄດ້ລາອອກຈາກວຽກງານຂອງລາວ, ຈ່າຍຄ່າໄປພັກຜ່ອນຢູ່ຮາວາຍໃຫ້ກັບຄອບຄົວ, ບໍຣິຈາກເງິນຈຳນວນຫຼາຍໃຫ້ແກ່ຄຣິສຕະຈັກຂອງລາວ, ຊື້ເຮືອນແລະຣົດໃຫ້ແກ່ລູກເມັຽຂອງລາວ, ແລະບໍຣິຈາກໄກ່ງວງຈຳນວນ 500 ຕົວໃຫ້ກັບຄົນທຸກຈົນ.

ໜ້າເສັຽດາຍ, ບຽວລີ ບອບ ເປັນລູກຄ້າກັບບໍລິສັດທີ່ບໍ່ສັດຊື່ທີ່ໃຫ້ສັນຍາຈະຈ່າຍເງິນເປັນກ້ອນແທນທີ່ຈະຈ່າຍຈຳນວນປະຈຳປີເປັນເຊັກ. ຫຼັງຈາກນັ້ນພັນລະຍາກໍຢ່າຮ້າງຈາກລາວໄປ. ບຽວລີ ບອບ ຍອມຮັບ: " ການຖືກຫວຍເປັນສິ່ງທີ່ເລວຮ້າຍທີ່ສຸດທີ່ເຄີຍເກີດຂຶ້ນກັບຂ້າພະເຈົ້າ." ພາຍຫຼັງສອງປີຜ່ານມາຫຼັງຈາກລາວຖືກຫວຍ, ບຽວລີ ບອບ ໄດ້ຕາຍດ້ວຍຄວາມເຈັບປວດຈາກປືນສັ້ນຂອງລາວເອງ.

ເງິນເປັນສິ່ງທີ່ດີຕໍ່ການໃຊ້ຈ່າຍເມື່ອເຮົາໃຊ້ຈາຍດ້ວຍຄວາມມີສະຕິປັນຍາໃຫ້ກຽດແດ່ພຣະເຈົ້າ. ແຕ່ມັນເປັນສິ່ງທີ່ໜ້າຢ້ານກົວ ແລະເປັນຄວາມຕ້ອງການເປັນເຈົ້ານາຍເຮົາເມື່ອເຮົາຕົກເປັນທາດຂອງມັນ. ຫຼາຍຄົນພວກເຮົາຄິດວ່າ, ຖ້າຫາກວ່າເຮົາເປັນຄົນຮັ່ງມີ, ຄວາມຮັ່ງມີນັ້ນຈະແກ້ໄດ້ທຸກໆບັນຫາທັງໝົດຂອງເຮົາ. ກະສັດໂຊໂລໂມນ, ຜູ້ຮັ່ງມີຊັບສົມບັດມາກມາຍ, ຮູ້ດີ. ເງິນບໍ່ໄດ້ນຳຄວາມພໍອົກພໍໃຈມາໃຫ້. ຄວາມພໍອົກພໍໃຈມາຈາກພຣະເຈົ້າພຽງຜູ້ດຽວ, ບໍ່ແມ່ນມາຈາກຄວາມຮັ່ງມີຊັບສົມບັດ.

ພຣະຄັມພີກ່າວວ່າຢ່າງໃດ? (ເບິ່ງຕາມຫົວຂໍ້ 1, 2 ແລະ 3)

ສຶກສາພຣະຄັມພີ

1. <u>ປັນຍາຈາຍ 5:10-12</u>

10 ຄົນຮັກເງິນຍ່ອມບໍ່ອີ່ມເງິນ ແລະຄົນຮັກສົມບັດກໍບໍ່ຮູ້ຈັກອີ່ມກຳໄລ ອັນນີ້ກໍບໍ່ໄດ້ຜົນດ້ວຍ. 11ເມື່ອຂອງດີເພີ້ມພູນຂຶ້ນ ຄົນກິນກໍມີຫລວງຫລາຍຂຶ້ນ ຄົນທີ່ເປັນເຈົ້າຂອງຊັບຈະໄດ້ປໂຍດຫຍັງ ນອກຈາກຈະໄດ້ເຫັນເປັນຂວັນຕາເທົ່ານັ້ນ? 12ການນອນຫລັບຂອງຄົນທີ່ເຮັດວຽກກໍເປັນສຸກ ບໍ່ວ່າລາວໄດ້ກິນອີ່ມ ຫລືບໍ່ອີ່ມກໍຄືກັນ ແຕ່ວ່າຄວາມອີ່ມທ້ອງຂອງຄົນຮັ່ງມີ ກໍບໍ່ຊ່ວຍລາວໃຫ້ນອນຫລັບ.

ໃນຕົວມັນເອງຄວາມຮັ່ງມີບໍ່ໄດ້ເປັນສິ່ງບໍ່ດີ; ມັນບໍ່ຜິດທີ່ຈະເປັນຄົນຮັ່ງມີ. ບັນຫາມັນມີເມື່ອພື້ນຖານມະນຸດຕ້ອງການໃຫ້ເງິນກາຍມາເປັນຄວາມປາຖນາຊົ່ວ. ພຣະຄັມພີເອີ້ນຄວາມປາຖນາຊົ່ວນີ້ວ່າ " ຮັກເງິນ," ແລະການຮັກເງິນນີ້ກາຍມາເປັນ "ເງິນເປັນເຄົ້າມູນຄວາມຊົ່ວທຸກຢ່າງ" (1 ຕີໂມທຽວ 6:10).

ໂຊໂລໂມນເຕືອນພວກເຮົາວ່າຜູ້ໃດມີຄວາມປາຖນາເປັນຜູ້ຮັ່ງມີຈະບໍ່ເຄີຍມີຄວາມອີ່ມອົກອີ່ມໃຈ. ຫຼາຍກວ່ານີ້

ຄົນຮັ່ງມີກໍຮັກທີ່ຈະສະສົມເງີນຄຳ, ມັນເປັນທຸຣະແລະສະຖາບັນຄວາມຫິວກະຫາຍຄ່າໃຊ້ຈ່າຍອື່ນໆ.

- ການຂີ້ຕົວະ-ເຈົ້າເລ້ຊອກຫາທາງທີ່ຈະລວຍໄວ ວາງແຜນຫາເຍື່ອລອກລວງຄົນແກ່ທີ່ເຊື່ອງ່າຍແລະບໍ່ສົງສັຍ.
- ໂດຍທົ່ວໄປ, ການຂຽນເຮື່ອງລາມົກໃຊ້ເງີນ 97 ລ້ານດອນລາໃນການສ້າງ, ແຕ່ມັນນຳຄວາມເສັຽຫາຍເປັນຈຳນວນຫຼວງຫຼາຍຕໍ່ເງີນທີ່ຕ້ອງຈ່າຍໃຫ້ກັບຜູ້ຍິງແລະເດັກນ້ອຍ.
- ຣັຖບານເປັນຜູ້ອຸປະຖັມຫວຍ ໂບກມືໃຫ້ສັນຍາວ່າຈະລວຍໄວ, ແຕ່ເຂົາໄດ້ຈ່າຍເງີນມະຫາສານກັບຄົນຈົນຜູ້ປ່ວຍບໍ່ສາມາດທີ່ຈະໄປສ່ຽງໂຊກໄດ້.

ແທນທີ່ຈະແກ້ໄຂບັນຫາແລະນຳຄວາມພໍອົກພໍໃຈຜົນປໂຍດທາງດ້ານການເງີນເພີ້ມຂຶ້ນ ກໍມັກນຳເອົາຫຼາຍໆການລໍ້ລວງເຂົ້າມາແລະຫຼາຍບັນຫາ.

- **ຄວາມຮັ່ງມີເປັນຄວາມສົນໃຈຂອງຄົນທຸກ.** "ເມື່ອທຸກສິ່ງທີ່ດີເພີ້ມຂຶ້ນ, ຄົນຜູ້ໃຊ້ມັນກໍມີເພີ້ມຂຶ້ນອີກ." ເຖິງທ່ານມີຫຼາຍເພີ້ມຂຶ້ນ, ກໍມີຫຼາຍຄົນເຂົ້າມາຊ່ວຍທ່ານໃຊ້ຈ່າຍມັນ.
- **ຄວາມຮັ່ງມີສ້າງຄັງກັກຕຸນ.** ເມື່ອຄົນທຸກຈົນຄົນນຶ່ງເລີ້ມເຄາະປະຕູ, ຄົນຮັ່ງມີອາດສົ້ນສຸດລົງດ້ວຍການເຝົ້າເບິ່ງເງີນຂອງລາວໄຫຼໄປຕາມສາຍນ້ຳ. ເພື່ອຫຼີກລ້ຽງການສູນເສັຽຄວາມຮັ່ງມີຂອງລາວ, ນັກທຸຣະກິດບາງຄົນເຮັດໃຫ້ຕົນເອງເບິ່ງເປັນຄົນທຸກຈົນແທນທີ່. ຫຼາຍກວ່າການແຈກຈ່າຍຄວາມຮັ່ງມີກັບຄົນອື່ນ, ລາວມີແຕ່ຈະສະສົມມັນໄວ້. ລາວບໍ່ເຮັດຫຽງນອກຈາກນຳມັນອອກມາແລ້ວກໍເບິ່ງແລ້ວກໍເອົາໄປເກັບໄວ້ " ແມ່ນຫຽງ, ຫຼັງຈາກນັ້ນ, ເປັນຜົນກຳໄລໃຫ້ກັບຜູ້ເປັນເຈົ້າຂອງ, ນອກຈາກເຝົ້າເບິ່ງດ້ວຍຕາຂອງລາວ?"
- **ຄວາມຮັ່ງມີສ້າງຄວາມວິຕົກກັງວົນໃຈ.** ຄົນງານທັມມະດາເຮັດງານໝົດມື້ດ້ວຍໃຈສັດຊື່ ແລະຫຼັງຈາກນັ້ນກໍນອນຫຼັບພັກຜ່ອນສະບາຍ. ແຕ່ຄົນທີ່ຮັກເງີນຄຳກໍຢ້ານທີ່ຈະສູນເສັຽສິ່ງຂອງທັງໝົດຕລອດເວລາ. ເຂົາກາຍມາເປັນຄົນທີ່ເກີດມີຄວາມກັງວົນ. "ຄວາມອຸດົມສົມບູນຂອງຄວາມຮັ່ງມີເຮັດໃຫ້ລາວບໍ່ໄດ້ນອນ."

ມັນເປັນຄວາມສຳຄັນທີ່ຄວນຕ້ອງຈື່ໄວ້ວ່າເງີນຄຳບໍ່ໄດ້ເປັນສິ່ງທີ່ບໍ່ດີແລະຄວາມຮັ່ງມີບໍ່ແມ່ນຄວາມບາບ. ແຕ່ພວກເຮົາຍັງຈຳຕ້ອງຈື່ຈຳໄວ້ໃນໃຈວ່າການແລ່ນໄລ່ຕາມຄວາມຮັ່ງມີແລະການເພິ່ງພໍໃຈມັກຈະນຳຄວາມອ້າງວ້າງເປົ່າປ່ຽວແລະຄວາມກັງວົນຢ້ານກົວໄວ້ກັບເຮົາ. ອັນຕະລາຍຂອງຄວາມໂລບແມ່ນຢູ່ໃກ້ເຮົາຕລອດເວລາ. ຄວາມຈິງ, ເມື່ອພວກເຮົາເຫັນ, ກໍເຮັດໃຫ້ເຮົາບໍ່ປອດພັຍແລ້ວ.

2. <u>ປັນຍາຈານ 5:13-17</u>

*13ຍັງມີສິ່ງຊົ່ວຮ້າຍອັນໜ້າສລົດໃຈອີກຢ່າງໜຶ່ງທີ່ຂ້າພະເຈົ້າເຫັນພາຍໃຕ້ດວງຕາເວັນ ຄືຊັບສົມບັດທີ່ເຈົ້າຂອງໄດ້ເກັບ
ໄວ້ຈົນເກີດເປັນພັຍແກ່ຕົນ 14ແລະຊັບສົມບັດນັ້ນສູນເສັຍໄປໂດຍເຮື່ອງຍາກລຳບາກອັນຊົ່ວຮ້າຍແລະລາວໃຫ້ກຳເນີດ
ລູກຊາຍຄົນໜຶ່ງ ແຕ່ບໍ່ມີຫຍັງເຫລືອໄວ້ສຳລັບລາວ.15ລາວໄດ້ເກີດມາຈາກທ້ອງແມ່ຕົວເປົ່າສັນໃດ ລາວຈະກັບໄປອີກ
ເຊັ່ນດຽວກັນສັນນັ້ນ ແລະລາວຈະເອົາຫຍັງຊົ່ງເປັນຜົນງານຂອງລາວຕິດມືໄປບໍ່ໄດ້ຈັກຢ່າງ. 16ນີ້ເປັນສິ່ງຊົ່ວຮ້າຍອັນ
ໜ້າສລົດໃຈອີກ ຄືລາວໄດ້ເກີດມາຢ່າງໃດ ລາວກໍຕ້ອງໄປຢ່າງນັ້ນ ລາວຈະໄດ້ປໂຍດຫຍັງຈາກການທີ່ຕົນໄດ້ລົງແຮງ
ເພື່ອລົມເພື່ອແລ້ງ? 17ອັນໜຶ່ງ ລາວຮັບປະທານຢູ່ໃນຄວາມມືດຕລອດວັນເດືອນປີຂອງລາວ ລາວມີຄວາມທຸກຢ່າງສາ
ຫັດ ແລະມີຄວາມທຸກໃຈຫລາຍພ້ອມກັບຄວາມເຈັບໄຂ້.*

ແຕ່ຫົວທີ, ພວກເຮົາໄດ້ສັງເກດເບິ່ງພັຍອັນຕະລາຍຂອງຄວາມໂລບໃນການໃຊ້ຈ່າຍອື່ນໆ. ບັນນີ້ໂຊໂລໂມນໄດ້ເປີດເຜີຍ " ເຫດການຮ້າຍແຮງທີ່ເຮັດໃຫ້ປ່ວຍ" ອັນຕະລາຍຂອງຄວາມໂລບນຶ່ງໃນຂອງການເປັນເຈົ້າຂອງການໃຊ້ຈ່າຍ. ເມື່ອພວກເຮົາຂັບເຄື້ອນດ້ວຍຄວາມຮັກເງີນຄຳຂອງເຮົາທີ່ພວກເຮົາໃຫ້ຄວາມຫວັງຂອງເຮົາໃນເງີນ. ພວກເຮົາຫວັງຈະເກັບໄວ້ໃຫ້ຫຼາຍທີ່ສຸດເທົ່າທີ່ຈະຮັກສາໄວ້ໄດ້.

ເປັນການສ່ຽງຕໍ່ພັຍອັນຕະລາຍ. ເມື່ອຄວາມຫວັງຂອງເຮົາຢູ່ທີ່ເງິນຄຳ, ພວກເຮົາບໍ່ແມ່ນຄົນປ່ວຍ ເມື່ອເວລານັ້ນ ມາເຖິງສັບຊິມບັດທີ່ເຮົາເກັບສະສົມ ທີ່ເຮົາຄິດວ່າມັນຈະນຳຄວາມປອດພັຍແລະປົກປ້ອງພວກເຮົາ. ຈົ່ງພິຈາຣະນາ ເບິ່ງສາມຫຼັກການທີ່ພວກເຮົາພະຍາຍາມໃຫ້ໄດ້ເງິນມາໄວ(ລວຍທາງລັດ)ທີ່ສຸດ.

- **ການພະນັນ.** ບໍ່ວ່າຈະຊື້ຫວຍ, ຫຼິ້ນກາຊິໂນ, ຫຼິ້ນໄພ້ປອກເກີ, ຫຼິ້ນຟຸດບອນຄອລເລດ, ຫຼື, " ການຫຼິ້ນພະນັນ ອື່ນ" ການພະນັນ " ລາງວັນ" ການສ່ຽງໂຊກດ້ວຍຈຳນວນເງິນນ້ອຍແລະເຮັດໃຫ້ຕິດດຶງດູດໃຈໃຫ້ "ເອົາອີກ" ນັ້ນແຫຼະໃນທີ່ສຸດກໍເຮັດໃຫ້ເຂົ້າສູ່ການສູນເສັ່ງທຸກຢ່າງ.
- **ການລົງທຶນທີ່ໂງ່.** ເມື່ອພວກເຮົາເກີດມີແຮງບັນດານໃຈຮັກເງິນຄຳ, ພວກເຮົາພະຍາຍາມແລ່ນໄລ່ຕິດຕາມ ຄວາມຮັ່ງມີໃນການລົງທຶນທີ່ຍາກກວ່າການສ່ຽງໂຊກອີກ.
- **ການເປັນໜີ້ສິນໂງ່ໆ.** ມີໃຜແດ່ທີ່ຢາກລໍຖ້າ? ພວກເຮົາດຳລົງຊີວິດຢູ່ໃນຍຸກສັງຄົມທີ່ຮີບດ່ວນໃນການເຮັດທຸກ ສິ່ງໃຫ້ເປັນທີ່ພໍອີກພໍໃຈໃຫ້ທັນໃຈ. ດ້ວຍການພ້ອມທີ່ຈະເປັນໜີ້ເພື່ອໃຊ້ຜົນປໂຍດ, ເປັນການງ່າຍທີ່ເຮັດໃຫ້ ຕົວເຮົາເອງຕ້ອງເຮັດງານຫຼາຍເກີນໄປເພື່ອຄອບຄອງສັບຊິມບັດ.

ການຕາຍ, ເຖິງແມ່ນວ່າຖ້າຕົວເອງຫຼີກເວັ້ນການຫຼິ້ນການພະນັນ, ລາວຈະໜີການຕາຍບໍ່ພົ້ນ. ໃນພວກເຮົາແຕ່ລະ ຄົນກໍຈະຈ່າຍຄ່າຣາຄາຄືກັນ. ແລະພວກເຮົາທັງໝົດຈະເສັ່ງຄວາມຮັ່ງມີເມື່ອເຮົາຕາຍ. ສຸດທ້າຍຄວາມຕາຍກໍເຮັດໃຫ້ ເທົ່າໆກັນໝົດ. ເຮົາອອກຈາກໂລກນີ້ໄປເຊັ່ນດຽວກັບເຮົາເຂົ້າມາໃນໂລກນີ້.

ຄວາມຮັ່ງມີບໍ່ໄດ້ຄຳປະກັນຄວາມປອດພັຍ. ໃນທາງກັບກັນ, ຄວາມຮັ່ງມີສາມາດນຳໄປສູ່ຄວາມບໍ່ພໍໃຈແລະ ຄວາມໂດດດ່ຽວ.

3 <u>ປັນຍາຈານ 5:18-20</u>

18 ເບິ່ງແມ ຂ້າພະເຈົ້າເຫັນດີແລະສົມຄວນ ຄືໃຫ້ກິນແລະດື່ມ ກັບຊົມຊື່ນຍິນດີໃນຜົນງານດີແຫ່ງບັນດາກິຈການຂອງ ຕົນທີ່ຕົນເຮັດພາຍໃຕ້ດວງຕາເວັນ ຕລອດວັນເດືອນປີແຫ່ງຊີວິດຂອງຕົນທີ່ພຣະເຈົ້າປະທານແກ່ຕົນ ເພາະການນີ້ ແຫລະເປັນສ່ວນຂອງຕົນ. 19 ອັນໜຶ່ງ ທຸກຄົນທີ່ພຣະເຈົ້າປະທານຊັບສົມບັດ ແລະຄວາມຮັ່ງມີໃຫ້ ກໍໄດ້ຊົງໂຜດໃຫ້ມີ ອຳນາດຮັບປະທານຂອງເຫລົ່ານັ້ນ ໄດ້ຮັບສ່ວນຂອງຕົນ ແລະຍິນດີໃນການງານຂອງຕົນໄດ້ ນີ້ແຫລະເປັນຂອງປະ ທານຈາກພຣະເຈົ້າ. 20 ລາວຈະໄດ້ບໍ່ຕ້ອງນຶກເຖິງວັນເດືອນປີແຫ່ງຊີວິດຂອງຕົນຫລາຍ ເພາະພຣະເຈົ້າຕອບລາວ ໂດຍໃຫ້ໃຈລາວຊົມຊື່ນຍິນດີ.

ຖ້າການລ້ຳລວຍບໍ່ສາມາດຕອບສນອງຄວາມຕ້ອງການ ແລະພວກເຮົາກຳກຳລັງແລ່ນໄປສູ່ການສ່ຽງພັຍອັນຕະ ລາຍຂອງການສູນເສັ່ງຊັບສົມບັດຂອງເຮົາຕລອດເວລາ. ພວກເຮົາຄວນຄິດກ່ຽວກັບເຣື່ອງເງິນຄຳຢ່າງໃດ? ຄຳຕອບທີ່ ເປັນການຕົວະໃຫ້ພໍໃຈ.

- **ເງິນຄຳເປັນສິ່ງຈັດສັນໄວ້ໃຊ້ໃຫ້ເປັນທີ່ພໍໃຈໃນຊີວິດ.** ບາງຄົນຄິດວ່າຊີວິດຄຣິສຕຽນແມ່ນມີພຽງແຕ່ວ່າ ມີຫັ່ງ ແດ່ທີ່ພວກເຮົາບໍ່ສາມາດເຮັດໄດ້. ມີຫັ່ງແດ່ທີ່ພວກເຮົາບໍ່ສົມຄວນທີ່ຈະຮັບມາເປັນຄວາມຊົມຊື່ນຍິນດີ. ແຕ່ ທຸກສິ່ງທີ່ພຣະເຈົ້າຊົງສ້າງແມ່ນດີ. ແລະເໝາະສົມກັບການໃຊ້, ມັນເປັນສິ່ງທີ່ໜ້າຈະຊື່ນຊົມຍິນດີ ແລະຂອບ ພຣະຄຸນ. ເມື່ອພວກເຮົາມີຄວາມຊົມຊື່ນຍິນດີ ແລະມີປະສົບການກັບສິ່ງທີ່ດີໃນການງານທີ່ພວກເຮົາເຮັດຢູ່ ນັ້ນ, ພວກເຮົາຄວນຖວາຍສັນເສີນພຣະກຽດແດ່ພຣະເຈົ້າຜູ້ຊົງສ້າງສັພະທຸກສິ່ງນັ້ນດີ.
- **ຊີວິດມີຢູ່ບໍ່ນານ (ສັ້ນ).** ໂຊໂລໂມນໄດ້ເຕືອນສະຕິພວກເຮົາວ່າຊີວິດຂອງພວກເຮົາ " ພາຍໃຕ້ດວງຕາເວັນ" (ໃນໂລກນີ້) ມີພຽງຊົ່ວຄືນວັນແຕ່ (ສອງສາມມື້ຕໍ່ໜ້າ,) ມີຫັ່ງຈະເກີດຂຶ້ນດັ່ງນັ້ນພຣະເຈົ້າໄດ້ບອກເຮົາຊົມຊື່ນ ຍິນດີຕໍ່ຄວາມໃຈດີຂອງພຣະອົງເມື່ອເຮົາຍັງສາມາດໃຊ້ໄດ້. ພວກເຮົາມີຊີວິດຢູ່ຕລອດການດຳລົງຊີວິດຂອງ

ພວກເຮົາຂະນະທີ່ປະຕິບັດຕົນນະມັສການແລະໃນຈິດສຳນຶກ ຈົ່ງຈື່ໄວ້ວ່າພຣະເຈົ້າຊົງສ້າງສັພະທຸກສິ່ງນີ້ເພື່ອປະກາດພຣະກຽດຂອງພຣະອົງແລະເພື່ອຄວາມຊົມຊື່ນຍິນດີຂອງພວກເຮົາ,

- **ຊີວິດເປັນຂອງຂວັນທີ່ມາຈາກພຣະເຈົ້າ.** ພຣະເຈົ້າເປັນຜູ້ໃຫ້ເຮົາມີຊີວິດຢູ່ວັນຕໍ່ວັນໃນໂລກນີ້. ຂອງຂວັນທີ່ພຣະອົງໃຫ້ແກ່ເຮົານັ້ນແມ່ນໃຫ້ພວກເຮົາມີຄວາມສຸກສົດຊື່ນຍິນດີກັບຜົນງານການຜລິດຂອງການເຮັດງານຂອງພວກເຮົາໃນຊີວິດອັນສັ້ນທີ່ພຣະອົງຊົງປະທານໃຫ້ແກ່ພວກເຮົາ.
- **ມີຄວາມພໍອົກພໍໃຈກັນທຸກສິ່ງທີ່ພຣະເຈົ້າຊົງປະທານໃຫ້ແກ່ທ່ານ.** ພວກເຮົາທັງໝົດເປັນເຈົ້າຂອງສິ່ງທີ່ຊົງປະທານມາຈາກພຣະເຈົ້າ: ມັນແມ່ນພຣະອົງເປັນຜູ້ "ໃຫ້ຄວາມຮັ່ງມີແລະສົມບູນພູນສຸກ."
- **ຄວາມພໍອົກພໍໃຈນຳໄປສູ່ສັນຕິສຸກແລະຄວາມຊົມຊື່ນຍິນດີໃນຊີວິດນີ້.** ເມື່ອພວກເຮົາມີຄວາມພໍໃຈກັບຊີວິດແລະຄວາມຮັ່ງມີທີ່ພຣະເຈົ້າຊົງປະທານແກ່ພວກເຮົາ, ພວກເຮົາຈະບໍ່ເກີດຄວາມວິຕົກກັງວົນໃຈຂອງວັນເວລາໃນຊີວິດຂອງເຮົາເພາະພຣະເຈົ້າໃຫ້ເຮົາມີຊີວິດຢູ່; ພຣະອົງຈະເຕີມເຕັມຈິດໃຈຂອງພວກເຮົາດ້ວຍຄວາມຊົມຊື່ນຍິນດີ.

ວິທີທາງເລີ້ມຕົ້ນສະຕິປັນຍາໃໝ່ແລະພົບຄວາມພໍໃຈທີ່ນຳສູ່ຫາຄວາມຊົມຊື່ນຍິນດີ ແມ່ນການເບິ່ງຊີວິດຈາກທັສນະແນວຄວາມຄິດທີ່ບໍ່ມີການປ່ຽນແປງ; ນັ້ນແມ່ນ, " ຟ້າສວັນ." ຈ້ອງມອງເບິ່ງຊີວິດຢູ່ໃນໂລກນີ້ຜ່ານທາງການພິສູດເບິ່ງລາງວັນຂອງອະນາຄົດເຮົາທັງຄວາມສຸກຊີວິດດຽວນີ້ ແລະຄວາມຮັ່ງມີມໍຣະດົກຂອງພວກເຮົາທີ່ບໍ່ມີວັນປ່ຽນແປງໃນພຣະຄຣິດ ທີ່ມີມາພາຍໃນພາກໜ້າທີ່ລໍຄອຍເຮົາໃນຟ້າສວັນ.

ນຳໃຊ້ໃນຊີວິດ

ບໍ່ວ່າເຮົາຈະມີໜ້ອຍຫຼືຫຼາຍປານໃດ, ຄວາມພໍໃຈຂອງເຮົາມາຈາກພຣະຄຣິດ, ບໍ່ແມ່ນຄວາມຮັ່ງມີຂອງເຮົາ. ທ່ານຈະຕໍ່ສູ້ຫຼາຍປານໃດເພື່ອໃຫ້ພໍໃຈໃນອາທິດນີ້? **ຈົ່ງພິຈາຣະນາເບິ່ງນຶ່ງຂັ້ນຕອນໃນຄຳແນະນຳຂ້າງລຸ່ມນີ້.**

- **ຈົ່ງຊັ່ງຊາຕີລາຄາຄວາມເພິ່ງພໍໃຈຂອງທ່ານ.** ຈົດລາຍລະອຽດລາຍການຊັບສົມບັດທັງໝົດແລະສິ່ງຂອງທີ່ທ່ານເປັນເຈົ້າຂອງແລະຕີລາຄາໃຫ້ຄວາມສຸກຄວາມພໍໃຈ ຫຼືໃຫ້ຄວາມປອດພັຍກັບທ່ານຫຼາຍປານໃດ. ຕັດສິນໃຈຄົ້ນຫາຄວາມຈິງເບິ່ງໄປທີ່ພຣະຄຣິດ.

- **ຕັ້ງເປົ້າໝາຍການຖວາຍ.** ເມື່ອພວກເຮົາມີບັນຫາທາງດ້ານການເງິນ, ພວກເຮົາໃຫ້ຄວາມສົນໃຈກັບເງິນທີ່ມີຢູ່ໃນມືເຮົາ. ກົງກັນຂ້າມກັບຄວາມຕັ້ງໃຈ, ເຖິງແມ່ນວ່າ, ການບໍຣິຈາກເປັນກຸນແຈເອົາຊະນະຄ່ານິຍົມວັດຖຸສິ່ງຂອງແລະຄວາມໂລບ. ຕັ້ງງົບປະມານແລະຕັ້ງແຜນເພື່ອຈະຖວາຍຜ່ານທາງຄຣິສຕະຈັກຂອງທ່ານ.

- **ຈົ່ງຮັບເອົາການຊ່ວຍເຫຼືອ.** ຫຼາຍໆແຫຼ່ງທີ່ມາຂອງບັນຫາດ້ານການເງິນອັນດັບແລກມາຈາກການຈ່າຍໜີ້ແລະຫຼົ້ມເຫຼວທາງດ້ານການວາງແຜນການເງິນ. ຖ້າອັນນີ້ແມ່ນທ່ານ, ຈົ່ງໃຫ້ຄວາມຮ່ວມມືກັບຜູ້ໃຫ້ຄຳປຶກສາທາງດ້ານການເງິນເພື່ອຊ່ວຍທ່ານໃນການຈັດແຜນການທີ່ຈະນຳຈັດການປິດໜີ້ແລະເລີ້ມງົບການເງິນຂອງທ່ານ.

ມະນຸດທີ່ສລາດຜູ້ທີ່ເຄີຍດຳເນີນຊີວິດຈາກການຮຽນຮູ້ວ່າຄວາມຮັ່ງມີບໍ່ໄດ້ນຳເອົາຄວາມພໍໃຈມາໃຫ້. ດັ່ງນັ້ນໃຫ້ປັກຕາໃສ່ທີ່ພຣະຄຣິດເພື່ອຄວາມພໍໃຈແລະຄວາມຫວັງຂອງພວກເຮົາ.

ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org ແປໂດຍ VR.

ບົດຮຽນໂຮງຮຽນວັນອາທິດ
ວັນອາທິດ ທີ 7 ເມສາ 2019 (4-7-2019)

ຄວາມພໍໃຈທີ່ຄົບບໍຣິບູນ

ແມ່ນກິດລະບຽບອັນໃດທີ່ເບິ່ງເໝືອນວ່າບໍ່ຈຳເປັນໃນຕອນທີ່ທ່ານຍັງເປັນເດັກນ້ອຍຢູ່?

ຈຸດສຳຄັນໃນບົດຮຽນ: ການຍອມເຊື່ອຟັງເປັນກຸນແຈທີ່ເຮັດໃຫ້ຊີວິດຄົບເຕັມບໍລິບູນ.

ພຣະຄັມພີຕອບສນອງຕໍ່ຊີວິດ:

ເມື່ອຕອນພວກລູກສາວຂອງພວກເຮົາຍັງພວມເປັນເດັກອ່ອນນ້ອຍຢູ່ນັ້ນ, ພວກເຮົາໄດ້ພົບທາງທີ່ຊົມຊື່ນໃນການສິດສອນພວກເຂົາເຈົ້າກ່ຽວກັບການເຊື່ອຟັງຄວາມ. ພວກເຂົາກໍໄດ້ລີ້ຢູ່ໃນເຮືອນ, ຟັງສຽງຂອງພວກເຮົາ, ແລະເຮັດຕາມຄຳສັ່ງຕ່າງໆຂອງພວກເຮົາ. "ມີມື້ນຶ່ງ," ພວກເຮົາໄດ້ອະທິບາຍວ່າ, "ການເຊື່ອຟັງຄວາມອັນທຳອິດຈະຊ່ວຍຮັກສາຊີວິດຂອງພວກເຈົ້າ." ໂອເຄ,

ແຕ່ວ່າໃນລະຍະບໍ່ດົນຕໍ່ມາ, ພວກເຮົາໄດ້ພາຄອບຄົວໄປທ່ຽວຊົມງານລຶ້ນເລີງປະຈຳທ້ອງຖິ່ນ. ກໍບໍ່ມີຫຍັງຫຼາຍເກີດຂຶ້ນ. ແທ້ຈິງແລ້ວ, ເດີ່ນຈອດຣິດນັ້ນກໍວ່າງເປົ່າ. ຂນະທີ່ພວກເຮົາຊົມຊື່ນຍິນດີກັບບັນຍາກາດດີໆຂ້າງນອກ, ພັນລະຍາຂອງຂ້າພະເຈົ້າໄດ້ສັງເກດເຫັນວ່າລູກອາຍຸສີ່ຂວບຂອງພວກເຮົາກຳລັງຍ່າງວົນວຽນໄປຕາມເດີ່ນຈອດຣິດນັ້ນ. ຂນະທີ່ນາງມຸ້ງໜ້າໄປຫາຣິດຕູ້ຂອງພວກເຮົາ, ນາງບໍ່ໄດ້ໃສ່ໃຈຕໍ່ສິ່ງແວດລ້ອມໃດໆ, ມີຣິດຄັນນຶ່ງກຳພຸ່ງເຂົ້າມາທີ່ເດີ່ນຈອດຣິດ. ເມື່ອຂ້າພະເຈົ້າໄດ້ເຫັນ, ກຳນົກອອກໄດ້ໂລດວ່າເຂົາເຈົ້າຕ້ອງປະທະກັນແນ່ນອນ ແລະຂ້າພະເຈົ້າບໍ່ຕ້ອງເດົາດອກ ວ່ານາງຈະມີໂອກາດໄດ້ຊະນະ. ຢ່າງຮີບດ່ວນ, ຂ້າພະເຈົ້າໄດ້ຮ້ອງສຸດສຽງວ່າ "ຢຸດ!"

ແລະນາງກໍຢຸດຢ່າງກະທັນຫັນ. ການເຊື່ອຟັງຄວາມໄດ້ຮັກສາຊີວິດຂອງນາງໃນມື້ນັ້ນ. ການເຊື່ອຟັງຄວາມແບບນີ້ບໍ່ພຽງແຕ່ສຳລັບພວກເດັກນ້ອຍ. ພວກເຮົາທັງໝົດລ້ວນໄດ້ຮັບຜົນປໂຍດຈາກຊີວິດຂອງການເຊື່ອຟັງ. ຂນະທີ່ການເຊື່ອຟັງຂອງພຣະເຢຊູໄດ້ຊ່ວຍຮັກສາຊີວິດຂອງພວກເຮົາໄວ້ສຳລັບການຕລອດໄປເປັນນິດ, ທ່ານໂຊໂລໂມນໄດ້ເຕືອນພວກເຮົາວ່າການເຊື່ອຟັງຂອງພວກເຮົາເປັນກຸນແຈທີ່ເຮັດໃຫ້ຊີວິດຄົບເຕັມບໍຣິບູນ.

ພຣະຄັມພີກ່າວວ່າຢ່າງໃດ? (ຈົ່ງເບິ່ງຕາມຂໍ້ 1, 2,)

ການສຶກສາພຣະຄັມພີ

1. <u>ປັນຍາຈານ 11:7-10</u>

7. ແສງສວ່າງເປັນທີ່ຊື່ນໃຈ ແລະການທີ່ຕາໄດ້ເຫັນດວງຕາເວັນກໍເປັນທີ່ຊື່ນບານ. 8. ຖ້າຄົນໃດມີຊີວິດຢູ່ໄດ້ຕັ້ງຍືນຍາວຫຼາຍປີ ແລະລາວຊົມຊື່ນຍິນດີໃນຕລອດວັນເດືອນປີເຫຼົ່ານັ້ນ ກໍຈົ່ງໃຫ້ລາວລະນຶກເຖິງວັນທີ່ມືດບິດກໍມີຫຼາຍ ບັນດາເຫດການທີ່ເກີດຂຶ້ນມານັ້ນກໍບໍ່ໄດ້ຜິນ. 9. ໂອ ຄົນໜຸ່ມເອີຍຈົ່ງຊົມຊື່ນຍິນດີໃນໄວໜຸ່ມຂອງເຈົ້າແລະໃຫ້ຈິດໃຈຂອງເຈົ້າເຮັດຕົວເຈົ້າໃຫ້ຊື່ນບານໃນວັນເດືອນປີແຫ່ງວັຍໜຸ່ມຂອງເຈົ້າ ເຈົ້າຈົ່ງດຳເນີນໃນທາງແຫ່ງໃຈຂອງເຈົ້າ ແລະຕາມສາຍຕາຂອງເຈົ້າ ແຕ່ຈົ່ງຮູ້ວ່າເນື່ອງດ້ວຍກິຈການງານທັງປວງເຫຼົ່ານີ້ພຣະເຈົ້າຈະຊົງນຳເຈົ້າເຂົ້າມາເຖິງການພິພາກສາ. 10. ສະນັ້ນຈົ່ງຕັດຄວາມເສົ້າໝອງອອກຈາກໃຈຂອງເຈົ້າ ແລະຈົ່ງປະຄວາມຊົ່ວຮ້າຍອອກຈາກເນື້ອໜັງຂອງເຈົ້າ ເພາະຄວາມໜຸ່ມສາວແລະວັຍໜຸ່ມນັ້ນເປັນທີ່ບໍ່ໄດ້ຜິນ.

ຊີວິດຂອງການເຊື່ອຟັງບໍ່ໄດ້ແມ່ນຊີວິດທີ່ໂງ່ຫຼືມີຂອບເຂດຈຳກັດ. ຄຳບັນຊາຂອງພຣະເຈົ້າເທິງຊີວິດຂອງພວກເຮົາ ແມ່ນທັງສອງຄືບໍ່ແມ່ນການຍາກລຳບາກຫຼືການຂີ່ມເຫັ່ງບີບບັງຄັບ. ມີຄົນເປັນຈຳນວນຫຼວງຫຼາຍຕົກໃນເລ້ກົນຂອງຜີ ມານທີ່ບອກວ່າພຣະເຈົ້າເປັນຜູ້ຈຳກັດຄວາມມ່ວນຊື່ນ. ບໍ່ມີອັນໃດເກີນໄປກວ່າຄວາມຈິງດອກ. ພຣະເຈົ້າປະສົງໃຫ້ໄພ່ ພົນຂອງພຣະອົງມີຊີວິດທີ່ຊົມຊື່ນຍິນດີ!

1. ຊີວິດທີ່ມີຣິດຊາດ (ຂໍ້ 7). ຄວາມສ່ວ່າງເປັນຕົວແທນຂອງຊີວິດ, ຂນະທີ່ຄວາມມືດເປັນຕົວແທນຂອງ ຄວາມຕາຍ (ຂໍ້ 8). ພວກເຮົາມີໂອກາດດຳລົງຊີວິດພຽງຄັ້ງດຽວເທົ່ານັ້ນ, ແລະກໍ "ຊື່ນໃຈ" ໂຊໂລໂມນໄດ້ກ່າວໄວ້ວ່າ ຍັງເປັນທີ່ "ຊື່ນບານ" ອີກດ້ວຍ. "ການທີ່ຕາໄດ້ເຫັນດວງຕາເວັນກໍເປັນທີ່ຊື່ນບານ" ເລັ່ງເຖິງການດຳລົງຊີວິດນີ້ໃຫ້ດີ ດ້ວຍຄວາມຊົມຊື່ນຍິນດີ. ພຣະເຈົ້າປະສົງໃຫ້ພວກເຮົາດຳລົງຊີວິດນີ້ໃຫ້ເຕັມດ້ວຍຄວາມຊົມຊື່ນຍິນດີ.

2. ຍິນດີໃນປີເດືອນເທົ່ານັ້ນ (ຂໍ້ 8). ຊີວິດເທິງໂລກນີ້ມັນສັ້ນໃນພາບໃຫຍ່ອັນຊົ່ວກາລະນານ, ແຕ່ວ່າບໍ່ວ່າເຮົາ ຈະຢູ່ໄດ້ຫຼາຍປີເທົ່າໃດກໍຕາມ, ໃຫ້ພວກເຮົາຊົມຊື່ນຍິນດີໃນທຸກໆວັນທີ່ພຣະເຈົ້າປະທານແກ່ພວກເຮົາ. ເປັນເພາະເຫດ ໃດ? ກໍເພາະວ່າ "ວັນແຫ່ງຄວາມມືດ…ກໍມີຫຼາຍ." ເວົ້າອີກແບບນຶ່ງ, ວັນທີ່ພວກເຮົາໄດ້ຕາຍ "ວັນແຫ່ງຄວາມມືດ" ຈະ ມີຫຼາຍກວ່າວັນທີ່ພວກເຮົາມີຊີວິດ. ໂຊໂລໂມນບໍ່ໄດ້ເວົ້າວ່າຊີວິດນີ້ກໍມີແຕ່ເທົ່ານີ້ແຫຼະ. ທ່ານກໍພຽງແຕ່ກ່າວປໂຍກທີ່ ກ່ຽວກັບລະຍະເວລາຂອງຊີວິດນີ້ຊ່ຳໆ.

ຄຳເວົ້າຂອງທ່ານໂຊໂລໂມນມີຄຳເຕືອນໃຫ້ປະຕິເສດການບໍ່ດີ້ນລົນ. ຢ່າປະໃຫ້ຊີວິດນີ້ເກີດຂຶ້ນແບບບັງເອີນກັບ ທ່ານ; ໄຖ່ເອົາເວລາຄືນມາ. ພຣະເຈົ້າອາດຈະໃຫ້ທ່ານພຽງສອງສາມປີ, ຫຼືພຣະອົງອາດຈະໃຫ້ທ່ານມີຊີວິດຍືນຍາວ ຫຼາຍໆປີທີ່ບໍ່ເປັນແບບທັມມະດາ. ຢ່າງໃດກໍຕາມ, ຈົ່ງດຳລົງຊີວິດນີ້ໃຫ້ດີ.

ເຮົາສາມາດເຮັດໃຫ້ຊ່ວງເວລາຂອງຄວາມຊົມຊື່ນຍິນດີຄົບເຕັມ ຂນະທີ່ກຳລັງເກີດຂຶ້ນໃນຊີວິດຂອງເຮົາຢ່າງໃດ?

3. ຈົ່ງຍິນດີໃນປະຖົມວັຍຂອງເຈົ້າ (ຂໍ້ 9). ປໂຍກທີ່ສ່ອນຫຼາຍພວກເຮົາໄດ້ຍິນກໍຄື: "ຄວາມໜຸ່ມແໜ້ນໄດ້ເສັ່ງໄປ ລ້ຳໆເມື່ອຕອນຍັງໜຸ່ມ." ທ່ານໂຊໂລໂມນໄດ້ເຕືອນພວກເຮົາບໍ່ໃຫ້ເສັ່ງຄວາມໜຸ່ມຂອງເຮົາໄປລ້ຳໆ. ແທນທີ່ຈະເປັນ ດັ່ງນັ້ນ, ພວກເຮົາຄວນຈະສວຍເອົາໂອກາດ, ຊົມຊື່ນຍິນດີ, ແລະຊົມຊອບຕໍ່ຄວາມເປັນໜຸ່ມນັ້ນ! ພວກເຮົາສາມາດຊົມ ຊອບຖ້າຫາກວ່າ…

…ພວກເຮົາໃຫ້ຄວາມເບີກບານໜຸ່ງອອກມາຈາກພາຍໃນ ("ຫົວໃຈ"). ທ່ານໂຊໂລໂມນໄດ້ຂຽນໄວ້ວ່າຫົວໃຈ "ເປັນແຫຼ່ງທີ່ມາຂອງຊີວິດ" (ສພສ. 4:23). ຄວາມເບີກບານມ່ວນຊື່ນບໍ່ໄດ້ອອກມາຈາກສະຖານະການຕ່າງໆຂອງ ພວກເຮົາ; ແຕ່ເລີ້ມຕົ້ນຈາກພາຍໃນ, ໃນຫົວໃຈ. ຄວາມເບີກບານມ່ວນຊື່ນພົບພໍ້ແຫຼ່ງທີ່ມາໃນພຣະເຈົ້າ ແລະໃນພຣະ ເຈົ້າອົງດຽວເທົ່ານັ້ນ.

…ພວກເຮົາໃຫ້ຄວາມເບີກບານມ່ວນຊື່ນລົ້ນອອກສູ່ຊີວິດຂ້າງນອກ ("ການດຳເນີນຊີວິດຂອງພວກເຮົາ"). ທ່ານໂຊໂລໂມນບໍ່ໄດ້ບອກພວກເຮົາວ່າ "ໃຫ້ຕິດຕາມຫົວໃຈຂອງພວກເຮົາ" ເໝືອນດັ່ງໂລກນີ້ມັກເວົ້າ. ທ່ານກຳລັງ ກ່າວໃນສິ່ງທີ່ພຣະເຢຊູໄດ້ກ່າວພາຍຫຼັງ: ຫົວໃຈຂອງພວກເຮົາຄວບຄຸມທາງຊີວິດພາຍນອກຂອງພວກເຮົາ (ເບິ່ງມັດ ທາຍ 15:19). ຖ້າວ່າຄວາມຊົ່ວຮ້າຍຫາກຝັງຢູ່ໃນຫົວໃຈຂອງພວກເຮົາ, ຄວາມຊົ່ວຮ້າຍກໍຊຶມອອກມານອກຊີວິດຂອງ ພວກເຮົາ. ແຕ່ວ່າ, ຖ້າພວກເຮົາມີໃຈໃໝ່ທີ່ປະສົບການກັບຄວາມຍິນດີໃນພຣະຄຣິດແລ້ວ, ຫຼັງຈາກນັ້ນຄວາມຍິນດີກໍ ພຸ່ງລົ້ນອອກມາແລະກໍເປັນຫຼັກຖານແກ່ຄົນອື່ນໆ.

4. ຢຳເກງພຣະຜູ້ເປັນເຈົ້າ (ຂໍ້ 9). ຢ່າໃຫ້ພວກເຮົາຄິດວ່າການບັນຊາໃຫ້ຊີວິດຊົມຊື່ນຍິນດີໝາຍເຖິງຖືກຍຶດເອົາ ເໝືອນເປັນບ້າ, ພວກເຮົາໄດ້ຖືກເຕືອນໄວ້ແລ້ວວ່າການພິພາກສາຂອງພຣະເຈົ້າລໍຖ້າພວກເຮົາຢູ່. ການຢຳເກງພຣະຜູ້ ເປັນເຈົ້າບໍ່ພຽງແຕ່ເປັນການໂຄຣົບນັບຖືແລະຢຳເກງພຣະເຈົ້າຢ່າງເຕັມສ່ວນ, ຊຶ່ງຍັງເຮັດໃຫ້ເຮົາສຳນຶກໄດ້ອີກວ່າພວກ ເຮົາທັງໝົດຈະຕ້ອງໄດ້ຢືນຕໍ່ໜ້າພຣະເຈົ້າຜູ້ຊົງພຣະຊົນຢູ່ແລະໄດ້ລາຍງານຕໍ່ພຣະອົງ.

5. ທຳລາຍສິ່ງກີດຂວາງຕ່າງໆຈາກຄວາມຊົມຊື່ນຍິນດີ (ຂໍ້ 10). ພຣະເຈົ້າປະສົງໃຫ້ທ່ານຍິນດີໃນຊີວິດ, ແລະນັ້ນ ມີຄວາມໝາຍວ່າການທຳລາຍສິ່ງກີດຂວາງຕ່າງໆທີ່ອາດຈະປິດບັງຄວາມຊົມຊື່ນຍິນດີ.

- ທຳລາຍສິ່ງກີດຂວາງພາຍໃນຕໍ່ຄວາມຊົມຊື່ນຍິນດີ. ຄວາມໂສກເສົ້າທີ່ຖ່ວງດຶງພວກເຮົາລົງອາດລວມທັງກັ້ງວົນໃຈ, ຄວາມໂກດຮ້າຍທີ່ເປັນບາບ, ຄວາມຂົມຂື່ນ, ການບໍ່ເຊື່ອໃນຄວາມຈິງໃຈຂອງມະນຸດ, ຫຼືວິນຍານທີ່ຊົ່ວຮ້າຍ.
- ທຳລາຍສິ່ງກີດຂວາງພາຍນອກຕໍ່ຄວາມຊົມຊື່ນຍິນດີ. ຄວາມເຈັບປວດຝ່າຍຮ່າງກາຍແລະຄວາມອ່ອນເພຍ ບາງທີ ມີບາງຢ່າງທີ່ນອກເໜືອການຄວບຄຸມຂອງພວກເຮົາ, ແຕ່ວ່າພວກເຮົາຄວນຈະເຮັດໃນສິ່ງທີ່ເຮົາສາມາດເຮັດໄດ້. ການກິນອາຫານທີ່ດີ, ອອກກຳລັງກາຍຢ່າງປົກກະຕິ, ແລະການພັກຜ່ອນທີ່ມີຄ່າດີເລີດຕໍ່ຊີວິດຂອງພວກເຮົາ. ແລະ ເໜືອໄປກວ່ານັ້ນ, ພວກເຮົາສາມາດປະຕິເສດທີ່ຈະໃຫ້ຄວາມເຈັບແລະບັນຫາຕ່າງໆທີ່ປົກບັງຄວາມຊົມຊື່ນຍິນດີ ຂອງພວກເຮົາ.

ເຮົາໄດ້ບິດຮຽນຫຍັງແດ່ຈະຊ່ວງເວລາແຫ່ງຄວາມມືດໃນຊີວິດຂອງເຮົາ ເພື່ອຊ່ວຍເຮົາໃນປັດຈຸບັນ?

2. ປັນຍາຈານ 12:12-14

12 ລູກຊາຍຂອງຂ້າພະເຈົ້າເອີຍ ຈົ່ງຮັບຄຳຕັກເຕືອນເຖີດ ຊຶ່ງຈະເຮັດໜັງສືຫລາຍກໍບໍ່ມີສິ້ນສຸດ ແລະຮຽນຫລາຍກໍ ເມື່ອຍເນື້ອໜັງ. 13. ຈົບເຣື່ອງແລ້ວ ໄດ້ຟັງກັນທັງໜົດແລ້ວ ຈົ່ງຢຳເກງພຣະເຈົ້າ ແລະຮັກສາພຣະບັນຍັດຂອງພຣະ ອົງ ເພາະນີ້ແຫລະເປັນໜ້າທີ່ຂອງມະນຸດທັງປວງ. 14. ດ້ວຍວ່າ ພຣະເຈົ້າຈະຊົງເອົາການງານທຸກປະການເຂົ້າສູ່ການ ພິພາກສາ ພ້ອມດ້ວຍສິ່ງເລິກລັບທຸກຢ່າງ ບໍ່ວ່າດີຫລືຊົ່ວ.

ທ່ອທັ້ງພຣະທັມປັນຍາຈານ, ມີຄຳຖາມນຶ່ງທີ່ເປັນຫຼັກ: “ທີ່ມະນຸດເຮັດງານໜັກກາງແດດ ເຂົາໄດ້ປໂຍດອັນໃດຈາກ ງານທີ່ເຂົາເຮັດນັ້ນ?” (ປຍຈ 1:3). ອັນນີ້ແມ່ນຄຳຖາມທີ່ມີຄວາມໝາຍແລະມີເປົ້າໝາຍ. ທ່ອທັ້ງພຣະທັມປັນຍາຈານ, ກະສັດໂຊໂລໂມນໄດ້ພິຈາຣະນາຫຼາຍໆບ່ອນທີ່ເພິ່ນຊອກຫາຄວາມໝາຍ, ແຕ່ວ່າເພິ່ນໄດ້ພົບຄຳຕອບແລະນີ້ແມ່ນຄຳ ສລຸບຂອງເພິ່ນ.

ແນ່ນອນ ນັ້ນຈະບໍ່ຢຸດຢັ້ງຄົນອື່ນໃຫ້ສືບຕໍ່ຊອກຫາຄວາມໝາຍໃນຊີວິດ. ໂຊໂລໂມນໄດ້ເຕືອນລູກຊາຍຂອງເພິ່ນວ່າ “ມັນບໍ່ມີບ່ອນສິ້ນສຸດທີ່ຈະຂຽນປຶ້ມຫຼາຍໆຫ໋ວອອກມາ, ແລະຮຽນຫຼາຍໆຈົນຕົວອ່ອນເພຍ.” ອັນນີ້ມັນກຳຖືກຕ້ອງກັບ ສມັຍນີ້. ນັກຂຽນຜູ້ຕຽມພ້ອມທີ່ຈະອະທິບາຍເຣື່ອງຊີວິດແລະໃຫ້ຄຳແນະນຳເພີ້ມເຕີມແລະ “ເຄັດລັບຊີວິດ” ສຳລັບ ຄວາມໝາຍແລະຄວາມສຸກຂອງຊີວິດໃຫ້ແກ່ພວກເຮົາຈົນຖ້ວມລົ້ນຮ້ານຂາຍປຶ້ມດ້ວຍການສເນີຂອງພວກເຂົາ.

ທ່ານໂຊໂລໂມນບໍ່ໄດ້ປະປ່ອຍຄຸນຄ່າຂອງປຶ້ມ, ແຕ່ວ່າມີປຶ້ມຫ໋ວນຶ່ງຍືນຢັດເໜືອກ່ວາປຶ້ມທັ້ງປວງຊຶ່ງເປັນແຫຼ່ງທີ່ມາ ຂອງປັນຍາ: ພຣະຄຳຂອງພຣະເຈົ້າ. ແມ້ກະທັ້ງກະສັດໂຊໂລໂມນໃນສະຕິປັນຍາທັ້ງໝົດຂອງເພິ່ນໄດ້ຮູ້ຈັກວ່າ “ປັນ ຍາຈານຊອກຫາຖ້ອຍຄຳທີ່ມ່ວນຫູ” ແລະ “ຖ້ອຍຄຳແຫ່ງຄວາມຈິງ” (12:10) ບໍ່ແມ່ນຂອງ ທ່ານແຕ່ຜູ້ດຽວ. ທ່ານໄດ້ ຮັບຮູ້ວ່າຖ້ອຍຄຳທີ່ມ່ວນຫູນັ້ນ “ໄດ້ຖືກມອບໃຫ້ໂດຍຜູ້ລ້ຽງແກະຄົນນຶ່ງ” (ຂໍ້ 11).

ພຣະຄຳຂອງພຣະເຈົ້າທີ່ບັນດົນໃຈແມ່ນມີອິດທິພົນພຽງພໍທີ່ນຳພວກເຮົາເຂົ້າສູ່ຊີວິດທີ່ເຊື່ອຟັງ ພຣະອົງຢາກໃຫ້ພວກ ເຮົາມີຊີວິດໃນຄວາມຊົມຊື່ນຍິນດີທີ່ພຣະອົງຕັ້ງພຣະທັຍໄວ້. ການຊອກຄົ້ນຫາຂອງທ່ານໂຊໂລໂມນໄດ້ນຳທ່ານໄປສູ່ ຄຳສລຸບສອງຢ່າງ; ໃນການກະທຳສອງຢ່າງເຫຼົ່ານີ້, ພວກເຮົາພົບໃນສິ່ງທັ້ງໝົດທີ່ພວກເຮົາຕ້ອງການທີ່ຈະປະສົບກັບ ຄວາມໝາຍແລະເປົ້າໝາຍທີ່ພຣະເຈົ້າປາຖນາສຳລັບຊີວິດຂອງພວກເຮົາ.

- **ຢຳເກງພຣະເຈົ້າ.** ປັນຍາຂອງມະນຸດພຽງແຕ່ຊອກຫາຄຳອະທິບາຍຂອງຊີວິດ “ຢູ່ໃຕ້ດວງອາທິດ”;ທີ່ວ່າ, ປາສ ຈາກພຣະເຈົ້າ. ແຕ່ວ່າປັນຍາທີ່ພວກເຮົາຕ້ອງການແມ່ນສິ່ງທີ່ມາຈາກເບື້ອງເທິງ, ສະຕິປັນຍາທີ່ມາຈາກເບື້ອງ

ເທິງທີ່ໃຫ້ພວກເຮົາເຫັນແຈ້ງຕໍ່ລັກສະນະຂອງພຣະເຈົ້າ, ແຜນການ, ແລະທາງຂອງພຣະອົງ. ແລະເມື່ອພວກເຮົາເບິ່ງພຣະອົງ, ພຣະອົງກໍປະທານສະຕິປັນຍາທີ່ພວກເຮົາຕ້ອງການ. ດັ່ງທີ່ທ່ານໂຊໂລໂມນໄດ້ກ່າວໄວ້ໃນພຣະທັມສຸພາສິດວ່າ: ຄວາມຢຳເກງພຣະເຈົ້າເປັນທີ່ເລີ້ມຕົ້ນຂອງປັນຍາ ແລະຊຶ່ງຮູ້ຈັກອົງບໍຣິສຸດເປັນຄວາມຮອບຮູ້ (ສພສ 9:10). ການດຳລົງຊີວິດໂດຍສະຕິປັນຍາຂອງພຣະເຈົ້າ ຜົນອອກມາກໍຄືການດຳລົງຊີວິດທີ່ຊອບທັມ.

ເມື່ອໃດທີ່ທ່ານໄດ້ເຫັນການເຊື່ອຟັງພຣະເຈົ້າຢ່າງຈິງຈັງ ຊຶ່ງນຳສູ່ຄວາມຮູ້ຈັກພໍ?

ການຢຳເກງພຣະເຈົ້ານີ້ເບິ່ງຄືແນວໃດ? ມັນມີຮາກຖານໃນຄວາມຮູ້ທີ່ວ່າພຣະເຈົ້າຄືຜູ້ໃດ: ພຣະລັກສະນະຂອງພຣະອົງ, ເປົ້າໝາຍຂອງພຣະອົງ, ແລະທາງຂອງພຣະອົງ. ເມື່ອພວກເຮົາເຂົ້າໃຈວ່າພຣະເຈົ້າຄືຜູ້ໃດແລະພຣະອົງກຳລັງເຮັດຫຍັງໃນໂລກ, ພວກເຮົາກໍຈະຕອບສນອງຢ່າງເໝາະສົມຕໍ່ພຣະອົງບໍ່ວ່າການຍົກຍໍໃຫ້ກຽດ, ການຢູ່ໃຕ້ອຳນາດ, ຄວາມຮັກ, ແລະການເຊື່ອຟັງ.

- **ຖືຮັກສາຂໍ້ບັນຍັດຂອງພຣະອົງ**. ເມື່ອພວກເຮົາຢຳເກງພຣະຜູ້ເປັນເຈົ້າພວກເຮົາຈະເຮັດໃນສິ່ງທີ່ພຣະອົງໄດ້ບັນຊາເພາະວ່າພວກເຮົາຮູ້ຈັກວ່າ "ພຣະເຈົ້າຈະນຳທຸກໆການກະທຳມາສູ່ການພິພາກສາ, ຊຶ່ງລວມທັງທຸກໆຢ່າງທີ່ເຊື່ອງຊ້ອນຢູ່, ບໍ່ວ່າດີຫຼືຊົ່ວ."

ດຽວນີ້ພວກເຮົາຮູ້ຈັກບາງຢ່າງທີ່ທ່ານໂຊໂລໂມນຫວັງຢາກຮູ້ໃນຊ່ວງຊີວິດຂອງທ່ານເທົ່ານັ້ນ. ພຣະເຈົ້າໄດ້ປະທານໜ້າທີ່ຂອງ "ການພິພາກສາທັງສິ້ນໄວ້ກັບພຣະບຸດ" (ໂຢຮັນ 5:22), ພຣະເຢຊູໄດ້ຮັບເອົາການພິພາກສານັ້ນໄວ້ກັບພຣະອົງເອງແລະໄດ້ສິ້ນພຣະຊົນແທນພວກເຮົາ (ເບິ່ງ 2 ໂກຣິນໂທ 5:21). ຢູ່ທີ່ໄມ້ກາງແຂນຂອງພຣະເຢຊູທີ່ພວກເຮົາໄດ້ເຫັນພຣະພິໂຣດຂອງພຣະເຈົ້າແລະຄວາມເມດຕາພ້ອມກັນ; ໃນໄມ້ກາງແຂນນັ້ນທັງຄວາມຮັກແລະຄວາມຍຸດຕິທັມຂອງພຣະເຈົ້າໄດ້ສະແດງອອກໃຫ້ເຫັນ.

ຂ່າວດີອັນນີ້ບໍ່ໄດ້ໃຫ້ພວກເຮົາມີເສລີພາບຕໍ່ຄວາມຊື່ນບານໃນການເຮັດບາບ. ຂ່າວປະເສີດໃຫ້ພວກເຮົາມີເສລີພາບດຳເນີນຊີວິດທີ່ເຕັມດ້ວຍຄວາມຊື່ນບານຂອງຄວາມບໍຣິສຸດໃນການເຊື່ອຟັງ ຕໍ່ທຸກໆຢ່າງທີ່ພຣະເຢຊູໄດ້ບັນຊາຕໍ່ພວກເຮົາ (ເບິ່ງ ມັດທາຍ 28:19-20). ການເຊື່ອຟັງທີ່ໜ້ານັບຖືຕໍ່ພຣະເຈົ້າແມ່ນຫົນທາງໄປສູ່ຄວາມຊື່ນບານແຫ່ງຊີວິດທີ່ພຣະອົງໄດ້ປະທານແກ່ພວກເຮົາ.

ຊີວິດອັນສັ້ນໆນີ້ແມ່ນຂອງຂວັນຈາກພຣະເຈົ້າ, ແຕ່ວ່າມີໃນພຣະຄຣິດ, ພວກເຮົາສາມາດຊົມຊື່ນຍິນດີກັບຊີວິດນີ້ໃຫ້ເຕັມປ່ຽມທີ່ສຸດ. ພວກເຮົາສາມາດສວຍເອົາໂອກາດຂອງແຕ່ລະມື້ທີ່ພວກເຮົາມີ ແລະດຳລົງຊີວິດນີ້ຢ່າງເຕັມສ່ວນໃນການເຊື່ອຟັງແຫ່ງສະງ່າຣາສີຂອງພຣະເຈົ້າ. ໃນພຣະຄຣິດ, ຊີວິດທີ່ບໍ່ມີຄວາມໝາຍນັ້ນໄປດຜ່ານໄປແລ້ວຊົ່ວນິຣັນດອນ.

ນຳໃຊ້ໃນຊີວິດ

ພຣະເຢຊູໄດ້ກ່າວໄວ້ວ່າ "ຖ້າທ່ານທັງຫຼາຍຮັກເຮົາ, ທ່ານກໍຈະຖືຮັກສາຂໍ້ບັນຍັດຂອງເຮົາ" (ຢຮ 14:15). ແມ່ນທາງໃດແດ່ທີ່ທ່ານສາມາດປູກຝັງການເຊື່ອຟັງຕໍ່ພຣະເຈົ້າໃນອາທິດນີ້? ຈົ່ງເລືອກເອົາຄຳແນະນຳອັນນຶ່ງ:

- **ອະທິຖານ**. ສະແດງຄວາມຢຳເກງພຣະເຈົ້າຂອງທ່ານທາງການອ້ອນວອນ, ທາງນະມັສການ.
- **ເຊື່ອຟັງ**. ຖ້າຂາດຄວາມຍິນດີຫຼືສ່ວນຫຼາຍຮູ້ສຶກວ່າຊີວິດບໍ່ມີຄວາມໝາຍ, ແກ້ໄຂບ່ອນທີ່ຂາດການເຊື່ອຟັງຕໍ່ພຣະເຈົ້າ.
- **ພົບ**. ເພື່ອຕໍ່ສັມພັນ, ນັດພົບຄົນອື່ນໆຮ່ວມດື່ມກາເຟນຳກັນແລະໂອ້ລົມເຖິງເຣື່ອງຄວາມໝາຍຂອງຊີວິດ.

ການເຊື່ອຟັງຂອງພຣະຜູ້ເປັນເຈົ້າເປັນການຊ່ວຍຮັກສາຊີວິດຢ່າງແທ້ຈິງ. ຍັງເປັນຊີວິດທີ່ປ່ຽນແປງດ້ວຍ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA

ບົດຮຽນໂຮງຮຽນວັນອາທິດ
ວັນອາທິດ ທີ 14 ເມສາ 2019 (4-14-2019)

ພຣະເຈົ້າຈະບໍ່ຍົກໂທດຄວາມຜິດບາບອັນນີ້

ຕອນທີ່ທ່ານເຕີບໃຫຍ່ຂຶ້ນ, ແມ່ນຫຍັງຄື "ຄວາມຜິດທີ່ຍົກໂທດໃຫ້ບໍ່ໄດ້" ໃນຄອບຄົວຂອງທ່ານ?

ຈຸດສຳຄັນໃນບົດຮຽນ: ພຣະເຈົ້າຈະບໍ່ຍົກໂທດໃຫ້ແກ່ຜູ້ທີ່ປະຕິເສດພຣະເຢຊູແລະບໍ່ເຄີຍຂອກາຫາການອະພັຍໂທດຈາກພຣະອົງ.

ພຣະຄັມພີຕອບສນອງຕໍ່ຊີວິດ:

ເພື່ອນຂອງຂ້າພະເຈົ້າຄົນນຶ່ງໄດ້ບອກຂ້າພະເຈົ້າກ່ຽວກັບເຣື່ອງທີ່ລາວໄດ້ພົບກັບຜູ້ຍິງຄົນນຶ່ງທີ່ນັ່ງຢູ່ໃກ້ລາວຕອນຢູ່ໃນເຄື່ອງບິນ. ຊຶ່ງແມ່ນການສົນທະນາທັມມະດາ ຈົນກວ່າລາວໄດ້ບອກຍິງຄົນນັ້ນວ່າລາວເປັນສິດຍາພິບານ. ໃນຈຸດນັ້ນເອງ, ຍິງຄົນນັ້ນໄດ້ກາຍເປັນຄົນລະຄົນແລະເລີ້ມຕົ້ນເວົ້າກ່ຽວກັບຄົນກຸ່ມນຶ່ງທີ່ກະທຳການຮ້າຍຕໍ່ຄົນອີກກຸ່ມນຶ່ງ. ເພື່ອນຂ້າພະເຈົ້າຍັງຕິກຊະເງື່ໂດຍການປະພຶດທີ່ບໍ່ມີສົນທັມນັ້ນອີກດ້ວຍ, ແຕ່ວ່າການຢືນຢັນຂອງຍິງນັ້ນທີ່ວ່າ "ຄວາມບາບບາງຢ່າງບໍ່ຄວນຈະໃຫ້ອະພັຍໄດ້" ແລະແຕ່ລະຄົນຄວນຈະຖືກສາບແຊ່ງໃຫ້ລົງນະຮົກຕລອດໄປເປັນນິດ" ຄວາມຈິງແລ້ວມັນກະທົບກັບລາວຕອນທີ່ລາວບໍ່ໄດ້ຕຽມພ້ອມ.

ກ່ອນທີ່ເພື່ອນຂ້າພະເຈົ້າຈະສາມາດຕອບ, ຍິງຄົນນັ້ນໄດ້ເວົ້າເຖິງຄວາມບາບຂອງນາງເອງອອກມາຢ່າງສັ້ນໆ. ນາງໄດ້ເວົ້າວ່າ, "ຂ້ອຍຮູ້ຢູ່ວ່າຂ້ອຍບໍ່ສົມບູນຮ້ອຍເປີເຊັນ, ແຕ່ວ່າພຣະເຈົ້າຮູ້ຈັກຫົວໃຈຂອງຂ້ອຍດີ. ຂ້ອຍໄປໂບດ, ພະຍາຍາມຊ່ວຍເຫຼືອຄົນອື່ນໆ, ແລະຂ້ອຍກໍເປັນຄົນດີ. ດັ່ງນັ້ນ, ຂ້ອຍຮູ້ວ່າພຣະເຈົ້າຈະອະພັຍໂທດໃຫ້ຂ້ອຍ, ແລະມື້ນຶ່ງຂ້ອຍກໍຈະໄປສວັນ!"

ຍິງຄົນນີ້ເວົ້າຖືກບໍ່? ມີຄວາມບາບບາງຢ່າງບໍ ທີ່ພຣະເຈົ້າຈະບໍ່ຍົກໂທດໃຫ້? ເປັນຄົນມີສາສນາຫຼືເປັນຄົນດີເທົ່ານີ້ກໍພໍທີ່ຈະໄປສວັນບໍ? ພຣະເຢຊູ ຕອນທີ່ມີການຕໍ່ຕ້ານກັບພວກຟາຣີຊາຍທີ່ພົບຢູ່ໃນຂ່າວປະເສີດຂອງມັດທາຍຈະຊ່ວຍຕອບຄຳຖາມເຫຼົ່ານີ້.

ພຣະຄັມພີກ່າວວ່າຢ່າງໃດ? (ຈົ່ງເບິ່ງຕາມຂໍ້ 1, 2, 3)

ສຶກສາພຣະຄັມພີ

1. <u>ມັດທາຍ 12:22-23</u>

22ເມື່ອນັ້ນເຂົາໄດ້ພາຄົນຜູ້ນຶ່ງທີ່ມີຜີຮ້າຍເຂົ້າສິງຢູ່ ທັງຕາບອດແລະປາກກືກມາຫາພຣະອົງ ພຣະອົງຊົງໃຫ້ດີປົກກະຕິ ຄົນນັ້ນຈຶ່ງປາກໄດ້ແລະເຫັນໄດ້. 23ແລະປະຊາຊົນກໍອັສຈັນໃຈຖາມກັນວ່າ, "ຄົນນີ້ເປັນບຸດກະສັດດາວິດບໍ່ແມ່ນຫຼື".

ຂະນະທີ່ພຣະເຢຊູຢູ່ໃນໂລກນີ້, ພຣະອົງໄດ້ພົບກັບກຸ່ມຄົນທີ່ໜ້າສົນໃຈ. ມີຕອນນຶ່ງ, ມີກຸ່ມຄົນໄດ້ນຳເອົາຄົນທີ່ມີຜີສິງມາຫາພຣະເຢຊູ. ຄຳວ່າ "ຜີສິງ" ອາດຈະແປກຫູ, ແຕ່ກໍເປັນຄຳເວົ້າທີ່ສຳຄັນທີ່ຄວນເກັບໄວ້ໃນສມອງ; ຊຶ່ງມີຄວາມໝາຍວ່າວິນຍານຊົ່ວຮ້າຍຕ່າງໆເປັນເຈົ້າຂອງ. ວິນຍານຊົ່ວຮ້າຍເຫຼົ່ານີ້ໄດ້ປ້ອງກັນບໍ່ໃຫ້ຊາຍຄົນນັ້ນເວົ້າຫຼືເຫັນໄດ້.

ໃນຊ່ວງນີ້ເອງ, ພວກທີ່ເຊື່ອວ່າການມີຜີເຂົ້າສິງກໍຍ້ອນຄວາມຜິດບາບໃນຊີວິດຂອງຄົນນັ້ນ. ສຳລັບພວກຟາຣີຊາຍ

ພວກຜູ້ນຳສາສນາ ຊາຍຄົນນີ້ຈົມຢູ່ໃນຄວາມບາບອັນເລິກທັງຕາບອດແລະປາກກືກ. ພວກເຮົາບໍ່ຮູ້ວ່າຊາຍຄົນນີ້ເປັນມາດົນນານປານໃດ, ແຕ່ວ່າສິ່ງແນ່ນອນທີ່ສຸດແມ່ນວິນຍານຊົ່ວຮ້າຍໄດ້ທຳລາຍຊີວິດຂອງລາວ.

ຊາຍຄົນນີ້ໄດ້ພະຍາຍາມສຸດຄວາມສາມາດເພື່ອອອກຈາກຣິດແຫ່ງວິນຍານຊົ່ວຮ້າຍ. ພວກຄົນທີ່ພະຍາຍາມຊ່ວຍລາວກໍຄົງຍອມຮັບເອົາຄວາມຄິດທີ່ນິຍົມກັນວ່າລາວເປັນຄົນບາບທີ່ບໍ່ມີຄວາມຫວັງ. ບາງມື້ລາວອາດຈະເຊື່ອແນວນີ້ເຊັ່ນກັນ.

ແຕ່ໄດ້ຖືກປ່ຽນແປງເມື່ອພວກຄົນໄດ້ນຳເອົາຊາຍຄົນນັ້ນມາຫາພຣະເຢຊູ, ຮູ້ຈັກວ່າພຣະອົງເທົ່ານັ້ນທີ່ຈະສາມາດຊ່ວຍລາວໄດ້. ຫຼັງຈາກທີ່ພວກເຂົາໄດ້ພະຍາຍາມທຸກຢ່າງແລ້ວ, ດັ່ງນັ້ນພວກເຂົາຈຶ່ງໄດ້ມາຫາພຣະເຢຊູດ້ວຍຫວັງວ່າແລະວາງໃຈວ່າພຣະອົງຄືຄຳຕອບ.

ພວກເຮົາທັງໝົດຮູ້ແລ້ວວ່າຄົນທີ່ຖືກຄວບຄຸມໂດຍຜີມານຮ້າຍ. ຊີວິດຂອງພວກເຂົາແມ່ນຂັດແຍ້ງກັບພຣະເຈົ້າ, ແຕ່ວ່າພວກເຂົາດຳເນີນຊີວິດຕາມທີ່ເຂົາເປັນຍ້ອນວ່າພວກເຂົາກຳລັງດຳລົງຊີວິດທີ່ປາສຈາກພຣະເຢຊູ. ຄືກັບຊາຍຜູ້ນີ້, ພວກເຂົາຕ້ອງການປະເຊີນກັບພຣະເຢຊູ. ຄວາມຈິງແລ້ວ, ພວກເຮົາທຸກຄົນລ້ວນແຕ່ຕ້ອງປະເຊີນກັບພຣະເຢຊູ, ເພາະວ່າພວກເຮົາທຸກຄົນເປັນຄົນບາບ ຕ້ອງການໄດ້ຮັບການໃຫ້ອະໄພໂທດ.

ບ່ອນໃດທີ່ທ່ານໄດ້ເຫັນຣິດອຳນາດຂອງພຣະເຢຊູທຳງານຢູ່ອ້ອມຮອບທ່ານ?

ບໍ່ວ່າພວກຄົນຈະຜິດບາບໜັກໜາປານໃດກໍຕາມ, ພວກເຂົາກໍບໍ່ນອກເໜືອຈາກຣິດອຳນາດຂອງພຣະເຈົ້າໃນການຍົກບາບໂທດ. ເປັນທີ່ແຈ້ງແລ້ວວ່າ, ຊາຍທີ່ມີຜີສິງ ກ່ອນພົບກັບພຣະເຢຊູກໍເຕັມດ້ວຍມານຮ້າຍ, ແຕ່ວ່າແມ່ນຫຍັງທີ່ພຣະເຢຊູໄດ້ກະທຳ? "ພຣະອົງໄດ້ປົ່ນປົວລາວໃຫ້ຫາຍ." ໃນປໂຍກນີ້, ພວກເຮົາໄດ້ເຫັນຣິດອຳນາດອັນອັສຈັນຂອງພຣະເຈົ້າ.

ກິຈການຂອງພຣະຄຣິດ ອຳນາດຂອງພຣະເຈົ້າ ແມ່ນເຫດຜົນອັນຈຳເປັນທີ່ພວກເຮົາຕ້ອງແບ່ງປັນຂ່າວປະເສີດໃຫ້ແກ່ທຸກໆຄົນ, ບໍ່ວ່າພວກເຂົາຈະຊົ່ວຮ້າຍພຽງໃດກໍຕາມໃນຄວາມຄິດຂອງພວກເຮົາ. ສ່ວນຫຼາຍພວກເຮົາຄິດວ່າພວກເຂົາຈະບໍ່ຟັງ, ບໍ່ໄປໂບດກັບພວກເຮົາ, ບໍ່ອ່ານພຣະຄຳພີ, ຫຼືບໍ່ຮັບເອົາພຣະເຢຊູ, ແຕ່ວ່າເມື່ອພວກເຮົາຄິດແນວນັ້ນ, ພວກເຮົາຕີລາຄາຕ່ຳຕໍ່ຣິດອຳນາດຂອງພຣະເຈົ້າ, ພຣະເຈົ້າກະທຳການຜ່ານແມ້ກະທັ້ງເມັດທີ່ນ້ອຍທີ່ສຸດທີ່ພວກເຮົາປູກ, ເມັດຂອງຄວາມຮັກແລະພຣະຄຸນ.

ບໍ່ວ່າຄົນຈະປະຕິເສດພຣະເຢຊູຈັກເທື່ອກໍຕາມ, ພຣະອົງຊົງຢືນຕຽມພ້ອມແລະລໍຖ້າທີ່ຈະຍົກໂທດໃຫ້ແກ່ພວກເຂົາ ແຕ່ວ່າພວກເຂົາຕ້ອງມາຫາພຣະອົງ. ໜ້າທີ່ຮັບຜິດຊອບຂອງພວກເຮົາຄືຊີ້ທາງໃຫ້ຄົນໄປຫາພຣະເຢຊູ.

ເມື່ອຊາຍທີ່ມີຜີສິງໄດ້ຖືກປ່ຽນແປງໂດຍພຣະຄຣິດ, ລາວຊີ້ໃຫ້ເຫັນຣິດອຳນາດຂອງພຣະເຈົ້າ. ຄືກັນ, ເມື່ອພວກເຮົານຳພາຄົນມາຫາພຣະເຢຊູ, ຊີວິດຂອງພວກເຂົາຖືກປ່ຽນແປງ, ແລະການປ່ຽນແປງຈະຊີ້ບອກຄົນອື່ນໄປຫາພຣະເຈົ້າ.

2. <u>ມັດທາຍ 12:24-29</u>

24 ແຕ່ພວກຟາຣີຊາຍ ເມື່ອໄດ້ຍິນດັ່ງນັ້ນກໍເວົ້າວ່າ, "ຜູ້ນີ້ຂັບໄລ່ຜີອອກໄດ້ໂດຍໃຊ້ອຳນາດເບເອນເຊບູນຄືນາຍຜີນັ້ນ". 25. ຝ່າຍພຣະເຢຊູຊົງຊາບຄວາມຄຶດຂອງເຂົາຈຶ່ງຊົງກ່າວແກ່ເຂົາວ່າ, "ອານາຈັກໃດໆ ທີ່ແຕກຈາກກັນແລ້ວກໍຄົງຈິບຫາຍ ເມືອງໃດຫຼືເຮືອນໃດໆ ທີ່ແຕກຈາກກັນແລ້ວຈະຕັ້ງໝັ້ນຢູ່ບໍ່ໄດ້. 26. ແລະຖ້າຊາຕານຂັບໄລ່ຊາຕານອອກ ມັນກໍແຕກແຍກກັນໃນຕົວມັນເອງ ແລ້ວອານາຈັກຂອງມັນຈະຕັ້ງໝັ້ນໄດ້ຢ່າງໃດ. 27. ແລະຖ້າເຮົາຂັບໄລ່ຜີອອກດ້ວຍອຳນາດເບເອນເຊບູນ ພວກລູກຫຼານຂອງທ່ານທັງຫຼາຍເຄີຍຂັບມັນອອກດ້ວຍອຳນາດຂອງຜູ້ໃດ ດ້ວຍເຫດນີ້ແຫຼະ, ເຂົາຈະເປັນຜູ້ຕັດສິນພວກທ່ານ. 28. ແຕ່ຖ້າເຮົາຂັບໄລ່ຜີອອກດ້ວຍພຣະວິນຍານຂອງພຣະເຈົ້າ ດັ່ງນັ້ນຣາຊອານາຈັກຂອງພຣະເຈົ້າກໍມາເຖິງພວກທ່ານແລ້ວ. 29. ຫຼືໃຜຈະເຂົ້າໄປໃນເຮືອນຂອງຄົນແຂງແຮງ ແລະຈະປຸ້ນເອົາຊັບຂອງເຂົາໄດ້ຢ່າງໃດ ເວັ້ນໄວ້ແຕ່ຈະມັດຄົນແຂງແຮງນັ້ນໄວ້ເສັຽກ່ອນ ແລ້ວຈຶ່ງຈະປຸ້ນເອົາຊັບໃນເຮືອນຂອງເຂົາໄດ້.

ບໍ່ແມ່ນທຸກຄົນໄດ້ຕົກຕະລຶງໂດຍສິ່ງທີ່ພຣະເຢຊູໄດ້ກະທຳ. ເຂົ້າຫາພວກຟາຣີຊາຍ, ພວກຄຣູສອນສາສນາຜູ້ທີ່ປະທ້ວງຕໍ່ການກະທຳຕ່າງໆແລະຄຳເວົ້າທັງປວງຂອງພຣະເຢຊູຢ່າງບໍ່ເວັ້ນວ່າງ.

ມີທາງໃດແດ່ທີ່ສັງຄົມຂອງພວກເຮົາໄດ້ໂຕ້ຕອບຕ່ອງການຂອງພຣະຄຣິດ?

ຂນະທີ່ພຣະເຢຊູບໍ່ໄດ້ເຂົ້າຮ່ວມປະເພນີທາງສາສນາຂອງພວກເຂົາ, ພວກຜູ້ນຳສາສນາໄດ້ພະຍາຍາມຊອກຫາທາງທີ່ຈະລົດຄຸນຄ່າຂອງພຣະອົງຕໍ່ໜ້າປວງຊົນຢູ່ສເມີ. ດັ່ງນັ້ນເມື່ອມີຄົນໄດ້ແນະນຳວ່າພຣະເຢຊູອາດເປັນ “ບຸດຂອງກະສັດດາວິດ” (12:23), ອັນນີ້ເຮັດໃຫ້ພວກຟາຣີຊາຍໂມໂຫ. ຂນະທີ່ພຣະເຢຊູບໍ່ເຂົ້າຮ່ວມປະເພນີຂອງພວກເຂົາ, ຄວາມທະນົງຕົວຂອງພວກເຂົາໄດ້ນຳພວກເຂົາໃຫ້ສລຸບວ່າພຣະອົງຕ້ອງເປັນຂອງຊາຕານ.

ຕາມປົກກະຕິ, ການໂຕ້ຕອບຂອງພຣະເຢຊູໄດ້ສະແດງໃຫ້ເຫັນຄວາມໂງ່ງ່າວແຫ່ງຄວາມຄິດຂອງພວກເຂົາ. ພວກຜູ້ຊາຍເຫຼົ່ານີ້ເຊື່ອຟັງກົດບັນຍັດຂອງພຣະເຈົ້າ, ແຕ່ວ່າເຂົາເຈົ້າຂາດຄວາມສັມພັນກັບພຣະອົງ. ພວກເຂົາເຊື່ອວ່າການດີຂອງພວກເຂົາຈະເຮັດໃຫ້ພວກເຂົາເປັນທີ່ພໍພຣະທັຍພຣະເຈົ້າຫຼາຍຂຶ້ນ, ແຕ່ກົງກັນຂ້າມ ການດີເຫຼົ່ານັ້ນໄດ້ດຶງພວກເຂົາລົງ. ພວກເຂົາໄດ້ປະຕິເສດທີ່ຈະເລີກລົ້ມຄວາມຊອບທັມ ສ່ວນຕົວໃນການຮັບຮູ້ພຣະເມຊີອາ ອົງຊົງສະຖິດໃນຖ້ຳມກາງພວກເຂົາ. ພວກເຂົາໄດ້ປະຕິເສດພຣະເຢຊູ, ປະຕິເສດຄຳສັ່ງສອນຂອງພຣະອົງ, ແລະໃນທີ່ສຸດກໍປະຕິເສດການຖວາຍຕົວຂອງພຣະອົງເທິງໄມ້ກາງແຂນສຳລັບຄວາມຜິດບາບຂອງພວກເຂົາ.

ຄວາມຜິດພາດຂອງພວກຟາຣີຊາຍຄວນຈະເປັນການເຕືອນສະຕິພວກເຮົາໃນສມັຍນີ້. ພວກຟາຣີຊາຍໄດ້ທະນົງຕົວເກີນໄປໂດຍຄິດໄປວ່າພຣະເຢຊູເປັນຂອງຊາຕານ. ຄວາມຊອບທັມ ສ່ວນຕົວຂອງພວກເຂົາໄດ້ເຮັດໃຫ້ພວກເຂົາຕາບອດຕໍ່ຄວາມສັດຈິງກ່ຽວກັບບຸກຄະລິກຂອງພຣະເຢຊູ. ພວກຟາຣີຊາຍໄດ້ເຮັດໃຫ້ພວກເຂົາເອງຕາບອດຕໍ່ຄວາມຈິງອັນນີ້, ດັ່ງນັ້ນພວກເຂົາຈຶ່ງບໍ່ໄດ້ເຫັນຄວາມຈຳເປັນທີ່ຕ້ອງຖິ້ມໃຈເກົ່າເອົາໃຈໃໝ່ແລະຫັນມາຫາພຣະອົງ. ພວກເຮົາຮູ້ຈັກຄົນແບບນີ້ໃນປັດຈຸບັນນີ້. ພວກເຂົາຈະຫົວເຍາະເຍີ້ຍໂບດ, ຄຣິສຕຽນທັງຫຼາຍ, ແລະແມ້ກະທັ້ງຄຳພະຍານສ່ວນຕົວຂອງພວກເຮົາ. ພວກເຮົາຕ້ອງຈຳໄວ້ວ່າພວກເຂົາບໍ່ຮູ້ຈັກພຣະຄຣິດແລະຄວາມຮັກຂອງພຣະອົງສຳລັບພວກເຂົາ. ພວກເຮົາກໍເຄີຍເປັນດັ່ງນັ້ນ. ພວກເຮົາເຄີຍໄດ້ກະບົດຕໍ່ພຣະຄຣິດມາແລ້ວ, ແຕ່ວ່າຄວາມດີຂອງພວກເຮົາສາມາດນຳຄົນອື່ນໆໃຫ້ມາເຖິງຄວາມເຂົ້າໃຈໃນພຣະເຢຊູດີຂຶ້ນ.

3. <u>ມັດທາຍ 12:30-32</u>

30. ຜູ້ໃດບໍ່ຢູ່ຝ່າຍເຮົາກໍຕໍ່ສູ້ກັບເຮົາ ແລະຜູ້ໃດບໍ່ໂຮມເຂົ້າກັບເຮົາກໍເປັນຜູ້ເຮັດແຕກກະຈາຍໄປ. 31. ດ້ວຍເຫດນີ້ເຮົາບອກພວກທ່ານວ່າຄວາມຜິດບາບແລະຄວາມໝິ່ນປມາດທຸກຢ່າງຈະຊົງໂຜດອະພັຍໃຫ້ມະນຸດໄດ້ ແຕ່ຄຳໝິ່ນປມາດພຣະວິນຍານຈະຊົງໂຜດອະພັຍໃຫ້ບໍ່ໄດ້. 32. ຜູ້ໃດທີ່ເວົ້າຄຳຂັດຂວາງຕໍ່ບຸດມະນຸດ ກໍຈະຊົງໂຜດໃຫ້ອະພັຍແກ່ຜູ້ນັ້ນໄດ້ ແຕ່ຜູ້ໃດທີ່ເວົ້າຄຳຂັດຂວາງຕໍ່ພຣະວິນຍານບໍຣິສຸດ ກໍຈະຊົງໂຜດອະພັຍໃຫ້ແກ່ຜູ້ນັ້ນບໍ່ໄດ້ ທັງໃນໂລກນີ້ແລະໃນໂລກໜ້າ.

ພຣະເຢຊູໄດ້ເຕືອນເຖິງສິ່ງຮ້າຍ. ພຣະອົງໄດ້ໃຫ້ຄຳນຳ ໂດຍການຊີ້ໃຫ້ເຫັນຄວາມຍິ່ງໃຫຍ່ແຫ່ງການຍົກໂທດຂອງພຣະເຈົ້າ, ແມ້ກະທັ້ງການຍົກໂທດໃຫ້ແກ່ພວກທີ່ເວົ້າຕໍ່ສູ້ພຣະເຢຊູ “ຜູ້ໃດທີ່ເວົ້າຄຳຂັດຂວາງຕໍ່ບຸດມະນຸດ ກໍຈະຊົງໂຜດໃຫ້ອະພັຍແກ່ຜູ້ນັ້ນໄດ້.” ພຣະເຢຊູໄດ້ເວົ້າຢ່າງກະຈ່າງແຈ້ງວ່າແມ້ກະທັ້ງເຮັດບາບຕໍ່ສູ້ພຣະອົງ ໝິ່ນປມາດພຣະເຈົ້າ, ການເວົ້າບໍ່ໂຄຣົບ, ຫຼືເວົ້າໃສ່ຮ້າຍປ້າຍສີ ກໍສາມາດຍົກໂທດໃຫ້ໄດ້.

ພວກຟາຣີຊາຍຕົກຢູ່ໃນອັນຕະລາຍໃນການຕັດສິນໃຈເຮັດຜິດບາບທີ່ອະພັຍໃຫ້ບໍ່ໄດ້ແນວໃດ?

ແຕ່ວ່າການຍົກໂທດຂອງພຣະເຈົ້າຍັງມີຂອບເຂດ. “ແຕ່ຜູ້ໃດທີ່ເວົ້າຄຳຂັດຂວາງຕໍ່ພຣະວິນຍານບໍຣິສຸດ ກໍຈະຊົງໂຜດອະພັຍໃຫ້ແກ່ຜູ້ນັ້ນບໍ່ໄດ້ ທັງໃນໂລກນີ້ແລະໃນໂລກໜ້າ.” ການໝິ່ນປມາດຕໍ່ສູ້ພຣະວິນຍານບໍຣິສຸດແມ່ນໜັກສາ

ຫັດ, ແລະບາງຄັ້ງກໍເລັ່ງເຖິງ “ບາບທີ່ຍົກໂທດໃຫ້ບໍ່ໄດ້.” ພຣະວິນຍານບໍຣິສຸດກ່າວຄວາມຈິງຂອງພຣະຄຣິດຕໍ່ຊີວິດຂອງພວກເຮົາ. ພຣະອົງຕັດສິນລົງໂທດ “ໂລກນີ້ກ່ຽວກັບຄວາມຜິດບາບ, ຄວາມຊອບທັມ, ແລະການພິພາກສາ” (ຢຮ. 16:8). ການປະຕິເສດຄຳສັ່ງສອນຂອງພຣະວິນຍານບໍຣິສຸດແມ່ນຜິດບາບທີ່ຍົກໂທດໃຫ້ບໍ່ໄດ້. ເປັນດ້ວຍເຫດໃດ? ຖ້າວ່າພວກເຮົາປະຕິເສດຄຳສັ່ງສອນຂອງພຣະອົງ, ພວກເຮົາເຫັນວ່າບໍ່ຈຳເປັນຕ້ອງຖິ້ມໃຈເກົ່າເອົາໃຈໃໝ່, ບໍ່ມາຫາພຣະຄຣິດ, ແລະບໍ່ຂໍການຍົກບາບໂທດຈາກພຣະອົງ. ການຍົກໂທດຂອງພຣະເຈົ້າມີຂອບເຂດຈຳກັດທີ່ວ່າພຣະອົງຈະບໍ່ຍົກໂທດໃຫ້ພວກເຮົາຖ້າວ່າພວກເຮົາຫາກບໍ່ຂອກຫາການຍົກໂທດນຈາກພຣະອົງ.

ຄຳເຕືອນຂອງພຣະເຢຊູແມ່ນໜັກແໜ້ນຈິງຈັງ, ແຕ່ວ່າຍັງເຮັດໃຫ້ຄົນຍັງສະງົນສົນເທ, “ແມ່ນຫຍັງຈະເກີດຂຶ້ນຖ້າວ່າເຮົາໄດ້ເຮັດຜິດບາບທີ່ຍົກໂທດໃຫ້ບໍ່ໄດ້?" ຈະມີບາງຄັ້ງຄາວ, ທຸກໆຄົນໄດ້ມີການປະຕິເສດການຮຽກເອີ້ນຂອງພຣະວິນຍານໃຫ້ຖິ້ມໃຈເກົ່າເອົາໃຈໃໝ່, ເຊື່ອໃນພຣະເຢຊູ, ແລະການຕັດສິນໃຈດຳລົງຊີວິດເພື່ອພຣະອົງ ເຖິງແມ່ນວ່າຈະເປັນພຽງລະຍະສັ້ນໆ. ຫຼັກຖານແທ້ໆທີ່ທ່ານຮັບເອົາຄວາມຈິງກ່ຽວກັບພຣະເຢຊູຄຣິດແລະມີຄວາມປາຖນາຢາກຫັນໜີຈາກຄວາມຜິດບາບແລະຢາກຕິດຕາມພຣະອົງນັ້ນແມ່ນເຄື່ອງໝາຍອັນແນ່ນອນວ່າທ່ານບໍ່ໄດ້ຕັດສິນໃຈເຮັດຜິດບາບທີ່ໃຫ້ອະພັຍບໍ່ໄດ້ຊຶ່ງຕໍ່ສູ້ພຣະວິນຍານບໍຣິສຸດ.

ພຣະເຈົ້າອົດທົນຕໍ່ພວກເຮົາດ້ວຍຄວາມຮັກແລະປະສົງທີ່ຈະຍົກໂທດໃຫ້ພວກເຮົາແລະປະທານຊີວິດອັນຄລອດໄປເປັນນິດກັບພຣະອົງໃນສວັນ. ນັ້ນຄືເຫດຜົນທີ່ພວກເຮົາຕ້ອງອົດທົນດົນນານກັບພວກທີ່ປະຕິເສດພຣະເຈົ້າ. ຂນະທີ່ພວກເຂົາເຈົ້າຍັງມີລົມຫັນໃຈໃນປອດຂອງພວກເຂົາ, ພວກເຮົາຕ້ອງສືບຕໍ່ໃນການແບ່ງປັນແລະການອະທິຖານ ເພື່ອວ່າອັນນຶ່ງຂ້າງໜ້າພວກເຂົາກໍຈະຕ້ອນຮັບເອົາພຣະເຢຊູເຊັ່ນກັນ.

ແມ່ນຫຍັງຄືຄວາມຫວັງແລະການທ້າທາຍສຳລັບພວກເຮົາໃນຄຳເວົ້າອັນໜັກເຫຼົ່ານີ້ຂອງພຣະເຢຊູ?

ໃຊ້ໃນຊີວິດ

ຄວາມຜິດບາບທັງປວງເປັນທີ່ລັງກຽດຕໍ່ພຣະເຈົ້າ, ແລະພວກເຮົາທັງໝົດຈຳເປັນຕ້ອງມາຫາພຣະຄຣິດເພື່ອຮັບການໃຫ້ອະພັຍໂທດ. ທ່ານຈະເຮັດແນວໃດກັບຄວາມເປັນຈິງອັນນີ້? ເລືອກເອົາຄຳສເນີອັນນຶ່ງໃນຂ້າງລຸ່ມນີ້:

- **ຖ່ອມຕົວ.** ຄວາມອວດອົ່ງທະນົງຕົວກັກພວກເຮົາໄວ້ຈາກການເຫັນຄວາມຈຳເປັນສຳລັບພຣະຄຣິດແລະການອະພັຍໂທດຂອງພຣະອົງ. ໃຫ້ອົງພຣະຜູ້ເປັນເຈົ້າກວດເບິ່ງຫົວໃຈຂອງທ່ານໃນຄວາມອວດອົ່ງທະນົງຕົວທີ່ເປັນຈຸດສູນກາງ ຊຶ່ງອາສັຍແຕ່ຕົວເອງແລະບໍ່ອາສັຍພຣະຄຣິດ.
- **ອົດທົນ.** ເປັນການຍາກທີ່ຢູ່ຖ້າມກາງພວກທີ່ຕໍ່ຕ້ານໃນສິ່ງທີ່ພຣະຄຣິດຢາກມອບໃຫ້. ຈົ່ງອ້ອນວອນເພື່ອໃຫ້ມີຄວາມອົດທົນ! ພຣະເຈົ້າກະທຳການ “ຫຼັງຜ້າສາກ” ໃນຊີວິດຂອງຄົນຢູ່ສເມີ, ດັ່ງນັ້ນຈົ່ງອ້ອນວອນອະທິຖານຫາໂອກາດຕ່າງໆໃຫ້ພຣະເຈົ້າຊົງໃຊ້ຢ່າງອົດທົນໃນການຫວ່ານເມັດພືດ.
- **ສວຍເອົາໂອກາດ.** ທ່ານຮູ້ຈັກຜູ້ທີ່ຕ້ອງການຢາກໄດ້ຍິນຂ່າວປະເສີດແລະມາເຖິງຄວາມເຊື່ອໃນພຣະຄຣິດ. ທູນຂໍໃຫ້ພຣະເຈົ້າເປີດຫົວໃຈຂອງພວກເຂົາ ໃຫ້ຮັບເອົາການອະພັຍໂທດຈາກພຣະອົງ, ແລະອະທິຖານຂໍໂອກາດໃນການແບ່ງປັນຄຳສັ່ງສອນຂອງພຣະຄຣິດ.

ຄືກັນກັບຍິງຄົນນັ້ນທີ່ຢູ່ໃນເຄື່ອງບິນທີ່ໄດ້ກ່າວໄວ້ໃນຕອນເລີ້ມຕົ້ນຂອງບົດຮຽນ, ຫຼາຍໆຄົນສົມທຽບພວກເຂົາເອງໃສ່ຄົນອື່ນແລະຄິດເອົາວ່າພວກເຂົາເປັນປົກກະຕິດີຢູ່. ຄວນຈຳໄວ້ວ່າ, ສິ່ງສຳຄັນແທ້ໆນັ້ນກໍຄືໃຫ້ພວກເຮົາເບິ່ງຂຶ້ນເບື້ອງເທິງແລະສົມທຽບພວກເຮົາເອງໃສ່ກັບພຣະອົງ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA

ບົດຮຽນໂຮງຮຽນວັນອາທິດ
ວັນອາທິດ ທີ 21 ເມສາ 2019 (4-21-2019)

ທ່ານຈະບໍ່ຕາຍຈັກເທື່ອ

ແມ່ນຫຍັງຄືສິ່ງທີ່ທ່ານໄດ້ເຫັນທີ່ມັນໃກ້ຄຽງທີ່ສຸດກັບ "ນ້ຳພຸແຫ່ງຄວາມໜຸ່ມ"?

ຈຸດສຳຄັນໃນບົດຮຽນ: ການຄືນພຣະຊົນຂອງພຣະເຢຊູເຮັດໃຫ້ການຄືນມາຈາກຕາຍຂອງພວກເຮົາເປັນໄປໄດ້.

ພຣະຄັມພີຕອບສນອງຕໍ່ຊີວິດ:

ໂອ້, ສິ່ງທີ່ພວກເຮົາຈະເຮັດເພື່ອໃຫ້ຢູ່ຍືນນານ! ພວກເຮົາທັງໝົດກຳຮູ້ຈັກແລ້ວວ່າການກິນອາຫານທີ່ເປັນປໂຍດຕໍ່ສຸຂພາບຮ່າງກາຍແລະການອອກກຳລັງກາຍ ເປັນການປັບປຸງຮ່າງກາຍຂອງພວກເຮົາ ດັ່ງນັ້ນ, ຈຶ່ງຊ່ວຍພວກເຮົາໃຫ້ຢູ່ຍືນເພີ້ມອີກ. ຫຼາຍໄປກວ່ານັ້ນ, ພວກນັກຄົ້ນຄວ້າໄດ້ພົບວ່າມີອີກສອງສາມຢ່າງເພີ້ມໃສ່ທີ່ອາດເພີ້ມຄວາມຍືນຍາວຂອງຊີວິດທ່ານເຊັ່ນ.

- ຢູ່ເທິງຈອມພູ. ຄົນທີ່ຢູ່ເສັ້ນຂນານສູງຈະມີອາຍຸຍືນກວ່າ.
- ຮຽນພາສາອື່ນ. ສາມາດເວົ້າຫຼາຍໆພາສາໄດ້ມັນຊ່ວຍຢັບຢັ້ງໂຣກສະຕິປັນຍາເສື່ອມແລະໂຣກຕິວສັ່ນ (Alzheimer's).
- ຢູ່ໃນການກິນອາຫານທີ່ລິດຜ່ອນ-ໜ່ວຍວັດແທກຈຳນວນກຳລັງທີ່ອາຫານໃຫ້ຕໍ່ຮ່າງກາຍ Calorie. ນຶ່ງໃນການເຮັດໃຫ້ຊີວິດຍືນຂອງກຸ່ມຄົນທີ່ກິນອາຫານແຕ່ລະວັນຂອງພວກເຂົາເຈົ້າໃນຈຳນວນ 1,200 ແຄໂລຣີ.
- ເຮັດວຽກໜັກຂຶ້ນຕື່ມ. ຄົນງານທີ່ເຮັດວຽກຈິງຈັງແລະບໍ່ຢຸດຢັ້ງເບິ່ງເໝືອນວ່າຢູ່ຍືນກວ່າຄົນງານທີ່ບໍ່ເອົາຫົວໃສ່ໃຈຊາ.

ທ່ານສາມາດທົດລອງສິ່ງທັງໝົດເຫຼົ່ານີ້, ແລະຂນະທີ່ທ່ານອາດຈະເພີ້ມອາຍຸ, ທ່ານສາມາດໄດ້ຮັບຄວາມໝັ້ນໃຈຢ່າງນຶ່ງວ່າ: *ທ່ານກຳຍັງຈະຕາຍຢູ່*. ພຣະເຢຊູໄດ້ບອກພວກເຮົາວ່າມີທາງດຽວເທົ່ານັ້ນທີ່ຈະບໍ່ຕາຍກໍຄືເຊື່ອແລະຕິດຕາມພຣະອົງ. ແລະພຣະອົງເຮັດໃຫ້ເປັນໄປໄດ້ເມື່ອພຣະອົງໄດ້ຕາຍເທິງໄມ້ກາງແຂນແລະໄດ້ຄືນມາຈາກຕາຍ.

ພຣະຄັມພີກ່າວວ່າຢ່າງໃດ? (ຈົ່ງເບິ່ງຕາມຂໍ້ 1, 2, 3)

ການສຶກສາພຣະຄັມພີ

1. <u>ໂຢຮັນ 11:25-27</u>

25. ພຣະເຢຊູຊົງກ່າວຕໍ່ນາງວ່າ, "ເຮົານີ້ແຫຼະ, ເປັນເຫດໃຫ້ຄົນທັງປວງເປັນຄືນມາ ທັງເປັນຊີວິດ ຜູ້ທີ່ວາງໃຈເຊື່ອໃນເຮົາ ເຖິງແມ່ນວ່າຕາຍໄປແລ້ວກໍຍັງຈະມີຊີວິດຢູ່. 26. ແລະທຸກຄົນທີ່ຍັງມີຊີວິດຢູ່ແລະວາງໃຈເຊື່ອຢູ່ໃນເຮົາກໍຈະບໍ່ຕາຍຈັກເທື່ອ ເຈົ້າເຊື່ອຂໍ້ນີ້ຫຼື?" 27. ນາທາຈຶ່ງທູນພຣະອົງວ່າ, "ເຊື່ອຢູ່ແລ້ວ ນາຍເຈົ້າເອີຍ, ຂ້ານ້ອຍເຊື່ອວ່າທ່ານເປັນພຣະຄຣິດ ຄືພຣະບຸດຂອງພຣະເຈົ້າທີ່ຕ້ອງສະເດັດມາໃນໂລກ."

ໃນຕອນຕົ້ນຂອງໂຢຮັນບົດທີ 11, ພວກເຮົາເຫັນ "ລາຊະໂຣຈາກເມືອງເບັດທານີ," ຊາຍຜູ້ທີ່ປ່ວຍແລະໃກ້ຈະຕາຍຢູ່ແລ້ວ. ຍັງບໍ່ເທົ່າໃດມື້ທີ່ພຣະເຢຊູເອງກຳຈະຖືກຄຶງເທິງໄມ້ກາງແຂນແລະເຖິງແກ່ຄວາມຕາຍ. ລາຊະໂຣເປັນເພື່ອນສຸດທີ່ຮັກຂອງພຣະເຢຊູ (ຂໍ້ 3,11), ເຖິງປານນັ້ນພຣະເຢຊູກໍຕັ້ງໃຈທີ່ຈະຊັກຊ້າໃນການເດີນທາງໄປເມືອງເບັດທານີເພື່ອປິ່ນປົວເພື່ອນຂອງພຣະອົງໃຫ້ຫາຍດີ. ພຣະເຢຊູໄດ້ຊັກຊ້າ, ແລະລາຊະໂຣກໍໄດ້ຕາຍໄປ (ຂໍ້ 14).

ເມື່ອພຣະເຢຊູໄດ້ມາຮອດໃນເມືອງເບັດທານີ, ພຣະອົງໄດ້ທາທາງໃຫ້ຄວາມອົບອຸ່ນແກ່ພວກເອື້ອຍຂອງລາຊະໂຣ ທີ່ມີຄວາມໂສກເສົ້າ, ມາຣີອາແລະມາທາ. ພຣະອົງໄດ້ບອກມາທາວ່າ, "ນ້ອງຊາຍຂອງເຈົ້າຈະຄືນມາອີກ" (ຂໍ້ 23). ນາງມາທາກໍບໍ່ໄດ້ຄັດຄ້ານ; ນາງໄດ້ຍອມຮັບມຸມມອງທີ່ນິຍົມກັນຊຶ່ງຖືກສອນໂດຍພວກຟາຣີຊາຍທີ່ວ່າ ມີຊີວິດຫຼັງ ຄວາມຕາຍ, ແລະຄົນຢິວທີ່ຈະໄດ້ຮັບການຄືນມາຈາກຕາຍໃນມື້ນຶ່ງຂ້າງໜ້າ. ແຕ່ວ່າພຣະເຢຊູກຳລັງເລັ່ງເຖິງບາງຢ່າງ ທີ່ຈະເກີດຂຶ້ນໃນອີກບໍ່ດົນນີ້!

ທີ່ຈະອະທິບາຍສິ່ງອັສຈັນທີ່ພຣະອົງກຳລັງຈະກະທຳ, ພຣະເຢຊູໄດ້ໃຫ້ສິ່ງນຶ່ງໃນເຈັດປໂຍກທີ່ພຣະອົງຊົງເປັນ; ປໂຍກນີ້ໄດ້ນຳການປະກາດອັນໃຫຍ່ຫຼວງຂອງການເປັນພຣະເຈົ້າ. "ເຮົານີ້ແຫຼະ, ເປັນເຫດໃຫ້ຄົນທັງປວງເປັນຄືນມາ ທັງເປັນຊີວິດ." ຄວາມໝາຍໃນປໂຍກນີ້ເປັນຄວາມຈິງທີ່ວ່າພຣະເຢຊູເປັນພຣະເຈົ້າອົງທ່ຽງແທ້ແຕ່ອົງດຽວ; ພຣະອົງບໍ່ ແມ່ນພຣະທຽມ ແຕ່ວ່າເປັນພຣະເຈົ້າອົງຊົງສາມາດຄືນພຣະອົງເອງ. ພຣະອົງບໍ່ໄດ້ເວົ້າວ່າພຣະອົງອາດຈະນຳກ່ຽວກັບ ການຄືນມາຈາກຄວາມຕາຍຫຼືພຣະອົງອາດຈະເປັນສາເຫດຂອງການຄືນຈາກຄວາມຕາຍ; ພຣະເຢຊູໄດ້ເວົ້າວ່າພຣະ ອົງເປັນເຫດໃຫ້ຄົນທັງປວງເປັນຄືນມາ.

ການຄືນມາຈາກຄວາມຕາຍແລະຄຳສັນຍາກ່ຽວກັບຊີວິດອັນຕລອດໄປເປັນນິດແມ່ນຄວາມສັມພັນອັຣໃກ້ຊິດຕໍ່ ພຣະເຢຊູທີ່ພວກເຮົາສາມາດພົບໃນຄວາມສັມພັນກັບພຣະອົງ. ຄວາມພັນອັນນັ້ນເລີ້ມຕົ້ນກັບການເຊື່ອ. ພຣະເຢຊູໄດ້ ກ່າວຕໍ່ໄປວ່າ "ຜູ້ທີ່ວາງໃຈເຊື່ອໃນເຮົາ, ເຖິງແມ່ນວ່າຕາຍໄປແລ້ວກໍຍັງຈະມີຊີວິດຢູ່. ແລະທຸກຄົນທີ່ຍັງມີຊີວິດຢູ່ແລະ ວາງໃຈເຊື່ອຢູ່ໃນເຮົາກໍຈະບໍ່ຕາຍຈັກເທື່ອ."

ທ່ານຈະບັນລະຍາຍຄຳກ່າວຂອງພຣະເຢຊູໃນພຣະທັມເຫຼົ່ານີ້ຢ່າງໃດ?

ລຳດັບ, ຖ້າວ່າຂ້າພະເຈົ້າຕາຍ, ກໍບໍ່ໄດ້ໝາຍຄວາມວ່າຂ້າພະເຈົ້າບໍ່ມີຊີວິດບໍ? ແມ່ນແລ້ວ, ຝ່າຍເນື້ອໜັງຮ່າງກາຍ ຂອງທ່ານຈະຕາຍ, ແຕ່ວ່າທ່ານຍັງຈະບໍ່ຈົບສິ້ນ! ສຳລັບພວກທີ່ເຊື່ອໃນພຣະເຢຊູ, ພວກເຂົາຈະຢູ່ແລະຈະສືບຕໍ່ມີຊີວິດ ໃນພຣະຄຣິດ ແລະພວກເຂົາຈະຄືນມາສູ່ຮ່າງກາຍໃໝ່ແຫ່ງສະງ່າຣາສີ, ພຣະເຢຊູໄດ້ໃຫ້ສັນຍາກັບພວກເຮົາວ່າຈະ ມີຊີວິດກັບພຣະອົງໃນແຜ່ນດິນສວັນ(ໂຢຮັນ 14:2-3).

ແມ່ນຫຍັງທີ່ນຳເອົາຄວາມຈິງອັນນີ້ກ່ຽວກັບພຣະເຢຊູຕໍ່ຊີວິດຂອງພວກເຮົານັ້ນກໍແມ່ນຄຳວ່າ ເຊື່ອ. ຄຳກິຣິຍານີ້ໝາຍ ເຖິງຄວາມຍາວໄກໄປກວ່າການຮັບຮູ້ບາງຢ່າງ. ຄຳເວົ້າໃນພາສາກຣີກນຳຄວາມຄິດໃນການວາງຄວາມໝັ້ນໃຈຂອງ ພວກເຮົາແລະໄວ້ວາງໃຈໃນສິ່ງທີ່ພວກເຮົາເຊື່ອ. ແລະໃນຄວາມໝາຍທີ່ນີ້ແມ່ນ, ພວກເຮົາເຊື່ອພຣະເຢຊູ.

ຄວາມຈິງອັນຍິ່ງໃຫຍ່ອັນນີ້ຂອງພຣະເຢຊູເຣື່ອງການຄືນຈາກຕາຍແມ່ນຄຳຕອບ. ພຣະເຢຊູໄດ້ຖາມນາງມາທາວ່າ, "ເຈົ້າເຊື່ອຂໍ້ນີ້ຫຼື?" ນາງຢັ້ງຢືນໃນສິ່ງທີ່ນາງເຊື່ອແລະວາງໃຈໃນພຣະເຢຊູວ່າ "ເປັນພຣະເມຊີອາ, ພຣະບຸດຂອງພຣະ ເຈົ້າ, ອົງທີ່ສະເດັດມາໃນໂລກ." ນາງໄດ້ເຫັນສິ່ງອັສຈັນຕ່າງໆຂອງພຣະອົງແລະໄດ້ຍິນຄຳສິດສອນຂອງພຣະອົງ; ດຽວນີ້ນາງມາເຖິງຈຸດທີ່ຈະຕ້ອງຕັ້ງຂໍ້ສລຸບແຕ່ເທົ່ານັ້ນ: ພຣະເຢຊູແມ່ນພຣະເມຊີອາ.

2. ໂຢຮັນ 20:24-25

24. ຝ່າຍໂທມາທີ່ເອີ້ນວ່າແຝດ ຊຶ່ງເປັນສາວົກຜູ້ນຶ່ງໃນສິບສອງຄົນນັ້ນ ບໍ່ໄດ້ຢູ່ກັບເຂົາເມື່ອພຣະເຢຊູສະເດັດມານັ້ນ. 25. ສາວົກອື່ນໆຈຶ່ງບອກໂທມາວ່າ, "ເຮົາໄດ້ເຫັນອົງພຣະຜູ້ເປັນເຈົ້າແລ້ວ" ແຕ່ໂທມາຕອບເຂົາເຫຼົ່ານັ້ນວ່າ, "ຖ້າຂ້ອຍ ບໍ່ເຫັນຮອຍຕະປູທີ່ຝ່າພຣະຫັດ ແລະບໍ່ໄດ້ເອົານິ້ວມືຂອງຂ້ອຍແປະໃສ່ຮອຍຕະປູນັ້ນ ແລະບໍ່ໄດ້ເອົາມືຂອງຂ້ອຍແປະ ໃສ່ຂ້າງຂອງທ່ານແລ້ວ ຂ້ອຍຈະບໍ່ເຊື່ອ.

ການຄືນມາຈາກຕາຍເປັນການຍາກທີ່ຈະຮັບເອົາໄດ້ໃນຄວາມເປັນຈິງ. ແຕ່ກໍຍາກເມື່ອຄິດເຖິງວ່າສອງພັນປີຜ່ານ ມາແລ້ວທີ່ຊາຍຜູ້ນຶ່ງຮັກພວກເຮົາພໍທີ່ຈະສະລະຊີວິດຂອງພຣະອົງສຳລັບພວກເຮົາ ແລະເບິ່ງເໝືອນວ່າເປັນສິ່ງວິເສດ

ທີ່ສຸດທີ່ພຣະອົງຈະຄືນກັບມາມີຊີວິດອີກ. ເຖິງປານນັ້ນຄວາມສັດຈິງອັນນັ້ນທີ່ເປັນຫີນເສົາເອກຂອງລະບົບຄວາມເຊື່ອ ຂອງພວກເຮົາ. ບໍ່ມີສາສນາໃດສາມາດປະກາດການຄືນມາຈາກຕາຍ.

ແມ່ນຫຍັງເປັນສິ່ງກີດຂວາງທີ່ສ່ວນຫຼາຍປິດບັງຄົນຈາກການເຊື່ອໃນພຣະເຢຊູ?

ສາສນາອື່ນໆສາມາດປະກາດຄວາມຕາຍໄດ້ບໍ່? ແນ່ນອນ, ທຸກໆສາສນາສາມາດຊີ້ໄປຫາຄວາມຕາຍຂອງພວກຜູ້ ຄົ້ນພົບສາສນາຂອງພວກເຂົາ, ແຕ່ວ່າພຣະເຢຊູເທົ່ານັ້ນທີ່ໄດ້ຕາຍແລະໄດ້ຄືນມາມີຊີວິດອີກ. ພຣະເຢຊູເທົ່ານັ້ນເປັນ ຄືນມາຈາກຄວາມຕາຍ.

ພວກອັກຄະສາວົກຄົງບໍ່ໄດ້ສົງສັຍດອກວ່າພຣະເຢຊູໄດ້ສິ້ນພຣະຊົນແທ້. ໜ້າທີ່ຮັບຜິດຊອບຂອງທະຫານໂຣມັນທີ່ ຖືກບັນຊາໃຫ້ກວດການການຄົງທີ່ໄມ້ກາງແຂນນັ້ນແມ່ນເພື່ອໃຫ້ແນ່ນອນວ່າຜູ້ຖືກລົງໂທດນັ້ນໄດ້ຕາຍແທ້ໆ. ຄວນຫຼີກທີ່ ນັກໂທດຈະຫຼີກເວັ້ນຈາກຄວາມຕາຍໄປໄດ້, ທະຫານຍາມໄດ້ໃຊ້ຊີວິດຂອງຕົນເອງເປັນການແລກປ່ຽນ. ພວກຜູ້ຍິງກໍ ໄດ້ເຫັນບ່ອນທີ່ພຣະເຢຊູຖືກຝັງໄວ້, ເພາະສະນັ້ນກໍຄົງບໍ່ມີບັນຫາທີ່ຈະໄປເຖິງອຸບໂມງອັນຖືກຕ້ອງໄດ້ ທີ່ວ່າງເປົ່າ (24:1-3). ແລະດຽວນີ້ພວກສາວົກໄດ້ເຫັນພຣະເຢຊູຄືນມີຊີວິດສຳລັບເຂົາເຈົ້າເອງ.

ການຄືນມາຈາກຕາຍກໍຕ້ອງເປັນການຍາກສຸດທີ່ຈະເຊື່ອສຳລັບພວກສາວົກໃນຕອນທຳອິດຢ່າງແນ່ນອນ, ໃຫ້ລອງ ຄິດເບິ່ງວ່າການຕົກສະເງືຕ່ໍການຕາຍອັນຍາກສຸດຂອງພຣະເຢຊູ. ແຕ່ເບິ່ງແມ ທີ່ນີ້ພຣະເຢຊູໄດ້ມາຢືນຢູ່ຕ່ໍໜ້າຂອງພວກ ສາວົກ.

ຍົກເວັ້ນໂທມາ, ໂຢຮັນບໍ່ໄດ້ບອກພວກເຮົາວ່າເປັນຫຍັງໂທມາຈຶ່ງບໍ່ໄດ້ຢູ່ກັບພວກໝູ່ສາວົກຂອງລາວ, ແຕ່ວ່າລາວ ໄດ້ໃຫ້ການໂຕ້ຕອບຂອງໂທມາຕ່ໍຂ່າວນັ້ນແກ່ພວກເຮົາ. ໂທມາ, ເບິ່ງເໝືອນວ່າຕ້ອງຕິກຢູ່ໃນຄວາມງຶດປລາດໃຈແລະ ສັບສົນ, ຈຶ່ງອອກປາກຢາກຈະເຫັນຮອຍຕະປູແລະບາດແຜຂອງພຣະເຢຊູກ່ອນຈຶ່ງຈະເຊື່ອ. ອັນນີ້ແຫຼະທີ່ພວກເຮົາໄດ້ ປໂຍກທີ່ວ່າ “ຄວາມສົງສັຍຂອງໂທມາ,” ອັນຊຶ່ງບໍ່ຄ່ອຍຍຸດຕິທັມຕ່ໍຄວາມແຕກຕ່າງສຳລັບໂທມາ. ບໍ່ແມ່ນແຕ່ລາວຜູ້ ດຽວເທົ່ານັ້ນທີ່ໄດ້ສົງສັຍ. ພວກສາວົກອີກສິບຄົນກໍບໍ່ຢາກເຊື່ອເໝືອນກັນໃນຕອນທຳອິດ (ລູກາ 24:11).

ເປັນການຍາກທີ່ຈະເຊື່ອໃນສິ່ງທີ່ບໍ່ໄດ້ເຫັນ. ແຕ່ກ່ຳງ່າຍກວ່າທີ່ຈະເຊື່ອເມື່ອເຫັນຫຼັກຖານແລະສິ່ງຢັ້ງຢືນທີ່ຕັ້ງຢູ່ຕ່ໍໜ້າ ພວກເຮົາ. ຊີວິດຄຣິສຕຽນແມ່ນນຶ່ງຂອງຄວາມເຊື່ອ, ແຕ່ວ່າຄວາມເຊື່ອອັນນັ້ນຕັ້ງເທິງພື້ນຖານທີ່ແຂງແກ່ນ. ຖ້າບໍ່ດັ່ງ ນັ້ນ, ກໍເປັນຄວາມເຊື່ອແບບຕາບອດ, ບາງຢ່າງທີ່ພວກເຮົາຫວັງໄວ້ອາດຈະເປັນຈິງ. ຄວາມເຊື່ອທີ່ດີເທົ່າກັບພື້ນຖານ ຂອງຄວາມເຊື່ອນັ້ນ.

ດັ່ງນັ້ນພວກເຮົາສາມາດມີຄວາມເຊື່ອໃນການຄືນມາຈາກຕາຍຢ່າງໃດ? ຄືກັນກັບໂທມາ, ຈົນເຖິງຈຸດນີ້ແລ້ວ, ພວກ ເຮົາຍັງບໍ່ໄດ້ເຫັນຮ່າງກາຍທີ່ຖືກຄືນມາຂອງພຣະເຢຊູເທື່ອ. ຂອບພຣະຄຸນພຣະເຈົ້າຢ່າງລົ້ນເຫຼືອທີ່ພຣະອົງໄດ້ປະທານ ຫົນທາງແກ່ພວກເຮົາທີ່ຈະວາງໃຈເຊື່ອຢ່າງໝັ້ນໃຈ.

3. ໂຢຮັນ 20:26-29

26. ຄັນລ່ວງໄປໄດ້ແປດວັນແລ້ວພວກສາວົກຂອງພຣະອົງກໍຢູ່ພ້ອມກັນທີ່ເຮືອນນັ້ນອີກ ແລະໂທມາກໍຢູ່ກັບເຂົາ ສ່ວນ ປະຕູກໍອັດໄວ້ ແຕ່ພຣະເຢຊູກໍໄດ້ສະເດັດເຂົ້າມາຢືນຢູ່ຖ້າມກາງເຂົາ ແລ້ວຊົງກ່າວວ່າ, "ສັນຕິສຸກຈົ່ງມີຢູ່ກັບທ່ານທັງ ຫຼາຍ." 27. ແລະພຣະອົງຊົງກ່າວແກ່ໂທມາວ່າ, "ຈົ່ງເດ່ນິ້ວມືຂອງທ່ານມາລູບເບິ່ງຝ່າມືຂອງເຮົາ ຈົ່ງເດ່ມືຂອງທ່ານມາ ໃສ່ຂ້າງຂອງເຮົາ ຢ່າຂາດຄວາມເຊື່ອແຕ່ຈົ່ງເຊື່ອ." 28. ໂທມາທູນຕອບວ່າ, "ອົງ ພຣະຜູ້ເປັນເຈົ້າຂອງຂ້າພຣະອົງ ແລະ ພຣະເຈົ້າຂອງຂ້າພຣະອົງ." 29. ພຣະເຢຊູຊົງກ່າວກັບ ໂທມາວ່າ, "ເພາະໄດ້ເຫັນເຮົາທ່ານຈຶ່ງເຊື່ອຫຼື ຜູ້ທີ່ບໍ່ເຫັນເຮົາແຕ່ ໄດ້ເຊື່ອກໍເປັນສຸກ."

ທ່ານໂຢຮັນໄດ້ໃຫ້ “ເນື້ອເຮື່ອງທັງໝົດ” ແກ່ພວກເຮົາເມື່ອພຣະເຢຊູຊົງປາກົດຕົວອີກເທື່ອນຶ່ງແກ່ພວກສາວົກ. “ປະຕູ ຍັງອັດຢູ່” ຊີ້ໃຫ້ເຫັນວ່າພວກສາວົກຍັງຢ້ານຢູ່. ເຂົາເຈົ້າອາດຈະເປັນຫ່ວງວ່າພວກຜູ້ນຳສາສນາຢິວທີ່ຢາກກຳຈັດພຣະ ເຢຊູໃຫ້ເຖິງແກ່ຄວາມຕາຍກໍຈະຕາມລ້າພວກເຂົາເຈົ້າເຊັ່ນກັນ.

ທ່ານໄດ້ຄຳໝັ້ນໃຈຫຍັງກ່ຽວກັບການຊົງປາກົດຂອງພຣະເຢຊູຕໍ່ໂທມາ?

ໃນຫ້ອງທີ່ອັດແຈບຢູ່ນັ້ນ, ພຣະເຢຊູໄດ້ຊົງປາກົດ. ພ້ອມທັງການຊົງສະຖິດຢູ່ຂອງພຣະອົງ, ພຣະເຢຊູໄດ້ປະທານສັນຕິສຸກທີ່ເກີນຄວາມເຂົ້າໃຈແກ່ພວກສາວົກຂອງພຣະອົງ (ຟລປ. 4:7). ສັນຕິສຸກທີ່ພຣະອົງເທົ່ານັ້ນສາມາດປະທານໃຫ້, ສັນຕິສຸກທີ່ໂລກນີ້ບໍ່ສາມາດເຂົ້າໃຈຈົນກວ່າພວກເຂົາໄດ້ເປັນຜູ້ຕິດຕາມພຣະຄຣິດ (ຢຮ. 14:27). ອັນນີ້ກໍແມ່ນການເຕືອນສະຕິອີກອັນນຶ່ງທີ່ພຣະເຢຊູເປັນສັນຕິສຸກຂອງພວກເຮົາ.

ຫຼັງຈາກນັ້ນພຣະເຢຊູກໍທັນຄວາມສົນໃຈຂອງພຣະອົງໃສ່ໂທມາ. ພຣະອົງບໍ່ໄດ້ຕຳໜິຕິຕຽນໂທມາສຳລັບຄວາມບໍ່ເຊື່ອຂອງລາວ. ພຣະເຢຊູໄດ້ເຮັດໃຫ້ໂທມາຄົບເຕັມດ້ວຍຄວາມໝັ້ນໃຈຂຶ້ນໃໝ່, ຄວາມເຫັນອົກເຫັນໃຈ, ແລະພຣະຄຸນ. ພວກເຮົາອາດຄິດປລາດໃຈຖ້າວ່າໂທມາຫາກໄດ້ຄຸເຂົ່າຮ້ອງໄຫ້ຂະນະທີ່ລາວໄດ້ກ່າວວ່າ "ອົງພຣະຜູ້ເປັນເຈົ້າຂອງຂ້າພຣະອົງ ແລະພຣະເຈົ້າຂອງຂ້າພຣະອົງ!" ອັນນີ້ແມ່ນການສາລະພາບທີ່ຈະແຈ້ງແຫ່ງຄວາມເຊື່ອຂອງລາວ. ໂດຍຜ່ານການເຫັນຮອຍຕະປູທີ່ອຶ້ງມືຂອງພຣະເຢຊູ, ໂທມາໄດ້ພົບຄວາມເຊື່ອໃໝ່ໃນພຣະເຢຊູ ຊຶ່ງເປັນຄວາມເຊື່ອທີ່ປາສຈາກຄວາມສົງໄສ ແລະຄວາມຢ້ານກົວ.

ໂທມາພ້ອມດ້ວຍສາວົກຄົນອື່ນໆໄດ້ເຫັນເຫດການກ່ອນຜູ້ອື່ນທີ່ພວກເຮົາບໍ່ສາມາດເຫັນໃນປັດຈຸບັນ: ການຮັບໃຊ້ຂອງພຣະເຢຊູໃນພຣະຣາຊກິດຂອງພຣອົງ. ພຣະເຢຊູຮູ້ຈັກວ່າຜູ້ທີ່ເຊື່ອຄືທ່ານແລະຂ້າພະເຈົ້າຈະຕິດຕາມພຣະອົງ, ຜູ້ທີ່ຈະບໍ່ມີປະສົບການເໝືອນກັບສາວົກລຸ້ນທຳອິດໄດ້ຮັບນັ້ນ. ດັ່ງນັ້ນ, ພຣະອົງຈຶ່ງບອກໂທມາວ່າ, "ຜູ້ທີ່ບໍ່ເຫັນເຮົາແຕ່ໄດ້ເຊື່ອກໍເປັນສຸກ."

ດັ່ງນັ້ນເປັນຫຍັງພວກເຮົາຈຶ່ງເຊື່ອ? ພວກເຮົາໄວ້ວາງໃຈໃນພຣະຄຳແລະຄຳພະຍານຂອງຜູ້ທີ່ໄດ້ເຫັນພຣະເຢຊູຄືນມີຊີວິດອີກ. ພວກສາວົກດັ່ງເຊັ່ນໂທມາ. ທ່ານໂປໂລໄດ້ເນັ້ນໃນຄຳພະຍານວ່າເພິ່ນຜູ້ນຶ່ງທີ່ໄດ້ເຫັນພຣະເຢຊູ.

ພວກເຮົາເຊື່ອວ່າການຄືນພຣະຊົນຂອງພຣະເຢຊູບໍ່ແມ່ນແບບທັມມະດາວ່າໄດ້ເກີດຂຶ້ນຊ້ຳໆ, ແຕ່ວ່າແມ່ນເຫດການທີ່ພວກເຮົາສາມາດໄວ້ວາງໃຈເຮັດໃຫ້ຊີວິດມີການປ່ຽນແປງ. ພຣະເຢຊູເປັນເຫດໃຫ້ຄືນມາຈາກຕາຍ, ແລະຊີວິດມາຈາກພຣະອົງເທົ່ານັ້ນ. ຖ້າວ່າທ່ານຕ້ອງການຊີວິດອັນຕລອດໄປເປັນນິດ, ວາງໃຈເຊື່ອຄວາມຈິງຂອງການຄືນມາຈາກຕາຍ, ຈົ່ງຕິດຕາມພຣະຄຳຂອງພຣະເຢຊູ, ແລະເຊື່ອ.

ກຸ່ມຂອງພວກເຮົາຈະເຮັດແນວໃດເພື່ອໃຫ້ຄວາມເຊື່ອຂອງພວກເຮົາກະຈ່າງແຈ້ງວ່າພຣະເຢຊູເປັນອົງພຣະຜູ້ເປັນເຈົ້າ ແລະເປັນພຣະເຈົ້າ?

ນຳໃຊ້ໃນຊີວິດ

ພວກເຮົາບໍ່ສາມາດເຮັດອັນໃດໄດ້ດ້ວຍຕົວພວກເຮົາເອງເພື່ອຈະໄດ້ຊີວິດອັນຕລອດໄປເປັນນິດ. ພວກເຮົາທັງໝົດຕ້ອງຖິ້ມໃຈເກົ່າເອົາໃຈໃໝ່, ເຊື່ອ, ແລະຕິດຕາມພຣະອົງ. ຈົ່ງເລືອກເອົາການນຳໃຊ້ໃນຊີວິດອັນນຶ່ງໃນລຸ່ມນີ້:

➤**ເຊື່ອ.** ພຣະເຢຊູຍັງຊົງພຣະຊົນຢູ່, ແລະພຣະອົງຮຽກເອີ້ນທ່ານໃຫ້ຕິດຕາມພຣະອົງ.

➤**ສອບສວນ.** ຊອກຫາຄວາມຈິງຂອງການຄືນມາຈາກຕາຍສຳລັບຕົວທ່ານເອງ.

➤**ແບ່ງປັນ.** ແມ່ນໃຜທີ່ພຣະເຈົ້າເອົາໃສ່ໃນໃຈຂອງທ່ານເພື່ອໃຫ້ລາວໄດ້ຍິນຄວາມຈິງຂອງການຄືນມາຈາກຕາຍ?

ພຣະເຈົ້າບໍ່ໄດ້ຕໍ່ຕ້ານການຢູ່ດີມີສຸກ; ພຣະອົງປະສົງແນວນັ້ນ! ແຕ່ວ່າຈົ່ງໃຫ້ພຣະເຈົ້າເປັນແຫຼ່ງທີ່ມາແຫ່ງຄວາມຊົມຊື່ນຍິນດີຂອງທ່ານ. ຄວາມຊົມຊື່ນຍິນດີພົບຢູ່ໃນພຣະອົງແລະຄວາມຫວັງອັນແນ່ນອນຂອງການຄືນພຣະຊົນຂອງພຣະອົງ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA

ບົດຮຽນໂຮງຮຽນວັນອາທິດ
ວັນອາທິດ ທີ 28 ເມສາ 2019 (4-28-2019)

ຂາຍທຸກສິ່ງທີ່ທ່ານມີ

ແມ່ນຫຍັງຄືສິ່ງນຶ່ງທີ່ອາດຈະເປັນບັນຫາຂອງທ່ານ ໃນການຢູ່ໂດຍປາສຈາກມັນ?

ຈຸດສຳຄັນໃນບົດຮຽນ: ຈົ່ງເລືອກວ່າຈະເອົາພຣະເຢຊູຫຼືຊັບສິນຝ່າຍໂລກ, ເພາະວ່າທ່ານບໍ່ສາມາດຢູ່ເພື່ອທັງສອງ.

ພຣະຄັມພີຕອບສນອງຕໍ່ຊີວິດ:

ນຶ່ງໃນລາຍການທີ່ຂ້າພະເຈົ້າມັກທີ່ສຸດໃນໂທຣະທັດຄືມີພາກນຶ່ງທີ່ຜູ້ເປັນລຸງຂອງຜູ້ສະແດງເປັນພຣະເອກໄດ້ເສັ້ງຊີວິດ. ລຸງຄົນນັ້ນຢາກໃຫ້ຝັງລາວກັບສິ່ງຂອງຕ່າງໆທີ່ລາວມັກທີ່ສຸດ: ບັດຂອງນັກກີລາເບັສບໍຊື່ດັງ, ໜຶ່ງນລາງວັນເກົ່າ, ໝວກກັນກະທົບທີ່ລາວໃສ່ໃນສນາມຮົບ ເອີ, ຫວັງວ່າທ່ານຄົງເຂົ້າໃຈແລ້ວ. ລາວມີສິ່ງຂອງຢ່າງຫຼວງຫຼາຍໃນຫີບກະໂລງຂອງລາວພວກເຂົາໄດ້ໃຊ້ເວລາ 22 ນາທີເຕັມໆ ໃນພາກນັ້ນທີ່ພະຍາຍາມຄິດຫາທາງຈະອັດກະໂລງ ໂດຍບໍ່ໃຫ້ຂອງຕ່າງໆແຕກຫັກ.

ຂ້າພະເຈົ້າມ່ວນຊື່ນໃນພາກນີ້ເພາະວ່າມັນເປັນການໂງ່ງ່າວ. ພວກເຮົາຮູ້ວ່າສິ່ງຂອງເຫຼົ່ານີ້ຈະບໍ່ຢູ່ກັບພວກເຮົາເມື່ອພວກເຮົາຕາຍ, ມັນຈະບໍ່ມີຄວາມໝາຍຫຍັງໝົດ; ເຖິງປານນັ້ນ, ບາງຄົນໃນໂລກນີ້ໄດ້ຖືກຝັງກັບສິ່ງຂອງ ຫຼືວາງແຜນໄວ້ທີ່ຈະຝັງກັບວັດຖຸສິ່ງຂອງທີ່ພວກເຂົາເປັນກັມມະສິດ ມັນເປັນຄວາມຈິງ. ພວກເຮົາ "ບໍ່ສາມາດເອົາມັນໄປກັບພວກເຮົາ," ແຕ່ວ່າມັນຍັງສາມາດເປັນການງ່າຍທີ່ຈະຫຸ້ມຫໍ່ໃນສິ່ງຂອງທັງໝົດຂອງພວກເຮົາ. ສິ່ງຂອງຕ່າງໆທີ່ພວກເຮົາມີບໍ່ໄດ້ນຳພວກເຮົາໃຫ້ເຂົ້າໃກ້ຊິດກັບພຣະເຈົ້າ, ແຕ່ວ່າໃນບາງກໍຣະນີ, ຄືກັບເສດຖີໜຸ່ມຄົນນຶ່ງໃນພຣະທັມມັດທາຍ ບົດ 19, ວັດຖຸສິ່ງຂອງຕ່າງໆ ທີ່ພວກເຮົາມີສາມາດດຶງພວກເຮົາໃຫ້ຫ່າງຈາກພຣະອົງ.

ພຣະຄັມພີກ່າວວ່າຢ່າງໃດ? (ຈົ່ງເບິ່ງຕາມຂໍ້ 1, 2 ແລະ 3)

ການສຶກສາພຣະຄັມພີ

1. <u>ມັດທາຍ 19:16-20</u>

16 ແລະເບິ່ງແມ, ມີຄົນນຶ່ງເຂົ້າມາທູນພຣະອົງວ່າ, "ພຣະອາຈານເອີຍ, ຂ້າພຣະອົງຈະຕ້ອງເຮັດດີປະການໃດຈຶ່ງຈະໄດ້ຊີວິດອັນຕລອດໄປເປັນນິດ". 17. ພຣະອົງຊົງຕອບວ່າ, "ເປັນຫຍັງທ່ານຖາມເຮົາເຖິງສິ່ງທີ່ດີ ຜູ້ດີມີພຽງຜູ້ດຽວ ຖ້າທ່ານປາຖນາຈະເຂົ້າໃນຊີວິດ ໃຫ້ຖືຮັກສາຂໍ້ບັນຍັດທັງຫຼາຍໄວ້". 18. ຜູ້ນັ້ນທູນຖາມວ່າ, "ພຣະບັນຍັດຂໍ້ໃດ?" ພຣະເຢຊູຊົງຕອບວ່າ, "ຄືຂໍ້ທີ່ວ່າ ຢ່າຂ້າຄົນ ຢ່າມົດສາຈານຈາກຜົວຈາກເມັຽ ຢ່າລັກຊັບ ຢ່າເປັນພຍານບໍ່ຈິງ. 19. ຈົ່ງນັບຖືບິດາມານດາຂອງຕົນ ແລະຈົ່ງຮັກເພື່ອນບ້ານເໝືອນຮັກຕົນເອງ". 20. ຄົນໜຸ່ມນັ້ນທູນຖາມພຣະອົງອີກວ່າ, "ຂໍ້ເຫຼົ່ານັ້ນຂ້າພຣະອົງໄດ້ຖືຮັກສາມາແລ້ວ ຂ້າພຣະອົງຍັງຂາດສິ່ງໃດອີກ".

ພວກເຮົາຮູ້ສາມຢ່າງກ່ຽວກັບຊາຍຄົນນັ້ນທີ່ໄດ້ມາຫາພຣະເຢຊູ: ລາວຍັງໜຸ່ມຢູ່ (ຂໍ້ 20). **ລາວເປັນຄົນຮັ່ງມີ** (ຂໍ້ 23). **ລາວເປັນເຈົ້ານາຍ** (ລກ. 18:18). **ລາວອາດຈະເປັນຜູ້ນຳຢູ່ໃນໂຮງທັມມະເທສນາ. ພວກຜູ້ນຳສາສນາຫຼາຍຄົນໄດ້**

ຖາມພຣະເຢຊູດ້ວຍຕັ້ງໃຈວ່າຈະຫ້າງແຮ້ວຈັບຜິດພຣະອົງຢ່າງໃດຢ່າງນຶ່ງ, ແຕ່ວ່າພວກເຮົາບໍ່ມີພິລຸດອັນໃດກັບຊາຍໜຸ່ມຄົນນີ້ເລີຍ. ແມ້ແຕ່ລາວໄດ້ເອີ້ນພຣະເຢຊູວ່າ "ພຣະອາຈານ," ເບິ່ງຊົງຄືລາວຢາກຈະຮຽນຈາກພຣະອົງ.

ສິ່ງທີ່ລາວຢາກຮຽນອາດຈະເຫັນວ່າເປັນຄຳຖາມຂອງທົ່ວໂລກ, ຊຶ່ງທ່ານເອງອາດຈະຖາມໃນບາງຄາວວ່າ: "ຂ້າພຣະອົງຈະຕ້ອງເຮັດດີປະການໃດຈຶ່ງຈະໄດ້ຊີວິດອັນຕລອດໄປເປັນນິດ?" ຊາຍໜຸ່ມຄົນນີ້ໄດ້ພະຍາຍາມໃຫ້ທາງຂອງລາວ ໄປຫາສວັນນັ້ນແນ່ນອນ ໂດຍຜ່ານການກະທຳຄວາມດີຕ່າງໆ. ມັນຈະແຈ້ງແລ້ວຈາກຄຳຕອບຂອງລາວໃນຂໍ້ 20 ທີ່ວ່າ, ຊຶ່ງບໍ່ກ່ຽວກັບການປະພຶດຕ່າງໆຂອງລາວ, ລາວສຳນຶກໄດ້ວ່າຝ່າຍຈິດວິນຍານຂອງລາວຕ້ອງການບາງຢ່າງທີ່ແຕກຕ່າງ. ຂ້າພະເຈົ້າວາດພາບລາວກຳລັງຢືນຄຽງຂ້າງພຣະເຢຊູແລະພວກເຫຼົ່າສາວົກ, ມີເຄື່ອງຂີດຂຽນໃນມື, ກຳລັງລໍຖ້າຕຳຕອບທີ່ມີຄວາມໝາຍອັນເລິກເຊິ່ງຂອງພຣະເຢຊູ.

ພຣະເຢຊູໄດ້ທ້າທາຍທາງຄວາມຄິດຂອງລາວດ້ວຍຄຳຖາມນຶ່ງ, "ເປັນຫຍັງທ່ານຖາມເຮົາເຖິງສິ່ງທີ່ດີ? ຜູ້ດີມີພຽງຜູ້ດຽວເທົ່ານັ້ນ." ນີ້ແມ່ນເຄື່ອງໝາຍອັນທຳອິດທີ່ຊີ້ໃຫ້ເຫັນວ່າສິ່ງຈຳເປັນບໍ່ແມ່ນຄວາມດີທີ່ພວກເຮົາເຮັດ ແຕ່ແມ່ນຜູ້ດີແຕ່ຜູ້ດຽວ. ບັນຫານັ້ນແມ່ນ ເມື່ອພວກເຮົາຄິດວ່າພວກເຮົາສາມາດເປັນຄົນດີໃນການໄດ້ຮັບສິດໄປຢືນກັບພຣະເຈົ້າ. ພວກເຮົາຖວາຍແກ່ອົງການຊ່ວຍເຫຼືອຄົນທຸກຍາກຫຼືຜູ້ປະສົບພັຍ. ພວກເຮົາອາສາສມັກໃຊ້ເວລາຂອງພວກເຮົາຕໍ່ອົງການທີ່ຍິ່ງໃຫຍ່. ສິ່ງທັງປວງເຫຼົ່ານີ້, ພວກເຮົາມີໃຈເມດຕາປານີແລະເປັນຄົນດີ. ແຕ່ວ່າພວກເຮົາຜິດພາດຢ່າງໜ້າເສົ້າໂສກ ຖ້າຫາກວ່າເຮັດສິ່ງເຫຼົ່ານີ້ດ້ວຍຄວາມຄິດຂອງພວກເຮົາເອງ "ເຂົ້າສູ່ສວັນຕາມການເຮັດຕາມລຳດັບ."ແມ່ນຫຍັງທີ່ໜ້າຍົກຍ້ອງກ່ຽວກັບຊາຍໜຸ່ມຄົນນີ້ທີ່ໄດ້ເຂົ້າໄປຫາບທາມພຣະເຢຊູ?

ພຣະເຢຊູໄດ້ເອົາໃບກວດກາໃຫ້ຊາຍໜຸ່ມຄົນນີ້ທີ່ລາວກຳລັງຊອກຫາ. ພຣະເຢຊູໄດ້ໃຊ້ພຣະບັນຍັດທັງຫົກເພາະວ່າຊາຍຊາວຢິວອາດຈະຄຸ້ນເຄີຍຕໍ່ບັນຍັດເຫຼົ່ານັ້ນ. ບັນຍັດທັງຫົກເຫຼົ່ານີ້ອອກມາຈາກພຣະບັນຍັດສິບປະການໂດຍກົງແລະມີສ່ວນພົວພັນກັບຄົນອື່ນໆ. ເມື່ອມາເຖິງການປະພຶດ, ຊາຍຄົນນີ້ກໍເຮັດໄດ້ດີ. ແຕ່ລາວໄດ້ຮູ້ຈັກອີກວ່າອັນນີ້ຍັງບໍ່ພຽງພໍ. ລາວຍັງຂາດບາງສິ່ງບາງຢ່າງຢູ່.

ຊາຍໜຸ່ມຜູ້ນີ້ອາດຈະເຊື່ອຟັງບັນຍັດເຫຼົ່ານີ້ແບບພາຍນອກ ແຕ່ວ່າການເຊື່ອຟັງຂອງລາວເບິ່ງເໝືອນວ່າບໍ່ມີພັນທະ. ການເຊື່ອຟັງບັນຍັດຕ່າງໆຕາມທັມມະດາແມ່ນບໍ່ພຽງພໍ. ພຣະເຈົ້າບໍ່ປະສົງພຽງແຕ່ການສະແດງອອກທາງພາຍນອກ. ການປະຕິບັດຕ່າງໆຂອງພວກເຮົາດີບໍ່? ບາງທີອາດຈະດີ. ແຕ່ວ່າການປະຕິບັດຕ່າງໆຂອງພວກເຮົາມັນບໍ່ຕົງກັບຫົວໃຈຂອງພວກເຮົາສເມີໄປ. "ຈົ່ງຮັກສາໃຈຂອງເຈົ້າໄວ້ໃຫ້ດີ ດີກວ່າສິ່ງທັງຫຼາຍທີ່ເຈົ້າຮັກສາໄວ້ນັ້ນ ເພາະແຫຼ່ງແຫ່ງຊີວິດເລີ້ມຕົ້ນອອກມາຈາກໃຈ" (ສພສ. 4:23). ຫົວໃຈຂອງພວກເຮົາຕັດສິນໃຈເຈດຕະນາແລະການກະທຳຂອງພວກເຮົາ, ແລະພຣະເຈົ້າຢາກໃຫ້ຫົວໃຈຂອງພວກເຮົາເຊື່ອຟັງຄຳຮຽກເອີ້ນຂອງພຣະອົງ.

2. <u>ມັດທາຍ 19:21-22</u>

21 ພຣະເຢຊູຊົງຕອບວ່າ, "ຖ້າທ່ານປາຖນາຢາກເປັນຜູ້ດີຄົບຖ້ວນ ຈົ່ງໄປຂາຍບັນດາສິ່ງຂອງຊຶ່ງທ່ານມີຢູ່ ແຈກທານແກ່ຄົນອານາຖາ ແລ້ວທ່ານຈະມີຊັບສົມບັດໃນສວັນແລະຈົ່ງຕາມເຮົາມາເສັຽ". 22. ເມື່ອຄົນໜຸ່ມໄດ້ຍິນດັ່ງນັ້ນກໍອອກໄປເປັນທຸກໜັກໃຈເພາະຕົນມີຊັບສິ່ງຂອງຈຳນວນຫຼາຍ.

ຢາກຄົບຖ້ວນບໍລິບູນຮ້ອຍເປີເຊັນບໍ່? ແມ່ນແລ້ວ. ນີ້ຄືສິ່ງທີ່ທ່ານຈະເຮັດ: ຈົ່ງຂາຍສິ່ງຂອງຕ່າງໆທີ່ທ່ານມີຢູ່. ແຈກຢາຍໃຫ້ຄົນທຸກຍາກເພາະວ່າຊັບສົມບັດຂອງທ່ານຢູ່ໃນສວັນ. ຕິດຕາມພຣະເຢຊູ. ງ່າຍໜ້ອຍດຽວ. ແມ່ນບໍ່?

ຖ້າວ່າພຣະເຢຊູໄດ້ບອກທ່ານໃຫ້ໄປຂາຍສິ່ງຂອງຕ່າງໆທີ່ທ່ານເປັນເຈົ້າຂອງໃນການທີ່ຈະຕິດຕາມພຣະອົງ, ທ່ານຈະສາມາດເຮັດໄດ້ບໍ່? ຂາຍເຮືອນ. ຣົດ. ໂທຣະທັດ. ກັບການຕິດຕໍ່ທາງຈົດໝາຍຂອງແມ່ຂອງແມ່ຕູ້ກັບພໍ່ຂອງພໍ່ຕູ້ຂອງທ່ານ. ອູ່ນອນຂອງເດັກນ້ອຍທີ່ໄດ້ສືບທອດສິ່ງຕໍ່ກັນຜ່ານມາແຕ່ລະລຸ້ນຄົນ.

ພຣະເຢຊູໄດ້ຖາມຊາຍໜຸ່ມໃຫ້ເສັງສະລະອັນໃຫຍ່ຫຼວງ. ລາວບໍ່ພຽງແຕ່ຈະຂາຍສິ່ງຂອງຕ່າງໆທີ່ລາວເປັນເຈົ້າຂອງ; ລາວຍັງຕ້ອງເອົາເງິນທັງໝົດຈາກການຂາຍນັ້ນແຈກຢາຍແກ່ຄົນອື່ນ! ໝົດທຸກທຸກຢ່າງ. ໃຫ້ໄປຈົນກ້ຽງ. ແຕ່ວ່າຢ່າໃຫ້ຕິດຄ້າງຄາໃນສິ່ງທີ່ທ່ານມີຢູ່.

ແມ່ນຫຍັງຄືຄຳຕອບສນອງທຳອິດຂອງທ່ານຕໍ່ຄຳຕອບຂອງພຣະເຢຊູໃນຂໍ້ 21?

ການຍົກເລີກຕໍ່ສິ່ງທີ່ພວກເຮົາມີຢູ່ນັ້ນບໍ່ແມ່ນຈຸດຂອງເຣື່ອງນີ້. ຂ່າວປະເສີດທັງໝົດບໍ່ວ່າຍາມໃດມີການບັນທຶກໄວ້ວ່າ ພຣະເຢຊູບໍ່ໄດ້ບອກຜູ້ໃດໃຫ້ເຮັດແນວນັ້ນ. ໃນການຕິດຕາມພຣະເຢຊູ, ຊັກຂ່າຍໄດ້ແຈກຢາຍເຄິ່ງນຶ່ງຂອງສິ່ງທີ່ລາວມີຢູ່ແລະຈ່າຍຄືນສີ່ເທົ່າຕໍ່ຜູ້ທີ່ລາວຕິດໜີ້ (ລກ. 19:1-10). ໃນຄຳອຸປະມາຂອງພຣະອົງກ່ຽວເຣື່ອງເງິນຕາລັນຕົນ (ຂໍ້ 11-27). ດັ່ງນັ້ນແລ້ວເປັນຫຍັງພຣະເຢຊູຈຶ່ງໄດ້ອອກຄຳສັ່ງຢ່າງເຂັ້ມງວດກັບຊາຍໜຸ່ມຜູ້ນີ້? ພຣະເຢຊູຊົງຊາບວ່າລາວຮັກວັດຖຸສິ່ງຂອງຝ່າຍໂລກນີ້ຫຼາຍກວ່າລາວຮັກພຣະເຢຊູ.

ການຕິດຕາມພຣະເຢຊູແມ່ນໃຫ້ພຣະອົງຢູ່ເໜືອທຸກໆສິ່ງໃນຊີວິດຂອງພວກເຮົາ. ຖ້າຫາກວ່າສິ່ງຂອງເຫຼົ່ານີ້ຫາກກີດຂວາງການເຂົ້າເຝົ້າແລະການທຸ້ມເທອັນເຕັມສ່ວນຂອງພວກເຮົາ, ຈົ່ງປະຖິ້ມສິ່ງເຫຼົ່ານັ້ນເສັງ.

ຂ້າພະເຈົ້າມີເພື່ອນສອງສາມຄົນທີ່ໄດ້ປະທຸຣະກິດທີ່ໄດ້ກຳໄລດີແລະຕຳແໜ່ງທີ່ມີອຳນາດແລ້ວໄດ້ຕິດຕາມການຮຽກເອີ້ນຂອງພຣະເຈົ້າໃຫ້ຮັບໃຊ້ວຽກງານຂອງພຣະເຈົ້າແບບເຄ່ງເວລາ (ທຳງານພາຍນອກແລະເຮັດພັນທະກິດຂອງພຣະເຈົ້າໃນໂບດ). ຄວາມວາງໃຈເຊື່ອຂອງພວກເຂົາເຈົ້າບໍ່ໄດ້ຂຶ້ນກັບຄວາມສາມາດຂອງພວກເຂົາເຈົ້າເອງຫຼືໜ້າທີ່ທີ່ພວກເຂົາເຈົ້າກຳລັງເຮັດຢູ່ນັ້ນ. ຄວາມວາງໃຈເຊື່ອຂອງພວກເຂົາເຈົ້າແມ່ນຢູ່ໃນພຣະເຢຊູ. ພວກເຂົາເຈົ້າໄວ້ວາງໃຈໃນພຣະອົງພໍທີ່ຮູ້ຈັກວ່າພຣະອົງຈະປະທານພຣະພອນສຳລັບຄອບຄົວຂອງເຂົາເຈົ້າ.

ຜູ້ປົກຄອງໜຸ່ມຮັ່ງມີຄົນນີ້ຄວນຈະຮູ້ຈັກສິ່ງນີ້ເຊັ່ນກັນ, ລາວຄົງຈະບໍ່ໄດ້ຍ່າງໜີໄປ. ລາວບໍ່ສາມາດເຮັດໄດ້. ຫົວໃຈຂອງລາວຖືກຫໍ່ຫຸ້ມດ້ວຍສິ່ງຂອງທັງໝົດຂອງລາວຊຶ່ງເລີກລາຈາກພວກມັນບໍ່ໄດ້ເລີຍ. ສຳລັບລາວ, ສິ່ງທີ່ລາວເປັນເຈົ້າຂອງແມ່ນສຳຄັນ ທີ່ມັນກັກລາວໄວ້ຈາກການຮູ້ຈັກອົງພຣະຜູ້ເປັນເຈົ້າຢ່າງແທ້ຈິງ.

ຊາຍຄົນນີ້ໄດ້ແລ່ນໄປຫາພຣະເຢຊູຢ່າງຕັ້ງໃຈ, ຄຸເຂົ່າລົງແລະກຳພ້ອມທີ່ຈະເຮັດທຸກສິ່ງເພື່ອຈະມີບ່ອນຢູ່ຖາວອນໃນສວັນ(ມາຣະໂກ 10:17). ໂອ້, ເກືອບໝົດທຸກຢ່າງ. ຊາຍໜຸ່ມຜູ້ນີ້ຕ້ອງການຊີວິດອັນຕລອດໄປເປັນນິດ, ແຕ່ວ່າບໍ່ແມ່ນໃນຣາຄານັ້ນ. ໃນທີ່ສຸດ, ກໍແມ່ນສິ່ງທີ່ເປັນຂອງລາວນັ້ນແຫຼະທີ່ເປັນເຈົ້າຂອງໆລາວ. ແລະດັ່ງນັ້ນແຫຼະລາວໄດ້ພາດຕໍ່ສິ່ງທີ່ຍິ່ງໃຫຍ່ກວ່າຫຼາຍໆເທົ່າ.

ຄຳແນະນຳຂອງພຣະເຢຊູຕໍ່ຊາຍໜຸ່ມຜູ້ນີ້ສາມາດນຳໃຊ້ຕໍ່ພວກເຮົາທັງໝົດແນວໃດ?

3. ມັດທາຍ 19:23-26

23 ພຣະເຢຊູຊົງກ່າວກັບພວກສາວົກຂອງຕົນວ່າ, "ເຮົາບອກທ່ານຕາມຄວາມຈິງວ່າ ຄົນຮັ່ງມີຈະເຂົ້າໄປໃນຣາຊແຜ່ນດິນສວັນກໍຍາກ. 24. ເຮົາບອກພວກທ່ານອີກວ່າ ໂຕໂອດໂອຈະລອດຮູເຂັມກໍ່າຍກວ່າຄົນຮັ່ງມີຈະເຂົ້າໄປໃນແຜ່ນດິນຂອງພຣະເຈົ້າ". 25. ເມື່ອພວກສາວົກໄດ້ຍິນດັ່ງນັ້ນກໍປລາດໃຈຫຼາຍ ຈຶ່ງເວົ້າວ່າ, "ຖ້າຢ່າງນັ້ນໃຜຈະລອດພົ້ນໄດ້". 26. *ພຣະເຢຊູຫອດພຣະເນດພວກສາວົກແລ້ວຊົງກ່າວວ່າ, "ຝ່າຍມະນຸດກໍເຫຼືອກຳລັງທີ່ຈະເຮັດໄດ້ ແຕ່ຝ່າຍພຣະເຈົ້າຊົງເຮັດໄດ້ທຸກສິ່ງ".*

ພຣະເຢຊູໄດ້ກ່າວປໂຍກທີ່ເລິກເຊິ່ງຕໍ່ພວກສາວົກຂອງພຣະອົງ ຂນະທີ່ຊາຍໜຸ່ມຮັ່ງມີຄົນນັ້ນໄດ້ຍ່າງໜີ ແລະພຣະອົງຍ້ຳເຖິງສອງເທື່ອ: ຄົນຮັ່ງມີຈະເຂົ້າໄປໃນຣາຊແຜ່ນດິນສວັນກໍຍາກ. ເມື່ອພວກສາວົກໄດ້ຍິນດັ່ງນັ້ນແລ້ວ ພວກເຂົາເຈົ້າກໍສັບສົນ. ມະນຸດທັງປວງເຊື່ອຢ່າງທັມມະດາວ່າຄວາມຮັ່ງມີແມ່ນພຣະພອນຂອງພຣະເຈົ້າ. ຖ້າວ່າຄົນນຶ່ງຫາກຮັ່ງ

ມີ, ລາວກໍຄິດວ່າຕົວເອງເໝາະທີ່ສຸດສຳລັບສວັນ. ເໜືອໄປກວ່ານັ້ນ, ຜູ້ປົກຄອງຄົນນີ້ຍັງໄດ້ເປັນຄົນທີ່ດີໂດຍມາດຕະຖານຂອງຄົນທົ່ວໄປ. ລາວໄດ້ເຊື່ອຟັງພຣະບັນຍັດແລະກໍເປັນທີ່ໜ້ານັບຖືຈາກປວງຊົນ.

ເປັນຫຍັງຈຶ່ງຍາກສຳລັບຄົນຮັ່ງມີທີ່ຈະເຂົ້າໄປໃນສວັນ? ຕາບໃດທີ່ຄວາມຮັ່ງມີຂອງພວກເຂົາເຈົ້າຍັງເປັນໃຫຍ່ກວ່າສິ່ງອື່ນໃດ, ພວກເຂົາເຈົ້າຂາດຄວາມສັມພັນກັບພຣະເຈົ້າທີ່ພຣະອົງຕ້ອງປະສົງ. ພວກເຂົາເຈົ້າເພິ່ງອາສັຍໃນສິ່ງເຂົາເຈົ້າມີແທນທີ່ຈະເພິ່ງອາສັຍພຣະເຈົ້າ. ຊຶ່ງເປັນຈິງສຳລັບພວກເຮົາເຊັ່ນກັນ. ເມື່ອພວກເຮົາພິບເຄື່ອງໝາຍປະຈຳຕົວຂອງພວກເຮົາໃນພຣະເຢຊູແລະບໍ່ແມ່ນຢູ່ກັບວັດຖຸສິ່ງຂອງໆໂລກ, ພວກເຮົາມີປະສົບການກັບ:

ເສລີພາບ. ເມື່ອພວກເຮົາຫາກວາງໃຈເຊື່ອແລະຕິດຕາມພຣະເຢຊູ, ສາຍໂສ້ຜູກມັດການເປັນຂ້າທາດກໍຂາດໄປ, ເຮັດໃຫ້ພວກເຮົາດຳລົງຊີວິດໃນເສລີພາບ. ພວກເຮົາບໍ່ຈຳເປັນຕ້ອງຢູ່ໃຕ້ຄວາມໂມໂຫ, ຄວາມຂົມຂື່ນ, ຄວາມສົງສັຍສ່ວນຕົວ, ແລະການແກ້ແຄ້ນອີກຕໍ່ໄປ.

ສັນຕິສຸກ. ສັນຕິສຸກທີ່ພວກເຮົາຊອກຫາແລະປາຖນາແມ່ນມາຈາກພຣະເຢຊູ ແລະພຣະເຢຊູເທົ່ານັ້ນ.

ຄວາມຊົມຊື່ນຍິນດີ. "ຂໍພຣະເຈົ້າຜູ້ຊົງປະທານຄວາມຫວັງ ຊົງໂຜດໃຫ້ເຈົ້າທັງຫຼາຍບໍຣິບູນດ້ວຍຄວາມຊົມຊື່ນຍິນດີ ແລະຄວາມສຸກໃນຄວາມເຊື່ອ ເພື່ອເຈົ້າຈະໄດ້ເຕັມລົ້ນດ້ວຍຄວາມຫວັງໃຈ ໂດຍຣິດເດດຂອງພຣະວິນຍານບໍຣິສຸດ". (ໂຣມ 15:13).

ຜູ້ປົກຄອງໜຸ່ມຮັ່ງມີຄົນນີ້ໄດ້ພາດພັ້ງຕໍ່ສິ່ງເຫຼົ່ານີ້. ພວກເຮົາບໍ່ສາມາດມີຊີວິດຢູ່ "ໃນທັງໝົດ" ສຳລັບພຣະເຢຊູຂນະທີ່ກຳລັງມີວເມົາໃນສິ່ງຕ່າງໆທີ່ພວກເຮົາເປັນເຈົ້າຂອງ. ມັນເປັນໄປບໍ່ໄດ້ທີ່ຈະມີຄວາມຄິດຂອງພຣະຄຣິດເມື່ອຄວາມຄິດຂອງພວກເຮົາຫາກເຕັມດ້ວຍບັນຊີລົງທຶນດ້ານການເງິນຂອງພວກເຮົາ. ຄວາມສັມພັນຂອງພວກເຮົາກັບພຣະເຈົ້າຄວນຈະເປັນສູນກາງຂອງທຸກໆສິ່ງທີ່ພວກເຮົາຕັ້ງໄວ້ໃນຫົວໃຈຂອງພວກເຮົາ.

ໃນທາງໃດແດ່ທີ່ຄວາມຮັ່ງມີແລະສິ່ງຂອງທີ່ເປັນຂອງພວກເຮົາ ມາກີດຂວາງໃນການຕິຕາມພຣະເຢຊູ?

ນຳໃຊ້ໃນຊີວິດ

ການມີຊັບສິນບໍ່ເປັນສິ່ງທີ່ຜິດຈົນກວ່າມັນເຂົ້າມາກີດຂວາງຄວາມສຳພັນຂອງພວກເຮົາກັບພຣະເຈົ້າ. ຈົ່ງເລືອກເອົາການນຳໃຊ້ໃນຊີວິດອັນໃດອັນນຶ່ງໃນຂ້າງລຸ່ມນີ້:

- **ໄວ້ວາງໃຈ**. ຖ້າວ່າທ່ານຫາກພະຍາຍາມເປັນຄົນດີແລະມີສິນທັມໃນການທີ່ຈະໄດ້ໄປຢືນກັບພຣະເຈົ້າ, ຈົ່ງຮັບຮູ້ຄວາມຄົບຖ້ວນຂອງມັນ. ໄວ້ວາງໃຈພຣະຄຣິດແລະເຊື່ອຟັງພຣະຄຳຂອງພຣະອົງຂນະທີ່ຕອບສນອງຕໍ່ພຣະຄຸນຂອງພຣະອົງໃນຊີວິດຂອງທ່ານ.
- **ກວດກາ**. ຍ່າງເລາະຕາມບ້ານເຮືອນຂອງທ່ານແລະເບິ່ງສິ່ງຕ່າງໆທີ່ທ່ານເປັນເຈົ້າຂອງ. ກວດຄືນເບິ່ງທຸກໆແຖວຂອງໃບລາຍງານປະຈຳເດືອນຂອງການເງິນຈາກທະນາຄານຂອງທ່ານ. ສິ່ງທີ່ທ່ານຊື້ແລະເປັນເຈົ້າຂອງນັ້ນໄດ້ຊີ້ໃຫ້ເຫັນຄວາມສຳຄັນກ່ຽວກັບທ່ານຫຍັງແດ່? ພິຈາຣະນາຊອກຫາທາງທີ່ທ່ານສາມາດໃຊ້ສິ່ງເຫຼົ່ານີ້ເພື່ອພຣະເຈົ້າ.
- **ຂາຍ**. ຂາຍສິ່ງທີ່ທ່ານບໍ່ຕ້ອງການຫຼືແຈກຈ່າຍມັນໄປ. ຖ້າທ່ານມີສິ່ງຂອງທີ່ກີນເວລາຂອງທ່ານໃນທາງທີ່ທຳລາຍສຸຂພາບຫຼືທິດລອງທ່ານໃຫ້ຈົດຈ່ໍໃສ່ສິ່ງອື່ນແຕ່ບໍ່ແມ່ນພຣະຄຣິດ, ຈົ່ງຂາຍມັນ. ຢ່າໃຫ້ສິ່ງໃດມາຂວາງກັ້ນລະຫວ່າງຕົວທ່ານແລະການຕິດຕາມພຣະຄຣິດ.

ພຣະເຈົ້າອາດຈະບໍ່ຮ້ອງພວກເຮົາທຸກຄົນໃຫ້ແຈກຢາຍເຄື່ອງຂອງອອກໄປ, ແຕ່ວ່າພຣະອົງປະສົງວ່າໃຫ້ພຣະອົງເປັນສູນກາງຂອງຊີວິດພວກເຮົາ. ໃຫ້ພວກເຮົາໝັ້ນໃຈວ່າອັນນັ້ນຄືປະເດັນສຳຄັນທີ່ສຸດໃນຊີວິດຂອງພວກເຮົາ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA

ບົດຮຽນໂຮງຮຽນວັນອາທິດ
ວັນອາທິດທີ 5 ພຶສພາ 2019 (5-5-2019)

ຈົ່ງຮັກສັດຕຣູຂອງທ່ານ

ຄົນປານໃດແລ້ວທີ່ທ່ານເຫັນສັດຕຣູຜູ້ນຶ່ງກາຍມາເປັນມິດ ?

ຈຸດສຳຄັນໃນບົດຮຽນ: ຈົ່ງຮັກສັດຕຣູຂອງທ່ານເຊັ່ນດຽວກັນກັບພຣະເຢຊູຄຣິດຮັກທ່ານ.

ພຣະຄັມພີຕອບສນອງຕໍ່ຊີວິດ:

ຍາມເວົ້າເຣື່ອງກິລາ, ທ່ານຕ້ອງເວົ້າລົບລູ່ທີມອື່ນຫຼືແຟນຂອງເຂົາ. ເວລາພນັກງານຄົນໃດຄົນນຶ່ງດູຖູກທ່ານຕໍ່ໜ້ານາຍ, ທ່ານຄວນເຮັດໃຫ້ມັນຖືກດູຖູກໜັກກວ່າ. ໃນເມື່ອຜູ້ໃດຜູ້ນຶ່ງຊຸບຊິບເຣື່ອງທ່ານແຜ່ກວ້າງອອກໄປ, ທ່ານກໍຄວນເວົ້າຊຸບຊິບນິນທາ ແລະເວົ້າໃຫ້ເຈັບແສບກວ່າ. ເມື່ອມີຜູ້ໃດຜູ້ນຶ່ງເຮັດຜິດກະທົບຕໍ່ທ່ານ, ທ່ານກໍຄວນເວົ້າໃສ່ຮ້າຍຄົນນັ້ນຕອບ. ເມື່ອຄົນໃນຄົວເຮືອນເຮັດຜິດຕໍ່ທ່ານຊ້ຳແລ້ວຊ້ຳເລົ່າ, ທ່ານຄວນປະຖິ້ມລາວກຳຈັດລາວໄປຈາກຊີວິດທ່ານ ແລະ ບໍ່ຕ້ອງໃຫ້ອະພັຍໃຜຈັກເທື່ອ.

ທ່ານຄວນເຮັດຢ່າງນັ້ນບໍ? ນັ້ນແມ່ນວິທີທາງທີ່ໂລກປາຖນາໃຫ້ທ່ານເຮັດ, ແລະ ສິ່ງດຽວກັນນີ້ກໍໄດ້ຝັງຢູ່ໃນສະພາບບາບຂອງທ່ານແລ້ວ. ແຕ່ພຣະເຢຊູຮຽກຮ້ອງເຮົາໃຫ້ມີທ່າທີຕ່າງ, ຄືທ່າທີດັ້ງເດີມ. ພຣະເຢຊູຮຽກຮ້ອງເຮົາໃຫ້ຮັກ, ຮັບໃຊ້, ອວຍພອນ ແລະ ອະທິຖານເພື່ອເຂົາ. ມັນເປັນການງ່າຍຕໍ່ຜູ້ທີ່ເຮົາຖືກໃຈ, ແຕ່ພຣະເຢຊູຮຽກຮ້ອງເຮົາເຮັດດັ່ງດຽວກັນນີ້ກັບສັດຕຣູຂອງເຮົາ. ນັ້ນລວມທັງຜູ້ນິນທາວ່າຮ້າຍເຮົາ, ດູໝິ່ນເຮົາ, ເວົ້າຂວັນເຮົາ, ທຳລາຍເຮົາ, ກະທັ້ງຜູ້ທີ່ຊັງເຮົາ. ພວກເຮົາຈະເຮັດຈັ່ງໃດໃນໂລກທີ່ເວົ້າວ່າ ຄວາມກຽດຊັງ ແລະ ຄວາມໂກດຮ້າຍ ເປັນຄຳຕອບ?

ພຣະຄັມພີກ່າວວ່າແນວໃດ? ລູກາ 6: 27-36 (ເບິ່ງຕາມຫົວຂໍ້ 1, 2 ແລະ 3).

ການສຶກສາພຣະຄັມພີ

1. <u>ລູກາ 6:27-28</u> :

27"ແຕ່ ເຮົາບອກທ່ານທັງຫຼາຍຜູ້ກຳລັງຟັງຢູ່ວ່າ ຈົ່ງຮັກສັດຕຣູຂອງພວກທ່ານ ຈົ່ງເຮັດດີແກ່ຜູ້ກຽດຊັງພວກທ່ານ. 28ຈົ່ງອວຍພອນແກ່ຜູ້ທີ່ປ້ອຍດ່າພວກທ່ານ, ຈົ່ງອ້ອນວອນເພື່ອຜູ້ທີ່ກ່າວຫາຮ້າຍຕໍ່ພວກທ່ານ.

ພຣະເຢຊູຮຽກຮ້ອງຜູ້ທີ່ຮູ້ຈັກ ແລະ ຕິດຕາມພຣະອົງ ໃຫ້ດຳເນີນຊີວິດທີ່ສະທ້ອນຜູ້ຊຶ່ງພຣະອົງເປັນ. ການຕິດຕາມພຣະເຢຊູໝາຍເຖິງການເປັນເໝືອນພຣະອົງ, ແລະນັ້ນໝາຍເຖິງເຮົາສະທ້ອນຄວາມຮັກພຣະອົງໂດຍທາງການກະທຳ ແລະການປະພຶດຂອງເຮົາ ແມ້ກະທັ້ງຕໍ່ຜູ້ທີ່ຊັງເຮົາ ໂດຍບໍ່ມີຂໍ້ຍົກເວັ້ນ ຫຼືຫລົບຫຼີກຢ່າງໃດ. ພວກເຮົາຄວນຮັກຢ່າງບໍ່ມີເງື່ອນໄຂ. ຄວາມຮັກທີ່ບໍ່ມີເງື່ອນໄຂເປັນແນວໃດ?

- **ໃຫ້ອະພັຍຜູ້ອື່ນ.** "ຮັກສັດຕຣູຂອງທ່ານ," ແລະຄວາມຮັກເລີ່ມຕົ້ນດ້ວຍການໃຫ້ອະພັຍ. ການໃຫ້ອະພັຍມັນຍາກ,

ແຕ່ເປັນສິ່ງທີ່ເຮັດໄດ້. ພຣະເຢຊູໄດ້ໃຫ້ຕົວຢ່າງແບບສົມບູນໃນການໃຫ້ອະໄພທີ່ໄມ້ກາງແຂນ. ເມື່ອພຣະອົງຊົງສິ້ນພຣະຊົນແທນເຮົາ, ພຣະອົງຊົງອ້ອນວອນວ່າ, "ໂອພຣະບິດາເຈົ້າ, ຂໍໂຜດອະໄພໂທດເຂົາ ເພາະວ່າເຂົາບໍ່ຮູ້ຈັກວ່າເຂົາກຳລັງເຮັດອັນໃດ "(ລູກາ 23:34). ເຊັ່ນດຽວກັບທີ່ພຣະເຈົ້າໄດ້ໃຫ້ອະໄພຄວາມບາບເຮົາ, ພວກເຮົາກໍຄວນອະໄພຄວາມບາບຄົນອື່ນ. ການອະໄພຈະປົດປ່ອນວ່າງໃນໃຈຂອງເຮົາບໍ່ໃຫ້ຄວາມຂົມຂື່ນ ຫຼືຄວາມກຽດຊັງປົ່ງຮາກຂຶ້ນໄດ້. ການໃຫ້ອະໄພເປັນການຕອບສນອງຕໍ່ການອະໄພຊຶ່ງພວກເຮົາໄດ້ຮັບຈາກພຣະເຈົ້າ. ໃນເມື່ອພຣະຄຣິດຊົງສິ້ນພຣະຊົນແທນຄວາມບາບຂອງເຮົາ, ພວກເຮົາກໍສາມາດໃຫ້ອະໄພຄົນອື່ນໃນຄວາມຜິດທີ່ເຂົາໄດ້ກະທຳຕໍ່ເຮົາເຊັ່ນດຽວກັນ.

- **ເຮັດດີຕໍ່ຜູ້ອື່ນ**. "ເຮັດສິ່ງດີຕໍ່ຜູ້ທີ່ຊັງທ່ານ." ການຮັບໃຊ້ຄົນອື່ນຮຽກຮ້ອງເຖິງຄວາມເຊື່ອ ໂດຍຮູ້ແລ້ວວ່າອົງພຣະຜູ້ເປັນເຈົ້າຊົງເປັນຜູ້ປະເສີດ ແລະພຣະອົງຊົງກະທຳຄວາມດີຂອງພຣະອົງຜ່ານເຮົາ. ຄວາມເຊື່ອເປັນສິ່ງທີ່ເຄື່ອນໄຫວໄປມາ. ຄວາມເຊື່ອຕ້ອງການການລິເລີ່ມ. ຄວາມເຊື່ອສແດງຫາສິ່ງທີ່ພໍພຣະທັຍພຣະເຈົ້າ ດ້ວຍການຮັບໃຊ້ຄົນທີ່ເຮົາບໍ່ຢາກຮັບໃຊ້ ຄົນທີ່ໂລກປະຖິ້ມ ຫຼືຫ້າມເຮົາບໍ່ໃຫ້ຮັກ. ພວກເຂົາເຄີຍເຮັດຜິດຕໍ່ເຮົາ ແຕ່ນັ້ນປາຍຂອງມື້ນັ້ນ, ພວກເຂົາຍັງເປັນຜູ້ທີ່ພວກເຮົາຖືກເອີ້ນໃຫ້ຮັກ ແລະຮັບໃຊ້. ບໍ່ມີສິ່ງໃດສາມາດຍັບຍັ້ງຄຣິສຕຽນ ໃນຄາວທີ່ວັທນະທັມເສື່ອມໂຊມ ດັ່ງພຣະຄຣິດໄດ້ສ່ອງສວ່າງຜ່ານເຮົາ ໃນຂນະທີ່ເຮົາເຮັດດີຕໍ່ຜູ້ທີ່ໄດ້ເຮັດຜິດຕໍ່ເຮົາ.

ທ່ານຮູ້ບໍ່ວ່າແມ່ນຜູ້ໃດເປັນແບບຢ່າງເຮັດຕາການສອນຂອງພຣະເຢຊູໃນຂໍ້ພຣະທັມເຫຼົ່ານີ້?

- **ຈົ່ງອວຍພອນຄົນອື່ນ**. "ຈົ່ງອວຍພອນແກ່ຜູ້ທີ່ປ້ອຍດ່າພວກທ່ານ." ຄຳເວົ້າຂອງເຮົາສາມາດບອກໃຫ້ເປັນ ຫຼືຕາຍກໍໄດ້. "ຄວາມເປັນແລະຄວາມຕາຍຢູ່ທີ່ອຳນາດຂອງລີ້ນ" (ສຸພາສິດ 18:21). ວາວ! ເວລາເຮົາກ່າວຄຳຢືນຢັນ ຫຼືຄຳສັຣເສີນ, ຫຼືກ່າວສິ່ງດີແກ່ສັດຕຣູຂອງເຮົາ ພວກເຮົາເລືອກອວຍພອນໂດຍການ "ກ່າວໃຫ້ເຂົາມີຊີວິດຢູ່." ຄວາມຈິງຈັງຕໍ່ຄົນອື່ນ ຊ່ອຍປົດປ່ອຍເຮົາໃຫ້ເປັນອິສຣະຈາກວົນຍານແຫ່ງການກຽດຊັງ. ຍິ່ງພວກເຮົາຈິງຈັງກັບຄົນເທົ່າໃດ, ຫົວໃຈຂອງເຮົາກໍຍິ່ງອົບອຸ່ນຕໍ່ເຂົາຫຼາຍຂຶ້ນ, ຍິ່ງເປັນພົນສິ່ງຢູ້ເຮົາໃຫ້ມີຄວາມປາຖນາຢາກໃຫ້ອະໄພເພີ້ມຂຶ້ນ.
- **ອະທິຖານເພື່ອຄົນອື່ນ**. "ຈົ່ງອ້ອນວອນເພື່ອຜູ້ທີ່ກ່າວໜາບຊ້າແກ່ທ່ານ." ພຣະເຢຊູໄດ້ບອກເຖິງຄວາມກ່ຽວພັນຣະຫວ່າງຄວາມຮັກຕໍ່ສັດຕຣູ ແລະການອະທິຖານເພື່ອເຂົາໄວ້ຢ່າງແຈ່ມແຈ້ງແລ້ວ, ແຕ່ເປັນຫຍັງ? ເປັນຫຍັງພວກເຮົາຈຶ່ງຕ້ອງອະທິຖານເພື່ອຜູ້ທີ່ເຮັດຜິດຕໍ່ເຮົາ? ເພາະມັນບໍ່ກ່ຽວກັບເຮົາ. ມັນກ່ຽວກັບຄວາມສັມພັນຂອງເຮົາກັບພຣະເຢຊູ ການດຳຣົງຊີວິດໃນພຣະອົງ ແລະເພື່ອພຣະອົງ. ການອະທິຖານເປັນການຫຍັບເຮົາເຂົ້າໃກ້ພຣະເຢຊູ; ເຮັດດັ່ງນັ້ນ, ມັນຈະນຳເຮົາເຂົ້າໃກ້ການປົ່ນປົວ, ແລະການອະທິຖານເພື່ອຜູ້ທີ່ຊັງເຮົາ ຈະເຈີມເຮົາໃນການຖ່ອມຕົວລົງ. ການອະທິຖານເພື່ອຜູ້ທີ່ເຮັດໃຫ້ເຮົາເຈັບ ຮຽກຮ້ອງໃຫ້ເຮົາວາງຄວາມອວດຕົວຂອງເຮົາລົງ, ຊຶ່ງຈະເປັນການປູທາງໄປສູ່ຄວາມເມດຕາອັນໄພບູນຂອງພຣະເຈົ້າໃນຊີວິດເຮົາ.

2. <u>ລູກາ 6:29-31</u> :

[29]ຖ້າຜູ້ໃດຕົບແກ້ມຂອງທ່ານເບື້ອງນຶ່ງ ຈົ່ງປິ່ນອີກເບື້ອງນຶ່ງໃຫ້ເຂົາ ແລະຖ້າຜູ້ໃດຍາດເອົາເສື້ອຊັ້ນນອກຂອງທ່ານໄປ ຖ້າເຂົາຈະເອົາເສື້ອໃນກໍຢ່າຫວງຫ້າມ. [30]ຈົ່ງໃຫ້ແກ່ທຸກຄົນທີ່ຂໍຈາກທ່ານ ຖ້າຜູ້ໃດເອົາສິ່ງຂອງ ຂອງທ່ານໄປ ຢ່າຂູ່ທວງເອົາຄືນ. [31]ທ່ານຢາກໃຫ້ເຂົາເຮັດຢ່າງໃດແກ່ທ່ານ ຈົ່ງເຮັດຢ່າງນັ້ນແກ່ເຂົາເໝືອນກັນ.

ພວກເຮົາອາດໄດ້ເສັ່ຽສລະຫຍັງເພື່ອດຳລົງຊີວິດຕາມຂໍ້ພຣະຄັມພີເຫຼົ່ານີ້ ?

ຊີວິດການອຸທິດຕົນຂອງຄຣິສຕຽນ; ບາງເທື່ອອາດຮຽກຮ້ອງໃຫ້ພວກເຮົາເສັງສລະ ພາກສ່ວນທີ່ເຮົາຮັກ ແລະຫວງແຫນທີ່ສຸດກໍເປັນໄດ້. ການຮັກຜູ້ອື່ນ, ໂດຍສະເພາະສັດຕູຂອງເຮົາ, ມັກຮຽກຮ້ອງເຖິງການເສັງສລະ ຈາກໃຈແທ້ຈິງ. ການເສັງສລະນີ້ອາດຈະເປັນຈຳພວກຊັບສິນເງິນຄຳ, ເວລາ, ເຫື່ອແຮງ, ຫຼືຄວາມມຸ່ງຫວັງຕ່າງໆ. ແນ່ນອນພວກເຮົາຕ້ອງໄດ້ເສັງສລະ ຄວາມທະນົງຕົວ ຫຼືຄວາມນຶກຄິດຂອງຕົນຢ່າງໃດຢ່າງນຶ່ງ. ແຕ່ພວກເຮົາສາມາດອຸທິດຖວາຍສິ່ງເຫຼົ່ານີ້ໄດ້ ໂດຍການຮູ້ຈັກ ແລະເດີນໄປກັບອົງພຣະຜູ້ເປັນເຈົ້າເທົ່ານັ້ນ. ອົງພຣະເຢຊູໄດ້ສື່ສານຄວາມຈິງນີ້ຜ່ານຕົວຢ່າງສາມປະການດັ່ງຕໍ່ໄປນີ້.

1. **ຖ້າ*ຜູ້ໃດ*ຕົບແກ້ມຂອງ*ທ່ານ*ເບື້ອງ*ນຶ່ງ***. ການຕົບແກ້ມຜູ້ໃດຜູ້ນຶ່ງແມ່ນເປັນການດູຖູກ, ແລະພຣະເຢຊູບອກໃຫ້ປິ່ນອີກເບື້ອງນຶ່ງໃຫ້ເຂົາ; ເວົ້າອີກຢ່າງນຶ່ງ, ຖ້າມີຄົນດູຖູກ*ທ່ານ*ນຶ່ງເທື່ອ, ຢ່າຢ້ານທີ່ຈະໃຫ້ເຂົາດູຖູກອີກຕື່ມ.
2. **ຖ້າ*ຜູ້ໃດ*ຍາດເອົາເສື້ອຊັ້ນນອກຂອງ*ທ່ານ*ໄປ**. ການຍາດເອົາເສື້ອຊັ້ນນອກຜູ້ອື່ນ ເປັນການຖືກຕ້ອງຕາມກົດໝາຍໃນສາຍຕາຂອງຊາວຢິວ (ມັດທາຍ 5:40). ທ່ານລູກາໄດ້ຂຽນເຖິງຄົນຕ່າງດ້າວຊື່ ເທໂອຟີໂລ (ລູກາ 1:3), ດັ່ງພຣະບັນຍັດໃນພຣະສັນຍາເດີມ (ອົພຍົບ 22:26-27) ອາດບໍ່ມີຄວາມສຳຄັນສຳລັບເພິ່ນ.
3. **ຖ້າ*ຜູ້ໃດ*ເອົາ*ສິ່ງ*ຂອງ*ຂອງ*ທ່ານ***. ນີ້ໝາຍເຖິງຜູ້ໃດເອົາສິ່ງຂອງ ຂອງ*ທ່ານ*ໂດຍບໍ່ໄດ້ຮັບອະນຸຍາດ. ໃນທີ່ນີ້, ພຣະເຢຊູໄດ້ຜັກດັນເຮົາໃຫ້ຫຍັບເຂົ້າຫາຄົນທີ່ເອົາປຽບເຮົາ: "ຢ່າຊູ່ຫວງເອົາຄືນ." ຈົ່ງໃຫ້ໂດຍຖືວ່າເປັນຂອງຂວັນ, ບໍ່ໃຫ້ຖືວ່າເປັນໜີ້ສິນ.

ພຣະເຢຊູໄດ້ໃຫ້ຜົນສລຸບການສອນຂອງພຣະອົງ ນຂໍ້ 31 ວ່າ: "ທ່ານຢາກໃຫ້ເຂົາເຮັດຢ່າງໃດແກ່ທ່ານ ຈົ່ງເຮັດຢ່າງນັ້ນແກ່ເຂົາເໝືອນກັນ." ຄຳແປຂອງຂໍ້ຄວາມນີ້ ເຮົາສາມາດພົບເຫັນຢູ່ໃນປຶ້ມຂຽນດຶກດຳບັນ, ແຕ່ເວົ້າປຶ້ນກັນ ຄື: "ສິ່ງໃດທ່ານບໍ່ມັກໃຫ້ຜູ້ອື່ນເຮັດຕໍ່ທ່ານ, ຈົ່ງຢ່າເຮັດສິ່ງນັ້ນຕໍ່ເຂົາ." ພຣະເຢຊູໄດ້ໃຫ້ຂໍ້ຄຳສັ່ງທີ່ດີ ເພື່ອເຮົາຈະໄດ້ເຮັດຕາມ, ຊຶ່ງເປັນສິ່ງທີ່ຢັ່ງຮາກລຶງໃນຄວາມຮັກ ແລະຄວາມເມດຕາຜູ້ອື່ນ. ການໃຫ້ຢ່າງເສັງສລະ ຄືກັບການບອກຮັກແກ່ຜູ້ຮັບຢ່າງບໍ່ມີເງື່ອນໄຂ ແລະປະຕິເສດບໍ່ໄດ້. ມັນບໍ່ເປັນສິ່ງແປກປລາດເມື່ອເຮົາເຮັດຢ່າງນັ້ນຕໍ່ມິດສະຫາຍ ຫຼືຄົນທີ່ເຮົາຮັກ, ແຕ່ເມື່ອເຮົາເຮັດກັບຜູ້ທີ່ປອງຫຳຮ້າຍເຮົາ, ມັນມີຣິດ ສາມາດປ່ຽນຊີວິດເຂົາໄດ້.

3. <u>ລູກາ 6:32-36</u> :

32"ຖ້າແມ່ນທ່ານຮັກຄົນທັງຫຼາຍທີ່ຮັກທ່ານ ຈະຊົງນັບວ່າເປັນຄຸນອັນໃດແກ່ທ່ານ ເພາະເຖິງແມ່ນຄົນນອກສິນທັມກໍຍັງຮັກຄົນທີ່ຮັກເຂົາເໝືອນກັນ. 33ຖ້າທ່ານເຮັດດີກັບຄົນທີ່ເຮັດດີຕໍ່ທ່ານ ຈະຊົງນັບວ່າເປັນຄຸນອັນໃດແກ່ທ່ານ ເພາະຄົນນອກສິນທັມກໍຍັງເຮັດຢ່າງດຽວກັນ. 34ຖ້າທ່ານທັງຫລາຍໃຫ້ຢືມແກ່ຜູ້ທີ່ທ່ານຫວັງວ່າຈະໄດ້ຮັບຄືນ ກໍຈະຊົງນັບວ່າເປັນຄຸນອັນໃດແກ່ທ່ານ ເຖິງແມ່ນຄົນບາບກໍຍັງໃຫ້ຄົນບາບຢືມ ໂດຍຫວັງວ່າຈະໄດ້ຮັບຄືນທໍ່ກັນ. 35ແຕ່ຈົ່ງຮັກສັດຕູຂອງທ່ານທັງຫລາຍ ແລະຈົ່ງເຮັດດີຕໍ່ເຂົາ ຈົ່ງໃຫ້ເຂົາຢືມ ໂດຍບໍ່ຫວັງຈະໄດ້ຮັບຄືນອີກ ບຳເໜັດຂອງທ່ານທັງຫຼາຍຈົ່ງຈະມີບໍຣິບູນ ແລະທ່ານທັງຫຼາຍຈະເປັນບຸດຂອງພຣະຜູ້ສູງສຸດ ເພາະວ່າພຣະອົງຍັງຊົງໂຜດແກ່ຄົນທີ່ເນລະຄຸນ ແລະຄົນຊົ່ວ. 36ທ່ານທັງຫຼາຍຈົ່ງມີຄວາມເມດຕາກະຣຸນາເໝືອນຢ່າງພຣະບິດາຂອງທ່ານຊົງມີພຣະທັຍເມດຕາກະຣຸນາ.

ໃນທາງໃດທີ່ຄວາມຮັກຕໍ່ສັດຕູເປັນບຳເໜັດສ່ວນຕົວ?

ເຫດໃດ ທັງໝົດນີ້ທີ່ເວົ້າ "ຈົ່ງຮັກສັດຕູ" ຈຶ່ງມີຄວາມສຳຄັນ? ເພາະວ່າການເປັນຜູ້ຕິດຕາມພຣະຄຣິດມີຄວາມໝາຍວ່າດຳລົງຊີວິດຄືກັບພຣະເຢຊູ. ພຣະເຢຊູຮັກຜູ້ອື່ນ; ສະນັ້ນ, ເຮົາຈຶ່ງຮັກ. ຄວາມຮັກຂອງພຣະອົງຕໍ່ຄົນອື່ນແຕກຕ່າງກັບວິຖີທາງຄວາມຮັກ ທີ່ໂລກຄາດຫວັງໃຫ້ເຮົາຮັກ, ແລະພວກເຮົາຕ້ອງຮັກຢ່າງພຣະອົງຮັກ.

ມີຄຳນຶ່ງ ອະທິບາຍທາງທີ່ໂລກຄິດຄື :ການຄາດຫວັງ. ພວກເຮົາຄາດຫວັງສິ່ງໃດສິ່ງນຶ່ງຕອບແທນສເມີ. ຂ້າພະ

ເຈົ້າຈະເຮັດດີຕໍ່ທ່ານ ຖ້າທ່ານເຮັດດີຕໍ່ຂ້າພະເຈົ້າ. ຂ້ອຍຈະຮັກເຈົ້າ ຖ້າເຈົ້າຮັກຂ້ອຍ. ພວກເຮົາຄາດຫວັງສິ່ງຕອບແທນສເມີ. ສຳລັບຜູ້ຕິດຕາມພຣະຄຣິດ, ເຖິງຢ່າງໃດ, ນີ້ກໍຍັງບໍ່ພຽງພໍ. ແທນທີ່ຈະຫວັງສິ່ງຕອບແທນ ພຣະເຈົ້າຮຽກຮ້ອງເຮົາໃຫ້ຍົກເອົາຄວາມຄາດຫວັງນັ້ນອອກໄປຈາກຮູບການນັ້ນ. ຈົ່ງເຮັດດີກັບຄົນອື່ນ ເຖິງແມ່ນວ່າຄົນນັ້ນຈະບໍ່ດີກໍຕາມ; ຈົ່ງຮັກນາງເຖິງແມ່ນນາງຈະບໍ່ຮັກທ່ານກໍຕາມ; ຈົ່ງໃຫ້ຢືມໂດຍບໍ່ຫວງໃຫ້ໃຊ້ຄືນ. ມີທາງດຽວ ທີ່ຈະແຜ່ຂຍາຍຄວາມຮັກແບບນີ້ ກໍແມ່ນຮັກຄົນອື່ນຢ່າງດຽວກັນກັບພຣະອົງຮັກເຮົາ, ແຜ່ຂຍາງສ່ວ່າຣາສີຂອງພຣະອົງໂດຍທາງຄວາມສັມພັນ ແລະສະພາບການທຸກຢ່າງຂອງເຮົາ ສິ່ງນັ້ນໄປໄດ້ໄກກວ່າຄຳເວົ້າຫຼາຍເທົ່າ. ຄົນຈະໄດ້ເຫັນຄວາມຮັກຂອງພຣະເຈົ້າໃນການກະທຳຂອງເຮົາ.

ພຣະເຢຊູ ໄດ້ເຮັດເປັນແບບຢ່າງໃນການຮັບໃຊ້ (ມັດທາຍ 20:28). ພຣະຄຣິດເປັນຄົນຮັບໃຊ້ທຸກຄົນ, ແມ່ນກະທັ້ງຜູ້ທີ່ເຮັດຜິດຕໍ່ພຣະອົງ. ພວກເຮົາຄວນເຮັດຢ່າງດຽວກັນ. ເຖິງແມ່ນວັທນະທັມຂອງເຮົາຈະຊຸກຍູ້ໃຫ້ທວງບຸນຄຸນ ແລະ ບໍ່ຄ່ອຍຈະສົ່ງເສີມການປະພຶດທີ່ບໍ່ເຫັນແກ່ຕົວກໍຕາມ, ພວກເຮົາກໍຖືກຮຽກເອີ້ນໃຫ້ຮັບໃຊ້ແລ້ວ. ຖານະເຮົາເປັນຄຣິສຕຽນ, ເຮົາບໍ່ໄດ້ຢູ່ທີ່ນີ້ເພື່ອໃຫ້ຜູ້ອື່ນບໍລະບັດເຮົາ, ແຕ່ເພື່ອຮັບໃຊ້ຜູ້ອື່ນ. ເມື່ອພວກເຮົາລະນຶກໄດ້ວ່າ ຄວາມບາບຂອງເຮົາໃຫ່ຍ່ສ່ຳໃດ, ເຮົາຍັງໄດ້ສຳຜັດຄວາມຮັກຂອງພຣະເຈົ້າທັງທີ່ມີບາບນັ້ນ, ແລະເລີ້ມເຂົ້າໃຈສິ່ງທີ່ພຣະອົງໄດ້ກະທຳເພື່ອເຮົາ, ພວກເຮົາຊ່ອຍຕົນເອງບໍ່ໄດ້ ແຕ່ຈົ່ງປັບຕົວໃຫ້ເປັນຜູ້ຮັບໃຊ້ທຸກຄົນເໝືອນກັນ.

ມີທາງທີ່ເປັນຮູບພຣະທັມໃດແດ່ທີ່ພວກເຮົາສາມາດເຮັດດີຕໍ່ຜູ້ທີ່ເຮັດບໍ່ດີກັບເຮົາ?

ນຳໃຊ້ໃນຊີວິດ

ການຮັກຜູ້ອື່ນ ໂດຍສະເພາະສັດຕຣູຂອງເຮົາ ເປັນການຍາກ, ແຕ່ແມ່ນສິ່ງທີ່ພວກເຮົາຖືກເອີ້ນໃຫ້ເຮັດ. ທ່ານຈະເຮັດຫຍັງໃນອາທິດນີ້ ຄືຮັກຢ່າງພຣະຄຣິດຮັກ? ຈົ່ງເລືອກການນຳໃຊ້ຕໍ່ລົງໄປນີ້:

- **ຈົ່ງອວຍພອນ**. ຖ້າທ່ານຍັງຢູ່ກັບຄົນທີ່ຮັກບໍ່ໄດ້ຕໍ່ໄປ, ຈົ່ງເປັນຄົນຕັ້ງໃຈອວຍພອນເຂົາດ້ວຍຮອຍຍິ້ມ, ການທັກທາຍ, ຫຼືສະແດງທ່າທີເມດຕາຕໍ່ບາງຄົນ.

- **ຈົ່ງບົ່ງຊີ**. ຈົ່ງຂຽນລາຍຊື່ຜູ້ທີ່ເຮັດຜິດຕໍ່ທ່ານ. ຈົ່ງປັບປ່ຽນລາຍຊື່ຄົນເຫຼົ່ານັ້ນໃຫ້ເປັນລາຍຊື່ອະທິຖານ. ຈົ່ງອະທິຖານເພື່ອຄວາມຕ້ອງການຂອງເຂົາ ແລະອະທິຖານໃຫ້ພຣະເຈົ້າຍ້າຍຫົວໃຈທ່ານໃຫ້ຮັກ ແລະຮັບໃຊ້ເຂົາ. ທູນຂໍໃຫ້ພຣະເຈົ້າຊ່ອຍທ່ານໃຫ້ເຫັນເຂົາເປັນບຸກຄົນທີ່ພຣະອົງຊົງຮັກ, ແລະຊົງສ້າງ ຄ້າຍກັບຮູບຮ່າງຂອງພຣະອົງ.

- **ຈົ່ງຮັບໃຊ້**. ຈົ່ງທຸ້ມເທເວລາ ແລະເຫື່ອແຮງຊ່ອຍສັດຕຣູ ດ້ວຍບາງສິ່ງທີ່ເຂົາສາມາດໃຊ້ໄດ້. ຫາໂອກາດຊີ້ໄປໃສ່ພຣະຄຣິດ.

ການໃຊ້ຊີວິດຂອງເຮົາສະທ້ອນຊີວິດພຣະເຢຊູ ແມ່ນການແຕ່ງຕັ້ງເຮົາໄວ້ໂດຍສະເພາະ. ຄວາມຮັກແກ່ນສານຂອງເຮົາຕໍ່ຜູ້ອື່ນດ້ວຍຄວາມເວົ້າ ແລະການກະທຳ ຊີ້ບອກເຖິງຜູ້ທີ່ເປັ່ງຄວາມຮັກຂອງພຣະອົງໃສ່ເຮົາ.

ບົດຮຽນໂຮງຮຽນວັນອາທິດ

ວັນອາທິດທີ 12 ພຶສພາ 2019 (5-12-2019)

ຈົ່ງປະໃຫ້ຄົນຕາຍຝັງກັນເອງ

ຄົນປານໃດແລ້ວທີ່ທ່ານພົບເຫັນຕົວທ່ານເອງກາຍໂດດຂຶ້ນຍິດຂະບວນແຫ່ຄອນເສີດ ?

ຈຸດສຳຄັນໃນບົດຮຽນ: ການຕິດຕາມພຣະເຢຊູຖືເປັນສິ່ງສຳຄັນອັນດັບນຶ່ງ ເໜືອຄວາມຕັ້ງໃຈອື່ນໃດທັງປວງ.

ພຣະຄັມພີຕອບສນອງຕໍ່ຊີວິດ:

ການຕິດຕາມທີມກິລາໃດນຶ່ງກໍອາດເປັນການເອົາໃຈໃສ່ເພື່ອຄວາມມ່ວນຊື່ນຢ່າງນຶ່ງ, ແຕ່ແຟນອາດຈະມີສອງ ພວກ:(1) ແຟນໃຈເສາະ ຕິດຕາມທີມໃດນຶ່ງສະເພາະເວລາຊະນະເທົ່ານັ້ນ. ພວກເຂົາມັກເຊັ່ງ,ແລະຕິດຕາມທີມທີ່ດີ ເດັ່ນທີ່ເຂົາອ່ານວ່າເຊັ່ງໄປແລ້ວຄຸ້ມຄ່າ. (2) ແຟນສັດຊື່ ເຂົາເກາະຕິດຕລອດບໍ່ວ່າຈະໜາແໜ້ນ ຫຼືເບົາບາງ. ພວກເຂົາ ສ້າງຖານທີ່ຕັ້ງທີ່ແຂງແກ່ນເພື່ອຈັ້ງຢູ່ ຄ້າຍກັບວ່າເຂົາສນັບສນຸນທີມຂອງເຂົາທັງທາງຂຶ້ນ ແລະທາງລ່ອງ.

ໃນສມັຍຂ້າພຣະເຈົ້າຮຽນຢູ່ຊັ້ນປະຖົມ ແລະ ມັທຍົມ, ຂ້າພຣະເຈົ້າເປັນແຟນ**ຕາຍກັບ** ທີມ **ລູກເສືອ (Cubs)**. ມີ ເທື່ອດຽວທີ່ຂ້າພຣະເຈົ້າເຂົ້າໄປໃນເດີ່ນ ຍາມຮ້ອນ ແມ່ນຍາມ **ລູກເສືອ** ອອກທີວີ. ເຖິງຢ່າງໃດກໍຕາມ, ໃນຊັ້ນມັທຍົມ ຄຳປະຕິຍານຕົນຂອງຂ້າພຣະເຈົ້າໄດ້ຫັນປ່ຽນມາຫາທີມ **ດາຣາສາດ (Astros)**. ມັນເປັນໜ້າສົນໃຈ ຊ່ວງເວລາຂອງ ຊີວິດສາມາດສິ່ງຜົນໃຫ້ສິ່ງທີ່ເຮົາຍຶດໝ່ຽວນັ້ນຖືວ່າສຳຄັນ, ແມ່ນແຕ່ ທີມກິລາ ທີ່ເຮົາຕິດຕາມ.

ທຳນອງດຽວ, ເຫດການແບບດຽວກັນກໍເປັນຈິງກ່ຽວກັບສິ່ງທີ່ພວກເຮົາຈັດວ່າເປັນສິ່ງສຳຄັນອັນດັບນຶ່ງ (First priority) ໃນການຕິດຕາມພຣະເຢຊູ. ມັນເປັນເຣື່ອງງ່າຍໃນການຕິດຕາມພຣະເຢຊູ ເວລາທຸກສິ່ງລາບລື້ນດີ, ແຕ່ຈະ ເປັນຈັ່ງໃດ ຍາມບໍ່ສະດວກສະບາຍ ຫຼື ເມື່ອມີສິ່ງອື່ນດຶງດູດຄວາມສົນໃຈເຮົາອອກໄປ? ໃນ ລູກາ 9, ພຣະເຢຊູທ້າ ທາຍເຮົາໃຫ້ພິຈາຣະນາ ມູນຄ່າທີ່ຕ້ອງເສັ່ງສລະ ໃນການຕິດຕາມພຣະອົງ.

ພຣະຄັມພີກ່າວວ່າແນວໃດ: ລູກາ 9:57-62 (ເບິ່ງຕາມຂໍ້ 1, 2 ແລະ 3)

ການສຶກສາພຣະຄັມພີ

1. <u>ລູກາ 9:57-58</u> .

[57]ຂນະທີ່ພຣະອົງກຳລັງສະເດັດໄປຕາມທາງພ້ອມກັບພວກສາວົກ ມີຄົນໜຶ່ງມາທູນວ່າ, "ທ່ານຈະໄປທີ່ໃດຂ້ານ້ອຍ ຈະຕິດຕາມທ່ານໄປທີ່ນັ້ນ." [58]ພຣະເຢຊູຊົງຕອບຜູ້ນັ້ນວ່າ, "ໝາຈິ້ງຈອກກໍມີຮູແລະນົກປ່າກໍຍັງມີຮັງ ແຕ່ບຸດມະນຸດບໍ່ມີ ບ່ອນຈະວາງຫົວລົງ."

ຕລອດພຣະທັມຂ່າວປະເສີດ, ພຣະເຢຊູ ໄດ້ເອີ້ນຄົນໃຫ້ຕິດຕາມພຣະອົງໄປ. ພາສາກຣີກ ຄຳວ່າ *akoloutheo* (ak-ol-oo-THEH-o) ຖືກນຳໃຊ້ເຖິງເຈັດສິບເຈັດເທື່ອໃນພຣະຄັມພີຂ່າວປະເສີດ ເພື່ອຊີ້ແຈງເຖິງການຕິດຕາມພຣະ ເຢຊູ. ຄຳນີ້ໝາຍຄວາມວ່າ "ບຸກຄົນໃດນຶ່ງເດີນໄປໃນທາງດຽວກັນ". ການຮຽກເອີ້ນຈາກອົງພຣະຜູ້ເປັນເຈົ້າໃຫ້ຕາມ ພຣະອົງມັກຈະເປັນຄຳສັ່ງ, ຊຶ່ງໝາຍຄວາມວ່າເປັນຄຳສັ່ງໃຫ້ດຳເນີນຕໍ່ໄປເລື້ອຍໆ. ສະນັ້ນ, ການຕິດຕາພຣະເຢຊູ,

ຈຶ່ງບໍ່ແມ່ນການຕັດສິນໃຈພຽງຊົ່ວຍາມ ຫຼື ບໍ່ແມ່ນພຽງແຕ່ເປັນໄລຍະເວລາສັ້ນໆເທົ່ານັ້ນ. ເມື່ອພຣະເຢຊູເອີ້ນຜູ້ໃດຜູ້ນຶ່ງໃຫ້ຕິດຕາມພຣະອົງ, ພຣະອົງໝາຍເຖິງ "**ຈົ່ງຕາມເຮົາມາເລື້ອຍໆ**." ພຣະເຢຊູເອີ້ນເຮົາໃຫ້ຕິດຕາມພຣະອົງກໍຊັດເຈນ ຄື: **ຕັ້ງແຕ່ນີ້ໄປ-ຕລອດຊີວິດຂອງເຈົ້າ-ຈົ່ງຕາມເຮົາມາ**. ຄຳແປຂ້າງລຸ່ມ (Would-be disciple/ວ່າທີ-ສາວົກ)

ທ່ານລູກາໄດ້ຍົກຕົວຢ່າງ **ວ່າທີ-ສາວົກ**ສາມຈຳພວກ ທີ່ສະແດງໃຫ້ເຮົາເຫັນວ່າການຮຽກເອີ້ນໃຫ້ຕິດຕາມພຣະເຢຊູນັ້ນເປັນປັດຈັຍສຳຄັນ (ແກ່ນສານ) ສ່ຳໃດ. ຄົນປະເພດແລກາຂອງ ວ່າທີ-ສາວົກສາມຈຳພວກ ໄດ້ໃຫ້ຄຳຢືນຢັນຢ່າງເດັດດ່ຽວວ່າ, "ຂ້ານ້ອຍຈະຕາມພຣະອົງໄປທຸກຫົນທຸກແຫ່ງ." ຊາຍຜູ້ນີ້ຄ້າຍກັບວ່າເພິ່ນໄດ້ເຫັນການອັສຈັນຫຼາຍຢ່າງ ແລະ ໄດ້ຍິນພຣະເຢຊູສັ່ງສອນ, ແລ້ວລາວກໍໄດ້ຕັດສິນໃຈວ່າ ຜູ້ນີ້ແມ່ນຄົນທີ່ເໝາະແກ່ການຕິດຕາມ. ລາວອາດຈະເຂົ້າໃຈວ່າພຣະເຢຊູແມ່ນພຣະເມຊີອາ ນັກການເມືອງທີ່ຄົນຢິວຫວັງໄວ້, ແລະຢາກກະໂດດຂຶ້ນໄປນຳຂະບວນຣົດແຫ່. ແຕ່ພຣະເຢຊູ, ໃນພຣະປັນຍາທີ່ບໍ່ມີຂີດຈຳກັດຂອງພຣະອົງ, ຊົງຊາບຄວາມຄິດໃນໃຈຂອງຊາຍຄົນນີ້(ໂຢຮັນ 2:25); ພຣະເຢຊູຊົງຊາບວ່າ ນີ້ບໍ່ແມ່ນການປະກາດການຕິດຕິດຕາມພຣະອົງດ້ວຍຄວາມເຕັມໃຈ. ດັ່ງນັ້ນ ພຣະເຢຊູຈຶ່ງໄດ້ຊີ້ແຈງຖ້ອຍຄຳຂອງນັກທັມຄົນນີ້ ໂດຍການຊີ້ໃຫ້ເຫັນເຖິງການເສັງສລະທັງໝົດທີ່ຕ້ອງມີໃນການຕິດຕິດຕາມພຣະອົງ.

ສັດປ່າ ເຊັ່ນໝາໄນ ແລະ ນົກມີຊີວິດທີ່ລາບລື້ນກວ່າຊີວິດທີ່ພຣະເຢຊູມີຢູ່ຕໍ່ໜ້າເຂົາ. ພຣະເຢຊູຊາບດີວ່າ ຈະມີການເສັງສລະຫັ້ງລຸງນຢູ່ຂ້າງໜ້າພຣະອົງ. ເພາະວ່າການຕິດຕາມໝາຍເຖິງ "ຄົນມຸ່ງໄປໃນທາງດຽວກັນ,"ພຣະເຢຊູຊົງຊາບວ່າຈະຕ້ອງໄດ້ສລະຫັ້ງແດ່ໃນການຕິດຕາມພຣະອົງ. ພຣະເຢຊູຊາບວ່ານັກທັມຜູ້ນີ້ ຍັງບໍ່ພ້ອມທີ່ຈະສລະຄວາມສຸກສ່ວນຕົວອອກໄປເທື່ອ.

ທ່ານຊື່ນຊົມຫ້ັງກ່ຽວກັບຄຳຕອບຂອງຊາຍຄົນນີ ?

ກ່ອນໜ້ານີ, ໃນພຣະທັມລູກາ 9, ພຣະເຢຊູໄດ້ກ່າວເຖິງການເສັງສລະໃນການຕິດຕາມພຣະອົງວ່າ:"ຖ້າຜູ້ໃດຢາກຕາມເຮົາມາໃຫ້ຜູ້ນັ້ນຕັດສິດຂອງຕົນເສັງ ແລະຮັບແບບກາງແຂນຂອງຕົນທຸກວັນແລ້ວຕິດຕາມເຮົາມາ (ລູກາ9:23). ເມື່ອພຣະເຢຊູເອີ້ນເຮົາຕິດຕາມພຣະອົງ, ແມ່ນພຣະອົງຮຽກຮ້ອງໃຫ້ເຮົາຕັດສິດຂອງຕົນ ຕັດຄວາມປາຖນາ ແລະຕັດຄວາມສະດວກສະບາຍຂອງຕົນເອງ ແລະກ້າວເຂົ້າສູ່ຊີວິດໃໝ່ໃນການຕິດຕາພຣະອົງ. ພຣະເຢຊູປະສົງຢາກໃຊ້ຊີວິດໂດຍປາສຈາກຄວາມສຸກສະບາຍດັ່ງມະນຸດທີ່ພຣະອົງສ້າງມາ! ຍ້ອນພຣະອົງຮັກເຮົາຫຼາຍພຽງນັ້ນ. ເບິ່ງຄືວ່ານັກທັມຜູ້ນີ້ບໍ່ສາມາດຮັບຊີວິດທີ່ຂາດຄວາມສຸກສ່ວນຕົວໄດ້. ພຣະເຢຊູບໍ່ເຄີຍບອກຜູ້ທີ່ຕາມພຣະອົງບໍ່ໄດ້ ພຣະເຢຊູພຽງແຕ່ຄົດໄລ່ສິ່ງທີ່ຕ້ອງເສັງໃຫ້ຟັງ ແລະໃຫ້ນັກທັມຕັດສິນໃຈເອົາເອງ. ພວກເຮົາຄວນຮັບເອົາຂອງປະທານທີ່ພຣະເຈົ້າມອບໃຫ້ຊຶ່ງ, ແທ້ຈິງແລ້ວ, ເຮົາບໍ່ໄດ້ເສັງຫ້ັງ (ອຟຊ 2:8-9), ແຕ່ເວລາດຽວກັນ, ເຮົາກໍຕ້ອງໄດ້ເສັງສລະທຸກສິ່ງ ເມື່ອເຮົາປະຕິເສດຕົນເອງເພື່ອຕິດຕາມພຣະອົງໄປ. ທ່ານປະສົງ ແລະພ້ອມທີ່ຈະຕິດຕາມພຣະເຢຊູບໍ່, ເຖິງແມ່ນຈະຕ້ອງສູນເສັງ ແລະ ທັງໆທີ່ບໍ່ຮັບປະກັນວ່າຈະມີຄວາມສຸກສະບາຍຫຼືບໍ່?

2. <u>ລູກາ 9:59-60</u> :

[59]ພຣະອົງຊົງກ່າວກັບຄົນໜຶ່ງອີກວ່າ, "ຈົ່ງຕາມເຮົາມາ" ຄົນນັ້ນທູນຕອບວ່າ, "[ນາຍເອີຍ,] ຂໍໂຜດອະນຸຍາດໃຫ້ ຂ້ານ້ອຍໄປຝັງສົບພໍ່ຂອງຂ້ານ້ອຍເສັງກ່ອນ." [60]ພຣະອົງຊົງຕອບຜູ້ນັ້ນວ່າ, " ຈົ່ງປະໃຫ້ຄົນຕາຍຝັງກັນເອງເທາະ ແຕ່ສ່ວນທ່ານ, ຈົ່ງໄປປະກາດຣາຊອານາຈັກຂອງພຣະເຈົ້າ."

ວ່າທີ-ສາວົກ ປະເພດທຳອິດແມ່ນ ຕົນເອງເປັນຜູ້ຊອກສແວງຕາມ. **ວ່າທີ-ສາວົກປະເພດທີສອງ**, ແມ່ນເລີ້ມຕົ້ນທີ່ພຣະເຢຊູເປັນຜູ້ຮຽກເອີ້ນໃຫ້ຕາມ. **ມັນເປັນກຽດສ່ຳໃດໜໍ່ທີ່ມີພຣະເຢຊູເອງບອກທ່ານວ່າ, " ຈົ່ງຕາມເຮົາມາ."** ຊາຍຜູ້ນີ້ຈະຮູ້ສຶກເປັນກຽດຫຼືບໍ່, ພວກເຮົາບໍ່ແນ່ໃຈ, ແຕ່ສ່ວນດີແມ່ນລາວໄດ້ຕອບວ່າ. "ນາຍເອີຍ, ຂໍຊົງໂຜດອານຸຍາດໃຫ້ຂ້າ

ນ້ອຍໄປຝັງສົບພໍ່ຂອງຂ້ານ້ອຍເສັງກ່ອນ." ນີ້ຄ້າຍກັບວ່າ ເປັນຄຳຂໍຮ້ອງທີ່ມີເຫດຜົນດີພໍສົມຄວນ. ແທ້ຈິງ, ສຳລັບຄົນຢິວ, ການຝັງສົບຄົນຕາຍແມ່ນໜ້າທີ່ທາງສາສນາ. ຖ້າເບິ່ງເຜີນໆແລ້ວກໍຄືວ່າຊາຍຜູ້ນີ້ໄດ້ຂໍຮ້ອງໄປທຳໜ້າທີ່ອັນຊິ່ງມີກຽດແທ້. ເຫດສະນັ້ນ ຄຳຕອບຂອງພຣະເຢຊູຈຶ່ງ ຄືກັບວ່າຮຸນແຮງໃນບ່ອນນີ້. ຫວ່ະ. ຊ້າກ່ອນ! ພຣະອົງໄດ້ເວົ້າຫຍັງ?

ຮູ້ສຶກເປັນກຽດ ຕາມທີ່ຊາຍຜູ້ນັ້ນໄດ້ຮ້ອງຂໍ ຄືວ່າມ່ວນຫູດີ, ແຕ່ພວກເຮົາຍັງຂາດລາຍລະອຽດຢ່າງນຶ່ງຄື: ພໍ່ຂອງຊາຍຜູ້ນີ້ຍັງບໍ່ທັນຕາຍເທື່ອໄດ! ຖ້າພໍ່ຂອງລາວຕາຍແລ້ວ, ລາວກໍຕ້ອງໄດ້ຝັງສົບໃນທັນທີທັນໃດ. ແລ້ວ ລາວກໍຄົງໄດ້ໄວ້ທຸກເປັນເວລານານເປັນເດືອນ ແລະລາວຄົງບໍ່ໂອກາດມາສົນທະນາກັບພຣະເຢຊູແບບນີ້.

ຄຳວ່າ, "ຂ້ານ້ອຍຕ້ອງຝັງສົບພໍ່ຂອງຂ້ານ້ອຍ,"ຍັງໃຊ້ໃນຫຼາຍພາກຂອງຕາເວັນອອກກາງ. ຊາຍນັ້ນອາດເວົ້າຄຳນີ້ໃນສມັຍນີ້ ເພື່ອອະທິບາຍວ່າລາວຕ້ອງຢູ່ບ້ານຈົນກະທັ້ງພໍ່ຂອງລາວຕາຍເພື່ອຊ່ອຍວຽກ ແລະໜ້າທີ່ຂອງຄອບຄົວ, ແລະເພື່ອຢູ່ຮັບມູນມໍຣະດົກຫຼັງຈາກພໍ່ເສັງ. ບາງທີຂໍ້ແກ້ຕົວຂອງວາທີ-ສາວົກ ພາໃຫ້ມີການຄຳນຶງເຖິງການຈາກບ້ານ ແລະການຕິດຕາມພຣະເຢຊູໃນຂນະນັ້ນ ອາດໝາຍເຖິງການສູນເສັງມູນມໍຣະດົກຂອງລາວກໍເປັນໄດ້.

ຄຳຕອບຂອງຊາຍຜູ້ນີ້ ໄດ້ນຳເອົາສິ່ງສຳຄັນອັນດັບນຶ່ງຂອງລາວ ມາສູ່ຄວາມສວ່າງ. ນິສັຍ ເລື່ອນການເຊື່ອຟັງ ຂອງລາວ ແມ່ນການບໍ່ເຊື່ອຟັງໂດຍຕົງ. ພຣະເຢຊູບໍ່ໄດ້ຂໍຮ້ອງພຽງຄຳໝັ້ນສັນຍາຕໍ່ພຣະອົງເທົ່ານັ້ນ ແລະບໍ່ມີສິ່ງອື່ນ, ແຕ່ຄຳໝັ້ນສັນຍາອື່ນທຸກສິ່ງຕ້ອງຫຼັ່ງໄຫຼຕາມມາແລະຍອມຢູ່ພາຍໃຕ້ຄຳໝັ້ນສັນຍາທີ່ເຮົາມີຕໍ່ພຣະອົງ. ພຣະເຢຊູຊາບແນ່ເຖິງສິ່ງທີ່ພວກສາວົກຕ້ອງເສັງໃນການຕິດຕາມພຣະອົງ ພຣະເຢຊູຊິ່ງຊາບຢ່າງຖ່ອງແທ້ວ່າສິດຂອງພຣະອົງຈະຕ້ອງເສັງສລະຫຼັງ ເພື່ອປະກາດຣາຊອານາຈັກສວັນ. ເຫດສະນັ້ນ, ຄຳຕອບຂອງພຣະອົງຈຶ່ງບໍ່ແມ່ນການບໍ່ໃຫ້ຄວາມໂຄຣົບແກ່ຄອບຄົວຂອງຊາຍຜູ້ນັ້ນ, ແຕ່ເປັນການຮຽກຮ້ອງໃຫ້ມີການເສັງສລະຫຼາຍກວ່ານີ້. ພວກເຮົາໄດ້ໃຫ້ຄຳໝັ້ນສັນຍາຂອງເຮົາແກ່ພຣະຄຣິດ ໃນທາງທີ່ພວກເຮົາເອົາຊນະເໜືອສິ່ງສຳຄັນອື່ນໆ. ການຕິດຕາມພຣະເຢຊູບໍ່ແມ່ນພຽງສິ່ງສຳຄັນທັມດາ; ແຕ່ແມ່ນສິ່ງສຳຄັນສຸດຍອດ!

ມີຂໍ້ແກ້ຕົວຫຍັງແດ່ທີ່ເຮົາໃຊ້ຍັບຍັ້ງການເຊື່ອຟັງພຣະຄຣິດ?

3. ລູກາ 9:61-62 :

61ອີກຄົນໜຶ່ງທູນວ່າ, "ນາຍເອີຍ, ຂ້ານ້ອຍຈະຕາມທ່ານໄປ ແຕ່ຂໍອະນຸຍາດໃຫ້ຂ້ານ້ອຍໄປລາໄທເຮືອນຂອງຂ້ານ້ອຍກ່ອນ." 62ພຣະເຢຊູຊົງບອກຜູ້ນັ້ນວ່າ, "ຜູ້ໃດເອົາມືຈັບງ້ອນໄຖແລ້ວໜຽວຄືນຫຼັງ ຜູ້ນັ້ນບໍ່ສົມຄວນກັບຣາຊອານາຈັກຂອງພຣະເຈົ້າ."

ວາທີ-ສາວົກ ປະເພດທີສາມ ເວົ້າຢ່າງເຕັມປາກແລະປະກາດຕົນເອງວ່າ, *"ນາຍເອີຍ, ຂ້ານ້ອຍຈະຕາມທ່ານໄປ ແຕ່ຂໍອະນຸຍາດໃຫ້ຂ້ານ້ອຍໄປລາໄທເຮືອນຂອງຂ້ານ້ອຍກ່ອນ."* ເຜິ່ງເບິ່ງຄັ້ງແລກ, ຊາຍບຸກຄົນທີສາມນີ້ມີຊັ້ນເຊີງເໜືອກວ່າຊາຍທີ່ຢາກຝັງສົບຂອງພໍ່ຂອງລາວໜຶ່ງກ້າວ, ເພາະວ່າ, ແທ້ຈິງ, ຈະໃຊ້ເວລາແປັບດຽວໃນການສັ່ງລາແມ່ນບໍ່? ແຕ່ເຖິງຢ່າງໃດກໍຕາມ, ຄຳໝັ້ນສັນຍາຂອງຊາຍຜູ້ນີ້ວ່າຈະຕິດຕາມພຣະເຢຊູ ໄດ້ຕົກຮອບໄປດ້ວຍຄຳເວົ້າຄຳດຽວ ຄື: ***ແຕ່.***

ຊາຍຄົນນີ້ເລີ້ມຕົ້ນໃນທາງທີ່ຖືກຕ້ອງ, ແຕ່ລາວຮີບຫັນຫຼັງກັບຄືນເພາະພຣະເຢຊູບໍ່ເປັນສິ່ງສຳຄັນອັນດັບໜຶ່ງຂອງລາວ. ລາວບໍ່ໄດ້ຄຳນຶງວ່າ ກ່ອນອື່ນແມ່ນການຕິດຕາມອົງພຣະຜູ້ເປັນເຈົ້າ ແລະສແວງຫາຣາຊອານາຈັກຂອງພຣະອົງ. ລາວອາດຄິດໄດ້ວ່າຄອບຄົວຂອງລາວຈະຄິດ ຫຼື ເຮັດຫຍັງ ເມື່ອເຂົາພົບວ່າລາວໄດ້ປະເຂົາເພື່ອຕາມພຣະເຢຊູ. ຊຶ່ງເປັນເຣື່ອງສຳຄັນຍິ່ງກວ່າການສັ່ງລາຄອບຄົວເສັງອີກ.

ໃນທາງໃດທີ່ການໜຽວຄືນຫຼັງເປັນຕົນກະທົບຕໍ່ການເດີນກັບພຣະຄຣິດຂອງເຮົາ?

ທ່ານບໍ່ສາມາດໄຖນາໄດ້ໃນເວລາທີ່ທ່ານຫຼຽວຫຼັງ ຮ່ອງໄຖຂອງທ່ານຈະບໍ່ຊື່. ຂີ້ໄຖຂອງທ່ານອາດທັບຊ້ອນກັນ. ທ່ານໂປໂລກໍໄດ້ນຳເອົາຫຼັກທັມນີ້ມາປະຕິບັດໃນຊີວິດຂອງເພິ່ນເອງ. ເພິ່ນຂຽນວ່າ: *" [13]ພີ່ນ້ອງທັງຫລາຍເອີຍ, ເຮົາບໍ່ຖືວ່າເຮົາໄດ້ຮັບແລ້ວ ແຕ່ເຮົາເຮັດຢ່າງໜຶ່ງ ຄືລືມສິ່ງເຫຼົ່ານັ້ນທີ່ຜ່ານພົ້ນໄປແລ້ວເສັ່ງ ແລະໂນ້ມຕົວອອກໄປຫາສິ່ງທັ້ງຫຼາຍທີ່ຢູ່ເບື້ອງໜ້າ. [14]ເຮົາກຳລັງບາກບັ່ນມຸ້ງໜ້າໄປສູ່ຫຼັກຊັຍ ເພື່ອຈະໄດ້ຮັບລາງວັນ ຄື ຊີວິດຊຶ່ງພຣະເຈົ້າໄດ້ຊົງເອີ້ນເອົາໃນພຣະເຢຊູຄຣິດ ໃຫ້ໄປຮັບຢູ່ເບື້ອງເທິງ" (ຟລປ 3:13-14).*

ທ່ານກໍຮູ້ຈັກຄົນທີ່ຍັງຄິດຖອຍຫຼັງ ສູ່ຊີວິດເກົ່າຂອງເຂົາ. ຫຼືຄົນອື່ນໆ ທີ່ມັກເວົ້າ "ເຣື່ອງເກົ່າໆ". ຄ້າຍກັບວ່າມັນເປັນໄປບໍ່ໄດ້ສຳລັບເຂົາທີ່ຈະຢູ່ໃນປັດຈຸບັນ. ໃນຄວາມເປັນຈິງ, ພວກເຂົາສູ້ຊົນເພື່ອຢາກເຂົ້າໃຈປັດຈຸບັນວ່າດີພຽງໃດ. ຖ້າພວກເຮົາໃຊ້ເວລາຄິດວິຕົກກັງວົນນຳເຣື່ອງລາວໃນອະດີດ, ຊອມເບິ່ງແຕ່ວ່າຈະມີຫຍັງເກີດຂຶ້ນ ຫຼື ແມ້ກະທັ້ງຍັງໃຊ້ຊີວິດໃນຄວາມບາບແຕ່ອະດີດ, ພວກເຮົາກໍບໍ່ສົມກັບຣາຊອານາຈັກຂອງພຣະເຈົ້າ. ການຫຼຽວຄືນຫຼັງສະທ້ອນເຖິງຄົນສອງຈິດສອງໃຈ, ແລະພວກເຮົາບໍ່ສາມາດຕິດຕາມພຣະຄຣິດໄດ້ຖ້າເຮົາຍັງເປັນຄົນສອງຈິດສອງໃຈ.

ກຸ່ມຂອງພວກເຮົາສາມາດຊ່ອຍກັນຈັບງ້ອນໄຖແນວໃດຂນະທີ່ເຮົາຕິດຕາມພຣະຄຣິດ?

ນຳໃຊ້ໃນຊີວິດ

ພຣະເຢຊູບໍ່ອະນຸຍາດໃຫ້ມີທາງລັດເພື່ອຕິດຕາມພຣະອົງ. ການເສັ່ງສລະສູງ, ແຕ່ບຳເນັດຍິ່ງໃຫ່ຍ: ຈະມີຊີວິດທີ່ເຕັມລົ້ນດ້ວຍຄວາມຍິນດີ ປັດຈຸບັນນີ້ ແລະຕລອດໄປ. ຈົ່ງພິຈາຣະນາການນຳໃຊ້ຕໍ່ລົງໄປນີ້:

- **ຈົ່ງປະອະດີດໃຫ້ຜ່ານພົ້ນໄປ.** ຢ່າໃຫ້ອະດີດກາຍເປັນສິ່ງສຳຄັນກວ່າບ່ອນທີ່ພຣະເຈົ້ານຳພາທ່ານໃນປັດຈຸບັນ.ຈົ່ງປັກຕາເບິ່ງພຣະຄຣິດແຕ່ລະວັນໃນຂນະທີ່ທ່ານຕິດຕາມພຣະອົງແລະໂອບກອດເອົາສິ່ງທີ່ລຸງນຢູ່ຂ້າງໜ້າທ່ານ.

- **ປະເມີນຫົນຄວາມສຳຄັນເບີນຶ່ງຂອງທ່ານ.** ຈົ່ງລະນຶກເຖິງການຕິດຕາມພຣະເຢຊູ ລວມທັງບໍ່ຮັບປະກັນຄວາມສະດວກສະບາຍ. ຈົ່ງຄົ້ນຫາ ຄວາມປາຖນາຄວາມສຸກສ່ວນຕົວຂອງທ່ານ ທີ່ກີດຂວາງທ່ານຈາກການຕິດຕາມພຣະຄຣິດຢ່າງແທ້ຈິງ. ຈົ່ງຮື້ກຳແພງເຫຼົ່ານັ້ນອອກ ແລະເອົາພຣະເຢຊູເປັນນ້ຳເບີນຶ່ງ.

- **ຈົ່ງຕິດຕາມພຣະເຢຊູດ້ວຍການເຊື່ອຟັງທັນທີທັນໃດ.** ຖ້າມີບ່ອນໃດບ່ອນນຶ່ງໃນຊີວິດທ່ານທີ່ທ່ານໄດ້ເລື່ອນການເຊື່ອຟັງ, ຈົ່ງເຂົ້າໃຈວ່າ ນີ້ແມ່ນການບໍ່ເຊື່ອຟັງ. ຮີບສາຣະພາບກັບໃຈ ແລະສິ່ງໃດທີ່ພຣະຄຣິດຊົງຮຽກເອີ້ນທ່ານໃຫ້ເຮັດຈົ່ງເຮັດໃນທັນທີທັນໃດ.

ຊີວິດທີ່ເຕັມລົ້ນດ້ວຍຄວາມຍິນດີນີ້ເປັນຂອງເຮົາໃນພຣະຄຣິດ, ຖ້າເຮົາເລືອກຕິດຕາມພຣະອົງຢ່າງແທ້ຈິງ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI

ບົດຮຽນໂຮງຮຽນວັນອາທິດ

ວັນອາທິດທີ 19 ພຶສພາ 2019 (5-19-2019)

ຈົ່ງກຽງຊັງຄອບຄົວຂອງທ່ານ

ມີຫຍັງແດ່ທີ່ຄົນເລີ່ມຕົ້ນເຮັດແລ້ວບໍ່ສຳເຮັດ?

ຈຸດສຳຄັນໃນບົດຮຽນ: ຄວາມຮັກພຣະເຢຊູຄວນເປັນຄວາມຕັ້ງໃຈແທ້ຈິງຈົນເຮັດໃຫ້ສິ່ງອື່ນໆຄ້າຍກັບວ່າເປັນຕາຊັງ.

ພຣະຄັມພີຕອບສນອງຕໍ່ຊີວິດ:

ປະເທດຝຣັ່ງມີຫໍໄອເຟລ(Eiffel Tower), ແຕ່ ອັງກິດມີ ທ່ານ ເອດເວີດ ວອັດກິນ, ນັກທຸຣະກິດທາງຣົດໄຟດ່ວນ ຜູ້ຊຶ່ງຕັດສິນໃຈວ່າ ລອນດອນຄວນມີຫໍຄອຍຂອງຕົນເອງ. ຫໍຄອຍນີ້ຈະສູງ 200 ຟຸດເຕັມ ສູງກວ່າ ແລະຈະເຮັດໃຫ້ຄົນລືມຫໍຄອຍຂີ້ຮ້າຍຂອງຝຣັ່ງ. ແນ່ນອນ ຫໍຄອຍໄອເຟັລມີຮ້ານອາຫານ, ໂຮງລະຄອນ, ຫ້ອງອາບນ້ຳເຕີກີ, ຊານຊີມ ວີວສອງແຫ່ງ, ແລະໂຮງແຮມເກົ້າສິບຫ້ອງ. ຢູ່ຈອມສຸດຍອດຈະມີຫ້ອງສ່ອງເບິ່ງດາວ.

ຫໍວວັດກິນມີຂໍ້ເສັງພຽງຢ່າງດຽວ: ສ້າງບໍ່ສຳເຮັດຈັກເທື່ອ. ເຖິງແມ່ນແຜນຝັງຂອງທ່ານເອັດເວີດຈະຫຼູຫຼາພຽງໃດກໍຕາມ, ຫໍຄອຍຂອງທ່ານສູງຮອດພຽງ 154 ຟຸດ ກ່ອນທີ່ເພິ່ນຈະໝົດທຶນເສັງກ່ອນ ແລະ ການກໍ່ສ້າງໄດ້ຢຸດຕິລົງໃນປີ 1894. ຫຼັງຈາກນັ້ນເຂົາຄົ້ນພົບວ່າສະຖານທີ່ເພິ່ນກໍ່ສ້າງແຫ່ງນີ້ບໍ່ເໝາະກັບຫໍຄອຍ. ຫໍຄອຍເລີ່ງຕັ້ງຄ້າງຢູ່ທີ່ນັ້ນໃນສະພາບທີ່ບໍ່ສຳເຮັດຢ່າງເສົ້າສລົດໃຈ ຈົນກະທັ້ງມັນເພພັງລົງ ໃນປີ 1907 !

ພວກເຮົາທຸກຄົນມີແຜນການໃຫຍ່ທີ່ບໍ່ສຳເຮັດເສັດສິ້ນ.ໂຊກບໍ່ດີ, ພວກເຮົາຫຼາຍຄົນມາຫາພຣະຄຣິດດ້ວຍແຜນການໃຫຍ່ຄ້າງຢູ່ແລ້ວ ເຮົາຈະຕິດຕາມພຣະອົງໄດ້ຢ່າງໃດ, ແລະຄວາມຕັ້ງໃຈຂອງເຮົາບໍ່ຄ່ອຍເໝາະສົມກັບແຜນການຂອງເຮົາສເມີ. ພຣະເຢຊູປາຖນາໃຫ້ເຮົາຕິດຕາມພຣະອົງ, ແຕ່ພຣະອົງຢາກໃຫ້ເຮົາຮູ້ຄັກແນ່ຄືກັນວ່າມັນມີຄວາມໝາຍຫຍັງໃນການເປັນສາວົກຂອງພຣະອົງ. ພຣະອົງຮຽກຮ້ອງເຮົາໃຫ້ຄິດໄລ່ຄຸນຄ່າຂອງມັນ.

ພຣະຄັມພີກ່າວວ່າແນວໃດ? ລູກາ 14:25-35 (ເບິ່ງຕາມຫົວຂໍ້ 1, 2 ແລະ 3)

ການສຶກສາພຣະຄັມພີ

1. <u>ລູກາ 14:25-27.</u>

25ມີປະຊາຊົນຈຳນວນຫຼວງຫຼາຍໄດ້ໄປກັບພຣະອົງ ພຣະອົງຊົງຫຼຽວຫຼັງຊົງກ່າວກັບເຂົາວ່າ. 26"ຖ້າຜູ້ໃດມາຫາເຮົາແລະບໍ່ຊັງພໍ່ແມ່, ລູກເມັຽ, ອ້າຍນ້ອງຊາຍຍິງ ກັບທັງຊີວິດຂອງຕົນເອງ ຜູ້ນັ້ນຈະເປັນສິດຂອງເຮົາບໍ່ໄດ້. 27ຜູ້ໃດບໍ່ໄດ້ແບກໄມ້ກາງແຂນຂອງຕົນຕາມເຮົາມາ ຜູ້ນັ້ນຈະເປັນສິດຂອງເຮົາບໍ່ໄດ້.

ຈຸດນີ້ ໃນພັນທະກິດຂອງພຣະເຢຊູຄຣິດ, ພຣະອົງຊົງມີກິດຕິສັບດັງຫຼາຍ, ມີຫຼາຍຄົນຖືກພາມາຫາພຣະເຢຊູຖາມະ

ເປັນຜູ້ເຮັດການອັສຈັນ ລ້ຽງເຂົາ, ປິ່ນປົວເຂົາ, ແລະສິດສອນເຂົາດ້ວຍຣິດອຳນາດ. ພວກເຂົາສແວງຫາສິ່ງດຽວກັນ ຫຼາຍກວ່ານີ້,ແຕ່ພຣະເຢຊູຫັນມາຫາເຂົາ ແລະທ້າທາຍເຂົາໃຫ້ປ່ຽນຈາກຜູ້ຕິດຕາມການອິດທິຣິດ ໃຫ້ກາຍມາເປັນສາ ວົກຜູ້ອຸທິດຕົນຢ່າງເຕັມສ່ວນ. *ສາວົກ* ລວມທັງຄວາມຄິດຕິດຕາມຜູ້ໃດຜູ້ນຶ່ງ, ແຕ່ມັນໄປໄກເລີກເຊິ່ງຍິ່ງກວ່າທີ່ເຮົາໃຊ້ ຄຳວ່າ *"ສາວົກ" ທັນດາ.* ສາວົກຜູ້ນຶ່ງຢາກຮຽນຮູ້, ແລະລາວຕ້ອງຍຶດໝັ້ນກັບສິ່ງທີ່ລາວຮຽນຮູ້ນັ້ນ; ສາວົກຄວນຮຽນ ເອົາແບບຢ່າງຜູ້ທີ່ລາວຕິດຕາມ. ຜູ້ທີ່ຕິດຕາມພຣະເຢຊູແທ້ຈິງ ປະສົງໄດ້ຮັບການອົບຮົມຈາກພຣະອົງ ເພື່ອເຂົາຈະ ກາຍເປັນເໝືອນພຣະອົງ.

ພຣະເຢຊູບໍ່ໄດ້ສເນີເງື່ອນໄຂນີ້ໃຫ້ກຸ່ມຄົນໃຫຍ່ຄົນໂຕ. ພຣະອົງກ່າວຄຳນີ້ຕໍ່ຝູງຊົນກຸ່ມໃຫຍ່ໜາແໜ້ນເປັນຄົນທັນ ດາສາມັນ. ຈົ່ງພິຈາຣະນາເບິ່ງອັຄສາວົກສິບສອງຄົນທີ່ເດີນໃກ້ຊິດກັບພຣະເຢຊູ. ບໍ່ມີຫັ້ງພິເສດກ່ຽວກັບເຂົາ; ພວກ ເຂົາເປັນຄົນຫາປາ, ຄົນເກັບພາສີ, ແລະຄົນຕໍ່ຕ້ານພຣະອົງ. ຄົນພວກນີ້ມີຄວາມສົງສັຍ ແລະບໍ່ແນ່ນອນໃຈ, ແຕ່ເຂົາກໍ ໄດ້ເລືອກຕິດຕາມພຣະເຢຊູ. ມັນເປັນການທ້າທາຍຕໍ່ພວກເຮົາ ທີ່ພຣະເຢຊູເອີ້ນເອົາຄົນທັມດາສາມັນຢ່າງເຮົາມາເປັນ ສາວົກພຣະອົງ.

ໃນຈຸດນີ້, ພຣະເຢຊູໃກ້ຈະເຖິງຕອນຈົບຂອງພັນທະກິດພຣະອົງແລ້ວ (ລູກາ 9:51). ພຣະອົງຊົງຊາບທຸກສິ່ງທີ່ຈະ ເກີດຂຶ້ນ, ພຣະອົງຈຶ່ງໄດ້ທ້າທາຍສາວົກ ແລະຜູ້ຕິດຕາມໃຫ້ຄິດຄົ້ນເລິກກວ່າເກົ່າ ແລະໃຫ້ຕັ້ງໃຈກວ່າເດີມເພື່ອຕິດ ຕາມພຣະອົງ. ການທ້າທາຍນີ້ເປັນຖ້ອຍຄຳທີ່ປະກອບດ້ວຍຣິດອຳນາດ, ກິນຝີດຄຳຫຼາຍ. ທ່ານບໍ່ສາມາດເປັນສາວົກ ຂອງພຣະເຢຊູຖ້າທ່ານບໍ່ກຽດຊັງ: ພໍ່ແມ່, ພັລຍາ ແລະລູກ, ອ້າຍ ແລະເອື້ອຍ, ພ້ອມທັງຊີວິດຂອງຕົນ.

ເປັນຫັ້ງທ່ານຈຶ່ງຄິດວ່າມີຫຼາຍຄົນຕິດໃຈພຣະເຢຊູ ໃນຕອນແລກ?

ນັ້ນມັນໜ້າບ. ແທ້ບໍ່? ພຣະເຢຊູຢາກໃຫ້ຂ້າພຣະເຈົ້າຊັງທຸກຄົນບໍ່? "ຊັງ" ຄ້າຍກັບວ່າໂຫດຮ້າຍ. "ຊັງ" ຄ້າຍກັບ ວ່າຮຸນແຮງເກີນໄປ. ພວກເຮົາຕັດສິນສິ່ງນີ້ຈັ່ງໃດຕໍ່ພຣະບັນຍັດຂໍ້ທີ່ຫ້າວ່າຈົ່ງໃຫ້ກຽດພໍ່ແມ່ຂອງເຮົາ? ເຊັ່ນດຽວກັນເມື່ອ ເຮົາອ່ານບົດຮຽນເທື່ອແລ້ວ, ພຣະເຢຊູໄດ້ສັ່ງເຮົາວ່າ, " ຈົ່ງຮັກສັດຕຣູຂອງທ່ານ " (ລູກາ 6:27). ບັດນີ້ ພຣະເຢຊູໂຕ້ ແຍ້ງເອງບໍ່?

ພວກເຮົາອາດເຄີຍໃຊ້ຄຳວ່າ "ຮັກ" ແລະ "ຊັງ" ໃນເຊີງຄວາມຮູ້ສຶກທາງອາຣົມ, ແຕ່ພຣະຄັມພີໃຊ້ຄຳເວົ້າເຫຼົ່ານີ້ ໃນທາງອື່ນ. ຄຳວ່າ "ຮັກ" ອາດໝາຍເຖິງ ເລືອກບາງສິ່ງ ຫຼືຊອບບາງຢ່າງ; ດັ່ງນັ້ນ, ຄຳວ່າ "ຊັງ" ອາດໝາຍເຖິງປະຕິ ເສດບາງສິ່ງ ຫຼືຊອບສິ່ງອື່ນ. ໃນທຳນອງນີ້, ພຣະເຢຊູເອີ້ນເຮົາໃຫ້ເລືອກພຣະອົງ, ຊອບພຣະອົງເໜືອທຸກສິ່ງທຸກຢ່າງ. ມັນແມ່ນອາທະກັມແຫ່ງຄວາມເມດຕາ. ຄວາມຮັກຂອງເຮົາມີຕໍ່ພຣະເຢຊູຍິ່ງໃຫຍ່ຫຼາຍ ຈົນວ່າ, ດ້ວຍຄວາມເມດຕາ, ຄວາມຮັກຂອງເຮົາຕໍ່ຄົນອື່ນນັ້ນ ບໍ່ໃກ້ຄຽງກັບຄວາມຮັກທີ່ເຮົາມີຕໍ່ພຣະອົງ.

ພຣະເຢຊູຢາກໃຫ້ເຮົາຮັກພຣະອົງ ໃນທາງທີ່ຈະນຳພາເຮົາໃຫ້ຫຼຸດຜ່ອນຄວາມໃສ່ໃຈສິ່ງອື່ນໆໃນຊີວິດເຮົາ ລວມ ທັງຊີວິດຂອງເຮົາດ້ວຍ! ມັນເປັນຄຳຮຽກຮ້ອງທຸກໆຄົນໃຫ້ "ແບກກາງແຂນຂອງຕົນ." ສາວົກ ແລະຜູ້ຕິດຕາມຂອງ ພຣະອົງຮູ້ແນ່ແກ່ໃຈແລ້ວວ່າ ນັ້ນມີຄວາມໝາຍຫັ້ງ ຄື: **ຮັບເອົາກາງແຂນແມ່ນຍອມຕາຍ.** ພຣະເຢຊູໄດ້ໃຫ້ຄວາມກະ ຈ່າງແຈ້ງພໍສົມຄວນໃນເຣື່ອງເຮົາຕ້ອງເຮັດຫັ້ງໃນການເປັນສາວົກຂອງພຣະອົງ: ພວກເຮົາຕ້ອງເລືອກພຣະອົງເໜືອ ກວ່າ ແລະສູງກວ່າສິ່ງອື່ນໃດໃນຊີວິດ!

2. <u>ລູກາ14:28-33</u>:

[28]ດ້ວຍວ່າໃນພວກທ່ານມີຜູ້ໃດ, ເມື່ອຈະສ້າງປ້ອມຈະບໍ່ນັ່ງລົງຄິດລາຄາເສັຽກ່ອນ ວ່າ ຈະມີພໍສ້າງໃຫ້ແລ້ວໄດ້ ຫລື ບໍ່? [29]ຢ້ານວ່າເມື່ອໄດ້ວາງຮາກລົງແລ້ວແລະເຮັດໃຫ້ສຳເລັດບໍ່ໄດ້ ຄົນທັງປວງທີ່ເຫັນກໍຈະກ່າວເຍາະເຍີ້ຍວ່າ, [30]'ຄົນນີ້

ຕັ້ງຕົ້ນກໍ່ແຕ່ເຮັດໃຫ້ສຳເຮັດບໍ່ໄດ້'. [31]ຫລືມີກະສັດອົງໃດ ເມື່ອຈະຍົກກອງທັບໄປຕໍ່ສູ້ກັບກະສັດອົງອື່ນ ຈະບໍ່ໄດ້ນັ່ງຄຶດ ເບິ່ງກ່ອນວ່າ ທີ່ຕົນມີພົນທະຫານໝື່ນໜຶ່ງ ຈະສູ້ກັບຜູ້ທີ່ຍົກກອງທັບສອງໝື່ນມາຮົບໄດ້ຫລືບໍ່? [32]ຖ້າສູ້ບໍ່ໄດ້, ເມື່ອຍັງຢູ່ ຫ່າງກັນ ເພິ່ນຈະໃຊ້ທູດໄປຖາມເງື່ອນໄຂຂອງຄວາມສງົບ. [33]ຢ່າງນັ້ນແຫລະ, ທຸກຄົນໃນພວກທ່ານທີ່ບໍ່ໄດ້ສລະສິ່ງ ສາລະພັດທີ່ຕົນມີຢູ່ ຈະເປັນສິດຂອງເຮົາບໍ່ໄດ້.

ສິ່ງທີ່ພຣະເຢຊູຢາກຮ້ອງໃຫ້ຝູງຊົນເຮັດບໍ່ມີໜ້າທີ່ໃດ່ງ່າຍ: (1) ຮັກພຣະອົງທີ່ສຸດຈິນວ່າ ຄວາມຮັກສິ່ງອື່ນຄືກັບວ່າ ຊັງ, ແລະ (2) ການຍອມຕາຍເພື່ອພຣະອົງ. ພຣະເຢຊູຊົງຊາບວ່າສິ່ງນີ້ເປັນການຍາກສຳລັບເຂົາທັງຫຼາຍ, ດັ່ງນັ້ນພຣະ ອົງຈຶ່ງແກ້ງເຂົາໃຫ້ຄິດທະລຸທຸກຢ່າງວ່າມັນໝາຍເຖິງຫຍັງ. ເວົ້າອີກຢ່າງນຶ່ງວ່າ, ພຣະອົງຢາກຮ້ອງໃຫ້ເຂົາຄິດໄລ່ມູນຄ່າ ໃນການຕິດຕາມພຣະອົງ.

ການຈັດລຳດັບພຣະເຢຊູໄວ້ກ່ອນຄົນອື່ນໃນຊີວິດເຮົານັ້ນອາດຈະບໍ່ຖືກໃຈຄົນອື່ນ. ຄົນໃນຄອບຄົວ ແລະໝູ່ເພື່ອນ ອາດບໍ່ສາມາດຍອມຮັບການຍອມມອບຕົນຢ່າງເດັດດ່ຽວຂອງເຮົາຕໍ່ພຣະຄຣິດໄດ້, ດັ່ງນັ້ນພວກເຮົາຕ້ອງໄຕ່ຕອງໃຫ້ ຄັກວ່າເຮົາຈະຕ້ອງເສັງຫຍັງແດ່. ພວກເຮົາອາດຈະເຄີຍປະຕິເສດມາແລ້ວຍ້ອນຄົນໃກ້ຊິດເຮົາ, ດັ່ງທີ່ພຣະເຢຊູຊົງຊາບ ມາກ່ອນ. ພຣະອົງຊົງຊາບວ່າການປະຕິເສດຈະເພີ້ມຂຶ້ນ ແລະຊາບວ່າການໄດ້ວາງຢູ່ຕໍ່ໜ້າພຣະອົງ. ພຣະຊົງຊາບ ວ່າສາວົກຂອງພຣະອົງຈະພົບກັບສິ່ງເຫຼົ່ານີ້. ເພາະສະນັ້ນ ພຣະເຢຊູຈຶ່ງຢາກໃຫ້ເຮົາຄິດໄລ່ມູນຄ່າທີ່ຕ້ອງເສັຍ (count the cost).

ທຸກວັນນີ້ ຄຣິສຕຽນທີ່ຖືກຂົ່ມເຫັງທົ່ວທັງໂລກໄດ້ຫລົບໜີຈາກບ້ານເຮືອນຂອງເຂົາຍ້ອນເຂົາເລືອກຕິດຕາມພຣະ ເຢຊູ, ແລະເປັນເຫດໃຫ້ຄອບຄົວບໍ່ຕ້ອນຮັບເຂົາອີກຕໍ່ໄປ. ບາງຄົນຖືກຄອບຄົວຕັດຂາດ ແລະບໍ່ສົນໃຈ; ບາງຄົນຖືກຂ້າ ຕາຍ. ໂດຍສະເລ່ຍແລ້ວຄຣິສຕຽນທົ່ວໂລກ ນຶ່ງໃນສິບສອງຄົນປະສົບການຂົ່ມເຫັງ, ລວມທັງການຕິດຄຸກ, ຖືກລັກພາ ຕົວ, ຖືກຂົ່ມຂືນ, ແລະຖືກຂ້າຕາຍ. ທັງໝົດແມ່ນຍ້ອນເຂົາເລືອກຕິດຕາມພຣະເຢຊູ.

ພວກເຮົາຍັງຮູ້ເຖິງພຣະພອນໃນການຕິດຕາມພຣະເຢຊູ, ພຣະອົງຂໍເຕືອນພວກເຮົາໃຫ້ຄິດໄລ່ສິ່ງທີ່ຕ້ອງເສັງ. ການເລືອກຕິດຕາມພຣະເຢຊູ ບໍ່ແມ່ນການຕັດສິນໃຈຫຼີ້ນໆ ແລະບໍ່ໃຫ້ຄິດເຮັດແບບນັ້ນຈັກເທື່ອ. ຖ້າທ່ານພ້ອມແລ້ວ, ທ່ານຕ້ອງພ້ອມທີ່ຈະສລະທຸກສິ່ງ ແລະທຸກຄົນທີ່ທ່ານຮູ້ຈັກ. ທ່ານຕ້ອງຍອມຕັດສິດ ແລະຄວາມປຖາຂອງຕົນ ແລ້ວ ແບກເອົາກາງແຂນ.

3. <u>ລູກາ 14:34-35</u> :

[34]"ເກືອເປັນຂອງດີ ແຕ່ຖ້າເກືອນັ້ນໝົດຣົດເຄັ້ມໄປແລ້ວ ຈະເຮັດໃຫ້ກັບເຄັ້ມອີກໄດ້ຢ່າງໃດ? [35]ຈະໃຊ້ເປັນຝຸ່ນໃສ່ດິນກໍ ບໍ່ໄດ້ ຈະປະສົມກັບກອງຝຸ່ນສັດເພື່ອເຮັດຝຸ່ນກໍບໍ່ໄດ້ ເຂົາກໍເອົາໄປຖິ້ມເສັ ຜູ້ໃດມີຫູ, ຈົ່ງຟັງເອົາເທີນ!".

ຊີວິດຄຣິສຕຽນບໍ່ມີບ່ອນສຳລັບການຕັດສິນໃຈເຄິ່ງໆກາງໆ. ການຕັດສິນໃຈເຄິ່ງດຽວກໍເໝືອນເກືອທີ່ບໍ່ມີຣົດເຄັ້ມ! ຕົວຢ່າງ, ເວລາເຮົາຄິດເຖິງເກືອ, ພວກເຮົາຄິດເຖິງລະດັບຂອງຣົດຊາດ. ພວກເຮົາໃຊ້ເກືອເພື່ອໃຫ້ອາຫານມີຣົດຊາດ ດີຂຶ້ນ. ໃນສມັຍບໍ່ທັນມີຕູ້ເຢັນ, ພວກເຮົາໃຊ້ເກືອເພື່ອປ້ອງກັນ ຫຼື ຮັກສາອາຫານບໍ່ໃຫ້ບູດເນົ່າ. ພຣະເຢຊູພັລນາສາວົກ ຂອງພຣະອົງປຽບດັ່ງ "ເກືອໃນແຜ່ນດິນໂລກ" (ມັດທາຍ 5:13); ເຊັ່ນດຽວກັນ, ພວກເຮົາກໍເປັນເໝືອນສິ່ງທີ່ມີອິດທິພົນ ປ້ອງກັນຮັກສາສຳລັບອານາຈັກຂອງພຣະເຈົ້າ.

ໃນທາງໃດທີ່ຄົນອື່ນມີຣົດເຄັ້ມໃນຊີວິດຂອງທ່ານແລະມີອິດທິພົນເຮັດໃຫ້ທ່ານຫົວກະທາຍພຣະເຈົ້າ?

ຄົນມັກໃຊ້ເກືອເພື່ອເປັນສັນຍາລັກ ເຄື່ອງໝາຍຄຳໝັ້ນສັນຍາຣະຫວ່າງເພື່ອນ. ການຮັບປະທານອາຫານຮ່ວມກັບຜູ້ໃດຜູ້ນຶ່ງແມ່ນການຮັບປະທານສັນເພື່ອນມິດ, ແລະເກືອເປັນ steple ໃນພາເຂົ້າ. ແມ້ກະທັ້ງປັດຈຸບັນ, ທ່າທີຂອງຊາວອາຣັບໃຊ້ຄຳວ່າ *"ມີເກືອຣະຫວ່າງເຮົາ"* ສະແດງເຖິງການຕ້ອນຮັບ ປະທັບຕາ ຢັ້ງຢືນມິຕພາບ. ເມື່ອເຮົາເຂົ້າສູ່ຄວາມສັມພັນກັບພຣະຄຣິດ ຄຳໝັ້ນສັນຍາອີງໃສ່ສິ່ງທີ່ພຣະຄຣິດໄດ້ກະທຳເພື່ອນຳເຮົາມາຫາພຣະເຈົ້າ ພວກເຮົາກາຍເປັນເກືອຂອງພຣະອົງ. ພວກເຮົາຈະເຮັດຢ່າງໃດເພື່ອຮັບປະກັນວ່າ ພວກເຮົາຍັງຄົງມີອິດທິພົນແຂງແຮງໃນໂລກ?

- **ຢືນຢູ່ໃນຄວາມສາມັກຄີທັມກັບພຣະຄຣິດ**. ຈົ່ງປັກຕາ ແລະຄວາມຄິດຂອງທ່ານໃສ່ພຣະທັມພຣະອົງ.
- **ຢູ່ຢ່າງສົງບສຸກຊຶ່ງກັນແລະກັນ**. ຈົ່ງຈຳໄວ້ວ່າ ການຕິດຕາມພຣະເຢຊູແມ່ນການແບກກາງແຂນຂອງຕົນ; ໃນເມື່ອເຮົາຕາຍຕໍ່ຄວາມເຫັນແກ່ຕົວ ພວກເຮົາກໍສາມາດຢູ່ຢ່າງສົງບຊຶ່ງກັນແລະກັນ.
- **ຈົ່ງຢູ່ໃນຊຸມຊົນຮ່ວມກັບຜູ້ເຊື່ອອື່ນໆ**. ຊຸມຊົນເຕືອນພວກເຮົາວ່າ ເຮົາບໍ່ໂດດດ່ຽວໃນຖານະຜູ້ເຊື່ອ.

ຈົ່ງເດີນຕໍ່ໄປ ບໍ່ວ່າມັນຈະຍາກພຽງໃດກໍຕາມ. ຈົ່ງຈົດຈຳຄຳໝັ້ນສັນຍາເຣື່ອງເກືອ ຄຳໝັ້ນສັນຍາແຫ່ງຄວາມຈົງຮັກພັກດີທີ່ຖາວອນ. ຊຶ່ງບໍ່ແມ່ນພຽງແຕ່ຄຳໝັ້ນສັນຍາຂອງທ່ານຕໍ່ພຣະເຈົ້າ, ແຕ່ແມ່ນຄຳໝັ້ນສັນຍາຂອງພຣະເຈົ້າຕໍ່ທ່ານເໝືອນກັນ. ພຣະອົງຊົງສຖິດນຳທ່ານ. ພຣະອົງຮັກ, ປົວແປງ, ແລະເສີມພລັງທ່ານ. ທ່ານສາມາດກ້າວເດີນຕໍ່ໄປ.

ກຸ່ມຂອງທ່ານສາມາດຊ່ວຍກັນແນວໃດເພື່ອຮັກສາຄວາມສາມັກຄີທັມກັບພຣະຄຣິດແລະມີອິດທິພົນຕໍ່ຄົນອື່ນເພື່ອພຣະອົງ?

ນຳໃຊ້ໃນຊີວິດ

ພຣະເຢຊູເອີ້ນເຮົາໃຫ້ເຮັດສິ່ງທີ່ຍາກ ໂດຍການປະຕິນເອງໄວ້ ແລະຕິດຕາມພຣະອົງ. ທ່ານຈະເຮັດຫຍັງແດ່ເພື່ອສະທ້ອນການອຸທິດຕົນຂອງທ່ານຕໍ່ພຣະອົງ? ຈົ່ງໃຊ້ການນຳໃຊ້ຕໍ່ໄປນີ້?

- **ຈົ່ງປະເມີນຕົນທ່ານເອງ**. ຈົ່ງປະເມີນຕົນເອງ. ບ່ອນໃດໃນຊີວິດທ່ານມີຫຼັກຖານປະນີປະນອມຢູ່? ຖ້າທ່ານພົບວ່າທ່ານບໍ່ໄດ້ມອບທຸກສິ່ງແດ່ພຣະຄຣິດ, ຈົ່ງອະທິຖານ ແລະມອບສິ່ງນັ້ນດຽວນີ້.
- **ຈົ່ງມີອິດທິພົນຕໍ່ຄົນອື່ນ**. ຈົ່ງຊີ້ໃຫ້ເຫັນວ່າການສົນທະນາຂອງທ່ານໃນອາທິດນີ້ສະທ້ອນໃຫ້ເຫັນຄວາມສັມພັນຂອງທ່ານກັບພຣະຄຣິດ. "ຂໍໃຫ້ວາຈາຂອງທ່ານທັງຫຼາຍ ປະກອບດ້ວຍເມດຕາຄຸນສເມີ ປະສົມດ້ວຍເກືອ, ເພື່ອທ່ານຈະຮູ້ຄຳຕອບຕໍ່ທຸກຄົນ (ກລຊ 4:6).
- **ຈົ່ງນັບມູນຄ່າ (Count the cost)**. ຈົ່ງເຂົ້າຮ່ວມໃນການເປັນເກືອໃນຄຸ້ມຂອງທ່ານ. ຈົ່ງທຸ້ມເທເວລາ ແລະເຫື່ອແຮງຂອງທ່ານຊ່ວຍໃຫ້ຄົນອື່ນໃນຄຸ້ມຂອງທ່ານໄດ້ເຫັນ ຄວາມຮັກ ແລະພຣະຄຸນຂອງພຣະຄຣິດໃນທ່ານ.

ພວກເຮົາບໍ່ໄດ້ສ້າງຫໍຄອຍ (towers) ຫຼື ກອງທັບ (armies). ພວກເຮົາກຳລັງສ້າງສິ່ງທີ່ມີຄວາມສຳຄັນຫຼາຍກວ່ານັ້ນໄດ້ແກ່: ຊີວິດ ແລະຊຸມຊົນ (communities) ຖວາຍແດ່ພຣະຄຣິດ. ຂໍໃຫ້ແນ່ໃຈວ່າທ່ານໄດ້ນັບມູນຄ່າແລ້ວ!

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI

ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 26 ພຶສພາ 2019 (5-26-2019)

ຫາປໂຍດຈາກມິດສະຫາຍ

ມີຜົນຜລິດທີ່ເປັນແນວຄິດໃໝ່ໆຫຍັງແດ່ທີ່ທ່ານພົບເຫັນຜ່ານມາ?

ຈຸດສຳຄັນໃນບົດຮຽນ: ຈົ່ງໃຊ້ສະຕິປັນຍາກັບຊັບສິນ ແລະໂອກາດຕ່າງ.

ພຣະຄັມພີຕອບສນອງຕໍ່ຊີວິດ:

ທຸຣະກິດມັກຈະມີການສ່ຽງເລື້ອຍໆເພື່ອຈະໄດ້ຮັບຄວາມສົນໃຈ. ແລະບໍຣິສັດວິສາຫະກິດ**ມິນເນຕັນກາ**ໄດ້ໃຊ້ການສ່ຽງນີ້ໃນປີ1980. ເຖິງແມ່ນວ່າສະບູໄດ້ມີທົ່ວໄປແລ້ວແຕ່ປີ1865, ແຕ່ຍັງບໍ່ມີຄົນນຳເອົາໄປໃຊ້ຢູ່ເຮືອນຂອງເຂົາເຈົ້າເທື່ອ. ແຕ່ບໍຣິສັດມິນເນຕັນກາໄດ້ຕັດສິນໃຈປ່ຽນສິ່ງນັ້ນ ໃນເວລາເຂົາແນະນຳສະບູອ່ອນ(Softsoap). ຕັ້ງແຕ່ປາກົດມີ ສະບູນ້ຳ ແລະ ນ້ຳນ້ຳມາ, ພວກເຂົາຍັງບໍ່ສາມາດຂຶ້ນທະບຽນລິຂະສິດຜລິດຕະພັນເຫຼົ່ານີ້ເທື່ອ, ແລ້ວເຂົາຈະສາມາດນຳມາວາງຕລາດໄດ້ແນວໃດ ກ່ອນທີ່ບໍຣິສັດໃຫ່ຍກວ່າຈະມາຍຶດເອົາ?

ມິນເນຕັນກາ ໄດ້ຕົກລົງໃຈວ່າ ຖ້າເຂົາສາມາດນຳໜ້າຄູ່ແຂ່ງໄລຍະຫົກເດືອນ, ຕລາດກໍຕ້ອງເປັນຂອງເຂົາ. ພວກເຂົາໄດ້ໄປຫາພຽງແຕ່ສອງບໍຣິສັດທີ່ຜລິດຈັກສູບນ້ຳປລາສຕິກແລະໄດ້ຊື້ເຄື່ອງອຸປກອນທັງໝົດ ນຶ່ງຮ້ອຍລ້ານໂດລາ. ຄູ່ແຂ່ງຂອງເຂົາຕ້ອງໄດ້ລໍຖ້າເຖິງ 6-8 ເດືອນ ກວ່າຈະໄດ້ເຄື່ອງປະກອບປ້ຳນ້ຳຕື່ມອີກ, ແຕ່ເຂົາກໍຍັງຫວັງຕ່ຍອດຂາຍໄລຍະນັ້ນ, ລູກຄ້າອາດຖືກດູດມາຊື້ສະບູອ່ອນໝົດ. ມັນເປັນການສລາດ ແລະສ່ຽງ ແຕ່ໃນທີ່ສຸດເຂົາໄດ້ຊຳຣະໜີ້ຄືນ. ໃຫ່ຍມະຫຶມາເລີ່ງ!

ການສລາດອາດບໍ່ແມ່ນຄຸນພາບທີ່ດີສຳລັບຊີວິດຄຣິສຕຽນ, ແຕ່ພຣະເຢຊູທ້າທາຍຜູ້ຕິດຕາມພຣະອົງດ້ວຍເຣື່ອງຄວາມສລາດ. ຈະມີຫຍັງເກີດຂຶ້ນ ຖ້າເຮົາສວຍໃຊ້ຊັບສິນຂອງເຮົາ ເພື່ອໃຫ້ອານາຈັກຂອງພຣະເຈົ້າຈະເຣີນເຕີບໃຫ່ຂຶ້ນ?

ພຣະຄັມພີກ່າວວ່າຢ່າງໃດ: ລູກາ 16:1-12 (ເບິ່ງຂໍ້ 1, 2 ແລະ 3)

ການສຶກສາພຣະຄັມພີ

1. <u>ລູກາ 16:1-2</u> :

[1]ພຣະອົງຊົງກ່າວກັບພວກສາວົກຂອງພຣະອົງວ່າ, "ຍັງມີເສດຖີທີ່ມີເຈົ້າພະນັກງານຄົນໜຶ່ງ ແລະມີຄົນຟ້ອງຕໍ່ເສດຖີວ່າພະນັກງານຄົນນັ້ນໄດ້ຜານຊັບຂອງທ່ານເສັ່ຽ. [2]ເສດຖີຈຶ່ງເອີ້ນພະນັກງານຄົນນັ້ນມາເວົ້າວ່າ 'ເຣື່ອງທີ່ເຮົາໄດ້ຍິນກ່ຽວກັບເຈົ້ານັ້ນເປັນຢ່າງໃດ ຈົ່ງລາຍງານກ່ຽວກັບໜ້າທີ່ຂອງເຈົ້າເສັ່ຽ ເພາະເຈົ້າຈະເປັນພະນັກງານຕໍ່ໄປອີກບໍ່ໄດ້'.

ພຣະເຢຊູໄດ້ເວົ້າເຣື່ອງວິຖີທາງບໍ່ປົກກະຕິດ້ວຍຄຳອຸປມານີ້ເພື່ອຮຽກຮ້ອງເຮົາໃຫ້ໃຊ້ປັນຍາກັບເຂົ້າຂອງຂອງເຮົາ. ຄຳອຸປມາຂອງພຣະອົງກ່ຽວຂ້ອງກັບຊາຍສອງຄົນ: ເສດຖີ ແລະພະນັກງານຂອງເພິ່ນ. ຕຳແໜ່ງຜູ້ຈັດການນີ້ເກີດຂຶ້ນທີ່ປະເທດໃນຕາເວັນອອກກາງ ໃນສມັຍພຣະເຢຊູ. ເຈົ້າພະນັກງານໄດ້ຈັດການທຸຣະກິດແລະຊັບສິນຂອງເສດຖີ. ລາວຕັດສິນໃຈໃນເຣື່ອງການຄຸມຄົນໃຊ້ຂອງເຈົ້າຂອງເຮືອນ ແລະການແຈກຈ່າຍສິນຄ້າ ແລະດຳເນີນທຸຣະກິດແທນນາຍ

ຂອງລາວ. ພວກເຮົາກໍເຄີຍໄດ້ເຫັນການການໄກ່ເກ່ຍມາກມາຍມາກ່ອນ ເຊັ່ນ ເຣື່ອງໂຢເຊັບ ແລະ ໂປຕີຟາ (ປຖກ 39:1-20).

ເຈົ້າພະນັກງານຜູ້ນີ້ໄດ້ເຜົາຜານຊັບຂອງນາຍຂອງລາວລົງຈຳດິນ ລາວໄດ້ສໍ້ໂກງຊັບສິນນາຍຂອງລາວ. ພຣະເຢຊູ ບໍ່ໄດ້ຊີ້ແຈງຢ່າງລະອຽດວ່າເຈົ້າພະນັກງານເຮັດເຣື່ອງນີ້ຢ່າງໃດ ແລະບໍ່ຮູ້ວ່າລາວໄດ້ໃຊ້ເງິນເຮັດຫຍັງ, ແຕ່ທ່ານຄົງໄດ້ ຍິນສຽງອາການຕົກໃຈຂອງເສດຖີ, ຕາມທີ່ເພິ່ນໄດ້ຖາມ, "ເຣື່ອງທີ່ເຮົາໄດ້ຍິນກ່ຽວກັບເຈົ້ານັ້ນເປັນຢ່າງໃດ?" ຊາຍທີ່ ເພິ່ນໄວ້ວາງໃຈໃນທຸຣະກິດຂອງເພິ່ນ ທຸຣະກິດທີ່ລ້ຽງຄອບຄົວຂອງເພິ່ນ ຖືກສໍ້ໂກງໄປຈາກເພິ່ນ. ເຈົ້ານາຍກໍເສັ່ງໃຈ ແລະມີສິດລົງໂທດທຸກຢ່າງ. "ຈົ່ງລາຍງານກ່ຽວກັບໜ້າທີ່ຂອງເຈົ້າເສັ່ງ, ເພາະເຈົ້າຈະເປັນພະນັກງານຕໍ່ໄປອີກບໍ່ໄດ້."

ລອງປ່ຽນບົດບາດເບິ່ງ: ພວກເຮົາເປັນພະນັກງານ, ແລະພຣະເຈົ້າເປັນເສດຖີເຈົ້າຂອງທຸຣະກິດ. "ແຜ່ນດິນໂລກ ແລະທຸກສິ່ງໃນນັ້ນ,ໂລກ ແລະປະຊາກອນຂອງໂລກ ເປັນຂອງອົງພຣະຜູ້ເປັນເຈົ້າ(ພສສ24:1). ພຣະເຈົ້າສ້າງທຸກສິ່ງ ທັງໃນ ແລະເທິງແຜ່ນດິນໂລກ, ແລະ ພຣະອົງຕັ້ງເຮົາໃຫ້ເປັນຜູ້ຮັບຜິດຊອບດູແລຮັກສາສິ່ງທີ່ຊົງສ້າງນັ້ນ (ປຖກ1:28-30). ພວກເຮົາເປັນພຽງຜູ້ຈັດການຊັບສິມບັດຂອງພຣະເຈົ້າ. ບໍ່ມີຫຍັງເປັນຂອງເຮົາ; ທຸກສິ່ງເປັນຂອງພຣະເຈົ້າ. ຄືກັນ ກັບເຈົ້າພະນັກງານໃນຄຳອຸປມາ. ພວກເຮົາທຸກຄົນ, ເມື່ອເຖິງຈຸດໃດນຶ່ງໃນຊີວິດເຮົາ, ມີຄວາມຜິດຕໍ່ການຜານຊັບສິມ ບັດຂອງພຣະເຈົ້າ.

ທ່ານພົບເຫັນຄົນຜານຊັບສິມບັດຂອງພຣະເຈົ້າແລະໂອກາດທີ່ພຣະເຈົ້າປະທານໃຫ້ຢ່າງໃດ?

ເງິນບໍ່ແມ່ນສິມບັດສິ່ງດຽວທີ່ພຣະເຈົ້າໄດ້ມອບໃສ່ມືຂອງເຮົາ. ພຣະເຈົ້າຍັງໄດ້ມອບໝາຍໃຫ້ດູແລຊັບສິນ, ເຂົ້າ ຂອງ, ໂອກາດແລະ ຄວາມສັມພັນ ທຸກສິ່ງທີ່ເຮົາມີ. ມັນເປັນສິມບັດທຸກສິ່ງທີ່ອຳນວຍໃຫ້ແຜ່ນດິນຂອງພຣະເຈົ້າຈະ ເຣີນລ້ຳໜ້າ. ພຣະອົງໄດ້ປະທານເວລາທີ່ພວກເຮົາສາມາດເຮັດໃຫ້ເສັ່ງຫາງ ຫຼືພວກເຮົາສາມາດໃຊ້ໃຫ້ເກີດຜົນດີເພື່ອ ຖວາຍກຽດພຣະຄຣິດ ແລະຊີ້ໄປຫາພຣະອົງ.

ໃນຄຳອຸປມາ, ເຈົ້າພະນັກງານຖືກເອີ້ນໃຫ້ລາຍງານຕົວ. ໃນຈຸດໃດຈຸດນຶ່ງ, ພວກເຮົາຈະຖືກສອບສວນຄວາມຮັບ ຜິດຊອບ ວ່າພວກເຮົາໄດ້ໃຊ້ຊັບສິນ ແລະໂອກາດຂອງເຮົາຢ່າງໃດ. ອາດເປັນການສລາດຫາກພວກເຮົາປ່ຽນອຸປນິ ສັຍຂອງເຮົາໃຫ້ກາຍເປັນຄວາມຄິດຝ່າຍອານາຈັກຂອງພຣະເຈົ້າ, ແລະໃຊ້ທຸກສິ່ງທີ່ພຣະເຈົ້າມອບໝາຍໃຫ້ເຮົາເພື່ອ ຖວາຍກຽດແດ່ພຣະອົງ ແລະຊ່ວຍເຫຼືອຜູ້ອື່ນ.

2. <u>ລູກາ 16</u>:3-9:

3ເຈົ້າພະນັກງານນັ້ນຈຶ່ງຄຶດໃນໃຈວ່າ 'ເຮົາຈະເຮັດແນວໃດໜໍ ເພາະນາຍຈະຖອດເຮົາອອກເສັ່ງຈາກໜ້າທີ່ພະນັກງານ ແລ້ວເຮົາຂຸດດິນກໍບໍ່ມີແຮງ, ຈະຂໍທານກໍອາຍເຂົາ. 4ເຮົາຮູ້ແລ້ວວ່າຈະເຮັດແນວໃດດີເພື່ອເວລາເຮົາຖືກຖອດຈາກໜ້າ ທີ່ພະນັກງານແລ້ວ ເຂົາຈະຮັບເຮົາໄວ້ໃນເຮືອນຂອງເຂົາໄດ້'. 5ລາວຈຶ່ງເອີ້ນລູກໜີ້ຂອງນາຍມາທຸກຄົນ ແລ້ວຖາມຜູ້ ທຳອິດວ່າ 'ເຈົ້າເປັນໜີ້ນາຍຂອງເຮົາເທົ່າໃດ?' 6ຜູ້ນັ້ນກໍຕອບວ່າ 'ເປັນໜີ້ນ້ຳມັນຮ້ອຍຖັງ' ເຈົ້າພະນັກງານນັ້ນຈຶ່ງບອກ ວ່າ 'ເອົາບັນຊີຂອງເຈົ້ານັ່ງລົງແລ້ວຈົດໃສ່ຫ້າສິບຖັງໄວເສັ່ງ'. 7ແລ້ວກໍຖາມອີກຄົນໜຶ່ງວ່າ 'ເຈົ້າເດ, ເຈົ້າເປັນໜີ້ເທົ່າໃດ?' ຜູ້ນີ້ຕອບວ່າ 'ເປັນໜີ້ເຂົ້າປຸກຮ້ອຍກຸງນ' ເຈົ້າພະນັກງານຈຶ່ງບອກວ່າ 'ຈົ່ງເອົາບັນຊີຂອງເຈົ້າມາຈົດໃສ່ແປດສິບກຸງນ ເສັ່ງ'. 8ແລ້ວເຈົ້ານາຍກໍສັຣເສີນເຈົ້າພະນັກງານຜູ້ບໍ່ສັດຊື່ວ່າ 'ເພິ່ນໄດ້ເຮັດດ້ວຍຄວາມສລາດ ດ້ວຍວ່າຄົນຝ່າຍໂລກ ນີ້ໃນສມັຍຂອງເຂົາ ເຂົາໃຊ້ສະຕິປັນຍາ ສລາດກວ່າຄົນຝ່າຍຄວາມສວ່າງອີກ'. 9ຝ່າຍເຮົາ ເຮົາບອກທ່ານທັງຫຼາຍວ່າ ຈົ່ງເຮັດໃຫ້ຕົນມີມິດສະຫາຍດ້ວຍຊັບສິມບັດອັນບໍ່ຍຸຕິທັມ ເພື່ອເວລາຊັບນັ້ນເສັ່ງໄປແລ້ວ ເຂົາຈະໄດ້ຕ້ອນຮັບພວກ ທ່ານໄວ້ໃນບ່ອນອາສັຍອັນຖາວອນເປັນນິດ.

ເຈົ້າພະນັກງານຕົກຢູ່ໃນທ່າເກືອບຈະເສັງທຸກຢ່າງທີ່ລາວມີ. ລາວບໍ່ສາມາດຮ້ອງທຸກກ່ຽວກັບສະພາບຂອງລາວ, ໃນເມື່ອລາວຈະຕ້ອງຮັບຜິດຊອບຕໍ່ສິ່ງທີ່ລາວໄດ້ເຮັດ. ລາວບໍ່ໄດ້ປະຕິເສດສິ່ງນັ້ນ. ແຕ່ ລາວຈະເປັນຈັ່ງໃດໃນຂັ້ນຕໍ່ໄປ? ເຈົ້າພະນັກງານມີ"ພາວະຫົວລ້ຽວຫົວຕໍ່"(aha moment). ລາວຖືກຂາຍ່າງໄວວາ ແລະໄດ້ວາງແຜນ. ລາວເອີ້ນລູກໜີ້ນາຍຂອງຕົນທຸກຄົນເຂົ້າມາ ແລະໄດ້ປ່ຽນໃບບິນຕໍ່ໜ້າເຂົາ. ເຈົ້າພະນັກງານໄດ້ "ດັດແປງປຶ້ມບັນຊີ"ໃຫ້ພໍໃຈເຂົາ. ນີ້ເປັນໃບຢັ້ງ ຢືນແບບ "ຂ້ອຍຈະເກົາຫຼັງໃຫ້ເຈົ້າ ຖ້າເຈົ້າເກົາຫຼັງຂ້ອຍ." ລາວຫວັງວ່າ ຖ້າລາວຊ່ອຍເຂົາໄປ, ເວລາລາວຖືກໄລ່ອອກ, ແລະ ບໍ່ມີບ່ອນຢູ່, ລາວສາມາດຂໍຮ້ອງລູກໜີ້ໃຫ້ຕອບແທນບຸນຄຸນລາວຄືນ.

ໃນຈຸດນີ້, ພວກເຮົາອາດຄິດວ່າຍັງບໍ່ຈົບລົງດ້ວຍດີສຳລັບເຈົ້າພະນັກງານ. ແຕ່ຂໍ້ 8 ໄດ້ບັນຈຸຄວາມຕົກຕະລຶງ: "ແລ້ວເຈົ້ານາຍກໍໄດ້ສັຣເສີນເຈົ້າພະນັກງານຜູ້ບໍ່ສັດຊື່ວ່າເພິ່ນໄດ້ເຮັດດ້ວຍຄວາມສລາດ." *ເພິ່ນຊົມລາວຫຼື?* ຝ່າຍເຈົ້າຂອງຍັງຄົງເສັງໃຈໃຫ້ເຈົ້າພະນັກງານແນ່ນອນ. ໃນຄວາມເປັນຈິງ, ເຈົ້າພະນັກງານໄດ້ໂລບຕື່ມອີກ ໃນການແປງໃບບິນແລະບັນຊີ. ແທນທີ່ຈະໂກດ, ເຈົ້າຂອງກັບປະທັບໃຈ ເພາະເຈົ້າພະນັກງານຜູ້ສລາດຂອງເພິ່ນກຳລັງຄິດ "ນອກທາງ". ເຈົ້າພະນັກງານໄດ້ເຮັດໃຫ້ເປັນທີ່ຈັບໃຈນາຍ. ລາວໄດ້ເຮັດໃຫ້ເຈົ້າຂອງດູດີ ທັງໃຈກວ້າງອີກດ້ວຍ. ໃນຈຸດນີ້, ເຈົ້າຂອງໄດ້ເຂົ້າໄປໄກ່ເກ່ຍ ແລະສິ່ງໃບບິນຄືນໃນຈຳນວນເດີມ, ລູກໜີ້ອາດເຫັນເພິ່ນເປັນຄົນກົດຂີ່. ດ້ວຍການຜ່ອນໃບບິນລົງ, ເຈົ້າພະນັກງານອາດເຮັດໃຫ້ເງິນຮົ່ວໄຫຼ ເຖິງຢ່າງໃດ ເຈົ້າຂອງທຸຣະກິດຕ້ອງໄດ້ສູ້ຊົນເພື່ອໃຫ້ໄດ້ເງິນຄືນ. ດັ່ງນັ້ນເຈົ້າຂອງທຸຣະກິດໄດ້ສັຣເສີນເຈົ້າພະນັກງານທີ່ບໍ່ສັດຊື່ຂອງເພິ່ນ, ບໍ່ແມ່ນສຳລັບຄວາມໂປ່ງໃສຂອງລາວ ແຕ່ສຳລັບຄວາມສລາດຂອງລາວ. ເຈົ້າພະນັກງານໄດ້ຮັບອິດທິພົນຈາກຜູ້ມີອິດທິພົນ, ພວກທີ່ສາມາດມີອິດທິພົນຕໍ່ອະນາຄົດຂອງລາວ. ລາວໄດ້ຍົກລະດັບ ອິດທິພົນທີ່ລາວມີເໜືອພວກທີ່ວັນນຶ່ງອາດສາມາດຊ່ອຍລາວໄດ້.

ພຣະເຢຊູໄດ້ຫັນຈຸດຂອງຄຳອຸປມາ ມາຫາເຮົາ: ເຂົ້າຂອງທຸກຢ່າງໃນໂລກລ້ວນແຕ່ເປັນຂອງຊົ່ວຄາວ, ແລະເປົ້າໝາຍຂອງຜູ້ເຊື່ອຄວນແມ່ນການທ້ອນໂຮມ "ຊັບສົມບັດໄວ້ໃນສວັນ"(ມທ 6:20). ສະນັ້ນ ເຮົາຄວນເປັນຄົນສລາດກັບສິ່ງຂອງທີ່ເຮົາມີຢູ່. ພວກເຮົາບໍ່ໄດ້ "ຊື້ມິດສະຫາຍ," ແຕ່ພວກເຮົາສ້າງມິດສະຫາຍດ້ວຍການຊ່ອຍເຫຼືອເຂົາ, ແລະ ພວກເຮົາເຮັດໃຫ້ມີຄວາມແຕກຕ່າງໃນຊີວິດເຂົາ. ແລ້ວວັນນຶ່ງຂ້າງໜ້າ, ເຂົາຈະຢູ່ກັບເຮົາໃນບ້ານຖາວອນເປັນນິດ. ຂ້າພຣະເຈົ້າຮູ້ຈັກຕົວຢ່າງຜູ້ຍິງ ແລະຜູ້ຊາຍຫຼາຍຄົນ ຊຶ່ງໄດ້ໃຊ້ອິດທິພົນເຂົາເພື່ອຂຍາຍອານາຈັກຂອງພຣະເຈົ້າ. ບາງເທື່ອທ່ານກໍອາດເຮັດໄດ້ເຊັ່ນດຽວກັນ. ຄຳຖາມທີ່ເຮົາຄວນຖາມເຮົາເອງຕໍ່ໄປແມ່ນ: "ຂ້າພຣະເຈົ້າໄດ້ຍົກລະດັບທຸກສິ່ງທີ່ຂ້າພຣະເຈົ້າເປັນ ແລະ ທຸກສິ່ງທີ່ຂ້າພຣະເຈົ້າມີ ເພື່ອເສີມຂຍາຍຣາຊອານາຈັກຂອງພຣະເຈົ້າແລ້ວບໍ?

ທາງໃດແດ່ພວກເຮົາສາມາດໃຊ້ເຂົ້າຂອງຊົ່ວຄາວແລະໂອກາດເພື່ອໃຫ້ໄດ້ມິດສະຫາຍສຳລັບສວັນ?

3. <u>ລູກາ 16:10-12</u>:

[10]"ຄົນທີ່ສັດຊື່ໃນຂອງເລັກນ້ອຍກໍສັດຊື່ໃນຂອງຫລາຍ ແລະຄົນທີ່ບໍ່ສັດຊື່ໃນຂອງເລັກນ້ອຍກໍບໍ່ສັດຊື່ໃນຂອງຫລາຍເໝືອນກັນ. [11]ເຫດສັນນັ້ນຖ້າພວກທ່ານບໍ່ໄດ້ສະແດງຕົວເປັນຄົນສັດຊື່ໃນຊັບສົມບັດອັນບໍ່ຍຸດຕິທຳ ໃຜຈະມອບຊັບສົມບັດອັນທ່ຽງແທ້ໃຫ້ພວກທ່ານ. [12]ແລະຖ້າພວກທ່ານບໍ່ໄດ້ສະແດງຕົວເປັນຄົນສັດຊື່ໃນສິ່ງຂອງຂອງຄົນອື່ນ ໃຜຈະມາມອບສິ່ງຂອງຂອງທ່ານໃຫ້ແກ່ທ່ານ.

ເວລາໃດທ່ານໄດ້ເຫັນຄວາມສັດຊື່ເລັກນ້ອຍນຳສູ່ຄວາມສັດຊື່

ພຣະເຢຊູໄດ້ສ່ອງສະວ່າງຫັນມາເຍືອງໃສ່ເຮົາໃນບົດນີ້. ຄວາມສັດຊື່ແມ່ນເຣື່ອງຂອງຫົວໃຈແທ້ຈິງ. ຖ້າພວກເຮົາບໍ່ຮັບຜິບຊອບຕໍ່ສິ່ງທີ່ເຮົາມີ ຖ້າພວກເຮົາບໍ່ໄດ້ເອົາໃສໃສ່ເຂົ້າຂອງ ຫຼືບໍ່ໄດ້ໃຊ້ຢ່າງສລາດເປັນຫຍັງເຮົາຈຶ່ງສົມຄວນໄດ້ຮັບເພີ້ມອີກ? ຈອນ ແມັກຄາເທີ່ກ່າວວ່າ, "ບັນຫາຕ່າງໆບໍ່ໄດ້ບົ່ງບອກຄວາມສັດຊື່, ບຸຄລິກຕ່າງຫາກທີ່ຊີ້ບອກ. ພວກ

ເຮົາສາມາດຫຼີງເຫັນສິ່ງນີ້ໃນການຖວາຍ. ບາງບຸກຄົນອາດເວົ້າວ່າ, "ຖ້າຂ້ອຍມີຫຼາຍກວ່ານີ້, ຂ້ອຍຈະຖວາຍຫຼາຍກວ່ານີ້," ແຕ່ເບິ່ງເໝືອນວ່າລາວເຮັດບໍ່ໄດ້. ບັນຫາຕົ້ນຕໍ່ແມ່ນຫົວໃຈ ເປັນບັນຫາຂອງຄວາມສັດຊື່. ຖ້າຫົວໃຈຂອງທ່ານບໍ່ໄດ້ສະສົມໄວ້, ທ່ານຈະບໍ່ຖວາຍ. ໃນທາງກົງກັນຂ້າມ, ຖ້າທ່ານສົນໃຈຢາກເຫັນອານາຈັກຂອງພຣະເຈົ້າເຕີບໃຫຍ່, ທ່ານກໍຈະທ້ອນໂຮມໄວ້ນັ້ນ. ພຣະເຢຊູໄດ້ຊີ້ໃສ່ "ຍິງໝ້າຍ"ຜູ້ມີໜ້ອຍ ໜ້ອຍທີ່ສຸດ ແຕ່ນາງໄດ້ຖວາຍ "ຈົນໝົດ" (ລູກາ 21:1-4). ພຣະເຈົ້າບໍ່ໄດ້ວັດແທກຂນາດທີ່ເຮົາຖວາຍ;ແທນທີ່ຈະເຮັດດັ່ງນັ້ນ, ພຣະອົງວັດແທກຫົວໃຈຂອງເຮົາວ່າ ເຮົາເປັນຄົນສັດຊື່ ແລະບໍ່ເຫັນແກ່ຕົວຢ່າງໃດ.

ພໍ່ແມ່ເຂົ້າໃຈຄຳສອນຂອງພຣະເຢຊູດີ. ຖ້າລູກເຮັດໜ້າບູດໃນການໃຊ້ເຄື່ອງຫຼິ້ນຂອງລາວ,ໂອກາດແມ່ນພໍ່ແມ່ຂອງລາວຈະບໍ່ຊື້ເຄື່ອງຫຼິ້ນໃໝ່ໃຫ້ລາວອີກ. ເຊັ່ນດຽວກັນນີ້, ຖ້າພວກເຮົາບໍ່ຮັບຜິດຊອບ ແລະໃຊ້ສິ່ງພຣະບິດາແຫ່ງສະຫວັນໄດ້ໃຫ້ເຮົາໃນທາງຜິດ, ເຫດໃດພຣະອົງຈຶ່ງຈະອວຍພອນເຮົາເພີ້ມອີກ? ບົດບາດແມ່ນປັດຈັຍສຳຄັນໃນທີ່ນີ້. ສຳລັບຜູ້ທີ່ຄິດວ່າຕົນບໍ່ມີສິ່ງໃດຖວາຍ ຫຼືບໍ່ມີອິດທິພົນທີ່ຈະຊູຂຶ້ນນັ້ນ, ຈົ່ງຄິດໃໝ່. ທ່ານມີໜ້ອງຮັບແຂກບໍ? ຈົ່ງເປີດບ້ານຂອງທ່ານເພື່ອອ້ອມຊູ ແລະຍູ້ໜູນຜູ້ເຊື່ອອື່ນໆ. ທ່ານມີລູກບໍ? ຈົ່ງຫາແນວຫຼິ້ນເປັນກຸ່ມ ແລະ ໃຫ້ເຂົາຫຼິ້ນນຳກັນໃນເຮືອນຂອງທ່ານໃນມື້ຝົນຕົກ. ຂ້າພະເຈົ້າໄດ້ຍິນວ່າມີຄົນຈຳນວນນັບບໍ່ຖ້ວນໄດ້ກັບຄືນມາ ພາຍຫຼັງໄດ້ພົບກັບຄົນທີ່ມາຊຸມນຸມສຶກສາພຣະຄັມພີຊຶ່ງເປັນວິທີທີ່ເກີດຜົນຫຼາຍ; ຕໍ່ມາ, ເຂົາໄດ້ຈັດຕັ້ງເປັນກຸ່ມຂຶ້ນຍ້ອນຜົນຂອງການນຳໃຊ້ວິທີນີ້. ກຸ່ມເຫຼົ່ານີ້ໄດ້ສ້າງຜົນງານໃຫຍ່ຫຼວງຖວາຍກຽດພຣະເຈົ້າສືບຕໍ່ໆກັນມາ. ໃນເມື່ອທ່ານໃຊ້ສິ່ງທີ່ພຣະເຈົ້າມອບໃຫ້ດ້ວຍຄວາມຄິດເຫັນແກ່ຣາຊອານາຈັກ, ທ່ານກໍຈະເກີດຫຼາຍ.

ກ່ອນໜ້ານີ້ເຮົາໄດ້ອ່ານພຣະທັມເພງສັຣເສີນ 24:1 ວ່າ: ພຣະເຈົ້າໄດ້ສ້າງທຸກສິ່ງ ແລະ ທຸກສິ່ງເປັນຂອງພຣະອົງ. ພວກເຮົາກໍໄດ້ຮັບມອບໝາຍໃຫ້ເປັນຜູ້ດູແລຮັກສາສິ່ງຂອງຂອງພຣະອົງ. ພວດເຮົາບໍ່ມີກັມສິດດັ່ງທີ່ເຮົາຄິດວ່າເປັນຂອງເຮົາ. ຈົ່ງເປັນຄົນສັດຊື່ແລະທ່ຽງທັມກັບເຂົ້າຂອງທີ່ພຣະເຈົ້າໄດ້ມອບໃສ່ມືເຮົາໃຫ້ຮັກສາ.

ກຸ່ມຂອງເຮົາຈະເປັນຄົນສລາດກັບເຂົ້າຂອງແລະໂອກາດທີ່ພຣະເຈົ້າໄດ້ມອບໝາຍໃຫ້ນັ້ນຢ່າງໃດ?

ນຳໃຊ້ໃນຊີວິດ

ທ່ານຈະເປັນຄົນສລາດກັບເຂົ້າຂອງທີ່ພຣະເຈົ້າໄດ້ມອບໝາຍໃສ່ມືທ່ານນັ້ນຢ່າງໃດ? ຈົ່ງເລືອກການນຳໃຊ້ຕໍ່ໄປນີ້:

- **ສາຣະພາບ**. ຖ້າໃນຈຸດນີ້ທ່ານໄດ້ໃຊ້ເວລາ, ເຂົ້າຂອງ, ແລະເຄື່ອງໃຊ້ເພື່ອຕົວທ່ານເອງເທົ່ານັ້ນ, ຈົ່ງສາຣະພາບຕໍ່ພຣະເຈົ້າ. ທູນຂໍໃຫ້ພຣະອົງປ່ຽນຄວາມຄິດຈິດໃຈທ່ານ ແລະໃຫ້ນຳສິ່ງທີ່ພຣະເຈົ້າໄດ້ມອບໃຫ້ທ່ານນັ້ນມາມອບໃຫ້ຜູ້ອື່ນແລະເພື່ອອານາຈັກຂອງພຣະອົງ.
- **ຈັດບັນຊີ**. ຈົ່ງຈັດບັນຊີເຂົ້າຂອງແລະເຄື່ອງໃຊ້ທີ່ເປັນຂອງທ່ານ. ທາງຂ້າງຂອງເຫຼົ່ານັ້ນ, ໃຫ້ຂຽນທາງນຶ່ງຫຼືສອງທາງທີ່ທ່ານສາມາດໃຊ້ສິ່ງເຫຼົ່ານັ້ນໃນການຮັບໃຊ້ພຣະຄຣິດ. ຈົ່ງຄິດຄົ້ນຍຸດທະສາດການນຳໃຊ້ສິ່ງເຫຼົ່ານັ້ນແກ່ພຣະອົງ.
- **ເຮັດນຳກັນ**. ຈົ່ງຮ່ວມກັບຄົນອື່ນທີ່ມີຄວາມຄິດຫຼືຄວາມສົນໃຈຄ້າຍຄືກັນ ແລະພິຈາຣະນາວ່າ ທ່ານຈະທຳງານຮ່ວມກັນຢ່າງໃດເພື່ອນຳເອົາຄວາມສົນໃຈນັ້ນໄປໃຊ້ໃຫ້ເກີດຜົນປໂຍດແກ່ຄົນອື່ນ ແລະ ເພື່ອເສີມຂຍາຍຣາຊອານາຈັກຂອງພຣະເຈົ້າ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.us ໂດຍ PSI